# ພຣະທັມອົບພະຍົບ


| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 | 32 |
| 33 | 34 | 35 | 36 | 37 | 38 | 39 | 40 |


## ອົບພະຍົບ

## EXODUS

### 1 ຊາວອິສຣາເອນຕົກເປັນທາດ ໃນປະເທດເອຢິບ

The Israelites Are Treat Cruelly in Egypt

1 ຕໍ່ໄປນີ້ ແມ່ນລາຍຊື່ບຸດຊາຍຂອງຢາໂຄບ ທີ່ໄດ້
ອົບພະຍົບໄປຢູ່ປະເທດເອຢິບ
2 ຄື ຣູເບນ, ຊີເມໂອນ, ເລວີ,  ແລະຢູດາ,
3 ອິສຊາຄາ, ເຊບູລູນ, ແລະເບັນຢາມິນ,
4 ດານ, ແລະເນັບທາລີ, ກາດ, ແລະອາເຊີ
5 ຄົນທັງປວງທີ່ເປັນເຊື້ອສາຍຂອງຢາໂຄບ ມີທັງ
ຫມົດເຈັດສິບຄົນ ສ່ວນບຸດອີກຜູ້ນຶ່ງຂອງຢາໂຄບຄື ໂຢເຊັບນັ້ນໄດ້ໄປຢູ່ໃນປະເທດເອຢິບກ່ອນແລ້ວ
6 ພາຍລຸນມາໂຢເຊັບກັບພວກອ້າຍນ້ອງ ແລະບັນດາຄົນໃນສະໄຫມດຽວກັນກໍໄດ້ຕາຍໄປ
7 ແຕ່ເນື່ອງຈາກຊາວອິສຣາເອນ ເປັນຄົນມີບຸດໄວ ປະຊາຊົນຈຶ່ງເພີ້ມທະວີແລະມີກຳລັງແຜ່ຜາຍໄປທົ່ວທັງປະເທດ
ນັ້ນ

The Israelites Are Oppressed

8 ຕໍ່ມາ ໄດ້ມີກະສັດອົງໃຫມ່ຂຶ້ນສະເຫວີຍຣາຊສົມບັດໃນປະເທດເອຢິບ ກະສັດອົງນີ້ບໍ່ຊົງຮູ້ເຣື່ອງຫຍັງກ່ຽວກັບໂຢ
ເຊັບ
9 ພຣະອົງໄດ້ຊົງປະກາດຕໍ່ປະຊາຊົນຂອງພຣະອົງວ່າ “ເບິ່ງດູ, ຄົນອິສຣາເອນນັບມື້ເພີ້ມທະວີມີກຳລັງຫລາຍຂຶ້ນ ຊຶ່ງ
ອາດຈະມີອັນຕະຣາຍແກ່ພວກເຮົາ
10 ບັດນີ້ ໃຫ້ພວກເຮົາໃຊ້ອຸບາຍອັນເລິກແລບ ເພື່ອຂັດຂວາງບໍ່ໃຫ້ຄົນພວກນີ້ເພີ້ມທະວີຫລາຍຂຶ້ນ ເພາະວ່າຖ້າຫາກ
ເກີດສົງຄາມຂຶ້ນເມື່ອໃດຄົນພວກນີ້ກໍອາດຈະເຂົ້າຮ່ວມມືກັບສັດຕຣູທັນມາຕໍ່ສູ້ເຮົາ ແລ້ວພວກເຂົາກໍຈະຫນີອອກ
ຈາກປະເທດນີ້ໄດ້”
11 ດ້ວຍເຫດນີ້ ຝ່າຍກະສັດເອຢິບຈຶ່ງແຕ່ງຕັ້ງຜູ້ຄວບຄຸມຊາວອິສຣາເອນ ເພື່ອບັງຄັບໃຫ້ພວກເຂົາເຮັດວຽກການຫນັກ
ໃຫ້ເຂົາສ້າງເມືອງປິທົມ ແລະເມືອງຣາເມເຊສ ເພື່ອໄວ້ເກັບຣາຊສົມບັດຂອງກະສັດຟາຣາໂອ
12 ເຖິງແມ່ນວ່າຊາວເອຢິບຈະຂົ່ມເຫັງເຂົາຫລາຍປານໃດ ຊາວອິສຣາເອນກໍແຮງແຜ່ຜາຍທະວີຂຶ້ນ ຈົນຝ່າຍເອຢິບມີ
ຄວາມຫວັ່ນເກງໃນຈຳນວນຄົນ

ພວກນີ້
13 ດັ່ງນັ້ນ ເພື່ອໃຫ້ຊີວິດຂອງເຂົາຂົມຂື່ນ ພວກເຂົາຈຶ່ງຖືກບັງຄັບໃຫ້ເຮັດວຽກໜັກຈົນເຫລືອບ່າກວ່າແຮງ
14 ເຊັ່ນ ໃຫ້ນວດດິນ, ປັ້ນດິນຈີ່, ແລະເຮັດວຽກໜັກຕ່າງໆຢູ່ຕາມທົ່ງນາ
15 ຕໍ່ມາ ກະສັດເອຢິບ ໄດ້ຊົງບອກນາງຜະດຸງຄັນຊາວເຮັບເຣີສອງຄົນ ຄົນນຶ່ງຊື່ ຊິຟຣາ, ແລະອີກຄົນນຶ່ງຊື່ ປູອາ
16 ວ່າ, "ເມື່ອພວກເຈົ້າໄປເອົາບຸດອອກໃຫ້ຍິງຊາວເຮັບເຣີ ຖ້າເດັກນ້ອຍທີ່ເກີດມານັ້ນຫາກເປັນຜູ້ຊາຍ ໃຫ້ພວກເຈົ້າຂ້າຖິ້ມ ຖ້າເປັນຜູ້ຍິງບໍ່ໃຫ້ຂ້າ"
17 ແຕ່ນາງຜະດຸງຄັນທັງສອງຄົນນັ້ນເປັນຜູ້ຢຳເກງ
ພຣະເຈົ້າ ຈຶ່ງບໍ່ໄດ້ທຳຕາມພຣະບັນຊາຂອງກະສັດເອຢິບ ພວກນາງໄດ້ປ່ອຍໃຫ້ເດັກນ້ອຍຜູ້ຊາຍມີຊີວິດຢູ່
18 ເມື່ອກະສັດເອຢິບຊົງຊາບດັ່ງນີ້ ກໍມີພຣະກະແສ
ດຳຣັດສັ່ງໃຫ້ນາງຜະດຸງຄັນສອງຄົນເຂົ້າເຝົ້າ ແລ້ວຊົງຖາມວ່າ, "ເປັນຫຍັງພວກເຈົ້າ ຈຶ່ງປ່ອຍໃຫ້ເດັກນ້ອຍຜູ້ຊາຍມີຊີວິດຢູ່?"
19 ພວກນາງຜະດຸງຄັນທູນຕອບວ່າ "ເພາະຜູ້ຍິງຊາວເຮັບເຣີບໍ່ເຫມືອນຜູ້ຍິງຊາວເອຢິບຄືພວກເຂົາໄດ້ບຸດງ່າຍຫລາຍຈົນນາງຜະດຸງຄັນໄປບໍ່ທັນ"
20 ດ້ວຍວ່າພວກນາງຜະດຸງຄັນຢຳເກງພຣະເຈົ້າ
ພຣະອົງຈຶ່ງຊົງພໍພຣະທັຍພວກນາງ
21 ແລະຊົງໂຜດໃຫ້ຄອບຄົວຂອງນາງມີລູກຫລານຫລາຍ ປະຊາຊົນອິສຣາເອນຈຶ່ງເພີ້ມທະວີມີກຳລັງຫລາຍຂຶ້ນ
22 ຕໍ່ມາ ກະສັດຟາຣາໂອຊົງຮັບສັ່ງຕໍ່ປະຊາຊົນຂອງພຣະອົງວ່າ, "ບຸດຊາຍເຮັບເຣີທຸກຄົນທີ່ເກີດມາໃຫ້ເອົາໄປຖິ້ມເສັຽໃນແມ່ນໍ້ານິນເສັຽ ແຕ່ບຸດຍິງທຸກຄົນໃຫ້ມີຊີວິດຢູ່"

## 2 ໂມເຊເກີດແລະໄດ້ຮັບຄວາມຊ່ອຍເຫລືອ

Birth and Youth of Moses

(ຮຣ 11:23)

1 ຍັງມີຊາຍຕະກຸນເລວີຄົນນຶ່ງ ໄດ້ແຕ່ງງານກັບຍິງສາວຕະກຸນດຽວກັນ
2 ຕໍ່ມາ ຜູ້ຍິງຜູ້ນີ້ໄດ້ຖືພາແລະຄອດບຸດເປັນຊາຍ
ເມື່ອນາງເຫັນວ່າບຸດທີ່ເກີດມານັ້ນມີຮູບຮ່າງງາມ ກໍເຊື່ອງບຸດໄວ້ເຖິງສາມເດືອນ
3 ເມື່ອນາງບໍ່ສາມາດຈະເຊື່ອງໄວ້ຕໍ່ໄປອີກ ນາງກໍເອົາໄມ້ມາເຮັດອູ່ທາດ້ວຍຢາງມາໃສ່ບຸດນ້ອຍນັ້ນ ແລ້ວນຳໄປໄວ້ເທິງນໍ້າບ່ອນທີ່ມີກົກຫຍ້າແຄມຕາຝັ່ງ
4 ແລ້ວເອື້ອຍຂອງເດັກນ້ອຍນັ້ນໄດ້ໄປຢືນຊອມຢູ່ຫ່າງໄກ ເພື່ອຢາກຈະຮູ້ວ່າຈະມີຫຍັງເກີດຂຶ້ນແກ່ນ້ອງຂອງຕົນ
5 ຕໍ່ມາ ພຣະຣາຊທິດາຂອງກະສັດຟາໂຣ ໄດ້ສະເດັດໄປສົງທີ່ແມ່ນໍ້າ ແລະໃນຂນະທີ່ພວກສາວໃຊ້ຍ່າງໄປໃກ້ຕາມແມ່ນໍ້າ ພຣະນາງກໍຊົງຫລຽວເຫັນອູ່ຢູ່ກາງກົກຫຍ້າ ຈຶ່ງຮັບສັ່ງໃຫ້ສາວໃຊ້ໄປນຳເອົາມາ
6 ເມື່ອສາວໃຊ້ນຳມາຖວາຍ ພຣະນາງກໍຊົງເປີດເບິ່ງ ຈຶ່ງຊົງເຫັນເດັກນ້ອຍຜູ້ຊາຍນອນຢູ່ ເດັກນ້ອຍນັ້ນໄດ້ຮ້ອງໄຫ້ຂຶ້ນພຣະນາງຊົງເກີດຄວາມສົງສານແລະຊົງກ່າວວ່າ, "ນີ້ແມ່ນບຸດຊາຍຂອງຊາວເຮັບເຣີ"
7 ຝ່າຍເອື້ອຍຂອງເດັກນ້ອຍນັ້ນໄດ້ທູນຖາມພຣະ
ຣາຊທິດາຂອງກະສັດຟາໂຣວ່າ "ພຣະນາງບໍ່ຢາກໃຊ້ຂ້າພຣະອົງ ໄປຫາແມ່ຍິງຊາວເຮັບເຣີມາລ້ຽງເດັກນ້ອຍຜູ້ນີ້ແນ່ບໍ່?"
8 ພຣະນາງກໍຊົງຕອບວ່າ, "ໄປແມ່" ຍິງສາວຜູ້ນັ້ນຈຶ່ງໄປເອີ້ນເອົາມານດາຂອງເດັກນ້ອຍນັ້ນມາ

9 ຝ່າຍພຣະຣາຊທິດາຂອງກະສັດຟາຣາໂອໄດ້ຊົງຮັບສັ່ງແກ່ຍິງນັ້ນວ່າ, “ເຈົ້າຈົ່ງເອົາເດັກນ້ອຍຜູ້ນີ້ໄປລ້ຽງໃຫ້ເຮົາແດ່
ເຮົາຈະໃຫ້ຄ່າຈ້າງເຈົ້າ” ຍິງຜູ້ນັ້ນຈຶ່ງຮັບເອົາເດັກນ້ອຍຊຶ່ງເປັນບຸດຂອງຕົນເອງໄປລ້ຽງໄວ້
10 ເມື່ອເດັກນ້ອຍນັ້ນໃຫຍ່ສູງຂຶ້ນແດ່ແລ້ວ ນາງກໍນໍາມາມອບພຣະຣາຊທິດາ ພຣະນາງກໍຊົງຮັບເອົາເປັນພຣະຣາຊບຸດ
ແລະຊົງປະທານຊື່ໃຫ້ວ່າໂມເຊ ໂດຍພຣະນາງກ່າວວ່າ, “ເພາະເຮົາໄດ້ຍົກຂຶ້ນມາຈາກນໍ້າ”

**ໂມເຊໜີຈາກປະເທດເອຢິບ**

Moses Flees to Midian

(ຮຣ 11:24-25)

11 ຢູ່ມາວັນນຶ່ງ ເມື່ອໂມເຊໃຫຍ່ແລ້ວ ວັນນຶ່ງຈຶ່ງອອກໄປຢ້ຽມຢາມພວກພີ່ນ້ອງທີ່ເປັນຊາດດຽວກັນກັບຕົນ ໂມເຊໄດ້
ເຫັນເຂົາຖືກບັງຄັບໃຫ້ເຮັດວຽກຢ່າງໜັກ ແລະເຫັນຊາວເອຢິບຄົນນຶ່ງຂ້າຕີຊາວເຮັບເຣີຄົນນຶ່ງຊຶ່ງເປັນຊາດດຽວກັນ
ກັບຕົນ
12 ໂມເຊຈຶ່ງຫລຽວໜ້າຫລຽວຫລັງ ເມື່ອບໍ່ເຫັນຜູ້ໃດຢູ່ທີ່ນັ້ນ ກໍຈັດການຂ້າຄົນເອຢິບຜູ້ນັ້ນເສັຽ ແລ້ວຝັງສົບເຊື່ອງໄວ້ໃນ
ດິນຊາຍ
13 ວັນຕໍ່ມາ ໂມເຊໄດ້ອອກໄປອີກ ເທື່ອນີ້ໄດ້ພົບຄົນເຮັບເຣີສອງຄົນກໍາລັງຕີກັນຢູ່ ເຂົາຈຶ່ງຖາມຜູ້ທີ່ຄິດວ່າເປັນຄົນຜິດ
ນັ້ນວ່າ “ເປັນຫຍັງຈຶ່ງຕີຄົນຊາດດຽວກັນ?”
14 ຄົນຜູ້ນັ້ນກໍຕອບວ່າ “ໃຜເປັນຜູ້ແຕ່ງຕັ້ງໃຫ້ທ່ານ
ເປັນເຈົ້ານາຍ ແລະເປັນຕຸລາການມາຕັດສິນຂ້າພະເຈົ້າ ທ່ານຈະຂ້າຂ້າພະເຈົ້າເໝືອນໄດ້ຂ້າຄົນເອຢິບຜູ້ນັ້ນບໍ່?”
ໂມເຊເລີຍຕົກໃຈພ້ອມກັບຄິດວ່າ, “ໂທ! ເຣື່ອງນີ້ໄດ້ມີຄົນຮູ້ເຫັນແລ້ວເປັນແນ່”
15 ເມື່ອກະສັດຟາໂຣໄດ້ຊົງຊາບເຣື່ອງນີ້ກໍພຍາຍາມຫາຊ່ອງທາງຂ້າຊີວິດໂມເຊເສັຽ ແຕ່ໂມເຊໄດ້ເອົາຕົວໜີໄປຢູ່ປະ
ເທດມີດີອານເສັຽກ່ອນ ເວລາໂມເຊໄປເຖິງປະເທດມີດີອານ ເຂົາໄດ້ໄປນັ່ງຢູ່ໃກ້ນໍ້າສ້າງແຫ່ງນຶ່ງ
16 ຝ່າຍປະໂຣຫິດຂອງຄົນມີດີອານມີບຸດຕຣີເຈັດຄົນ
ໄດ້ພາກັນມາຕັກນໍ້າ ໃຫ້ຝູງແບ້, ແລະແກະຂອງພວກຕົນກິນ
17 ແຕ່ພວກລ້ຽງສັດໄດ້ມາຂັບໄລ່ພວກນາງໜີ ໂມເຊຈຶ່ງເຂົ້າໄປຊ່ອຍຕັກນໍ້າໃຫ້ສັດພວກນາງກິນ
18 ເມື່ອຍິງເຫລົ່ານີ້ກັບຄືນໄປຫາຣູເອນບິດາຂອງເຂົາກໍຖາມວ່າ, “ເປັນຫຍັງມື້ນີ້ຈຶ່ງກັບມາໄວແທ້?”
19 ຝ່າຍບຸດຕຣີກໍຕອບວ່າ, “ມີຄົນເອຢິບຜູ້ນຶ່ງ ໄດ້ຊ່ອຍເຫລືອພວກເຮົາໃຫ້ພົ້ນຈາກການຂົ່ມເຫັງຂອງຄົນລ້ຽງສັດ ທັງໄດ້
ຊ່ອຍຕັກນໍ້າໃຫ້ສັດພວກເຮົາກິນດ້ວຍ”
20 ບິດາໄດ້ຖາມບຸດຕຣີຕໍ່ໄປວ່າ, “ຊາຍຜູ້ນີ້ຢູ່ໃສ? ເປັນຫຍັງຈຶ່ງມາປະເຂົາ? ຮີບໄປເຊີນເຂົາມາກິນເຂົ້ານໍາເຮົາ”
21 ຝ່າຍໂມເຊຈຶ່ງໄດ້ມາຫາຣູເອນ ແລະຍິນດີຢູ່ນໍາເລີຍ ຣູເອນໄດ້ຍົກຊິບໂປຣາບຸດຕຣີຂອງຕົນໃຫ້ເປັນພັຣຍາໂມເຊ
22 ນາງຊິບໂປຣາໄດ້ຄອດບຸດຊາຍຜູ້ນຶ່ງ ໂມເຊຈຶ່ງໃສ່ໃຫ້ບຸດຊາຍຜູ້ນີ້ວ່າ ເກີໂຊມ ເພາະໂມເຊຄິດວ່າ, “ຂ້າພະເຈົ້າ
ເປັນຄົນຕ່າງປະເທດທີ່ມາອາໄສຢູ່
ໃນປະເທດນີ້”
23 ເມື່ອຫລາຍປີຜ່ານໄປ ກະສັດເອຢິບກໍສິ້ນພຣະຊົນ ຊາວອິສຣາເອນກໍຍັງຮ້ອງຄໍ່າຄວນຍ້ອນຄວາມເປັນທາດນັ້ນຢູ່
ເຂົາໄດ້ຮ້ອງຂໍຄວາມຊ່ອຍເຫລືອ ສຽງຮ້ອງຂໍຂອງເຂົາໄດ້ດັງຂຶ້ນໄປເຖິງພຣະເຈົ້າ
24 ເມື່ອພຣະເຈົ້າຊົງໄດ້ຍິນສຽງຮ້ອງຄໍ່າຄວນຂອງເຂົາ ກໍຊົງລະນຶກເຖິງຄໍາໝັ້ນສັນຍາທີ່ພຣະອົງໄດ້ຊົງໃຫ້ໄວ້ກັບອັບ
ຣາຮາມ, ອີຊາກ, ແລະຢາໂຄບ
25 ພຣະອົງໄດ້ຊົງຫລຽວເຫັນແລະສົນພຣະທັຍໃນຄວາມທຸກຍາກລໍາບາກຂອງຊາວອິສຣາເອນເຫລົ່ານັ້ນ.

## 3 ພຣະເຈົ້າຊົງເອີ້ນໂມເຊ

Moses at the Burning Bush

(ອພຍ 6:2-7. 7; 11:1-4; 12:35-36)

1 ວັນນຶ່ງເມື່ອໂມເຊລ້ຽງຝູງແກະຂອງເຢດໂຣ ພໍ່ເຖົ້າຂອງຕົນຜູ້ເປັນປະໂຣຫິດຂອງຊາວມີດີອານ ເຂົາໄດ້ພາຝູງສັດນັ້ນ
ຂ້າມຖິ່ນກັນດານມາຍັງໂຮເຣັບພູຂອງພຣະເຈົ້າ

2 ຂນະນັ້ນທູດຂອງພຣະຜູ້ເປັນເຈົ້າໄດ້ປາກົດເປັນແປວໄຟໃຫ້ໂມເຊເຫັນຢູ່ໃນກາງພຸ່ມໄມ້ ໂມເຊຈຶ່ງຫລຽວເບິ່ງໄຟນັ້ນ
ດ້ວຍຄວາມປະຫລາດໃຈ ແຕ່ບໍ່ເຫັນວ່າພຸ່ມໄມ້ນັ້ນຖືກໄຫມ້

3 ໂມເຊຈຶ່ງເວົ້າກັບຕົວເອງວ່າ, “ບ໋ະ! ຕ້ອງເຂົ້າໄປເບິ່ງແສງປລາດນີ້ໃກ້ໆ ເສັຽກ່ອນ ເພາະຢາກຮູ້ວ່າເປັນຫຍັງໄຟລຸກຢູ່
ພຸ່ມໄມ້ຈຶ່ງບໍ່ໄຫມ້”

4 ເມື່ອພຣະຜູ້ເປັນເຈົ້າຊົງເຫັນໂມເຊຍ່າງເຂົ້າມາໃກ້ ພຣະອົງກໍຊົງເອີ້ນອອກມາຈາກພຸ່ມໄມ້ນັ້ນວ່າ, “ໂມເຊ, ໂມເຊ
ເອີຍ!” ໂມເຊໄດ້ທູນຕອບວ່າ, “ຂ້າພຣະອົງຢູ່ທີ່ນີ້”

5 ພຣະເຈົ້າຈຶ່ງຊົງບອກວ່າ, “ຢ່າຫຍັບເຂົ້າມາໃກ້ ຈົ່ງຖອດເກີບອອກເສັຽ ເພາະບ່ອນທີ່ເຈົ້າຢືນຢູ່ນີ້ເປັນບ່ອນສັກສິດ”

6 ພຣະອົງຊົງບອກຕໍ່ໄປອີກວ່າ, “ເຮົາເປັນພຣະເຈົ້າຂອງບິດາເຈົ້າ ເປັນພຣະເຈົ້າຂອງອັບຣາຮາມ, ຂອງອີຊາກ, ແລະ
ຂອງຢາໂຄບ” ແລ້ວໂມເຊໄດ້ເຊື່ອງຫນ້າເພາະບໍ່ກ້າຫລຽວເບິ່ງພຣະເຈົ້າ

7 ຕໍ່ມາ ພຣະຜູ້ເປັນເຈົ້າໄດ້ຊົງກ່າວວ່າ, “ເຮົາໄດ້ເຫັນຄວາມຕົກທຸກໄດ້ຍາກແຫ່ງໄພ່ພົນຂອງເຮົາໃນເອຢິບຢ່າງຄັກແນ່
ແລ້ວ ແລະທັງໄດ້ຍິນສຽງຮ້ອງຂໍຄວາມຊ່ອຍເຫລືອຂອງເຂົາຍ້ອນນາຍຄຸມຂົ່ມເຫັງດ້ວຍ ເຮົາຮູ້ຈັກຄວາມທຸກຍາກ
ຂອງເຂົາທີ່ສຸດ

8 ເຮົາລົງມາຊ່ອຍເຂົາໃຫ້ພົ້ນຈາກເງື້ອມມືຂອງຊາວເອຢິບ ເພື່ອນຳພາພວກເຂົາໄປຍັງແຜ່ນດິນອັນອຸດົມສົມບູນແລະ
ກວ້າງຂວາງ ຄືແຜ່ນດິນຂອງຊາວການາອານ, ຊາວຮິດຕີ, ຊາວອາໂມຣິດ, ຊາວເປຣີສຊີ, ຊາວຮີວີ, ແລະຊາວເຢ
ບຸສ

9 ສຽງຮ້ອງຂໍຂອງຊາວອິສຣາເອນໄດ້ມາເຖິງເຮົາແລ້ວ ເຮົາໄດ້ເຫັນຊາວອິສຣາເອນຖືກກົດຂີ່ຂົ່ມເຫັງ

10 ບັດນີ້ ເຮົາຈະສົ່ງເຈົ້າໄປເຝົ້າກະສັດຟາຣາໂອ ເພື່ອໃຫ້ເຈົ້າເປັນຜູ້ນຳພາອິສຣາເອນ ໄພ່ພົນຂອງເຮົາອອກຈາກປະ
ເທດເອຢິບ”

11 ຝ່າຍໂມເຊໄດ້ກາບທູນພຣະເຈົ້າວ່າ, “ຂ້າພຣະອົງເປັນຄົນທຳມະດາຈະໄປເຝົ້າກະສັດຟາຣາໂອ ແລະນຳຊາວອິສ
ຣາເອນອອກຈາກເອຢິບໄດ້ແນວໃດ?”

12 ພຣະອົງຊົງຕອບວ່າ, “ເຮົາຈະຢູ່ນຳເຈົ້າ ຫມາຍສຳຄັນຕໍ່ໄປນີ້ຈະບອກໃຫ້ເຈົ້າຮູ້ວ່າແມ່ນເຮົາແທ້ໄດ້ສົ່ງເຈົ້າໄປ ຄືເມື່ອ
ເຈົ້ານຳພາຊາວອິສຣາເອນອອກຈາກເອຢິບແລ້ວ ພວກເຈົ້າຈະໄດ້ຂາບໄຫວ້ເຮົາຢູ່ເທິງພູນີ້”

The Divine Name Revealed

13 ແລ້ວໂມເຊໄດ້ທູນຖາມພຣະເຈົ້າວ່າ, “ເມື່ອຂ້າພຣະອົງໄປເຖິງຊາວອິສຣາເອນແລະບອກເຂົາວ່າ ພຣະເຈົ້າແຫ່ງບັນ
ພະບຸຣຸດຂອງພວກທ່ານໄດ້ສົ່ງຂ້າພະເຈົ້າມາຫາພວກທ່ານ ພວກເຂົາກໍຈະຖາມຂ້າພຣະອົງວ່າ ພຣະເຈົ້າອົງນັ້ນຊົງ
ພຣະນາມວ່າແນວໃດ? ແລ້ວຂ້າພຣະອົງຈະຕອບເຂົາວ່າຈັ່ງໃດ? ຖ້າພຣະອົງບໍ່ບອກພຣະນາມຂອງພຣະອົງໃຫ້ຂ້າ
ພຣະອົງຮູ້ເສັຽກ່ອນ”

14 ພຣະເຈົ້າຈຶ່ງຊົງບອກໂມເຊວ່າ, “ເຮົາເປັນຜູ້ຊຶ່ງເຮົາເປັນ” ພຣະອົງຊົງກ່າວຕໍ່ໄປວ່າ, “ໃຫ້ເຈົ້າໄປບອກຊາວອິສຣາ
ເອນວ່າ ຜູ້ຊົງພຣະນາມວ່າ “ເຮົາເປັນ” ໄດ້ສົ່ງຂ້າພະເຈົ້າມາຫາທ່ານທັງຫລາຍ”

15 ພຣະເຈົ້າຍັງຊົງບອກໂມເຊອີກວ່າ, “ໃຫ້ເຈົ້າບອກຊາວອິສຣາເອນດັ່ງນີ້ ພຣະຜູ້ເປັນເຈົ້າແຫ່ງບັນພະບຸຣຸດຂອງທ່ານ
ຄືພຣະເຈົ້າຂອງອັບຣາຮາມ, ພຣະເຈົ້າຂອງອີຊາກ, ແລະພຣະເຈົ້າຂອງຢາໂຄບ ໄດ້ສົ່ງຂ້າພະເຈົ້າມາຫາທ່ານທັງ
ຫລາຍ ອັນນີ້ແຫລະ, ແມ່ນນາມຂອງເຮົາ ຊື່ອັນນີ້ຈະບໍ່ປ່ຽນແປງຕລອດໄປເປັນນິດ ແຕ່ຈະເປັນຢູ່ຢ່າງນີ້ທຸກຊົ່ວອາ
ຍຸຄົນ

16 ເຈົ້າຈົ່ງໄປຮ່ວມປະຊຸມກັບພວກເຖົ້າແກ່ອິສຣາເອນແລະບອກເຂົາວ່າ ພຣະເຈົ້າແຫ່ງບັນພະບຸຣຸດຂອງທ່ານທັງ
ຫລາຍ ຄືພຣະເຈົ້າຂອງອັບຣາຮາມ, ຂອງອີຊາກ, ແລະຂອງຢາໂຄບໄດ້ປາກົດຕໍ່ຫນ້າຂ້າພະເຈົ້າ ບອກຂ້າພະເຈົ້າ
ວ່າເຮົາໄດ້ມາຫາເຈົ້າ ແລະໄດ້ເຫັນສິ່ງທີ່ຊາວເອຢິບປະພຶດຕໍ່ພວກເຈົ້າແລ້ວ
17 ເຮົາສັນຍາໄວ້ແລ້ວວ່າ ຈະນຳພວກເຈົ້າອອກຈາກປະເທດເອຢິບ ຄືບ່ອນທີ່ພວກເຈົ້າທຸກຍາກລຳບາກນີ້ ໄປຍັງແຜ່ນ
ດິນຂອງຊາວການາອານ, ຊາວຮິດຕີ, ຊາວອາໂມຣິດ, ຊາວເປຣີສຊີ, ຊາວຮີວີ, ແລະຊາວເຢບຸສ ຊຶ່ງເປັນແຜ່ນດິນທີ່
ອຸດົມສົມບູນ ແລ້ວເຂົາຈະເຊື່ອຟັງຄຳຂອງເຈົ້າ
18 ເຂົາຈະເຊື່ອຟັງຄຳຂອງເຈົ້າ ແລ້ວເຈົ້າກັບພວກເຖົ້າແກ່ຊາວອິສຣາເອນ ຈົ່ງພາກັນໄປເຝົ້າກະສັດຂອງເອຢິບແລະ
ທູນວ່າ, “ພຣະຜູ້ເປັນເຈົ້າ ພຣະ
ເຈົ້າຂອງຊາວເຮັບເຣີໄດ້ຊົງປາກົດຕໍ່ພວກຂ້າພຣະອົງທັງຫລາຍ ບັດນີ້ ຂໍພຣະອົງຊົງໂຜດໃຫ້ພວກຂ້າພຣະອົງເຂົ້າ
ໄປໃນຖິ່ນກັນດານ ຊຶ່ງເປັນໄລຍະທາງເດີນສາມວັນ ເພື່ອຖວາຍສັດບູຊາແກ່ພຣະຜູ້ເປັນເຈົ້າຂອງພວກຂ້າພຣະອົງ
19 ເຮົາຮູ້ແລ້ວວ່າ ກະສັດເອຢິບຈະບໍ່ຍອມໃຫ້ພວກເຈົ້າໄປ ເວັ້ນໄວ້ແຕ່ຈະໃຊ້ອຳນາດບັງຄັບກະສັດຈຶ່ງຈະຍອມ
20 ຄືເຮົາຈະໃຊ້ຣິດອຳນາດກະທຳການອັດສະຈັນລົງໂທດຄົນເອຢິບ ແລ້ວກະສັດເອຢິບກໍຈະຍອມປ່ອຍໃຫ້ພວກເຈົ້າ
ໄປ
21 ເຮົາຈະທຳໃຫ້ໄພ່ພົນຂອງເຮົາ ໄດ້ຮັບຄວາມນັບຖືຈາກຊາວເອຢິບ ເພື່ອບໍ່ໃຫ້ພວກເຈົ້າໄປດ້ວຍມືເປົ່າໆ
22 ໃຫ້ຜູ້ຍິງທຸກຄົນຂໍເຄື່ອງເງິນເຄື່ອງຄຳ ແລະຂໍເສື້ອຜ້າຈາກຜູຍິງທີ່ຢູ່ໃນເຮືອນ ຫລືຈາກເພື່ອນບ້ານຂອງຕົນ ແລ້ວໃຫ້
ເອົາເຄື່ອງເອ້ເຫລົ່ານີ້ໄປຕົກແຕ່ງໃຫ້ບຸດຊາຍຍິງຂອງພວກເຈົ້າ ດ້ວຍການກະທຳຢ່າງນີ້ ພວກເຈົ້າຈຶ່ງຈະໄດ້ສິ່ງຂອງ
ຈາກຊາວ
ເອຢິບ”

## 4

### Moses’ Miraculous Power

1 ໂມເຊໄດ້ທູນຕອບວ່າ “ຖ້າສົມມຸດວ່າຄົນອິສຣາເອນບໍ່ເຊື່ອຟັງຂ້າພຣະອົງ ຄືບໍ່ເຊື່ອວ່າພຣະອົງໄດ້ປາກົດຕໍ່ຂ້າພຣະ
ອົງ ແລ້ວຂ້າພຣະອົງຈະທຳຢ່າງໃດ?”
2 ພຣະຜູ້ເປັນເຈົ້າຊົງຖາມໂມເຊວ່າ, “ແມ່ນຫຍັງທີ່ເຈົ້າຖືຢູ່ນັ້ນ?”
3 ໂມເຊກາບທູນວ່າ, “ໄມ້ເທົ້າ ພຣະເຈົ້າຂ້າ” ພຣະຜູ້ເປັນເຈົ້າຈຶ່ງຊົງບອກວ່າ, “ຖິ້ມມັນລົງດິນເບິ່ງດູ” ພໍໂມເຊຖິ້ມລົງ
ໄມ້ເທົ້ານັ້ນກໍກາຍເປັນງູ ໂມເຊຢ້ານຈຶ່ງແລ່ນຫນີໄປ
4 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ຈົ່ງກົ້ມລົງຈັບຫາງງູໄວ້” ພໍໂມເຊກົ້ມລົງຈັບ ງູນັ້ນກໍກາຍເປັນໄມ້ເທົ້າຕາມເດີມ
5 ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວວ່າ, “ໃຫ້ເຈົ້າທຳຢ່າງນີ້ ເພື່ອຈະໃຫ້ຊາວອິສຣາເອນເຊື່ອວ່າ ພຣະຜູ້ເປັນເຈົ້າແຫ່ງບັນພະ
ບຸຣຸດຂອງເຂົາ ຄືພຣະເຈົ້າຂອງອັບຣາຮາມ, ພຣະເຈົ້າຂອງອີຊາກ, ແລະພຣະເຈົ້າຂອງຢາໂຄບໄດ້ປາກົດຕໍ່ຫນ້າ
ເຈົ້າແທ້”
6 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊອີກວ່າ, “ຈົ່ງເອົາມືສອດເຂົ້າໄປໃນເສື້ອຜ້າຫນ້າເອິກ” ໂມເຊກໍທຳຕາມ ເມື່ອໂມ
ເຊເອົາມືອອກມາກໍເຫັນວ່າມືຂອງຕົນເປັນພຍາດ ຄືເປັນດອກຂາວເຫມືອນນວນຝ້າຍ
7 ແລ້ວພຣະຜູ້ເປັນເຈົ້າຊົງບອກວ່າ, “ໃຫ້ເອົາມືສອດເຂົ້າໄປໃນເສື້ອຜ້າຫນ້າເອິກ” ໂມເຊກໍສອດເຂົ້າໄປ ເມື່ອເຂົາເອົາ
ມືອອກມາ ກໍເຫັນມືຂອງຕົນສະອາດດີຄືເກົ່າ
8 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຖ້າເຂົາບໍ່ເຊື່ອເຈົ້າ ຫລືບໍ່ເຊື່ອການກະທຳເທື່ອທີນຶ່ງ ເຂົາອາດຈະເຊື່ອການກະທຳເທື່ອ
ທີສອງ

9 ຖ້າເຂົາບໍ່ເຊື່ອການກະທຳທັງສອງຢ່າງນີ້ ທັງບໍ່ຍອມຟັງສຽງຂອງເຈົ້າ ເຈົ້າຈົ່ງຕັກເອົານໍ້າໃນແມ່ນໍ້າໄປເທໃສ່ດິນແຫ້ງ
ແລ້ວນໍ້ານັ້ນຈະກາຍເປັນເລືອດ”
10 ຝ່າຍໂມເຊໄດ້ກາບທູນພຣະຜູ້ເປັນເຈົ້າຕໍ່ໄປວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງເປັນຄົນເວົ້າບໍ່ເກັ່ງ ຄືໃນຄາວ
ກ່ອນກໍດີ ຫລືຕັ້ງແຕ່ເວລາທີ່ພຣະອົງຊົງກ່າວກັບຂ້າພຣະອົງແລ້ວກໍດີ ຂ້າພຣະອົງເປັນຄົນເວົ້າບໍ່ລ່ຽນໄຫລເລີຍ”
11 ພຣະຜູ້ເປັນເຈົ້າຊົງຖາມໂມເຊວ່າ, “ໃຜສ້າງປາກມະນຸດ? ໃຜທຳໃຫ້ເຂົາປາກກືກ, ຫູໜວກ, ຕາດີ, ຕາບອດ, ບໍ່ແມ່ນ
ເຮົາບໍ່?
12 ດ້ວຍເຫດນີ້ ເຈົ້າຈົ່ງໄປເສັຽ ເຮົາຈະຊ່ອຍເຈົ້າເວົ້າ ແລະຈະບອກເຣື່ອງໃຫ້ເຈົ້າເວົ້າ”
13 ແຕ່ໂມເຊທູນຂໍອີກວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງສົ່ງຜູ້ອື່ນໄປທ້ອນ”
14 ພໍໂມເຊເວົ້າດັ່ງນີ້ ພຣະຜູ້ເປັນເຈົ້າກໍຊົງພິໂຣດໂດຍຊົງກ່າວວ່າ, “ອາໂຣນຄົນເລວີເປັນອ້າຍຂອງເຈົ້າແມ່ນບໍ? ເຮົາຮູ້
ວ່າເຂົາເປັນຄົນເວົ້າເກັ່ງ ບັດນີ້ ເຂົາກຳລັງຢ່າງມາພົບເຈົ້າ ລາວຈະດີໃຈຫລາຍທີ່ໄດ້ພົບເຈົ້າ ເຈົ້າຈົ່ງເວົ້າກັບລາວ
ແລະບອກເຣື່ອງໃຫ້ລາວເວົ້າ
15 ຝ່າຍເຮົາຈະຊ່ອຍພວກເຈົ້າເວົ້າ ກັບທັງຈະຊ່ອຍພວກເຈົ້າທັງສອງໃຫ້ຮູ້ວ່າຄວນຈະເຮັດແນວໃດ?
16 ອາໂຣນຈະເປັນຜູ້ເວົ້າກັບປະຊາຊົນແທນເຈົ້າ ເຂົາຈະເປັນໂຄສົກຂອງເຈົ້າ ເຈົ້າຈະເປັນເຫມືອນພຣະເຈົ້າ
ເພື່ອບອກສິ່ງທີ່ຄວນເວົ້າແກ່ເຂົາ
17 ເຈົ້າຈົ່ງຖືໄມ້ເທົ້ານີ້ ເພື່ອກະທຳການອັສຈັນເຫລົ່ານັ້ນ”

**ໂມເຊກັບຄືນເອຢິບ**

Moses Returns to Egypt

18 ຫລັງຈາກນັ້ນ ໂມເຊກໍກັບຄືນໄປຫາເຢດໂຣພໍ່ເຖົ້າຂອງຕົນ ເພື່ອຂໍລາກັບຄືນໄປຍັງເອຢິບ ໂມເຊເວົ້າວ່າ, “ຂໍລາກັບ
ຄືນໄປຢ້ຽມຢາມພີ່ນ້ອງໃນເອຢິບ ເພື່ອຢາກຮູ້ວ່າເຂົາຍັງມີຊີວິດຢູ່ຫລືບໍ່” ຝ່າຍເຢດໂຣກໍບອກບຸດເຂີຍວ່າ, “ໄປດີ”
19 ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊໃນເມືອງມີດີອານວ່າ, “ຈົ່ງກັບຄືນໄປຍັງເອຢິບເສັຽ ເພາະຈຳພວກຄົນທີ່ຢາກ
ຂ້າເຈົ້າກໍຕາຍຫມົດແລ້ວ”
20 ໂມເຊຈຶ່ງຈັດແຈ່ງໃຫ້ພັຣຍາແລະບຸດຊາຍຂຶ້ນຂີ່ລໍກັບຄືນໄປເອຢິບ ສ່ວນໂມເຊກໍຖືໄມ້ເທົ້າທີ່ພຣະເຈົ້າໄດ້ຊົງປະທານ
ໃຫ້
21 ແລ້ວພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
“ເມື່ອເຈົ້າກັບຄືນໄປເຖິງເອຢິບ ເຈົ້າຈົ່ງກະທຳການອັດສະຈັນຕໍ່ຫນ້າກະສັດຟາຣາໂອຕາມສິດ
ທີ່ເຮົາໄດ້ມອບໃຫ້ເຈົ້ານັ້ນ ຝ່າຍເຮົາຈະທຳໃຫ້
ກະສັດຟາຣາໂອດື້ດ້ານບໍ່ຍອມປ່ອຍປະຊາຊົນໄປ
22 ແລ້ວເຈົ້າບອກກະສັດຟາຣາໂອວ່າ, “ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ ຄົນອິສຣາເອນເປັນບຸດຫົວປີຂອງເຮົາ
23 ເຮົາບອກເຈົ້າວ່າ ຈົ່ງປ່ອຍບຸດຂອງເຮົາໄປບົວລະບັດເຮົາ ຖ້າເຈົ້າບໍ່ຍອມໃຫ້ບຸດເຮົາໄປ ເຮົາຈະຂ້າບຸດຫົວປີຂອງເຈົ້າ
ເສັຽ”
24 ຄັນຕໍ່ມາ ພຣະຜູ້ເປັນເຈົ້າໄດ້ພົບໂມເຊໃນທີ່ພັກກາງທາງ ແລະຈະຊົງຂ້າໂມເຊເສັຽ
25 ແຕ່ນາງຊິບໂປຣາໄດ້ເອົາຫີນຄົມປາດຫນັງອະ
ວັຍະອະລັບບຸດຊາຍຂອງຕົນອອກ ແລ້ວເອົາໄປແປະໃສ່ຕີນຂອງໂມເຊ ນາງເວົ້າວ່າ, “ເຈົ້າເປັນຜົວແຫ່ງເລືອດ”
26 ພຣະຜູ້ເປັນເຈົ້າຈຶ່ງຊົງໂຜດໃຫ້ໂມເຊມີຊີວິດຢູ່ຕໍ່ໄປ ແລະຝ່າຍນາງຊິບໂປຣາກໍເວົ້າວ່າ, “ເຈົ້າເປັນຜົວແຫ່ງເລືອດ
ດ້ວຍການຕັດປາຍອະໄວຍະວະລັບນັ້ນ”
27 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກອາໂຣນວ່າ, “ຈົ່ງໄປຫາໂມເຊໃນຖິ່ນກັນດານ” ອາໂຣນຈຶ່ງໄປຫາໂມເຊຢູ່ທີ່ພູຂອງພ
ຣະເຈົ້າ ເມື່ອທັງສອງພົບກັນກໍກອດຈູບກັນ

28 ເວລານັ້ນ ໂມເຊໄດ້ເລົ່າເຣື່ອງການອັດສະຈັນທັງປວງທີ່ພຣະອົງຊົງບອກໃຫ້ໂມເຊທຳ

29 ຫລັງຈາກນັ້ນ ໂມເຊກັບອາໂຣນໄດ້ໄປປະຊຸມຮ່ວມກັນກັບບັນດາພວກເຖົ້າແກ່ຊາວອິສຣາເອນ

30 ໃນທີ່ນັ້ນ ອາໂຣນກໍໄດ້ເລົ່າເຣື່ອງທັງຫມົດທີ່ພຣະຜູ້ເປັນເຈົ້າຊົງບອກໂມເຊໃຫ້ທີ່ປະຊຸມຟັງ ແລະໂມເຊກໍໄດ້ທຳການອັດສະຈັນຕ່າງໆ ຕໍ່ຫນ້າປະຊາຊົນ

31 ຝ່າຍປະຊາຊົນກໍເຊື່ອ ແລະເມື່ອເຂົາໄດ້ຍິນວ່າ
ພຣະຜູ້ເປັນເຈົ້າໄດ້ສະເດັດມາຢ້ຽມຢາມປະຊາຊົນອິສຣາເອນ ເພື່ອທອດພຣະເນດເບິ່ງຄວາມທຸກຍາກຂອງພວກເຂົາ ພວກເຂົາກໍພາກັນຂາບລົງ
ນະມັສການພຣະອົງ

## 5 ໂມເຊແລະອາໂຣນເຂົ້າເຝົ້າກະສັດ ຟາຣາໂອ

Bricks without Straw

1 ຕໍ່ມາ ໂມເຊກັບອາໂຣນໄດ້ພາກັນເຂົ້າເຝົ້າກະສັດຟາຣາໂອທູນວ່າ, “ພຣະຜູ້ເປັນເຈົ້າຂອງຊາວອິສຣາເອນຊົງກ່າວວ່າ ຈົ່ງປ່ອຍໃຫ້ໄພ່ພົນຂອງເຮົາໄປ ເພື່ອເຂົາທັງຫລາຍຈະໄດ້ຈັດພິທີກິນລ້ຽງຖວາຍເຮົາໃນຖິ່ນກັນດານ”

2 ກະສັດຟາຣາໂອຈຶ່ງຊົງຖາມວ່າ, “ພຣະຜູ້ເປັນເຈົ້າຄືໃຜ? ຈຳເປັນຫຍັງທີ່ໃຫ້ປ່ອຍຄົນອິສຣາເອນໄປ? ເຮົາບໍ່ຮູ້ຈັກພຣະຜູ້ເປັນເຈົ້າດອກ ເຮົາຈະບໍ່ປ່ອຍໃຫ້ຄົນອິສຣາເອນໄປເດັດຂາດ”

3 ຝ່າຍໂມເຊກັບອາໂຣນກໍທູນຕໍ່ໄປວ່າ, “ພຣະເຈົ້າຂອງຊາວເຮັບເຣີໄດ້ຊົງປາກົດຕໍ່ພວກຂ້ານ້ອຍ ດັ່ງນັ້ນຂໍຊົງໂຜດໃຫ້ພວກຂ້ານ້ອຍໄປໃນຖິ່ນກັນດານຊຶ່ງເປັນໄລຍະທາງເດີນສາມວັນ ເພື່ອຖວາຍສັດບູຊາແດ່ພຣະຜູ້ເປັນເຈົ້າຂອງພວກຂ້ານ້ອຍ ຖ້າບໍ່ໄປພຣະອົງຈະຊົງລົງໂທດພວກຂ້ານ້ອຍດ້ວຍໂຣກພັຍ ຫລືເສິກສົງຄາມ”

4 ກະສັດເອຢິບຊົງຕອບວ່າ, “ເຫດໃດ ພວກເຈົ້າຈຶ່ງຢາກໃຫ້ປະຊາຊົນປະຖິ້ມວຽກຂອງເຂົາ? ເຈົ້າຈົ່ງຄືນໄປເຮັດວຽກຂອງພວກເຈົ້າດຽວນີ້”

5 ກະສັດຟາຣາໂອຊົງກ່າວຕໍ່ໄປອີກວ່າ, “ປະຊາຊົນອິສຣາເອນກໍມີຈຳນວນຫລາຍແລ້ວໃນປະເທດນີ້ ເຈົ້າທັງສອງຢາກໃຫ້ພວກເຂົາປະວຽກການຫລື”

6 ແລ້ວໃນວັນນັ້ນເອງ ກະສັດຟາຣາໂອຊົງສັ່ງຜູ້ຄວບຄຸມງານຊຶ່ງເປັນຄົນເອຢິບ ກັບຫົວຫນ້າຄົນງານຊຶ່ງເປັນຄົນອິສຣາເອນວ່າ,

7 ຕັ້ງແຕ່ວັນນີ້ໄປ ພວກເຈົ້າຢ່າເອົາເຟືອງໃຫ້ຄົນອິສຣາເອນໃຊ້ເຮັດດິນຈີ່ອີກ ໃຫ້ເຂົາໄປຫາເກັບເອົາເອງ

8 ແຕ່ດິນຈີ່ນັ້ນໃຫ້ເຂົາເຮັດໃຫ້ໄດ້ທໍ່ເກົ່າ ຢ່າໃຫ້ຫລຸດລົງເພາະວ່າເຂົາເປັນຄົນຂີ້ຄ້ານ ເຂົາຈຶ່ງພາກັນໄປຮ້ອງຂໍຖວາຍສັດບູຊາແດ່ພຣະເຈົ້າຂອງເຂົາ

9 ຈົ່ງໃຫ້ເຂົາເຮັດວຽກຫນັກຂຶ້ນກ່ວາເກົ່າ ເພື່ອເຂົາຈະໄດ້ຫຍຸ້ງຢູ່ກັບວຽກ ແລ້ວຈະບໍ່ມີເວລາຟັງຄຳຕົວະຍົວະ”

10 ຫລັງຈາກນັ້ນ ຜູ້ຄວບຄຸມງານແລະຫົວຫນ້າຄົນງານກໍອອກໄປເວົ້າກັບຄົນອິສຣາເອນວ່າ “ບັດນີ້ ກະສັດຟາຣາໂອຈະບໍ່ໃຫ້ເຟືອງແກ່ພວກເຈົ້າອີກ

11 ໃຫ້ພວກເຈົ້າໄປຊອກຫາເອົາເອງ ແຕ່ຈຳນວນດິນຈີ່ຕ້ອງໃຫ້ໄດ້ທໍ່ເກົ່າ”

12 ດັ່ງນັ້ນ ພວກຄົນອິສຣາເອນຈຶ່ງແຕກກະຈັດກະຈາຍກັນໄປຫາເອົາເຟືອງທົ່ວປະເທດເອຢິບ

13 ຝ່າຍພວກຄວບຄຸມງານກໍບັງຄັບບີບບັ້ຄົນອິສຣາເອນຫນັກຂຶ້ນ ໂດຍເວົ້າວ່າ, “ແຕ່ລະມື້ພວກເຈົ້າຕ້ອງເຮັດດິນຈີ່ໃຫ້ໄດ້ທໍ່ກັບຄາວມີເຟືອງຢູ່”

14 ພວກຄວບຄຸມງານຂອງກະສັດຟາຣາໂອເຫລົ່ານີ້ ໄດ້ຂ້ຽນຕີຫົວໜ້າຄົນງານຂອງຊາວອິສຣາເອນພ້ອມກັບຖາມວ່າ,
“ເປັນຫຍັງ ມື້ວານກັບມື້ນີ້ຈຶ່ງບໍ່ໄດ້ດິນຈີ່ເຕັມຈຳນວນຄືແຕ່ກ່ອນ?”
15 ແລ້ວພວກຫົວໜ້າຄົນງານຂອງອິສຣາເອນໄດ້ເຂົ້າເຝົ້າກະສັດຟາຣາໂອທູນວ່າ, “ດ້ວຍເຫດໃດ
ພຣະອົງຈຶ່ງຊົງທຳດັ່ງນີ້ກັບພວກຂ້ານ້ອຍ?
16 ຄືພຣະອົງບໍ່ອະນຸຍາດໃຫ້ພວກຂ້ານ້ອຍຮັບ
ເຟືອງເຫມືອນແຕ່ກ່ອນ ແຕ່ຍັງສັ່ງໃຫ້ພວກຂ້າ
ນ້ອຍເຮັດດິນຈີ່ຢູ່ ແລະດຽວນີ້ຜູ້ຄວບຄຸມງານ
ຂອງພຣະອົງໄດ້ຂ້ຽນຕີພວກຂ້ານ້ອຍ ເຣື່ອງນີ້ແມ່ນພຣະອົງເອງເປັນຝ່າຍຜິດ”
17 ກະສັດຟາຣາໂອຊົງຕອບວ່າ, “ພວກເຈົ້າຂີ້ຄ້ານຫລາຍແທ້ໆ! ດ້ວຍເຫດນີ້ແຫລະ, ພວກເຈົ້າຈຶ່ງມາຮ້ອງຂໍຕໍ່ເຮົາວ່າ
ຢາກໄປຖວາຍສັຕບູຊາແດ່ພຣະຜູ້ເປັນເຈົ້າ
18 ພວກເຈົ້າຕ້ອງກັບໄປເຮັດວຽກດຽວນີ້ ເຮົາບໍ່ມີເຟືອງໃຫ້ພວກເຈົ້າດອກ ແຕ່ດິນຈີ່ນັ້ນຕ້ອງໃຫ້ໄດ້ຄົບຕາມຈຳນວນ”
19 ເມື່ອຫົວໜ້າຄົນງານອິສຣາເອນຮູ້ວ່າ ພວກເຂົາຖືກບັງຄັບໃຫ້ເຮັດດິນຈີ່ໃຫ້ໄດ້ແຕ່ລະມື້ຄົບຕາມຈຳນວນ ພວກເຂົາ
ກໍມີຄວາມທຸກຫລາຍ
20 ຄັນພວກເຂົາອອກມາແຕ່ເຝົ້າກະສັດຟາຣາໂອ ກໍພົບເຫັນໂມເຊກັບອາໂຣນຢືນຖ້າພວກເຂົາຢູ່ ຈຶ່ງເວົ້າກັບໂມເຊແລ
ະອາໂຣນວ່າ,
21 “ຂໍໃຫ້ພຣະຜູ້ເປັນເຈົ້າຊົງລົງໂທດພວກທ່ານ ທີ່ພວກທ່ານໄດ້ເຮັດໃຫ້ກະສັດຟາຣາໂອແລະຂ້າ
ຣາຊການຂອງພຣະອົງຄຽດຊັງພວກຂ້າພະເຈົ້າ ພວກທ່ານໄດ້ເຮັດເຊັ່ນນີ້ກໍເຫມືອນກັບເອົາດາບໃຫ້ພວກທ່ານມາ
ຂ້າພວກຂ້າພະເຈົ້າເສັຽ”

**ໂມເຊອ້ອນວອນພຣະເຈົ້າ**

22 ຕໍ່ມາ ໂມເຊໄດ້ຄືນໄປກາບທູນພຣະຜູ້ເປັນເຈົ້າອີກວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ເຫດໃດພຣະອົງຈຶ່ງຊົງລົງໂທດປະ
ຊາຊົນອິສຣາເອນ? ແລະເຫດໃດພຣະອົງຈຶ່ງຊົງໃຫ້ຂ້າພຣະອົງມາ?
23 ຄືຕັ້ງແຕ່ຂ້າພຣະອົງໄປເຝົ້າກະສັດຟາຣາໂອທູນໃນນາມຂອງພຣະອົງແລ້ວ ກະສັດຟາຣາໂອຍັງຊົງຂົ່ມເຫັງໄພ່ພົນ
ຂອງພຣະອົງເລື້ອຍມາ ບໍ່ເຫັນວ່າພຣະອົງໄດ້ຊ່ອຍເຫລືອອັນໃດເຂົາເລີຍ”

## 6

Israel’s Deliverance Assured

**(ອພຍ 3:1-4:17)**

1 ແລ້ວພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ບັດນີ້ ເຈົ້າຈະໄດ້ເຫັນເຫດການ ທີ່ເຮົາຈະທຳຕໍ່ກະສັດຟາຣາໂອ ຄືເຮົາຈະ
ບັງຄັບໃຫ້ກະສັດຟາຣາໂອດ້ວຍມືອັນຊົງຣິດ ໃຫ້ປ່ອຍປະຊາຊົນໄປ ດ້ວຍມືອັນເຂັ້ມແຂງຂອງເຮົານັ້ນແຫລະ ເຂົາ
ຈະໄລ່ປະຊາຊົນອອກຈາກແຜ່ນດິນຂອງເຂົາ”

**ພຣະເຈົ້າຊົງເອີ້ນໂມເຊອີກ**

2 ພຣະເຈົ້າຊົງກ່າວແກ່ໂມເຊອີກວ່າ, “ເຮົາຄືພຣະຜູ້ເປັນເຈົ້າ
3 ເຮົາໄດ້ປາກົດໃຫ້ແກ່ອັບຣາຮາມ, ແກ່ອີຊາກ, ແລະແກ່ຢາໂຄບ ເຫັນໃນຖານະເປັນພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່
ແຕ່ເຮົາບໍ່ໄດ້ສຳແດງໃຫ້ເຂົາຮູ້ຈັກເຮົາໃນນາມພຣະຜູ້ເປັນເຈົ້າ
4 ແລະເຮົາໄດ້ໃຫ້ຄຳໝັ້ນສັນຍາແກ່ເຂົາດ້ວຍວ່າ ເຮົາຈະຍົກແຜ່ນດິນການາອານ ທີ່ເຂົາເຄີຍອາໄສຢູ່ຄາວເປັນຄົນ
ຕ່າງດ້າວນັ້ນໃຫ້ແກ່ເຂົາ

5 ບັດນີ້ ເຮົາໄດ້ຍິນສຽງຮ້ອງຄໍ່າຄວນຂອງຊາວອິສຣາເອນ ຊຶ່ງຖືກຊາວເອຢິບບັງຄັບໃຫ້ເປັນທາດ ແລະເຮົາລະນຶກເຖິງ
ຄໍາໝັ້ນສັນຍາຂອງເຮົາ
6 ດ້ວຍເຫດນີ້ ເຮົາຈຶ່ງບອກຄົນອິສຣາເອນວ່າ ເຮົາຄືພຣະຜູ້ເປັນເຈົ້າ ເຮົາຈະຊ່ອຍໃຫ້ພວກເຈົ້າລອດພົ້ນຈາກຊາວເອ
ຢິບ ບັງຄັບໃຫ້ເຮັດວຽກໜັກໃຫ້ພົ້ນຈາກການເປັນທາດຂອງພວກເຂົາ ຈະໄຖ່ເອົາພວກເຈົ້າດ້ວຍແຂນອັນມີຣິດ
ຂອງເຮົາ ແລະດ້ວຍການລົງໂທດພວກເຂົາຢ່າງຮຸນແຮງ
7 ເຮົາຈະຮັບເອົາພວກເຈົ້າເປັນໄພ່ພົນຂອງເຮົາ ແລະຈະເປັນພຣະເຈົ້າຂອງພວກເຈົ້າ ພວກເຈົ້າຈະຮູ້ວ່າເຮົາຄືພຣະຜູ້
ເປັນເຈົ້າ ພຣະເຈົ້າຂອງພວກເຈົ້າ ຜູ້ຊ່ອຍພວກເຈົ້າໃຫ້ພົ້ນຈາກຊາວເອຢິບບີບບັງຄັບໃຫ້ເຮັດວຽກໜັກ
8 ເຮົາຈະນໍາພວກເຈົ້າເຂົ້າໄປຍັງແຜ່ນດິນທີ່ເຮົາໄດ້ສັນຍາໄວ້ວ່າຈະຍົກໃຫ້ແກ່ອັບຣາຮາມ, ແກ່
ອີຊາກ, ແລະແກ່ຢາໂຄບ ເຮົາຈະຍົກແຜ່ນດິນນັ້ນໃຫ້ເປັນກໍາມະສິດຂອງພວກເຈົ້າ ເຮົາຄືພຣະຜູ້ເປັນເຈົ້າ"
9 ຝ່າຍໂມເຊຈຶ່ງນໍາຄວາມນັ້ນໄປບອກຊາວອິສຣາເອນ ແຕ່ເນື່ອງຈາກວ່າຊາວອິສຣາເອນໄດ້ອິດເມື່ອຍ ແລະເບື່ອ
ໜ່າຍໃນວຽກການອັນໂຫດຮ້າຍ ພວກເຂົາຈຶ່ງບໍ່ເຊື່ອຟັງຄວາມເວົ້າຂອງໂມເຊ
10 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊອີກວ່າ,
11 "ຈົ່ງໄປບອກໃຫ້ຟາຣາໂອກະສັດຂອງເອຢິບປ່ອຍຊົນຊາດອິສຣາເອນອອກຈາກເອຢິບ"
12 ແຕ່ໂມເຊຂາບທູນພຣະຜູ້ເປັນເຈົ້າວ່າ, "ແມ່ນແຕ່ຊາວອິສຣາເອນເອງກໍບໍ່ເຫັນເຊື່ອຟັງຂ້າພຣະອົງ ແລ້ວກະສັດຟາ
ຣາໂອຈະເຊື່ອຟັງຂ້າພຣະອົງໄດ້ແນວໃດ? ເພາະຂ້າພຣະອົງເປັນຄົນເວົ້າບໍ່ເກັ່ງ"
13 ພຣະຜູ້ເປັນເຈົ້າຊົງສັ່ງໃຫ້ໂມເຊ ແລະອາໂຣນ ບອກຊາວອິສຣາເອນກັບກະສັດຟາຣາໂອວ່າ ເຂົາທັງສອງໄດ້ຮັບຄໍາ
ສັ່ງໃຫ້ນໍາຊົນຊາດອິສຣາເອນອອກຈາກເອຢິບ

**ເຊື້ອສາຍຂອງໂມເຊແລະອາໂຣນ**

The Genealogy of Moses and Aaron

(ປຖກ 46:8-27)

14 ຕໍ່ໄປນີ້ເປັນຕົ້ນຕະກູນຂອງພວກເຂົາ ບຸດຊາຍຂອງຣູເບນຜູ້ເປັນບຸດຫົວປີຂອງອິສຣາເອນຊື່
ຮາໂນກ, ປານລູ, ເຮສໂຣນ, ແລະກາຣມີ ເຫລົ່ານີ້ເປັນຕະກູນເຜົ່າຣູເບນ
15 ບຸດຊາຍຂອງຊີ ເມໂອນຊື່ ເຢມູເອນ ຢາມີນໂອຮັດ ຢາຄີນ ໂຊຮາຣ ແລະຊາອູນ ຜູ້ມາຈາກຍິງການາອານ ເຫລົ່ານີ້
ເປັນຕະກູນເຜົ່າຊີເມໂອນ
16 ຕໍ່ໄປນີ້ເປັນຊື່ບຸດຊາຍຂອງເລວີຕາມເຊື້ອສາຍຂອງເຂົາຄື ເກີໂຊນ ໂກຮາດ ແລະເມຣາຣີ ເລວີນັ້ນມີອາຍຸໄດ້ຮ້ອຍ
ສາມສິບເຈັດປີ
17 ບຸດຊາຍຂອງເກີໂຊນຊື່ ລິບນີ ແລະຊິເມອີ ຕາມ
ຕະກູນຂອງເຂົາ
18 ບຸດຊາຍຂອງໂກຮາດຊື່ ອັມຣາມ ອິສຮາ ເຮໂບຣນ, ແລະອຸສຊີເອນ ໂກຮາດມີອາຍຸໄດ້ຮ້ອຍສາມສິບສາມປີ
19 ບຸດຊາຍຂອງເມຣາຣີຊື່ ມາລີ ແລະມູຊີ ເຫລົ່ານີ້ເປັນຕະກູນຂອງຄົນເລວີຕາມເຊື້ອສາຍຂອງເຂົາ
20 ຝ່າຍອັມຣາມໄດ້ແຕ່ງງານກັບນາງໂຢເຄເບດ ນ້ອງບິດາຂອງຕົນເປັນພັຣຍາ ແລ້ວນາງໃຫ້ກໍາເນີດບຸດຊາຍແກ່ເຂົາຊື່
ອາໂຣນ,ແລະໂມເຊ ອັມຣາມມີອາຍຸໄດ້ຮ້ອຍສາມສິບເຈັດປີ
21 ບຸດຊາຍຂອງອິສຮາຊື່ ໂກຣາ, ເນເຟກ, ແລະຊິກຣີ
22 ບຸດຊາຍຂອງອຸສຊີເອນຊື່ ມີຊາເອນ ເອນຊາຟານ ແລະຊິດຣີ
23 ຝ່າຍອາໂຣນໄດ້ນາງເອລີເຊບາ ບຸດຕຣີຂອງອັມມີນາດາບ ນ້ອງສາວຂອງນາໂຊນເປັນພັຣຍາ ນາງມີບຸດຊາຍກັບ
ທ່ານຊື່ ນາດາບ ອາບີຮູ ເອເລອາຊາ, ແລະອີທາມາ
24 ບຸດຊາຍຂອງໂກຣາຊື່ ອັດຊີ ເອນການາ ແລະອາບີອາສາຟ ເຫລົ່ານີ້ເປັນຕະກູນຂອງຄົນໂກຣາ

25 ຝ່າຍເອເລອາຊາບຸດຊາຍຂອງອາໂຣນ ໄດ້ຮັບບຸດຕຣີ ຄົນນຶ່ງຂອງປູທິເອນເປັນພັຣຍາ ນາງມີບຸດຊາຍກັບທ່ານຊື່
ຟີເນຮັສ ຄົນເຫລົ່ານີ້ເປັນຕົ້ນຕະກູນຂອງຄົນເລວີຕາມຕະກູນ

**ພຣະຜູ້ເປັນເຈົ້າຊົງສັ່ງໂມເຊແລະອາໂຣນ**

26 ແມ່ນໂມເຊແລະອາໂຣນນີ້ແຫລະທີ່ພຣະຜູ້ເປັນເຈົ້າຊົງບອກວ່າ, "ຈົ່ງພາຊາວອິສຣາເອນອອກຈາກປະເທດເອຢິບ
ເປັນຫມວດເປັນຫມູ່

27 ສອງຄົນນີ້ແຫລະທີ່ໄດ້ບອກໃຫ້ກະສັດຟາຣາໂອປ່ອຍຊົນຊາດອິສຣາເອນອອກຈາກເອຢິບ

**ໂມເຊແລະອາໂຣນເຊື່ອຟັງຄຳສັ່ງຂອງພຣະເຈົ້າ**

Moses and Aaron Obey God's Commands

28 ໃນວັນທີ່ພຣະຜູ້ເປັນເຈົ້າ ຊົງກ່າວກັບໂມເຊໃນປະເທດເອຢິບນັ້ນ ພຣະອົງຊົງກ່າວວ່າ,

29 "ເຮົາຄືພຣະຜູ້ເປັນເຈົ້າ ພວກເຈົ້າຈົ່ງເລົ່າຂໍ້ຄວາມທັງຫມົດທີ່ເຮົາໄດ້ບອກແກ່ເຈົ້າໃຫ້ກະສັດຟາຣາໂອຟັງ"

30 ແຕ່ໂມເຊໄດ້ກາບທູນພຣະຜູ້ເປັນເຈົ້າວ່າ, "ພຣະອົງຊົງຊາບແລ້ວວ່າ ຂ້າພຣະອົງເປັນຄົນເວົ້າບໍ່ເກັ່ງ ແລ້ວກະສັດຟາ
ຣາໂອຈະເຊື່ອຂ້າພຣະອົງໄດ້ຢ່າງໃດ?"

## 7

Chapter 7

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ, "ເບິ່ງແມ໋
ເຮົາຈະທຳໃຫ້ເຈົ້າເປັນເຫມືອນພຣະເຈົ້າຕໍ່ຫນ້າ
ຟາຣາໂອ ແລະອາໂຣນອ້າຍຂອງເຈົ້າຈະເປັນຜູ້ປະກາດພຣະທັມແກ່ກະສັດຟາຣາໂອແທນເຈົ້າ

2 ເຈົ້າຈົ່ງບອກຂໍ້ຄວາມທັງຫມົດທີ່ເຮົາສັ່ງເຈົ້ານັ້ນແກ່ອາໂຣນ ແລ້ວອາໂຣນຈະບອກໃຫ້ຟາຣາໂອປ່ອຍຊົນຊາດອິສຣາ
ເອນອອກໄປຈາກປະເທດເອຢິບ

3 ແຕ່ເຮົາຈະທຳໃຫ້ກະສັດຟາຣາໂອໃຈແຂງ ແມ້
ວ່າເຮົາຈະທຳການອັດສະຈັນຫລວງຫລາຍ ຊຶ່ງເປັນຫມາຍສຳຄັນໃນປະເທດເອຢິບແລ້ວກໍຕາມ

4 ຟາຣາໂອກໍຈະບໍ່ເຊື່ອຟັງເຈົ້າ ຫລັງຈາກນັ້ນເຮົາຈະໃຊ້ອຳນາດບີບບັງຄັບຄົນເອຢິບແລະລົງໂທດຄົນເອຢິບຢ່າງຫນັກ
ເພື່ອນຳພາກອງທັບຂອງເຮົາ ຄືປະຊາຊົນອິສຣາເອນອອກຈາກປະເທດເອຢິບ

5 ເມື່ອເຮົາຢຽດມືອອກຕໍ່ສູ້ຄົນເອຢິບແລະນຳພາຊາວອິສຣາເອນອອກຈາກປະເທດນັ້ນແລ້ວ ຊາວເອຢິບຈຶ່ງຈະຮູ້ວ່າ
ເຮົາຄືພຣະຜູ້ເປັນເຈົ້າ"

6 ໂມເຊແລະອາໂຣນໄດ້ທຳຕາມຄຳສັ່ງຂອງ
ພຣະຜູ້ເປັນເຈົ້າ

7 ເມື່ອເຂົາທັງສອງໄປທູນກະສັດຟາຣາໂອນັ້ນ ໂມເຊມີອາຍຸແປດສິບປີ ສ່ວນອາໂຣນມີອາຍຸແປດສິບສາມປີ

**ໄມ້ເທົ້າຂອງອາໂຣນ**

Aaron's Miraculous Rod

(ອພຍ 4:1-5)

8 ຕໍ່ມາພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊ ແລະອາໂຣນວ່າ,

9 ເມື່ອຟາຣາໂອສັ່ງເຈົ້າວ່າ ຈົ່ງສະແດງການອັດສະຈັນພິສູດງານຂອງເຈົ້າ ເຈົ້າຈົ່ງບອກອາໂຣນ
ວ່າ "ຖິ້ມໄມ້ເທົ້າຂອງຕົນລົງຕໍ່ຫນ້າຟາຣາໂອ ແລ້ວໄມ້ເທົ້ານັ້ນຈະກາຍເປັນງູ"

10 ໂມເຊກັບອາໂຣນຈຶ່ງພາກັນເຂົ້າໄປເຝົ້າກະສັດຟາຣາໂອແລະທຳຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງໄວ້ ຄືອາໂຣນໄດ້ຖິ້ມ
ໄມ້ເທົ້ານັ້ນລົງຊ້ອງພຣະພັກກະສັດຟາຣາໂອແລະບັນດາຂ້າຣາຊການຂອງພຣະອົງ ແລ້ວໄມ້ເທົ້ານັ້ນກໍກາຍເປັນງູ

11 ຂນະນັ້ນ ກະສັດຟາຣາໂອໄດ້ຊົງເອີ້ນພວກນັກປາດແລະຫມໍມົນຂອງພຣະອົງມາ ພວກເຂົາເຫລົ່ານີ້ຕ່າງກໍທຳເຊັ່ນ
ນັ້ນໄດ້ເຫມືອນກັນ
12 ພວກເຂົາໄດ້ຖິ້ມໄມ້ເທົ້າຂອງຕົນລົງ ໄມ້ເທົ້າເຫລົ່ານັ້ນກໍກາຍເປັນງູ ແຕ່ງູຂອງອາໂຣນໄດ້ກືນກິນງູຂອງເຂົາທັງຫມົດ
13 ເຖິງປານນັ້ນກະສັດຟາຣາໂອກໍຍັງແຂງພຣະທັຍຢູ່ ບໍ່ຍອມເຊື່ອຟັງໂມເຊແລະອາໂຣນ ເປັນຄວາມຈິງຕາມທີ່ພຣະຜູ້
ເປັນເຈົ້າໄດ້ຊົງບອກໄວ້

**ນໍ້າກາຍເປັນເລືອດ**

The First Plague: Water Turned to Blood

14 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ຟາຣາໂອນັ້ນດື້ດ້ານບໍ່ຍອມປ່ອຍໃຫ້ປະຊາຊົນໄປ
15 ເຈົ້າຈົ່ງໄປຫາກະສັດຟາຣາໂອໃນຕອນເຊົ້າ ລະຫວ່າງເຂົາອອກໄປຍັງແມ່ນໍ້ານິນ ໃຫ້ເຈົ້າຢືນຄອຍຢູ່ແຄມຕາຝັ່ງ ໃຫ້
ຖືໄມ້ເທົ້າທີ່ໄດ້ກາຍເປັນງູນັ້ນໄປນຳດ້ວຍ
16 ໃຫ້ເຈົ້າເວົ້າຕໍ່ກະສັດຟາຣາໂອວ່າ ພຣະຜູ້ເປັນເຈົ້າຂອງຊາວເຮັບເຣີໄດ້ໃຊ້ໃຫ້ຂ້າພຣະອົງມາ ເພື່ອບອກໃຫ້ພຣະອົງ
ປ່ອຍໄພ່ພົນຂອງພຣະຜູ້ເປັນເຈົ້າໄປ ເພື່ອເຂົາຈະໄດ້ຂາບໄຫວ້ບູຊາພຣະຜູ້ເປັນເຈົ້າຢູ່ໃນຖິ່ນກັນດານ ແຕ່ຈົນກະທັ້ງ
ບັດນີ້ ພຣະອົງກໍຍັງບໍ່ເຊື່ອຟັງຄຳຂອງພຣະຜູ້ເປັນເຈົ້າເລີຍ
17 ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວວ່າ ພຣະອົງຈະຮູ້ຈັກພຣະຜູ້ເປັນເຈົ້າດ້ວຍການກະທຳ ດັ່ງນີ້ ເບິ່ງເດີ, ຂ້າພຣະອົງຈະເອົາ
ໄມ້ເທົ້າຟາດລົງໃນແມ່ນໍ້ານິນ ແລ້ວພຣະເຈົ້າຈະໃຫ້ແມ່ນໍ້ານັ້ນກາຍເປັນເລືອດ
18 ປາທັງຫລາຍຈະຕາຍ ນໍ້າຈະເຫມັນເນົ່າ ຊາວເອຢິບຈະດື່ມນໍ້ານັ້ນບໍ່ໄດ້”
19 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ, “ຈົ່ງບອກໃຫ້ອາໂຣນເດ່ໄມ້ເທົ້າຂອງເຂົາໃສ່ແມ່ນໍ້າລຳຄອງ ໃສ່ຫນອງບຶງ
ແລະອ່າງນໍ້າໃນປະເທດເອຢິບ ເພື່ອໃຫ້ນໍ້າເຫລົ່ານັ້ນກາຍເປັນເລືອດ ຕລອດທົ່ວທັງແຜ່ນດິນຈະມີແຕ່ເລືອດ ທັງທີ່ຢູ່
ໃນພາຊນະໄມ້ແລະພາຊນະຫີນ”
20 ໂມເຊກັບອາໂຣນໄດ້ທຳຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງ ຄືອາໂຣນໄດ້ຍົກໄມ້ເທົ້າຂຶ້ນຕີນໍ້າໃນແມ່ນໍ້ານິນຊ້ອງພຣະພັກ
ກະສັດຟາຣາໂອແລະພວກຂ້າ ຣາຊການ ແລ້ວນໍ້າໃນແມ່ນໍ້າກໍກາຍເປັນເລືອດທັງຫມົດ
21 ຝູງປາກໍຕາຍ ແມ່ນໍ້າກໍເຫມັນເນົ່າ ຊາວເອຢິບກໍດື່ມນໍ້ານັ້ນບໍ່ໄດ້ ເພາະມີເລືອດທົ່ວປະເທດເອຢິບ
22 ຝ່າຍພວກຫມໍມົນຂອງເອຢິບກໍໃຊ້ຄາຖາອາຄົມຂອງເຂົາ ເຮັດສິ່ງນັ້ນໄດ້ເຫມືອນກັນ ສະນັ້ນກະສັດຟາຣາໂອຈຶ່ງຊົງ
ແຂງພຣະທັຍຢູ່ຕາມເດີມ ພຣະອົງບໍ່ຍອມເຊື່ອຟັງໂມເຊແລະອາໂຣນເລີຍ ເປັນຄວາມຈິງຕາມທີ່ພຣະຜູ້ເປັນເຈົ້າຊົງ
ບອກໄວ້
23 ກະສັດຟາຣາໂອໄດ້ສະເດັດກັບຄືນສູ່ພຣະຣາຊວັງບໍ່ໄດ້ສົນພຣະທັຍໃນເຫດການທີ່ເກີດຂຶ້ນນັ້ນແຕ່ຢ່າງໃດ
24 ຊາວເອຢິບທັງຫມົດຕ່າງກໍພາກັນຂຸດນໍ້າສ້າງຕາມແຄມແມ່ນໍ້ານິນ ເພາະວ່າພວກເຂົາດື່ມນໍ້າ
ໃນແມ່ນໍ້ານິນບໍ່ໄດ້
25 ເຈັດວັນຜ່ານໄປນັບຕັ້ງແຕ່ພຣະເຈົ້າຊົງບັນດານໃຫ້ແມ່ນໍ້ານິນກາຍເປັນເລືອດ

## 8 ເຣື່ອງກົບ

The second Plague: Frogs

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ, “ຈົ່ງໄປຫາຟາຣາໂອບອກວ່າ ພຣະຜູ້ເປັນເຈົ້າຊົງສັ່ງໃຫ້ປ່ອຍຊົນຊາດຂອງພຣ
ະອົງໄປບົວລະບັດພຣະອົງ
2 ຖ້າບໍ່ຍອມພຣະຜູ້ເປັນເຈົ້າຈະໃຫ້ຝູງກົບຂຶ້ນມາຣົບກວນທົ່ວປະເທດເອຢິບ
3 ແມ່ນໍ້ານິນຈະເຕັມໄປດ້ວຍຝູງກົບ ມັນຈະຂຶ້ນມາຢູ່ໃນພຣະຣາຊວັງ ໃນຫ້ອງບັນທົມ ໃນແທ່ນບັນທົມ ໃນເຮືອນຂອງ
ພວກຂ້າຣາຊການ ໃນເຮືອນປະຊາຊົນ ໃນເຕົາອົບເຂົ້າຫນົມແລະໃນຮາງນວດແປ້ງ

4 ຝູງກົບນັ້ນຈະຂຶ້ນມາເທິງພຣະກາຍຂອງພຣະອົງ ແລະຂຶ້ນເທິງຕົນຕົວປະຊາຊົນກັບຂ້າຣາຊການທັງຫມົດ"
5 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງບອກໃຫ້ອາໂຣນເດ່ໄມ້ເທົ້າໄປຕາມແມ່ນ້ຳລຳຄອງ ແລະຫນອງບຶງທັງ
ຫລາຍ ເພື່ອໃຫ້ຝູງກົບຂຶ້ນມາເທິງປະເທດເອຢິບ"
6 ອາໂຣນຈຶ່ງເດ່ໄມ້ເທົ້າຊີ້ໄປທາງແມ່ນ້ຳທັງຫລາຍໃນປະເທດເອຢິບ ຝູງກົບກໍຂຶ້ນມາທົ່ວປະເທດເອຢິບ
7 ຝ່າຍພວກຫມໍມົນກໍທຳໃຫ້ມີຝູງກົບຂຶ້ນມາເທິງແຜ່ນດິນໄດ້ເຫມືອນກັນ
8 ຕໍ່ມາ ກະສັດຟາຣາໂອຊົງເອີ້ນໂມເຊກັບອາໂຣນມາແລະບອກວ່າ "ພວກເຈົ້າຈົ່ງອ້ອນວອນໃຫ້
ພຣະຜູ້ເປັນເຈົ້າບອກຝູງກົບໄປເສັຽຈາກເຮົາ ແລະຈາກປະຊາຊົນຂອງເຮົາ ແລ້ວເຮົາຈະປ່ອຍໃຫ້ຄົນອິສຣາເອນໄປ
ຖວາຍສັດບູຊາແດ່ພຣະຜູ້ເປັນເຈົ້າ"
9 ໂມເຊໄດ້ທູນຕອບກະສັດຟາຣາໂອວ່າ "ສຸດແລ້ວແຕ່ພຣະອົງຈະກຳນົດເວລາໃຫ້ຂ້າພຣະອົງອ້ອນວອນສຳລັບພຣະ
ອົງ ສຳລັບຂ້າຣາຊການແລະປະຊາຊົນຂອງພຣະອົງ ເພື່ອໃຫ້ຝູງກົບຫນີໄປຈາກຄົນແລະຈາກບ່ອນຢູ່ອາໄສ ໃຫ້ມັນ
ມີແຕ່ໃນແມ່ນ້ຳນິນທ໌ນັ້ນ"
10 ກະສັດຟາຣາໂອຊົງຕອບວ່າ, "ໃຫ້ທຳໃນມື້ອື່ນນີ້" ໂມເຊຈຶ່ງທູນວ່າ, "ຈະເປັນໄປຕາມທີ່ພຣະອົງຕ້ອງການນັ້ນ ເພື່ອພ
ຣະອົງຈະໄດ້ຊາບວ່າ ບໍ່ມີພຣະອົງໃດເຫມືອນພຣະຜູ້ເປັນເຈົ້າຂອງພວກຂ້າພຣະອົງ
11 ຝູງກົບຈະຫນີໄປຈາກພຣະອົງ ຈາກພຣະຣາຊສຳນັກ ຈາກຂ້າຣາຊການ ແລະຈາກປະຊາຊົນຂອງພຣະອົງ ຈະມີ
ເຫລືອຢູ່ແຕ່ໃນແມ່ນ້ຳນິນທ໌ນັ້ນ"
12 ແລ້ວໂມເຊກັບອາໂຣນໄດ້ທູນລາກະສັດຟາຣາໂອໄປ ໂມເຊໄດ້ອ້ອນວອນຂໍໃຫ້ພຣະຜູ້ເປັນເຈົ້າຊົງເລີກໃຊ້ຝູງກົບທໍ
ຣະມານກະສັດເອຢິບ
13 ພຣະຜູ້ເປັນເຈົ້າກໍຊົງທຳຕາມຄຳທູນຂອງໂມເຊ ຝູງກົບທີ່ຢູ່ໃນບ້ານເຮືອນ ໃນເດີ່ນບ້ານແລະທົ່ງນາຈຶ່ງໄດ້ຕາຍຫມົດ
14 ຊາວເອຢິບໄດ້ກອງກົບຕາຍໄວ້ເປັນກອງໃຫຍ່ ແລ້ວແຜ່ນດິນນັ້ນກໍເຫມັນເນົ່າທົ່ວໄປ
15 ເມື່ອກະສັດຟາຣາໂອຊົງເຫັນວ່າຄວາມທຸກຮ້ອນນັ້ນເບົາບາງລົງແລ້ວ ກໍກັບມີພຣະທັຍແຂງກ້າວຂຶ້ນອີກ ຄືບໍ່ຍອມ
ເຊື່ອຟັງໂມເຊແລະອາໂຣນ ເປັນຄວາມຈິງຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງກ່າວໄວ້
16 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງບອກໃຫ້ອາໂຣນຈັບໄມ້ເທົ້າຂຶ້ນມາຕີດິນ ເພື່ອໃຫ້ຝຸ່ນດິນກາຍເປັນຮີ້ນແລະ
ຍຸງທົ່ວປະເທດເອຢິບ
17 ເຂົາທັງສອງກໍໄດ້ທຳຕາມ ອາໂຣນໄດ້ຈັບໄມ້ເທົ້າຂຶ້ນຕີດິນ ແລ້ວຝຸ່ນດິນທັງຫມົດໃນປະເທດເອຢິບໄດ້ກາຍເປັນຮີ້ນ
ແລະຍຸງມາຕອມມະນຸດ ແລະສັດ
18 ພວກຫມໍມົນກໍພຍາຍາມເຮັດຢ່າງນັ້ນເຫມືອນກັນ ແຕ່ພວກເຂົາເຮັດບໍ່ໄດ້
19 ຂນະນັ້ນ ພວກຫມໍມົນໄດ້ທູນກະສັດຟາຣາໂອວ່າ, "ສິ່ງທີ່ເກີດຂຶ້ນນີ້ແມ່ນການກະທຳຂອງພຣະເຈົ້າ" ແຕ່ກະສັດຟາ
ຣາໂອຊົງມີພຣະທັຍແຂງຢູ່ຄືເກົ່າບໍ່ຍອມເຊື່ອຟັງໂມເຊແລະອາໂຣນ ເປັນຄວາມຈິງຕາມທີ່ພຣະຜູ້ເປັນເຈົ້າຊົງກ່າວ
ໄວ້

**ເຣື່ອງເຫລືອກ**

The Fourth Plague: Flies

20 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ມື້ອື່ນແຕ່ເຊົ້າ ຈົ່ງໄປເຝົ້າກະສັດຟາຣາໂອ ຂນະທີ່ກະສັດຟາຣາໂອໄປຍັງແມ່ນ້ຳ
ໃຫ້ເຈົ້າບອກວ່າ ພຣະຜູ້ເປັນເຈົ້າຊົງສັ່ງໃຫ້ປ່ອຍຊົນຊາດຂອງພຣະອົງໄປບົວລະບັດພຣະອົງ
21 ຖ້າບໍ່ຍອມປ່ອຍໄປພຣະຜູ້ເປັນເຈົ້າຈະທຳໃຫ້ຝູງເຫລືອກມາຕອມພຣະກາຍຂອງພຣະອົງ ຕອມຂ້າຣາຊການ ຕອມ
ປະຊາຊົນ

ແລະຕອມພຣະຣາຊສຳນັກຂອງພຣະອົງ ຕາມບ້ານເຮືອນຂອງຊາວເອຢິບແລະຕາມພື້ນດິນຈະເຕັມໄປດ້ວຍ
ເຫລືອກ

22 ໃນວັນນັ້ນ ພຣະຜູ້ເປັນເຈົ້າຈະບໍ່ໃຫ້ແຄວ້ນໂກເຊັນ ບ່ອນປະຊາຊົນອິສຣາເອນອາໄສຢູ່ມີເຫລືອກ ເພື່ອພຣະອົງຈະ
ໄດ້ຮູ້ວ່າ ພຣະຜູ້ເປັນເຈົ້າຊົງກະທຳພາລະກິດຢູ່ໃນປະເທດນີ້
23 ພຣະຜູ້ເປັນເຈົ້າຈະຊົງແບ່ງເຂດລະຫວ່າງປະຊາຊົນອິສຣາເອນກັບປະຊາຊົນເອຢິບ ເຫດການນີ້ຈະເກີດຂຶ້ນໃນມື້ອື່ນ
ນີ້"
24 ແລ້ວພຣະຜູ້ເປັນເຈົ້າໄດ້ຊົງກະທຳຢ່າງນັ້ນ ຝູງເຫລືອກອັນມະຫາສານໄດ້ເຂົ້າໄປໃນພຣະຣາຊ
ວັງຂອງກະສັດຟາຣາໂອ ໃນເຮືອນຂ້າຣາຊການ ແລະທົ່ວປະເທດເອຢິບ ປະເທດນັ້ນຈຶ່ງໄດ້ຮັບການທໍຣະມານທີ່ສຸດ
ຍ້ອນຝູງເຫລືອກນັ້ນ
25 ຕໍ່ມາ ກະສັດຟາຣາໂອຊົງເອີ້ນໂມເຊກັບອາໂຣນເຂົ້າເຝົ້າແລະຊົງສັ່ງວ່າ, "ຈົ່ງພາກັນໄປຖວາຍສັດບູຊາແດ່ພຣະເຈົ້າ
ຂອງພວກເຈົ້າໃນດິນແດນປະເທດນີ້"
26 ໂມເຊທູນຕອບວ່າ, "ເປັນການບໍ່ຖືກຕ້ອງທີ່ຈະເຮັດຢ່າງນັ້ນ ເພາະຖ້າຖວາຍສັດບູຊາແດ່ພຣະຜູ້ເປັນເຈົ້າຂອງພວກ
ຂ້າພຣະອົງໃຫ້ຊາວເອຢິບເຫັນ ຊຶ່ງເຂົາຖືວ່າເປັນຂອງຫນ້າຂີ້ດຽດ ເຂົາກໍຈະເອົາກ້ອນຫີນຄວ່າງໃສ່ພວກຂ້າພຣະອົງ
27 ສະນັ້ນ ພວກຂ້າພຣະອົງຈຶ່ງຈຳເປັນຕ້ອງເຂົ້າໄປຖວາຍສັດບູຊາໃນຖິ່ນກັນດານ ຊຶ່ງເປັນໄລຍະທາງເດີນສາມ
ວັນຕາມທີ່ພຣະຜູ້ເປັນເຈົ້າຂອງພວກຂ້າພຣະອົງຊົງສັ່ງໄວ້"
28 ກະສັດຟາຣາໂອຊົງຮັບສັ່ງຕໍ່ໄປວ່າ, "ເຮົາຈະປ່ອຍໃຫ້ພວກເຈົ້າໄປຖວາຍສັດບູຊາແດ່ພຣະຜູ້ເປັນເຈົ້າຂອງພວກເຈົ້າ
ແຕ່ພວກເຈົ້າຈະຕ້ອງບໍ່ໄປໄກ ແລະໃຫ້ອ້ອນວອນສຳລັບເຮົາ"
29 ໂມເຊທູນຕອບວ່າ, "ພໍຂ້າພຣະອົງທູນລາພຣະອົງໄປ ຂ້າພຣະອົງກໍຈະອ້ອນວອນຕໍ່ພຣະຜູ້ເປັນເຈົ້າ ຂໍໃຫ້ຝູງ
ເຫລືອກຫນີໄປຈາກພຣະອົງ ຈາກຂ້າຣາຊການ ແລະຈາກປະຊາຊົນຂອງພຣະອົງໃນມື້ອື່ນນີ້ ແຕ່ພຣະອົງຢ່າໄດ້
ຫລອກລວງພວກຂ້າພຣະອົງຕໍ່ໄປອີກ ຄືຢ່າຂັດຂວາງປະຊາຊົນອິສຣາເອນໃນການໄປຖວາຍສັດບູຊາແດ່ພຣະຜູ້
ເປັນເຈົ້າ"
30 ແລ້ວໂມເຊໄດ້ທູນລາກະສັດຟາຣາໂອ ໄປອ້ອນວອນຕໍ່ພຣະຜູ້ເປັນເຈົ້າ
31 ພຣະຜູ້ເປັນເຈົ້າຊົງໄດ້ທຳຕາມຄຳທູນຂໍຂອງໂມເຊຄື ໄດ້ຊົງທຳໃຫ້ຝູງເຫລືອກຫນີໄປເສັຽຈາກກະສັດຟາຣາໂອ ຈາກ
ຂ້າຣາຊການ ແລະຈາກປະຊາຊົນຂອງພຣະອົງບໍ່ໃຫ້ເຫລືອກເຫລືອຢູ່ຈັກໂຕເລີຍ
32 ແຕ່ແລ້ວກະສັດຟາຣາໂອກໍຍັງມີພຣະທັຍແຂງຢູ່ຄືເກົ່າ ໂດຍບໍ່ຍອມປ່ອຍໃຫ້ປະຊາຊົນອິສຣາເອນໄປ

## 9 ເຣື່ອງສັດທັງຫລາຍຕາຍ

The Fifth Plague: Livestock Diseased

1 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງໄປຫາຟາຣາໂອແລ້ວເວົ້າວ່າ ພຣະຜູ້ເປັນເຈົ້າຂອງຊາວເຮັບເຣີຊົງສັ່ງໃຫ້
ປ່ອຍໄພ່ພົນຂອງພຣະອົງໄປບົວລະບັດພຣະອົງ
2 ຖ້າບໍ່ຍອມປ່ອຍໄປ ຍັງຫນ່ວງຫນ່ຽວເຂົາໄວ້ອີກ
3 ພຣະຜູ້ເປັນເຈົ້າຈະໃຫ້ເກີດໂຣກລະບາດຢ່າງຮ້າຍແຮງແກ່ຝູງສັດຊາວເອຢິບຄື ແກ່ຝູງມ້າ, ຝູງລໍ, ຝູງອູດ, ຝູງງົວ
ຄວາຍ, ແລະຝູງແກະແບ້
4 ພຣະຜູ້ເປັນເຈົ້າຈະທຳໃຫ້ຝູງສັດຊາວເອຢິບຕາຍແລະຈິບຫາຍໄປ ແຕ່ຈະໃຫ້ຝູງສັດອິສຣາເອນມີຊີວິດຢູ່
5 ພຣະຜູ້ເປັນເຈົ້າຊົງກຳນົດວ່າຈະໃຫ້ສິ່ງນີ້ເກີດຂຶ້ນໃນມື້ອື່ນນີ້"
6 ຄັນມື້ອື່ນມາ ພຣະຜູ້ເປັນເຈົ້າກໍຊົງກະທຳຕາມທີ່ຊົງກ່າວໄວ້ ຄືໄດ້ຊົງທຳສັດທັງປວງຂອງເອຢິບຕາຍ ແຕ່ສັດຂອງ
ຊາວອິສຣາເອນບໍ່ໄດ້ຕາຍຈັກໂຕ
7 ກະສັດຟາຣາໂອຈຶ່ງຊົງໃຊ້ຄົນໄປເບິ່ງ ແລ້ວກໍຊົງຊາບວ່າສັດຂອງຊາວອິສຣາເອນບໍ່ໄດ້ຕາຍເລີຍ ເມື່ອຊົງຊາບດັ່ງນີ້
ກໍຊົງມີພຣະທັຍແຂງຢູ່ຕາມເດີມ ໂດຍບໍ່ຍອມປ່ອຍໃຫ້ປະຊາຊົນອິສຣາເອນໄປ

**ເຣື່ອງຝີ**

The Sixth Plague: Boils

(ພບຍ 28:27)

8 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊແລະອາໂຣນວ່າ, "ພວກເຈົ້າຈົ່ງກຳເອົາຂີ້ເທົ່າໄຟເຕັມກຳມື ແລ້ວໃຫ້ໂມເຊຫວ່ານ
ຂຶ້ນໄປເທິງອາກາດຕໍ່ຫນ້າຟາຣາໂອ

9 ຂີ້ເທົ່າໄຟນັ້ນຈະກາຍເປັນຝຸ່ນດິນປິວໄປທົ່ວປະເທດເອຢິບຈະຕົກຖືກມະນຸດແລະສັດເດັຽຣະສານ ແລ້ວຈະເກີດເປັນ
ຝີແຕກເປັນບາດໃນຕົນຕົວ"

10 ດັ່ງນັ້ນ ໂມເຊກັບອາໂຣນຈຶ່ງກຳເອົາຂີ້ເທົ່າໄຟຢືນຢູ່ຊ້ອງພຣະພັກກະສັດຟາຣາໂອ ແລ້ວໂມເຊໄດ້ຫວ່ານຂຶ້ນໄປເທິງ
ອາກາດ ຂີ້ເທົ່າໄຟນັ້ນກໍປິວໄປຕົກຖືກມະນຸດແລະສັດເດັຽລະສານ ເປັນເຫດໃຫ້ມະນຸດແລະສັດເກີດເປັນຝີແຕກ
ເປັນບາດໃນຕົນຕົວ

11 ພວກຫມໍມົນຊາວເອຢິບບໍ່ສາມາດຈະເຮັດແຂ່ງຂັນໂມເຊໄດ້ ເພາະວ່າຝີນັ້ນໄດ້ເກີດກັບເຂົາເອງເຫມືອນຊາວເອ
ຢິບທັງປວງ

12 ແຕ່ພຣະຜູ້ເປັນເຈົ້າໄດ້ຊົງທຳໃຫ້ກະສັດຟາຣາໂອມີພຣະທັຍແຂງຢູ່ ໂດຍບໍ່ຍອມປ່ອຍໃຫ້ຄົນອິສຣາເອນໄປ ເປັນ
ຄວາມຈິງຕາມທີ່ພຣະອົງຊົງບອກໄວ້ກັບໂມເຊນັ້ນ

**ເຣື່ອງຫມາກເຫັບ**

The Seventh Plague: Thunder and Hail

13 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງ
ໄປເຝົ້າກະສັດຟາຣາໂອແຕ່ເຊົ້າທູນວ່າ ພຣະຜູ້ເປັນເຈົ້າຂອງຊາວເຮັບເຣີຊົງສັ່ງໃຫ້ປ່ອຍໄພ່ພົນຂອງພຣະອົງໄປບົວ
ລະບັດພຣະອົງ

14 ດ້ວຍວ່າຄາວນີ້ ພຣະຜູ້ເປັນເຈົ້າຈະລົງໂທດພຣະອົງ ກັບຂ້າຣາຊການແລະປະຊາຊົນເອຢິບ ເພື່ອໃຫ້ພຣະອົງຊົງ
ຊາບວ່າ ທົ່ວໂລກນີ້ບໍ່ມີໃຜສເມີເຫມືອນພຣະຜູ້ເປັນເຈົ້າໄດ້

15 ຖ້າພຣະຜູ້ເປັນເຈົ້າຊົງທຳລາຍພຣະອົງກັບປະຊາຊົນເອຢິບດ້ວຍພຍາດ ພຣະອົງກໍຈະຖືກທຳລາຍຈົນຫມົດສິ້ນ

16 ແຕ່ທີ່ພຣະຜູ້ເປັນເຈົ້າຊົງໃຫ້ພຣະອົງຍັງມີຊີວິດຢູ່ນີ້ ກໍເພື່ອຈະໃຫ້ເຫັນຣິດທານຸພາບຂອງພຣະຜູ້ເປັນເຈົ້າ ເພື່ອວ່າຊື່
ສຽງຂອງພຣະຜູ້ເປັນເຈົ້າຈະໄດ້ແຜ່ຜາຍໄປທົ່ວໂລກ

17 ດຽວນີ້ ພຣະອົງຍັງແຂງພຣະທັຍບໍ່ຍອມປ່ອຍໃຫ້ປະຊາຊົນອິສຣາເອນໄປ

18 ດັ່ງນັ້ນ ມື້ອື່ນປະມານເວລານີ້ ພຣະຜູ້ເປັນເຈົ້າຈະທຳໃຫ້ຫມາກເຫັບໃຫຍ່ຕົກລົງມາຢ່າງຫນັກ ຢ່າງທີ່ບໍ່ເຄີຍມີຈັກ
ເທື່ອຕັ້ງແຕ່ເປັນປະເທດເອຢິບມາ

19 ບັດນີ້ ຈົ່ງຕ້ອນຝູງສັດກັບບັນດາສິ່ງທີ່ມີຢູ່ໃນກາງແຈ້ງ ຈະຖືກຫມາກເຫັບໃຫຍ່ຕົກໃສ່ຕາຍຫມົດ"

20 ເມື່ອໄດ້ຍິນດັ່ງນັ້ນ ພວກຂ້າຣາຊການຂອງກະສັດຟາຣາໂອກໍເຊື່ອຟັງ ແລະຢຳເກງໃນຖ້ອຍຄຳຂອງພຣະຜູ້ເປັນເຈົ້າ
ພວກເຂົາຈຶ່ງນຳພວກທາດກັບຝູງສັດຂອງຕົນເຂົ້າບ່ອນກຳບັງ

21 ແຕ່ພວກທີ່ບໍ່ສົນໃຈໃນຖ້ອຍຄຳຂອງພຣະຜູ້ເປັນເຈົ້າ ກໍປະປ່ອຍໃຫ້ພວກທາດແລະຝູງສັດຂອງຕົນຢູ່ໃນກາງແຈ້ງ

22 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງຍົກມືຂຶ້ນເທິງທ້ອງຟ້າເພື່ອໃຫ້ຫມາກເຫັບໃຫຍ່ຕົກລົງມາຖືກຄົນ ຖືກ
ສັດແລະພືດພັນທັນຍາຫານຕ່າງໆໃນກາງແຈ້ງທົ່ວປະເທດເອຢິບ"

23 ໂມເຊຈຶ່ງຍົກໄມ້ເທົ້າຂຶ້ນເທິງຟ້າ ແລ້ວພຣະຜູ້ເປັນເຈົ້າໄດ້ຊົງໃຫ້ມີຟ້າຮ້ອງ ມີຟ້າແມບເຫລື້ອມແລະມີຫມາກເຫັບຕົກ
ລົງມາເທິງປະເທດເອຢິບ

24 ພາຍຸຝົນ ຟ້າແມບເຫລື້ອມແລະຫມາກເຫັບໄດ້ຕົກລົງມາຢ່າງຫນັກ ຢ່າງທີ່ບໍ່ເຄີຍມີຈັກເທື່ອຕັ້ງແຕ່ເປັນຊາດເອຢິບ
ມາ

25 ສິ່ງສາຣະພັດທັງຄົນແລະສັດທີ່ຢູ່ໃນກາງແຈ້ງທົ່ວປະເທດເອຢິບ ໄດ້ຖືກຫມາກເຫັບໃຫຍ່ຕົກລົງມາທຳລາຍຈົນຫາຍ
ຫມົດ ຜັກຫຍ້າແລະກົກໄມ້ກໍເສັຽຫາຍທັກລົ້ມຫມົດ
26 ມີແຕ່ແຄວ້ນໂກເຊັນບ່ອນຊາວອິສຣາເອນອາໄສຢູ່ທີ່ນັ້ນ ທີ່ຫມາກເຫັບບໍ່ໄດ້ຕົກລົງໃສ່
27 ໃນເທື່ອນີ້ ກະສັດຟາຣາໂອຊົງໃຊ້ຄົນໄປເອີ້ນໂມເຊແລະອາໂຣນມາເຝົ້າຊົງກ່າວວ່າ, “ເຮົາໄດ້ເຮັດບາບແລ້ວໃນ
ຄາວນີ້ ພຣະຜູ້ເປັນເຈົ້າເປັນຝ່າຍຖືກ ເຮົາກັບປະຊາຊົນຂອງເຮົາເປັນຝ່າຍຜິດ
28 ຂໍໃຫ້ເຈົ້າອ້ອນວອນຂໍນຳພຣະຜູ້ເປັນເຈົ້າ ເລື່ອງຫມາກເຫັບແລະຟ້າຮ້ອງນີ້ເຮົາທົນບໍ່ໄຫວແລ້ວ ບັດນີ້ ເຮົາຈະປ່ອຍ
ໃຫ້ພວກເຈົ້າໄປ ໂດຍບໍ່ຕ້ອງລັງເລຕໍ່ໄປອີກ”
29 ໂມເຊໄດ້ທູນຕອບວ່າ, “ພໍຂ້າພຣະອົງອອກໄປຈາກເມືອງນີ້ ຂ້າພຣະອົງຈະຍົກມືຂຶ້ນອ້ອນວອນ
ພຣະຜູ້ເປັນເຈົ້າ ແລ້ວສຽງຟ້າຮ້ອງກໍຈະເຊົາ ແລະຫມາກເຫັບກໍຈະບໍ່ຕົກລົງມາອີກ ເພື່ອພຣະອົງຈະໄດ້ຮູ້ວ່າໂລກ
ນີ້ເປັນຂອງພຣະຜູ້ເປັນເຈົ້າ
30 ແຕ່ຂ້າພຣະອົງຮູ້ຢູ່ແລ້ວວ່າ ພຣະອົງກັບພວກຂ້າຣາຊການຂອງພຣະອົງຈະຍັງບໍ່ຢຳເກງພຣະຜູ້ເປັນເຈົ້າ”
31 ກົກປ່ານກັບເຂົ້າເດືອຍກໍຖືກທຳລາຍຫມົດ ເພາະໃນເວລານັ້ນເຂົ້າເດືອຍກຳລັງມີຮວງ ແລະກົກປ່ານກໍອອກດອກ
ແລ້ວ
32 ແຕ່ເຂົ້າບເລກັບເຂົ້າຟ່າງນັ້ນບໍ່ໄດ້ຖືກທຳລາຍ ເພາະວ່າມັນຍັງບໍ່ທັນຂຶ້ນມາພົ້ນດິນ
33 ເມື່ອໂມເຊທູນລາກະສັດຟາຣາໂອອອກຈາກເມືອງໄປ ໂມເຊກໍຍົກມືຂຶ້ນອ້ອນວອນພຣະຜູ້ເປັນເຈົ້າ ແລ້ວສຽງຟ້າ
ຮ້ອງກໍເຊົາ ຫມາກເຫັບແລະຝົນກໍເຊົາຕົກ
34 ເມື່ອຊົງເຫັນວ່າຝົນກັບຫມາກເຫັບແລະຟ້າຮ້ອງເຊົາແລ້ວ ຝ່າຍກະສັດຟາຣາໂອກັບຂ້າຣາຊການຂອງພຣະອົງ ກໍຊົງ
ປຸ່ນພຣະທັຍທຳຜິດຕໍ່ໄປອີກ
35 ຄືບໍ່ຍອມປ່ອຍໃຫ້ຊາວອິສຣາເອນໄປ ເປັນຄວາມຈິງຕາມທີ່ພຣະຜູ້ເປັນເຈົ້າຊົງບອກໂມເຊໄວ້

## 10 ຕັກແຕນ

The Eighth Plague: Locusts

(ຢອນ 1:2-4)

1 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ, “ຈົ່ງໄປຫາຟາຣາໂອ ເຮົາໄດ້ທຳໃຫ້ຟາຣາໂອກັບຂ້າຣາຊການມີໃຈແຂງກະ
ດ້າງ ເພື່ອເຮົາຈະໄດ້ທຳການ
ອັດສະຈັນເຫລົ່ານີ້ໃນຖ້າມກາງພວກເຂົາ
2 ເພື່ອເຈົ້າຈະໄດ້ເລົ່າເຣື່ອງການອັດສະຈັນທີ່ເຮົາໄດ້ທຳໃຫ້ຄົນເອຢິບ ເສັຽຫນ້າເສັຽຕາສູ່ລູກຫລານຟັງ ແລະເພື່ອເຈົ້າ
ທັງຫລາຍຈະໄດ້ຮູ້ວ່າ ເຮົາຄື
ພຣະຜູ້ເປັນເຈົ້າ”
3 ໂມເຊກັບອາໂຣນຈຶ່ງເຂົ້າໄປເຝົ້າກະສັດຟາຣາໂອທູນວ່າ, “ພຣະຜູ້ເປັນເຈົ້າຂອງຊາວເຮັບເຣີຊົງກ່າວວ່າ ພຣະອົງຈະ
ຊົງຂັດຂືນບໍ່ຍອມອ່ອນນ້ອມຕໍ່ພຣະຜູ້ເປັນເຈົ້າຢູ່ອີກເທິງປານໃດ? ຈົ່ງປ່ອຍໃຫ້ຊົນຊາດອິສຣາເອນໄປນົບລະບັດພ
ຣະຜູ້ເປັນເຈົ້າເສັຽ
4 ຖ້າພຣະອົງຍັງປະຕິເສດບໍ່ຍອມປ່ອຍໄປ ເບິ່ງເດີ, ມື້ອື່ນນີ້ ພຣະຜູ້ເປັນເຈົ້າຈະໃຫ້ຕັກແຕນເຂົ້າມາໃນປະເທດຂອງພ
ຣະອົງ
5 ຝູງຕັກແຕນຈະປົກຄຸມຢູ່ທົ່ວໄປຈົນບໍ່ເຫັນດິນ ມັນຈະກິນທຸກສິ່ງທີ່ເຫລືອຈາກຫມາກເຫັບທຳລາຍ ກົກໄມ້ທຸກກົກ
ຂອງພຣະອົງມັນຈະກິນຫມົດ
6 ມັນຈະເຂົ້າໄປຢູ່ໃນພຣະຣາຊວັງ ໃນເຮືອນຂອງຂ້າຣາຊການແລະໃນເຮືອນຂອງຄົນເອຢິບ ມັນ

ຈະໂຫດຮ້າຍກວ່າທຸກໆ ຢ່າງທີ່ບັນພະບຸຣຸດຂອງ
ພຣະອົງເຄີຍປະສົບມາຕັ້ງແຕ່ຢູ່ໃນປະເທດນີ້" ແລ້ວໂມເຊກໍທູນລາກະສັດຟາຣາໂອໄປ
7 ຕໍ່ມາ ພວກຂ້າຣາຊການໄດ້ທູນກະສັດຟາຣາໂອວ່າ, "ບຸກຄົນຜູ້ນີ້ຍັງຈະທຳໃຫ້ພວກເຮົາເດືອດຮ້ອນຢູ່ເທິງປານໃດ? ຂໍພຣະອົງຊົງພຣະກະຣຸນາໂຜດປ່ອຍຄົນຫລໍ່ານີ້ໄປບົວລະບັດພຣະຜູ້ເປັນເຈົ້າຂອງເຂົາເສັຽ ພຣະອົງຍັງບໍ່ເຫັນບໍ່ວ່າເອຢິບໄດ້ຈິບຫາຍແລ້ວ?"
8 ດັ່ງນັ້ນ ໂມເຊກັບອາໂຣນຈຶ່ງຖືກນຳເຂົ້າເຝົ້າກະສັດຟາຣາໂອອີກ ໃນເທື່ອນີ້ ກະສັດຟາຣາໂອຊົງກ່າວວ່າ, "ຈົ່ງໄປບົວລະບັດພຣະຜູ້ເປັນເຈົ້າຂອງເຈົ້າເສັຽ ແຕ່ໃຜແດ່ຈະໄປ?"
9 ໂມເຊທູນຕອບວ່າ, "ພວກຂ້ານ້ອຍຈະພາກັນໄປຫມົດ ທັງຄົນຫນຸ່ມຄົນແກ່ທັງບຸດຊາຍຍິງ ທັງຝູງແກະຝູງແບ້ ທັງງົວທັງຄວາຍ ເພາະພວກຂ້າ
ພຣະອົງຈະຈັດໃຫ້ມີພິທີລ້ຽງທາງສາສນາຖວາຍບູຊາແດ່ພຣະຜູ້ເປັນເຈົ້າ"
10 ກະສັດຟາຣາໂອຊົງກ່າວຕອບວ່າ, "ໃຫ້ພຣະຜູ້ເປັນເຈົ້າຊ່ອຍເຈົ້າເສັຽ ຝ່າຍເຮົາຈະບໍ່ອະນຸຍາດໃຫ້ພວກຜູ້ຍິງແລະເດັກນ້ອຍໄປດອກ ມັນເປັນຄວາມຈິງແລ້ວວ່າພວກເຈົ້າມີແຜນການຮ້າຍ
11 ອະນຸຍາດບໍ່ໄດ້ດອກ ຖ້າພວກເຈົ້າຢາກຈະ ນະມັສ
ການພຣະຜູ້ເປັນເຈົ້າແທ້ ໃຫ້ພາແຕ່ພວກຜູ້ຊາຍໄປ" ແລ້ວໂມເຊກັບອາໂຣນກໍຖືກໄລ່ຫນີຈາກພຣະພັກກະສັດຟາຣາໂອ
12 ຕໍ່ມາ ພຣະຜູ້ເປັນເຈົ້າບອກໂມເຊວ່າ, "ຈົ່ງຍົກມືຂຶ້ນເຫນືອປະເທດເອຢິບ ເພື່ອໃຫ້ຕັກແຕນມາທຳລາຍທຸກສິ່ງທີ່ເກີດຂຶ້ນໃນແຜ່ນດິນແລະທຳລາຍທຸກສິ່ງທີ່ເຫລືອຈາກຫມາກເຫັບນັ້ນ"
13 ດັ່ງນັ້ນ ໂມເຊຈຶ່ງຍົກໄມ້ເທົ້າຂຶ້ນ ແລ້ວພຣະຜູ້ເປັນເຈົ້າຊົງໃຫ້ລົມຕາເວັນອອກພັດມາຍັງປະເທດທັງກາງເວັນແລະກາງຄືນ ຄັນເວລາເຊົ້າລົມຕາເວັນອອກກໍພັດເອົາຝູງຕັກແຕນມາ
14 ຝູງຕັກແຕນນັ້ນໄດ້ເຂົ້າມາເຕັມປະເທດເອຢິບ ຊຶ່ງແຕ່ກ່ອນຫລືຫລັງຈາກນັ້ນມາ ກໍບໍ່ເຄີຍມີຝູງຕັກແຕນຫລວງຫລາຍຢ່າງນີ້ຈັກເທື່ອ
15 ຝູງຕັກແຕນນີ້ໄດ້ປົກຫຸ້ມພື້ນດິນຈົນດຳມືດ ມັນໄດ້ກິນຜັກຫຍ້າແລະຫມາກໄມ້ທຸກຢ່າງທີ່ເຫລືອຈາກຫມາກເຫັບຕົກໃສ່ ຕລອດທົ່ວປະເທດເອຢິບບໍ່ມີພືດພັນທັນຍາຫານຫລືກົກໄມ້ໃບຂຽວເຫລືອຢູ່ເລີຍ
16 ຂນະນັ້ນ ກະສັດຟາຣາໂອກໍຟ້າວໃຫ້ເອົາໂມເຊ
ກັບອາໂຣນເຂົ້າມາເຝົ້າຊົງບອກວ່າ, "ເຮົາໄດ້ທຳບາບຕໍ່ສູ້ພຣະຜູ້ເປັນເຈົ້າຂອງເຈົ້າ ແລະຕໍ່ສູ້ເຈົ້າທັງຫລາຍດ້ວຍ
17 ບັດນີ້ ຂໍເຈົ້າຈົ່ງໃຫ້ອະພັຍໂທດແກ່ເຮົາແຕ່ເທື່ອນີ້ເທື່ອດຽວ ຈົ່ງອ້ອນວອນຂໍໃຫ້ພຣະຜູ້ເປັນເຈົ້າຂອງເຈົ້າຍົກໂທດອັນຈະນຳໄປສູ່ຄວາມຕາຍນີ້ອອກຈາກເຮົາ"
18 ແລ້ວໂມເຊໄດ້ທູນລາກະສັດຟາຣາໂອ ໄປອ້ອນ
ວອນພຣະຜູ້ເປັນເຈົ້າ
19 ພຣະຜູ້ເປັນເຈົ້າຈຶ່ງຊົງໃຫ້ລົມແດງພັດໄປທາງທິດຕາເວັນຕົກ ລົມນັ້ນໄດ້ພັດເອົາຝູງຕັກແຕນໄປຕົກລົງໃນທະເລໄມ້ອໍ້ ຈົນບໍ່ມີຕັກແຕນຕັກໂຕເຫລືອຢູ່ໃນປະເທດເອຢິບ
20 ແຕ່ພຣະຜູ້ເປັນເຈົ້າໄດ້ຊົງທຳໃຫ້ກະສັດຟາຣາໂອມີຈິດໃຈແຂງກະດ້າງຢູ່ຄືເກົ່າ ໂດຍບໍ່ຊົງຍອມປ່ອຍໃຫ້ຊາວອິສຣາເອນໄປຕາມເຄີຍ

**ຄວາມມືດ**

The Ninth Plague: Darkness

21 ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ, "ຈົ່ງຍົກມືຂອງເຈົ້າຂຶ້ນເທິງທ້ອງຟ້າ ເພື່ອໃຫ້ເກີດຄວາມມືດອັນຫນາຕຶບຈົນຈະຈັບບາຍອັນໃດບໍ່ໄດ້ໃນແຜ່ນດິນເອຢິບ"

22 ໂມເຊຈຶ່ງຊີ້ຍົກຂຶ້ນສູ່ທ້ອງຟ້າ ແລ້ວຄວາມມືດອັນໜາຕຶບກໍເກີດຂຶ້ນທົ່ວແຜ່ນດິນເອຢິບຕລອດສາມວັນ
23 ຄົນເອຢິບຫລຽວເບິ່ງກັນບໍ່ເຫັນແລະບໍ່ມີໃຜໜີໄປຈາກເຮືອນຂອງຕົນເປັນເວລາສາມວັນ ແຕ່ໃນບ່ອນຢູ່ຂອງຊາວອິ
ສຣາເອນໄດ້ມີແສງສວ່າງໃຫ້ເຂົາເຫັນຮຸ່ງໄດ້
24 ກະສັດຟາຣາໂອຈຶ່ງຊົງສັ່ງໃຫ້ໂມເຊເຂົ້າມາເຝົ້າຊົງກ່າວວ່າ, “ພວກເຈົ້າຈົ່ງໄປບົວລະບັດພຣະຜູ້ເປັນເຈົ້າເສັຽ ພວກຜູ້
ຍິງແລະເດັກນ້ອຍກໍໄປກັບພວກເຈົ້າໄດ້ ແຕ່ຝູງແກະແບ້ແລະງົວຄວາຍໃຫ້ຢູ່ທີ່ນີ້”
25 ໂມເຊຈຶ່ງທູນຕອບວ່າ, “ຕ້ອງໂຜດໃຫ້ມີຝູງສັດ
ໄປດ້ວຍ ເພື່ອພວກຂ້ານ້ອຍຈະໄດ້ເຜົາບູຊາແດ່ພຣະຜູ້ເປັນເຈົ້າຂອງພວກຂ້າພຣະອົງ
26 ຝູງສັດຂອງພວກຂ້ານ້ອຍຈະຕ້ອງເອົາໄປນຳດ້ວຍບໍ່ໃຫ້ເຫລືອຄ້າງຢູ່ຈັກໂຕ ເພາະວ່າຈະຕ້ອງເລືອກເອົາສັດເຫລົ່າ
ນັ້ນເຜົາຖວາຍບູຊາແດ່ພຣະຜູ້ເປັນເຈົ້າ ພວກຂ້າ
ນ້ອຍຍັງບໍ່ຮູ້ວ່າຈະຕ້ອງເອົາສັດໂຕໃດ ຖວາຍບູຊາແດ່ພຣະຜູ້ເປັນເຈົ້າ ຈົນກວ່າພວກຂ້ານ້ອຍ
ຈະໄປເຖິງທີ່ນັ້ນເສັຽກ່ອນ”
27 ພຣະຜູ້ເປັນເຈົ້າຊົງທຳໃຫ້ກະສັດຟາຣາໂອມີພຣະ
ທັຍກະດ້າງຢູ່ຕາມເດີມ ໂດຍບໍ່ຍອມປ່ອຍໃຫ້ຊົນຊາດອິສຣາເອນໄປ
28 ກະສັດຟາຣາໂອຊົງຮ້າຍໂມເຊໂດຍເວົ້າວ່າ, “ອອກໜີ! ລະວັງໃຫ້ດີ ຢ່າມາເຫັນໜ້າເຮົາ
ອີກເລີຍ ເພາະຖ້າເຈົ້າເຫັນໜ້າເຮົາໃນມື້ໃດ
ເຈົ້າຈະຕ້ອງຕາຍໃນມື້ນັ້ນ”
29 ໂມເຊກໍທູນຕອບວ່າ, “ພຣະອົງຊົງເວົ້າຖືກຕ້ອງແລ້ວ ຂ້ານ້ອຍຈະບໍ່ກັບມາໃຫ້ພຣະອົງເຫັນໜ້າອີກຈັກເທື່ອ”

## 11 ພະຍາກອນເຣື່ອງມໍຣະກັມຂອງລູກຫົວປີຊາວເອຢິບ

Warning of the Final Plague

(ອພຍ 3:21-22;12:35-36)

1 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ, “ເຮົາຈະນຳໄພວິບັດອີກຢ່າງນຶ່ງມາລົງໂທດກະສັດຟາຣາໂອແລະຄົນເອຢິບ
ຫລັງຈາກນັ້ນເຂົາຈະປ່ອຍພວກເຈົ້າໄປ ໃນເທື່ອນີ້ເຂົາຈະໄລ່ພວກເຈົ້າໄປໝົດ
2 ບັດນີ້ ເຈົ້າຈົ່ງໃຫ້ຄົນອິສຣາເອນທັງໝົດ ທັງຜູ້ຊາຍແລະຜູ້ຍິງ ຂໍເອົາເຄື່ອງເງິນເຄື່ອງຄຳຈາກເພື່ອນບ້ານຂອງເຂົາ”
3 ພຣະຜູ້ເປັນເຈົ້າໄດ້ຊົງທຳໃຫ້ຄົນເອຢິບຢຳເກງຄົນອິສຣາເອນ ແລະຍັງຊົງທຳໃຫ້ໂມເຊໄດ້ຮັບຄວາມນັບຖືຈາກຂ້າ
ຣາຊການແລະຊາວເອຢິບທັງປວງດ້ວຍ
4 ໂມເຊໄດ້ທູນກະສັດຟາຣາໂອວ່າ, “ພຣະຜູ້ເປັນເຈົ້າຊົງບອກວ່າ ໃນເວລາປະມານທ່ຽງຄືນ ພຣະອົງຈະສະເດັດໄປ
ໃນຖ້າມກາງຊາວເອຢິບ
5 ໃນເວລານັ້ນ ບຸດຫົວປີທັງໝົດໃນປະເທດເອຢິບ ຄືຕັ້ງແຕ່ອົງມົງກຸດຣາຊກຸມມານລົງມາເຖິງບຸດຫົວປີຂອງຂ້າໃຊ້
ຍິງໃນໂຮງໂມ້ແປ້ງຕລອດທັງລູກຫົວປີຂອງສັດເດັຽຣະສານຈະຕາຍໝົດ
6 ແລ້ວຈະມີສຽງຮ້ອງໄຫ້ທົ່ວປະເທດເອຢິບ ຊຶ່ງ
ແຕ່ກ່ອນຫລືຫລັງຈາກນັ້ນມາກໍບໍ່ເຄີຍມີຢ່າງນີ້ຈັກເທື່ອໃນປະເທດເອຢິບ
7 ແຕ່ໃນຖ້າມກາງຊາວອິສຣາເອນນັ້ນຈະງຽບສງົບ
ແມ່ນແຕ່ສຽງໝາເຫົ່າຄົນຫລືສັດກໍບໍ່ມີ ທັງນີ້ກໍເພື່ອໃຫ້ພຣະອົງຊົງຊາບວ່າ ພຣະຜູ້ເປັນເຈົ້າຊົງກະທຳກັບຊາວເອຢິບ
ຕ່າງກັບຊາວອິສຣາເອນ

8 ຫລັງຈາກນັ້ນ ຂ້າຣາຊການທັງຫມົດຂອງພຣະອົງຈະມາຫາຂ້ານ້ອຍ ແລະຂາບລົງເວົ້າວ່າ ຂໍທ່ານກັບປະຊາຊົນທັງ
ປວງຂອງທ່ານໄປເສັຽຈາກທີ່ນີ້ ແລ້ວຂ້ານ້ອຍກໍຈະອອກຫນີໄປ" ຄັນແລ້ວ ໂມເຊກໍທູນລາກະສັດຟາຣາໂອໄປດ້ວຍ
ຄວາມຄຽດຮ້າຍທີ່ສຸດ
9 ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂມເຊວ່າ, "ຟາຣາໂອ ຍັງຈະບໍ່ເຊື່ອຟັງເຈົ້າ ເພື່ອວ່າເຮົາຈະໄດ້ທຳການອັດສະຈັນ
ເພີ້ມຂຶ້ນອີກໃນປະເທດເອຢິບ"
10 ໂມເຊແລະອາໂຣນໄດ້ກະທຳການອັດສະຈັນເຫລົ່ານັ້ນຊ້ອງຫນ້າພຣະພັກກະສັດຟາຣາໂອ ແຕ່ພຣະຜູ້ເປັນເຈົ້າໄດ້
ຊົງທຳໃຫ້ກະສັດຟາຣາໂອມີພຣະທັຍແຂງກະດ້າງຢູ່ຕາມເດີມ ໂດຍບໍ່ຊົງຍອມໃຫ້ຊາວອິສຣາເອນໄປເສັຽຈາກປະ
ເທດເອຢິບ

## 12 ງານປັສຄາ

The First Passover Instituted

**(ຈຊບ 9:1-14; ພບຍ 16:1-8; ອຊກ 45:21-25)**

1 ພຣະຜູ້ເປັນເຈົ້າຊົງບອກໂມເຊກັບອາໂຣນ ໃນປະເທດເອຢິບວ່າ,
2 "ເດືອນນີ້ກໍເປັນເດືອນທີ່ນຶ່ງຂອງປີໃຫມ່ສຳລັບເຈົ້າທັງຫລາຍແລ້ວ
3 ພວກເຈົ້າຈົ່ງປະກາດຕໍ່ຊຸມນຸມຊົນອິສຣາເອນວ່າ ໃນວັນທີ່ສິບເດືອນນີ້ ໃຫ້ຊາຍທຸກຄົນຈັດຕຽມລູກແກະຫລືລູກແບ້
ຄອບຄົວລະນຶ່ງໂຕ
4 ຖ້າຄອບຄົວໃດມີຫນ້ອຍຄົນຈະກິນລູກແກະໂຕນຶ່ງບໍ່ຫມົດ ກໍໃຫ້ຮ່ວມກັບເພື່ອນບ້ານທີ່ຢູ່ໃກ້ຄຽງກັນ ຈັດຕຽມເອົາລູກ
ສັດໂຕນຶ່ງຕາມທີ່ຄິດວ່າຈະກິນໄດ້ຫມົດແລະໃຫ້ເຈົ້ານັບຈຳນວນຄົນທີ່ຈະກິນລູກແກະນັ້ນດ້ວຍ
5 ສັດຂອງເຈົ້າຈະຕ້ອງປາສຈາກຕຳຫນິເປັນສັດໂຕເຖິກອາຍຸນຶ່ງຂວບ ຈົ່ງເລືອກເອົາໃນຝູງແກະຫລືຝູງແບ້
6 ເຈົ້າຈົ່ງຮັກສາໄວ້ໃຫ້ດີຈົນເຖິງວັນທີ່ສິບສີ່ ແລ້ວໃນຄ່ຳວັນນັ້ນ ໃຫ້ທີ່ຊຸມນຸມຊົນອິສຣາເອນຂ້າສັດຂອງເຂົາ
7 ໃຫ້ເຂົາເອົາເລືອດທາໃສ່ໄມ້ຂອບວົງປະຕູບ່ອນກິນລ້ຽງກັນນັ້ນ ທັງຂ້າງຊ້າຍຂ້າງຂວາແລະຂ້າງເທິງ
8 ໃນຄືນນັ້ນໃຫ້ເຂົາຮັບປະທານຊີ້ນປີ້ງກັບຂະຫນົມບໍ່ໃສ່ເຊື້ອແປ້ງແລະຜັກຂົມ
9 ຢ່າຮັບປະທານຊີ້ນທີ່ຍັງດິບຫລືຊີ້ນຕົ້ມ ແຕ່ໃຫ້ປີ້ງເສັຽກ່ອນທັງຫົວທັງຂາແລະເຄື່ອງໃນທັງຫມົດ
10 ຈົ່ງຮັບປະທານໃຫ້ຫມົດ ຢ່າໃຫ້ມີອັນໃດເຫລືອໄວ້ຮອດມື້ເຊົ້າ ຖ້າມີອັນໃດຍັງເຫລືອຢູ່ກໍໃຫ້ຖິ້ມໃສ່ໄຟເສັຽ
11 ກ່ອນພວກເຈົ້າຈະຮັບປະທານໃຫ້ທຳດັ່ງນີ້ ໃຫ້ຮັດສາຍແອວສຸບເກີບແລະຖືໄມ້ເທົ້າໄວ້ ແລ້ວໃຫ້ພ້ອມກັນກິນໄວໆ
ການກິນລ້ຽງຢ່າງນີ້ເປັນງານສະຫລອງປັສຄາຖວາຍແດ່ພຣະຜູ້ເປັນເຈົ້າ
12 ແລ້ວໃນຄືນນັ້ນເຮົາຈະຜ່ານເຂົ້າໄປໃນປະເທດເອຢິບ ເຮົາຄືພຣະຜູ້ເປັນເຈົ້າ
13 ເລືອດທີ່ພວກເຈົ້າທາໃສ່ເຮືອນນັ້ນ ຈະເປັນເຄື່ອງຫມາຍສຳຄັນບອກໃຫ້ຮູ້ວ່າພວກເຈົ້າຢູ່ທີ່ນັ້ນ ເມື່ອເຮົາທຳລາຍປະ
ເທດເອຢິບ ເຮົາຈະບໍ່ທຳລາຍພວກເຈົ້າ ແລະເມື່ອເຮົາເຫັນເລືອດນັ້ນເຮົາຈະຜ່ານເວັ້ນພວກເຈົ້າໄປ
14 ໃຫ້ພວກເຈົ້າຖືວັນນີ້ເປັນວັນລະນຶກເຖິງ ຈົ່ງຈັດສະຫລອງວັນນີ້ເປັນພິທີລ້ຽງທາງສາສນາຖວາຍພຣະຜູ້ເປັນເຈົ້າ ໃຫ້
ພວກເຈົ້າຖືເອົາວັນນີ້ ເປັນມື້ລ້ຽງສະຫລອງຕລອດໄປທຸກຊົ່ວອາຍຸຄົນ
15 ພວກເຈົ້າຈົ່ງຮັບປະທານເຂົ້າຈີ່ບໍ່ໃສ່ເຊື້ອແປ້ງໃຫ້ຄົບເຈັດວັນ ໃນວັນແຮກຕ້ອງຍ້າຍເຊື້ອແປ້ງອອກຈາກເຮືອນຂອງ
ພວກເຈົ້າ ເພາະວ່າຖ້າຜູ້ໃດກິນເຂົ້າຈີ່ທີ່ໃສ່ເຊື້ອແປ້ງຕັ້ງແຕ່ວັນທີ່ນຶ່ງຈົນເຖິງວັນທີ່ເຈັດ ຈະຕ້ອງຕັດຜູ້ນັ້ນອອກຈາກ
ເຊື້ອຊາດອິສຣາເອນ
16 ໃນວັນແຮກກັບວັນທີ່ເຈັດໃຫ້ມີການຊຸມນຸມທາງສາສນາ ໃນສອງວັນນີ້ບໍ່ໃຫ້ໃຫ້ເຮັດວຽກຫຍັງ ເວັ້ນໄວ້ແຕ່ການຕຽມ
ອາຫານສຳລັບຮັບປະທານ
17 ພວກເຈົ້າຈົ່ງຖືຮັກສາພິທີຮັບປະທານເຂົ້າຈີ່ບໍ່ໃສ່ເຊື້ອແປ້ງໄປຈົນເຖິງຕອນຄ່ຳວັນທີ່ສິບສີ່ຂອງເດືອນທີ່ນຶ່ງ

18 ໃຫ້ພວກເຈົ້າຮັບປະທານເຂົ້າຈີ່ບໍ່ໃສ່ເຊື້ອແປ້ງໄປຈົນເຖິງຕອນຄໍ່າຂອງວັນທີ່ຊາວເອັດ
19 ໃນເຈັດວັນນັ້ນບໍ່ໃຫ້ມີເຊື້ອແປ້ງໃນເຮືອນຂອງພວກເຈົ້າ ເພາະຖ້າຄົນອິສຣາເອນຫລືຄົນຕ່າງຊາດຄົນໃດກິນເຂົ້າຈີ່
ໃສ່ເຊື້ອແປ້ງ ຜູ້ນັ້ນຈະຕ້ອງຖືກຕັດອອກຈາກຊຸມນຸມຊົນອິສຣາເອນ
20 ຢູ່ໃນບ້ານເຮືອນຂອງພວກເຈົ້າ ຈະຕ້ອງບໍ່ກິນເຂົ້າຈີ່ໃດໆທີ່ໃສ່ເຊື້ອ ຈະຕ້ອງກິນແຕ່ເຂົ້າຈີ່ບໍ່ໃສ່ເຊື້ອ”
21 ຕໍ່ມາ ໂມເຊໄດ້ເຊີນພວກເຖົ້າແກ່ອິສຣາເອນມາພ້ອມກັນແລ້ວເວົ້າວ່າ, “ທ່ານທັງຫລາຍຈົ່ງໄປເລືອກເອົາລູກແກະ
ຫລືລູກແບ້ຕາມບ້ານເຮືອນຂອງຕົນ ມາຂ້າເປັນສັດສໍາລັບງານສະຫລອງປັສຄາ
22 ແລ້ວໃຫ້ເອົາໃບໄມ້ມັດນຶ່ງຈຸ່ມເລືອດໃນຂັນ ທາໃສ່ໄມ້ຂອບວົງປະຕູຂ້າງຊ້າຍຂ້າງຂວາແລະຂ້າງເທິງ ຢ່າໃຫ້ຜູ້ໃດ
ອອກໄປພົ້ນປະຕູເຮືອນຂອງຕົນຈົນຮອດມື້ເຊົ້າ
23 ເມື່ອພຣະຜູ້ເປັນເຈົ້າສະເດັດມາທໍາລາຍຊາວເອຢິບ ພຣະອົງຈະທອດພຣະເນດເຫັນເລືອດທີ່ທາໄວ້ນັ້ນ ແລ້ວພຣະ
ອົງຈະບໍ່ໃຫ້ທູດມໍຣະນາເຂົ້າໄປໃນເຮືອນແລະທໍາລາຍທ່ານ
24 ທ່ານທັງຫລາຍຈົ່ງຖືກົດອັນນີ້ເປັນຄໍາສັ່ງຕລອດໄປສໍາລັບທ່ານແລະລູກຫລານ
25 ເມື່ອທ່ານທັງຫລາຍໄປເຖິງແຜ່ນດິນທີ່ພຣະຜູ້ເປັນເຈົ້າຈະຊົງປະທານໃຫ້ ຕາມທີ່ພຣະອົງໄດ້ຊົງໃຫ້ຄໍາຫມັ້ນສັນຍາ
ໄວ້ນັ້ນ ພວກທ່ານຈົ່ງຖືຮັກສາພິທີນີ້ໄວ້
26 ຄັນລູກຫລານຂອງທ່ານຖາມວ່າ ພິທີອັນນີ້ຫມາຍຄວາມວ່າແນວໃດ?
27 ທ່ານທັງຫລາຍຈົ່ງຕອບວ່າ ແມ່ນງານສະຫລອງປັສຄາຖວາຍແດ່ພຣະຜູ້ເປັນເຈົ້າ ເພາະເວລາພຣະອົງຊົງທໍາລາຍ
ຊາວເອຢິບນັ້ນ ພຣະອົງໄດ້ຊົງຜ່ານເວັ້ນບ້ານເຮືອນຊາວອິສຣາເອນໃນປະເທດເອຢິບ” ແລ້ວປະຊາຊົນໄດ້ຂາບລົງ
ນະມັສການພຣະຜູ້ເປັນເຈົ້າ
28 ຕໍ່ໄປຊາວອິສຣາເອນກໍໄປທໍາຕາມຄໍາສັ່ງ ທີ່ພຣະຜູ້ເປັນເຈົ້າໄດ້ຊົງສັ່ງໂມເຊແລະອາໂຣນນັ້ນ

**ການຕາຍຂອງບຸດຫົວປີ**

The Tenth Plague: Death of the Firstborn

(ອພຍ 11:1-10)

29 ແລ້ວໃນເວລາທ່ຽງຄືນ ພຣະຜູ້ເປັນເຈົ້າໄດ້ຊົງຂ້າບຸດຫົວປີທັງຫມົດໃນປະເທດເອຢິບ ຕັ້ງແຕ່ອົງມຸງກຸດຣາຊກຸມມານ
ຜູ້ຈະປະທັບເທິງບັນລັງ ຈົນເຖິງບຸດຫົວປີຂອງນັກໂທດຜູ້ຢູ່ໃນຄຸກມືດ ແລະລູກຫົວປີຂອງສັດເດັ່ຽງຣະສານທັງປວງກໍ
ຊົງຂ້າດ້ວຍ
30 ເມື່ອກະສັດຟາຣາໂອກັບຂ້າຣາຊການແລະຊາວເອຢິບທັງປວງ ຕື່ນຂຶ້ນໃນເວລາກາງຄືນ ກໍໄດ້ຍິນສຽງຮ້ອງໄຫ້ທົ່ວ
ໄປໃນປະເທດເອຢິບ ເນື່ອງຈາກວ່າບໍ່ມີບ້ານເຮືອນໃດທີ່ບຸດບໍ່ຕາຍ
31 ກະສັດຟາຣາໂອຈຶ່ງຊົງຮັບສັ່ງໃຫ້ໂມເຊກັບອາໂຣນເຂົ້າເຝົ້າໃນກາງຄືນນັ້ນຊົງບອກວ່າ, “ເຈົ້າທັງສອງກັບຊາວອິສຣາ
ເອນຈົ່ງອອກໄປເສັຽຈາກປະເທດຂອງເຮົາ ຈົ່ງໄປບົວລະບັດພຣະຜູ້ເປັນເຈົ້າຕາມທີ່ພວກເຈົ້າໄດ້ຂໍຮ້ອງນັ້ນ
32 ໃຫ້ເອົາຝູງແກະແບ້ແລະຝູງງົວຄວາຍຂອງພວກເຈົ້າໄປດ້ວຍ ຈົ່ງໄປເສັຽ ໃຫ້ອ້ອນວອນຂໍພອນສໍາລັບເຮົາດ້ວຍ”

**ຊາວອິສຣາເອນອອກຈາກເອຢິບ**

The Exodus: From Rameses to Succoth

33 ປະຊາຊົນເອຢິບໄດ້ບັງຄັບໃຫ້ຊາວອິສຣາເອນໄປຈາກປະເທດໂດຍໄວ ພວກເຂົາເວົ້າວ່າ, “ພວກເຮົາຈະຕ້ອງຕາຍ
ກັນຫມົດຖ້າພວກເຈົ້າຢູ່ນີ້”
34 ດັ່ງນັ້ນ ຊາວອິສຣາເອນຈຶ່ງໄດ້ເອົາແປ້ງດິບທີ່ຍັງບໍ່ໄດ້ໃສ່ເຊື້ອກັບຣາງນວດແປ້ງຫໍ່ໃສ່ຜ້າແບກໄປ
35 ພວກເຂົາໄດ້ທໍາຕາມໂມເຊສັ່ງ ຄືໄດ້ຂໍເອົາເຄື່ອງເງິນ ເຄື່ອງຄໍາແລະເສື້ອຜ້າຈາກຊາວເອຢິບ
36 ພຣະຜູ້ເປັນເຈົ້າກໍຊົງທໍາໃຫ້ຊາວເອຢິບຢໍາເກງ

ອິສຣາເອນ ພວກເຂົາຈຶ່ງມອບສິ່ງຂອງໃຫ້ຕາມທີ່ຊາວອິສຣາເອນຂໍ ຊາວອິສຣາເອນຈຶ່ງສາມາດຣິບໂຮມເອົາສິ່ງ
ຂອງຈາກຊາວເອຢິບ
37 ປະຊາຊົນອິສຣາເອນໄດ້ອອກຈາກເມືອງຣາເມເຊສ ເຖິງເມືອງຊຸກໂກດ ມີຜູ້ຊາຍທັງຫມົດທີ່ຍ່າງໄປດ້ວຍກັນປະ
ມານຫົກແສນຄົນ ທັງນີ້ບໍ່ນັບຜູ້ຍິງແລະເດັກນ້ອຍ
38 ນອກນັ້ນກໍມີຊາວຕ່າງຊາດກັບຝູງແກະແບ້ແລະງົວຄວາຍໄປນຳອີກຈຳນວນຫລາຍ
39 ພວກເຂົາໄດ້ເອົາກ້ອນແປ້ງທີ່ຍັງບໍ່ທັນໄດ້ໃສ່ເຊື້ອແປ້ງຊຶ່ງພວກເຂົານຳອອກມາຈາກປະເທດເອຢິບປີ້ງເປັນອາຫານ
ເພາະວ່າພວກເຂົາຖືກບັງຄັບໃຫ້ອອກຈາກເອຢິບໂດຍໄວຈຶ່ງບໍ່ມີເວລາຈັດຕຽມ
ສະບຽງອາຫານ
40 ຊາວອິສຣາເອນໄດ້ຢູ່ໃນປະເທດເອຢິບເປັນເວລາ ສີ່ຮ້ອຍສາມສິບປີ
41 ໄພ່ພົນຂອງພຣະຜູ້ເປັນເຈົ້າໄດ້ອອກຈາກປະເທດເອຢິບໃນມື້ທີ່ຄົບ ສີ່ຮ້ອຍສາມສິບປີນັ້ນພໍດີ
42 ມື້ນັ້ນເປັນເວລາກາງຄືນ ແລະພຣະຜູ້ເປັນເຈົ້າກໍຊົງເຝົ້າເບິ່ງຢູ່ ເພື່ອຊົງນຳເຂົາອອກຈາກປະເທດເອຢິບໄປ ຊາວອິສ
ຣາເອນຈຶ່ງຖືເອົາຄືນມື້ນັ້ນເປັນຄືນຢູ່ເຝົ້າ ເພື່ອລະນຶກເຖິງພຣະຜູ້ເປັນເຈົ້າຕລອດມາທຸກຊົ່ວອາຍຸຄົນ

**ລະບຽບງານສະຫລອງປັສຄາ**

Direction for the Passover

(ປຖກ 17:9-14; ອພຍ 12:1-13)

43 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊແລະອາໂຣນວ່າ, “ຕໍ່ໄປນີ້ ແມ່ນລະບຽບກ່ຽວກັບງານສະຫລອງປັສຄາ ຄືຄົນ
ຕ່າງຊາດບໍ່ໃຫ້ຮ່ວມກິນນຳ
44 ແຕ່ຂ້າທາດຜູ້ທີ່ນາຍຊື້ມາ ແລະເຂົ້າພິທີຕັດແລ້ວໃຫ້ຮ່ວມກິນນຳໄດ້
45 ສ່ວນຄົນຜູ້ທີ່ອາໄສຢູ່ຊົ່ວຄາວ ຫລືລູກຈ້າງບໍ່ໃຫ້ກິນນຳ
46 ປັສຄານັ້ນໃຫ້ກິນຢູ່ໃນເຮືອນ ຢ່າເອົາຊີ້ນອອກໄປນອກເຮືອນ ຢ່າຫັກກະດູກໃດໆຂອງສັດນັ້ນ
47 ໃຫ້ຊຸມນຸມຊົນອິສຣາເອນທັງຫມົດເຂົ້າຮ່ວມໃນພິທີກິນລ້ຽງນີ້
48 ຖ້າຄົນຕ່າງຊາດທີ່ອາໄສຢູ່ນຳພວກເຈົ້າ ຢາກຈະຈັດງານສະຫລອງປັສຄາຖວາຍພຣະຜູ້ເປັນເຈົ້າ ກໍໃຫ້ຊາຍພວກນັ້ນ
ທຸກຄົນເຂົ້າພິທີຕັດເສັຽກ່ອນ ແລ້ວຈຶ່ງໃຫ້ເຂົາເຂົ້າຮ່ວມໃນພິທີລ້ຽງນີ້ໄດ້ ເຂົາຈະຖືກຖືວ່າເປັນຄົນເຊື້ອຊາດອິສຣາ
ເອນ
49 ແຕ່ຜູ້ໃດທີ່ບໍ່ໄດ້ເຂົ້າພິທີຕັດ ຢ່າໃຫ້ກິນ ສຳລັບຄົນອິສຣາເອນແລະຄົນຕ່າງດ້າວທີ່ອາໄສຢູ່ນຳພວກເຈົ້າ ກໍໃຫ້ໃຊ້ກົດ
ລະບຽບອັນດຽວກັນນີ້”
50 ຊາວອິສຣາເອນທັງປວງໄດ້ເຊື່ອຟັງແລະທຳຕາມທຸກຢ່າງ ຄືພຣະຜູ້ເປັນເຈົ້າໄດ້ຊົງສັ່ງໂມເຊແລະອາໂຣນຢ່າງໃດ
ເຂົາກໍທຳຕາມຢ່າງນັ້ນ
51 ໃນວັນນີ້ແຫລະ, ພຣະຜູ້ເປັນເຈົ້າຊົງນຳຊາວອິສຣາເອນອອກຈາກເອຢິບເປັນຂະບວນກອງທັບ

## 13

Chapter 13

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 “ຈົ່ງຖວາຍລູກກົກທັງປວງຂອງຊາວອິສຣາເອນແກ່ເຮົາ ຄືລູກກົກຂອງຄົນແລະຂອງສັດທັງຫມົດເປັນຂອງເຮົາ”

**ພິທີດ້ວຍເຂົ້າຈີ່ບໍ່ໃສ່ເຊື້ອແປ້ງ**

The Festival of Unleavened Bread

(ອພຍ 12:14-20)

3 ໂມເຊໄດ້ເວົ້າກັບປະຊາຊົນວ່າ, “ຈົ່ງລະນຶກເຖິງວັນນີ້ ຄືວັນທີ່ທ່ານທັງຫລາຍໄດ້ອົບພະຍົບອອກຈາກເອຢິບ ອອກ
ຈາກປະເທດທີ່ພວກທ່ານໄດ້ຕົກເປັນທາດ ເພາະພຣະຜູ້ເປັນເຈົ້າໄດ້ຊົງນຳທ່ານທັງຫລາຍອອກຈາກທີ່ນັ້ນ ດ້ວຍຣິດ
ທານຸພາບອັນຍິ່ງໃຫຍ່ ສະນັ້ນ ຢ່າກິນເຂົ້າຈີ່ທີ່ໃສ່ເຊື້ອແປ້ງ
4 ທ່ານທັງຫລາຍໄດ້ອົບພະຍົບອອກຈາກເອຢິບ ໃນວັນນີ້ໃນເດືອນທີ່ນຶ່ງ
5 ພຣະຜູ້ເປັນເຈົ້າໄດ້ຊົງສັນຍາໄວ້ເດັດຂາດກັບບັນພະບຸຣຸດຂອງທ່ານທັງຫລາຍວ່າ ຈະຊົງຍົກແຜ່ນດິນທີ່ອຸດົມສົມບູນ
ຂອງຊາວການາອານ, ຊາວຮິດຕີ, ຊາວອາໂມຣິດ, ຊາວຮີວີ, ແລະຊາວເຢບຸສໃຫ້ແກ່ທ່ານທັງຫລາຍ ເມື່ອພຣະອົງ
ຊົງນຳທ່ານທັງຫລາຍເຂົ້າໄປເຖິງແຜ່ນດິນເຫລົ່ານີ້ ພວກທ່ານຈົ່ງຈັດງານສະຫລອງວັນນີ້ໃນເດືອນນີ້
6 ຈົ່ງຮັບປະທານເຂົ້າຈີ່ບໍ່ໃສ່ເຊື້ອແປ້ງເປັນເວລາເຈັດວັນ ໃນວັນທີ່ເຈັດໃຫ້ຈັດງານສະຫລອງຖວາຍແດ່ພຣະຜູ້ເປັນເຈົ້າ
7 ຈົ່ງຮັບປະທານເຂົ້າຈີ່ບໍ່ໃສ່ເຊື້ອແປ້ງໃຫ້ຄົບເຈັດວັນ ຢ່າໃຫ້ມີເຂົ້າຈີ່ໃສ່ເຊື້ອແປ້ງໃນແຜ່ນດິນຂອງພວກທ່ານ
8 ໃນວັນນັ້ນ ຈົ່ງອະທິບາຍໃຫ້ບຸດຂອງທ່ານຟັງວ່າ ທີ່ໄດ້ຈັດພິທີລະນຶກເຖິງນີ້ຂຶ້ນກໍເນື່ອງຈາກວ່າພຣະຜູ້ເປັນເຈົ້າໄດ້
ຊ່ອຍເຫລືອເຮົາ ຄາວເມື່ອເຮົາໄດ້ອົບພະຍົບອອກຈາກປະເທດເອຢິບ
9 ງານສະຫລອງນີ້ຈະເປັນເຫມືອນຕຳຫນິທີ່ຫມາຍໄວ້ໃນມືຂອງພວກທ່ານ ຫລືເປັນອະນຸສອນຂອງການລະນຶກເຖິງຢູ່
ເທິງຫນ້າຜາກຂອງພວກທ່ານ ເພື່ອວ່າພວກທ່ານຈະໄດ້ກ່າວເຖິງພຣະທັມຂອງ
ພຣະຜູ້ເປັນເຈົ້າສືບຕໍ່ໄປ ເພາະພຣະອົງໄດ້ຊົງນຳພວກທ່ານອອກຈາກເອຢິບດ້ວຍຣິດທານຸພາບອັນຍິ່ງໃຫຍ່
10 ທ່ານທັງຫລາຍຈົ່ງຈັດງານສະຫລອງທຸກໆປີ
ເມື່ອເຖິງກຳນົດ

**ເຣື່ອງລູກຫົວປີ**

The Consecration of the Firstborn

11 ພຣະຜູ້ເປັນເຈົ້າຈະຊົງນຳທ່ານທັງຫລາຍ ເຂົ້າໄປຍັງແຜ່ນດິນການາອານ ຄືແຜ່ນດິນທີ່ພຣະອົງໄດ້ຊົງສັນຍາວ່າ ຈະ
ໃຫ້ພວກທ່ານແລະບັນພະບຸຣຸດຂອງພວກທ່ານ
12 ເມື່ອນັ້ນ ທ່ານທັງຫລາຍຈົ່ງຖວາຍບຸດຫົວປີທັງຫມົດແກ່ພຣະຜູ້ເປັນເຈົ້າ ແລະສຳລັບສັດໂຕເຖິກທີ່ເປັນລູກຫົວປີທຸກ
ໂຕຂອງທ່ານເປັນຂອງພຣະຜູ້ເປັນເຈົ້າ
13 ຈົ່ງເອົາລູກແກະໄຖ່ເອົາລູກລໍຫົວປີ ຖ້າພວກທ່ານບໍ່ໄຖ່ຈົ່ງຫັກຄໍມັນເສັຽ ສ່ວນບຸດຫົວປີຂອງພວກທ່ານທັງຫລາຍ
ຈົ່ງໄຖ່ໄວ້
14 ຕໍ່ໄປພາຍຫນ້າ ເມື່ອບຸດຂອງພວກທ່ານຖາມວ່າ ທີ່ເຮັດນີ້ຫມາຍຄວາມວ່າແນວໃດ? ທ່ານທັງຫລາຍຈົ່ງບອກເຂົາ
ວ່າ ພຣະຜູ້ເປັນເຈົ້າໄດ້ຊົງນຳພວກເຮົາອອກມາຈາກປະເທດເອຢິບບ່ອນ
ຕົກເປັນທາດດ້ວຍຣິດທານຸພາບອັນຍິ່ງໃຫຍ່
15 ເມື່ອກະສັດຟາຣາໂອມີພຣະທັຍແຂງກະດ້າງ ບໍ່ຍອມປ່ອຍໃຫ້ພວກເຮົາມາ ພຣະຜູ້ເປັນເຈົ້າຈຶ່ງຊົງຂ້າບຸດຫົວປີທັງ
ຫລາຍຂອງຊາວເອຢິບ ທັງບຸດຫົວປີຂອງຄົນແລະສັດລ້ຽງລະສານ ດ້ວຍເຫດນີ້ ເຮົາຈຶ່ງຖວາຍສັດຫົວໂຕເຖິກແດ່ພ
ຣະເຈົ້າ ແຕ່ບຸດຫົວປີທັງຫລາຍຂອງເຮົາ ເຮົາກໍໄຖ່ໄວ້
16 ດັ່ງນັ້ນ ງານສະຫລອງວັນນີ້ຈະເປັນເຄື່ອງເຕືອນຈິດໃຈທ່ານເຫມືອນຕຳຫນິໃນມືຂອງພວກທ່ານ ຫລືເຫມືອນເຄື່ອງ
ຫມາຍສຳຄັນທີ່ຢູ່ເທິງຫນ້າຜາກຂອງພວກທ່ານ ເພາະພຣະຜູ້ເປັນເຈົ້າໄດ້ຊົງນຳພວກເຮົາອອກມາຈາກປະເທດເອ
ຢິບດ້ວຍຣິດທານຸພາບອັນຍິ່ງໃຫຍ່”

**ກ້ອນເສົາເມກ ແລະແປວໄຟ**

The Pillars of Cloud and Fire

**(ອພຍ 40:34-38; ຈຊບ 9:15-23; 1 ກສດ 8:10-11)**

17 ເມື່ອກະສັດຟາຣາໂອຊົງປ່ອຍປະຊາຊົນອິສຣາເອນໄປ ພຣະເຈົ້າບໍ່ໄດ້ນຳພວກເຂົາຂຶ້ນໄປທາງປະເທດຟີລິສຕິນ
ເຖິງແມ່ນວ່າທາງນັ້ນເປັນທາງໃກ້ກໍຕາມ ເພາະພຣະເຈົ້າຊົງກ່າວວ່າ, "ປະຊາຊົນອາດຈະປ່ຽນໃຈກັບຄືນເອຢິບອີກ
ເມື່ອພວກເຂົາເຫັນສົງຄາມທີ່ຕ້ອງສູ້ຮົບ"
18 ດັ່ງນັ້ນ ພຣະເຈົ້າຈຶ່ງຊົງນຳເຂົາອ້ອມໄປທາງຖິ່ນກັນດານ ມຸ່ງໜ້າໄປຍັງທະເລໄມ້ອໍ້ ຊາວອິສຣາເອນໄດ້ອົບພະຍົບ
ອອກຈາກປະເທດເອຢິບ ເປັນຂະບວນເສິກ
19 ໂມເຊໄດ້ເອົາກະດູກໂຢເຊັບໄປດ້ວຍ ເພາະໂຢເຊັບໄດ້ສັນຍາກັບຊາວອິສຣາເອນວ່າ, "ພຣະເຈົ້າຈະຊ່ອຍເຫລືອ
ພວກເຈົ້າຢ່າງແນ່ນອນ ດັ່ງນັ້ນ ພວກເຈົ້າຕ້ອງເອົາກະດູກຂອງເຮົາອອກໄປຈາກທີ່ນີ້ດ້ວຍ"
20 ປະຊາຊົນອິສຣາເອນໄດ້ອົບພະຍົບອອກຈາກຊຸກໂກດ ໄປຕັ້ງຄ້າຍພັກເຊົາຢູ່ເອທາມແຄມຖິ່ນກັນດານ
21 ໃນລະຫວ່າງເວລານັ້ນ ພຣະຜູ້ເປັນເຈົ້າໄດ້ສະເດັດນຳໜ້າພວກເຂົາໄປ ດ້ວຍກ້ອນເສົາເມກໃນເວລາກາງເວັນ
ເພື່ອບອກທາງໃຫ້ພວກເຂົາໄປ ແລະຊົງນຳໜ້າພວກເຂົາໄປດ້ວຍແປວໄຟໃນເວລາກາງຄືນ ເພື່ອໃຫ້ເຂົາໄດ້ຮັບ
ແສງສວ່າງໃຫ້ສາມາດເດີນທາງໄປໄດ້ທັງກາງເວັນແລະກາງຄືນ
22 ກ້ອນເສົາເມກໄດ້ນຳໜ້າເຂົາໄປໃນເວລາກາງເວັນ ແລະແປວໄຟໄດ້ນຳໜ້າໄປໃນເວລາກາງຄືນ

## 14 ຂ້າມທະເລໄມ້ອໍ້

Crossing the Red Sea

1 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,
2 "ຈົ່ງບອກໃຫ້ຊາວອິສຣາເອນກັບຄືນໄປຕັ້ງຄ້າຍພັກເຊົາຢູ່ຕໍ່ໜ້າປີຮາຮີໂຣທ ລະຫວ່າງມີກໂດນກັບທະເລ ຕໍ່ໜ້າ
ບາອານເຊໂຟນໃກ້ໆທະເລ
3 ແລ້ວກະສັດຟາຣາໂອຈະຄິດວ່າປະຊາຊົນອິສຣາເອນໜີໄປຈາກປະເທດບໍ່ໄດ້ ເພາະວ່າເຂົາຫລົງທາງໄປທາງຖິ່ນ
ກັນດານ
4 ເຮົາຈະທຳໃຫ້ຈິດໃຈກະສັດຟາຣາໂອແຂງກະດ້າງ ແລ້ວກະສັດຟາຣາໂອຈະໄລ່ຕິດຕາມມາ ເຮົາຈະມີໄຊຊະນະກະ
ສັດຟາຣາໂອ ແລະພົນທະຫານທັງໝົດຈະນຳຊື່ສຽງມາສູ່ເຮົາ ຊາວເອຢິບຈະຮູ້ວ່າ ເຮົາຄື ພຣະຜູ້ເປັນເຈົ້າ" ເຂົາທັງ
ຫລາຍກໍທຳຕາມຮັບສັ່ງນັ້ນ
5 ເມື່ອກະສັດເອຢິບຊົງຊາບວ່າ ປະຊາຊົນອິສຣາເອນໄປໄດ້ແລ້ວ ພຣະອົງກັບຂ້າຣາຊການຂອງພຣະອົງກໍປ່ຽນຄວາມ
ຄິດໃໝ່ ໂດຍເວົ້າວ່າ, "ເຫດໃດ ພວກເຮົາຈຶ່ງປ່ອຍໃຫ້ປະຊາຊົນອິສຣາເອນໜີຈາກເປັນທາດຮັບໃຊ້ພວກເຮົາ?"
6 ກະສັດຟາຣາໂອຈຶ່ງຈັດຕຽມຣົດຮົບແລະພົນທະຫານຕິດຕາມໄປກັບພຣະອົງ
7 ພຣະອົງໄດ້ເອົາຣົດຮົບຢ່າງດີຫົກຮ້ອຍຄັນ ກັບຣົດຮົບອື່ນໆອີກໄປດ້ວຍ ມີນາຍທະຫານປະຈຳຢູ່ທຸກຄັນ
8 ພຣະຜູ້ເປັນເຈົ້າໄດ້ຊົງທຳໃຫ້ກະສັດຟາຣາໂອມີພຣະທັຍແຂງກະດ້າງ ກະສັດຟາຣາໂອຈຶ່ງໄດ້ໄລ່ຕິດຕາມປະຊາຊົນ
ອິສຣາເອນໄປ ຊຶ່ງເຂົາກຳລັງຍົກຂະບວນອອກໄປດ້ວຍຄວາມຄຸ້ມຄອງຂອງພຣະຜູ້ເປັນເຈົ້າ
9 ຊາວເອຢິບພ້ອມດ້ວຍຂະບວນຣົດມ້າ ຄົນຂັບຣົດແລະເຫລົ່າທະຫານໃນກອງທັບຂອງກະສັດຟາຣາໂອໄດ້ໄລ່ຕິດ
ຕາມມາ ພວກເຂົາໄດ້ມາທັນພວກອິສຣາເອນຢູ່ຄ້າຍພັກແຄມທະເລໃກ້ໆກັບປີຮາຮີໂຣທຕໍ່ໜ້າບາອານເຊໂຟນ
10 ເມື່ອກອງທັບຂອງກະສັດຟາຣາໂອເຂົ້າມາໃກ້ ຊາວອິສຣາເອນກໍເຫັນກອງທັບທີ່ຍົກມາຕໍ່ສູ້ຕົນ ພວກເຂົາຈຶ່ງຢ້ານ
ແລະຮ້ອງໄຫ້ ຂໍໃຫ້ພຣະຜູ້ເປັນເຈົ້າຊົງຊ່ອຍ
11 ພວກເຂົາໄດ້ເວົ້າກັບໂມເຊວ່າ, "ໃນເອຢິບບໍ່ມີບ່ອນຝັງສົບບໍ່ ທ່ານຈຶ່ງໄດ້ພາພວກເຮົາອອກມາຕາຍໃນຖິ່ນກັນດານນີ້
ເປັນຫຍັງຈຶ່ງພາພວກເຮົາອອກມາຈາກເອຢິບ

12 ຄາວຢູ່ໃນເອຢິບພວກເຮົາໄດ້ບອກທ່ານແລ້ວວ່າເຣື່ອງນີ້ຈະເກີດຂຶ້ນແມ່ນບໍ່? ພວກເຮົາເວົ້າວ່າຈົ່ງປ່ອຍໃຫ້ພວກເຮົາຢູ່ຕາມລຳພັງ ພວກເຮົາຈະຢູ່ເປັນທາດຮັບໃຊ້ຄົນເອຢິບ ເພາະຢູ່ເປັນທາດຮັບໃຊ້ຄົນເອຢິບຍັງດີກວ່າຈະມາຕາຍໃນຖິ່ນກັນດານນີ້”

13 ໂມເຊໄດ້ຕອບປະຊາຊົນວ່າ, “ຢ່າຢ້ານເລີຍ, ຈົ່ງຍຶດຫມັ້ນຢູ່ ຈົ່ງຄອຍເບິ່ງສິ່ງທີ່ພຣະຜູ້ເປັນເຈົ້າຈະຊ່ອຍໃຫ້ພົ້ນໃນມື້ນີ້ ແລ້ວຊາວເອຢິບທີ່ທ່ານທັງຫລາຍໄດ້ເຫັນໃນມື້ນີ້ ຕໍ່ໄປຈະບໍ່ໄດ້ເຫັນອີກຈັກເທື່ອ

14 ພຣະຜູ້ເປັນເຈົ້າຈະຊົງຮົບແທນທ່ານທັງຫລາຍດອກ ພວກທ່ານບໍ່ຕ້ອງເຮັດຫຍັງ”

15 ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ, “ເປັນຫຍັງເຈົ້າຈຶ່ງຮ້ອງທຸກຕໍ່ເຮົາ? ຈົ່ງບອກໃຫ້ຊາວອິສຣາເອນມຸ່ງຫນ້າຕໍ່ໄປ

16 ຝ່າຍເຈົ້າຈົ່ງຍົກໄມ້ເທົ້າຂອງເຈົ້າຂຶ້ນ ແລ້ວເດ່ມືອອກໄປທາງທະເລ ທຳໃຫ້ນ້ຳທະເລນັ້ນແຍກອອກ ເພື່ອຊາວອິສຣາເອນຈະໄດ້ຍ່າງຂ້າມໄປເທິງດິນກາງທະເລ

17 ສ່ວນເຮົາຈະທຳໃຫ້ໃຈຊາວເອຢິບແຂງກະດ້າງແລະໄລ່ຕິດຕາມໄປ ເຮົາຈະມີຊັຍຊະນະເຫນືອກະສັດຟາຣາໂອ ກອງທັບພ້ອມທັງຣົດຮົບ ແລະຄົນຂັບຣົດຂອງຟາຣາໂອຈະນຳກຽດຕິຍົດມາໃຫ້ເຮົາ

18 ເມື່ອເຮົາຊະນະເຂົາທັງຫມົດແລ້ວ ຊາວເອຢິບຈຶ່ງຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ”

19 ຝ່າຍທູດຂອງພຣະຜູ້ເປັນເຈົ້າທີ່ນຳຫນ້າກອງທັບອິສຣາເອນ ໄດ້ກັບໄປຢູ່ຂ້າງຫນ້າ ກ້ອນເສົາເມກຊຶ່ງຢູ່ຂ້າງຫນ້າ ກໍກັບມາຕັ້ງຢູ່ຂ້າງຫລັງພວກເຂົາ ຄືໄດ້ມາຢູ່ລະຫວ່າງກອງທັບເອຢິບກັບກອງທັບອິສຣາເອນ

20 ເມກນັ້ນໄດ້ທຳໃຫ້ມີຄວາມມືດ ບໍ່ໃຫ້ທັງສອງຝ່າຍເຂົ້າໃກ້ກັນໄດ້ ຄືນນັ້ນຈຶ່ງຜ່ານພົ້ນໄປ

21 ໂມເຊໄດ້ເດ່ມືຂອງທ່ານອອກໄປທາງທະເລ ພຣະຜູ້ເປັນເຈົ້າຈຶ່ງຊົງໃຫ້ລົມຮ້ອນທາງທິດຕາເວັນອອກພັດທະເລຕລອດຄືນ ທຳໃຫ້ທະເລເປັນດິນແຫ້ງ ນ້ຳຈຶ່ງໄດ້ແຍກອອກຈາກກັນ

22 ປະຊາຊົນອິສຣາເອນຈຶ່ງພາກັນຍ່າງຂ້າມໄປເທິງດິນກາງທະເລ ໂດຍມີກຳແພງນ້ຳຕັ້ນໄວ້ທັງສອງຂ້າງທາງ

23 ຝ່າຍເອຢິບກໍໄລ່ຕິດຕາມເຂົ້າມາເຖິງທະເລ ພ້ອມກັບຝູງມ້າຣົດຮົບແລະຄົນຂັບຣົດຂອງກະສັດຟາຣາໂອ

24 ຄັນຮອດເວລາເຊົ້າມືດ ພຣະຜູ້ເປັນເຈົ້າໄດ້ທອດພຣະເນດເບິ່ງກອງທັບເອຢິບ ຈາກທາງແປວເສົາໄຟແລະກ້ອນເສົາເມກຈຶ່ງຊົງໃຫ້ກອງທັບເອຢິບເກີດໂກລາຫົນຂຶ້ນ

25 ພຣະອົງຊົງທຳໃຫ້ລໍ້ຣົດຂອງພວກເຂົາຝືດ ເພື່ອໃຫ້ມັນແລ່ນໄປໄດ້ຍາກທີ່ສຸດ ຊາວເອຢິບຈຶ່ງເວົ້າວ່າ, “ພວກເຮົາພາກັນແລ່ນຫນີໄປຈາກຊາວອິສຣາເອນເສັຽເທາະ ເພາະວ່າພຣະຜູ້ເປັນເຈົ້າຊົງຕໍ່ສູ້ເຮົາແທນເຂົາແລ້ວ”

The Pursuers Drowned

26 ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ, “ຈົ່ງເດ່ມືອອກໄປທາງທະເລ ເພື່ອໃຫ້ນ້ຳໄຫລມາຖ້ວມຊາວເອຢິບ ຖ້ວມຣົດຮົບແລະຄົນຂັບຣົດຂອງພວກເຂົາ”

27 ໂມເຊຈຶ່ງເດ່ມືອອກໄປທາງທະເລ ຄັນຕົກມື້ເຊົ້າມານ້ຳທະເລກໍກັບຄືນສູ່ສະພາບເດີມ ຊາວເອຢິບໄດ້ພຍາຍາມຫນີ ແຕ່ຫນີບໍ່ໄດ້ເພາະຖືກກະແສນ້ຳພັດ ພຣະຜູ້ເປັນເຈົ້າໄດ້ຊົງຊຸກຍູ້ຊາວເອຢິບລົງທະເລ

28 ນ້ຳໄດ້ໄຫລຖ້ວມຣົດຮົບ ພ້ອມທັງຄົນຂັບຣົດແລະກອງທັບຂອງກະສັດຟາຣາໂອທັງຫມົດ ຊຶ່ງພວກເຂົາໄດ້ໄລ່ຕິດຕາມມາເຖິງທະເລ ນ້ຳໄດ້ຖ້ວມຫມົດບໍ່ເຫລືອຈັກຄົນ

29 ແຕ່ຝ່າຍອິສຣາເອນໄດ້ພາກັນຍ່າງໄປເທິງດິນກາງທະເລໂດຍມີກຳແພງນ້ຳຕັ້ນໄວ້ທັງຂ້າງຊ້າຍແລະຂ້າງຂວາ

30 ໃນວັນນັ້ນ ພຣະຜູ້ເປັນເຈົ້າຊົງໂຜດຊ່ອຍຊາວອິສຣາເອນໃຫ້ພົ້ນຈາກເງື້ອມມືຂອງຊາວເອຢິບ ຊາວອິສຣາເອນໄດ້ເຫັນຊາວເອຢິບຕາຍຢູ່ຕາມແຄມທະເລ

31 ເມື່ອຊາວອິສຣາເອນໄດ້ເຫັນການກະທຳອັນຍິ່ງໃຫຍ່ ທີ່ພຣະຜູ້ເປັນເຈົ້າໄດ້ຊົງກະທຳຕໍ່ສູ້ຊາວເອຢິບ ພວກເຂົາກໍຢຳເກງແລະເຊື່ອຖືພຣະຜູ້ເປັນເຈົ້າກັບໂມເຊຜູ້ຮັບໃຊ້ຂອງພຣະອົງ

## 15 ບົດເພງຂອງໂມເຊ

The Song of Moses

**(ອພຍ 14:13-14; ພສສ 78:12-14)**

1 ຂນະນັ້ນ ໂມເຊກັບປະຊາຊົນອິສຣາເອນ ໄດ້ຮ້ອງເພງສັຣເສີນພຣະຜູ້ເປັນເຈົ້າດັ່ງຕໍ່ໄປນີ້:
ຂ້າພະເຈົ້າຈະຮ້ອງເພງສັຣເສີນພຣະຜູ້ເປັນເຈົ້າ ເພາະພຣະອົງຊົງມີໄຊຊະນະຢ່າງຫລວງຫລາຍ
ພຣະອົງໄດ້ຊົງຊຸກມ້າແລະຄົນຂັບຣົດລົງທະເລ
2 ພຣະຜູ້ເປັນເຈົ້າຊົງທຳໃຫ້ຂ້າພະເຈົ້າແຂງແຮງ ແລະມີກຳລັງ ພຣະອົງຊົງຊ່ອຍໃຫ້ຂ້າພະເຈົ້າພົ້ນ ພຣະອົງຊົງເປັນ
ພຣະເຈົ້າຂອງຂ້າພະເຈົ້າ ແລະຂ້າພະເຈົ້າຈະສັຣເສີນພຣະອົງ ຊົງເປັນພຣະເຈົ້າບັນພະບຸຣຸດຂອງຂ້າພະເຈົ້າ ຂ້າພະ
ເຈົ້າຈະຮ້ອງເພງສັຣເສີນຄວາມຍິ່ງໃຫຍ່ຂອງພຣະອົງ
3 ພຣະຜູ້ເປັນເຈົ້າຊົງເປັນນັກຮົບ ພຣະຜູ້ເປັນເຈົ້າແມ່ນພຣະນາມຂອງພຣະອົງ
4 ພຣະອົງຊົງໂຍນຣົດຮົບ ແລະເຫລົ່າທະຫານຂອງຟາຣາໂອໃນທະເລ ນາຍທະຫານຊັ້ນຍອດຂອງຟາຣາໂອໄດ້ຈົມ
ລົງພື້ນທະເລໄມ້ອໍ້
5 ນໍ້າທະເລເລິກໄດ້ຖ້ວມເຂົາ ເຂົາໄດ້ຈົມລົງພື້ນທະເລເຫມືອນດັ່ງກ້ອນຫີນ
6 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະຫັດເບື້ອງຂວາອັນແຂງແຮງຂອງພຣະອົງຊົງອັດສະຈັນຫລາຍ ພຣະຫັດນັ້ນຊົງທຳລາຍ
ສັດຕຣູຂາດເປັນຕ່ອນໆ
7 ພຣະອົງຊົງທຳລາຍຄູ່ຕໍ່ສູ້ຂອງພຣະອົງ ດ້ວຍເດຊານຸພາບອັນຍິ່ງໃຫຍ່ ພຣະພິໂຣດຂອງພຣະອົງຊົງແຜດເຜົາເຂົາ
ໄຫມ້ ເຫມືອນດັ່ງຕໍເຟືອງ
8 ພຣະອົງຊົງເປົ່າໃຫ້ນໍ້າຂຶ້ນສູງດ້ວຍລົມຫາຍໃຈຂອງພຣະອົງ ນໍ້າໄດ້ຖ້ວມສູງຂຶ້ນຊື່ເຫມືອນດັ່ງກຳແພງ ນໍ້າທະເລເລິກ
ໄດ້ແຫ້ງລົງໄປເຖິງພື້ນ
9 ພວກສັດຕຣູໄດ້ເວົ້າວ່າ ເຮົາຈະໄລ່ຕິດຕາມຈັບເອົາໃຫ້ໄດ້ ເຮົາຈະຍຶດເອົາຊັບສົມບັດຂອງພວກເຂົາ ຈະເອົາທຸກສິ່ງ
ຈາກເຂົາທີ່ເຮົາຕ້ອງການ ເຮົາຈະຊັກດາບອອກແລະຍຶດເອົາທຸກສິ່ງທີ່ເຂົາມີດ້ວຍກຳລັງຂອງເຮົາ
10 ແຕ່ພຣະອົງຊົງໃຫ້ລົມຂອງພຣະອົງພັດມາ ນໍ້າທະເລຈຶ່ງຖ້ວມພວກເຂົາ ພວກເຂົາໄດ້ຈົມລົງໃນນໍ້າເລິກເຫມືອນຂີ້ກົ່ວ
11 ຂ້າແດ່ພຣະຜູ້ເປັນເຈົ້າ ໃນບັນດາພຣະນັ້ນແມ່ນອົງໃດຫນໍຄືພຣະອົງ ອົງໃດຫນໍເຫມືອນກັບພຣະອົງຜູ້ຊົງບໍຣິສຸດຮຸ່ງ
ເຮືອງ ອົງໃດຫນໍເຫມືອນກັບພຣະອົງຜູ້ຊົງກະທຳການອັສຈັນ ແລະການຍິ່ງໃຫຍ່ອັນຫນ້າຢ້ານ
12 ພຣະອົງຊົງຢຽດພຣະຫັດເບື້ອງຂວາອອກ ແຜ່ນດິນຈຶ່ງໄດ້ກືນເຂົາທັງຫລາຍເສັຽ
13 ພຣະອົງໄດ້ຊົງນຳປະຊາຊົນອອກມາດ້ວຍຄວາມຮັກຫມັ້ນຄົງຂອງພຣະອົງ ຄືປະຊາຊົນທີ່ພຣະອົງໄດ້ຊົງໄຖ່ໄວ້ ພຣ
ະອົງໄດ້ຊົງພາເຂົາມາເຖິງບ່ອນສັກສິດຂອງພຣະອົງດ້ວຍເດຊານຸພາບຂອງພຣະອົງ
14 ຊົນຊາດທັງຫລາຍໄດ້ຍິນແລ້ວກໍສະທ້ານຢ້ານກົວ ຊົນຊາດຟີລິສຕິນໄດ້ເຈັບປວດເຫມືອນເຈັບທ້ອງລູກ
15 ພວກເຈົ້ານາຍໃນເມືອງເອໂດມກໍຢ້ານກົວ ຜູ້ມີອຳນາດໃນເມືອງໂມອາບກໍຕົວສັ່ນ ທຸກໆຄົນໃນປະເທດການາອານ
ໄດ້ຫມົດກຳລັງໃຈ
16 ຄວາມຕົກໃຈໄດ້ເກີດຂຶ້ນໃນໃຈຂອງເຂົາ ເນື່ອງຈາກຣິດທານຸພາບຂອງພຣະອົງ ໂອ ພຣະຜູ້ເປັນເຈົ້າ ພວກເຂົາຢືນ
ນິ້ງຢູ່ເຫມືອນກ້ອນຫີນ ຈົນໄພ່ພົນຂອງພຣະອົງໄດ້ຜ່ານພົ້ນໄປ ຈົນປະຊາຊົນທີ່ພຣະອົງຊົງໄຖ່ໄວ້ໄດ້ຜ່ານພົ້ນໄປ
17 ໂອ ພຣະຜູ້ເປັນເຈົ້າ ພຣະອົງຊົງນຳເຂົາມາຮັກສາໄວ້ເທິງພູຂອງພຣະອົງ ຊຶ່ງພຣະອົງໄດ້ຊົງສ້າງໄວ້ເປັນບ່ອນສະຖິດ
ຂອງພຣະ ອົງ ໂອ ພຣະຜູ້ເປັນເຈົ້າ ພຣະວິຫານເປັນບ່ອນພຣະອົງເອງຊົງສ້າງ
18 ພຣະຜູ້ເປັນເຈົ້າຈະຊົງເປັນເຈົ້າຊີວິດຕລອດໄປເປັນນິດ”
19 ເພາະເມື່ອຝູງມ້າພ້ອມທັງຣົດຮົບແລະຄົນຂັບຂອງຟາຣາໂອໄດ້ລົງໄປໃນທະເລ ພຣະຜູ້ເປັນເຈົ້າກໍຊົງໃຫ້ນໍ້າທະເລ
ໄຫລຄືນມາຖ້ວມ ແຕ່ຊາວອິສຣາເອນໄດ້ຍ່າງໄປເທິງດິນກາງທະເລນັ້ນ

**ບົດເພງຂອງມີຣີອາມ**

The Song of Miriam

(ຈຊບ 26:59)

20 ນາງມີຣີອາມຜູ້ປະກາດພຣະທັມ ຊຶ່ງເປັນເອື້ອຍຂອງອາໂຣນໄດ້ຖືກອງໂທນ ແລະຜູ້ຍິງທັງຫມົດກໍຍ່າງຟ້ອນລຳຕິດ
ຕາມສຽງກອງໄປ

21 ນາງມີຣີອາມໄດ້ຮ້ອງເພງອອກຫນ້າວ່າ:
"ຈົ່ງຮ້ອງເພງສັຣເສີນພຣະຜູ້ເປັນເຈົ້າ ເພາະພຣະອົງຊົງມີຊັຍຊະນະຢ່າງໃຫຍ່ຫລວງ ພຣະອົງຊົງຊຸກມ້າແລະຄົນຂັບ
ຣົດລົງໃນທະເລ"

**ນໍ້າຂົມທີ່ ມາຣາ**

Bitter Water Made Sweet

22 ຕໍ່ມາ ໂມເຊໄດ້ໃຫ້ຊາວອິສຣາເອນຕຽມຕົວອອກຈາກທະເລໄມ້ອໍ້ໄປຍັງຖິ່ນກັນດານຊູຣ໌ ພວກເຂົາໄດ້ພາກັນຍ່າງຢູ່
ໃນຖິ່ນກັນດານເຖິງສາມວັນກໍບໍ່ພົ້ນໍ້າ

23 ຄັນແລ້ວເຂົາກໍມາເຖິງບໍ່ນໍ້າຂົມແຫ່ງນຶ່ງ ນໍ້ານັ້ນໄດ້ຂົມຫລາຍຈົນເຂົາດື່ມບໍ່ໄດ້ ເຂົາຈຶ່ງເອີ້ນຊື່ນໍ້ານັ້ນວ່າ ມາຣາ

24 ປະຊາຊົນອິສຣາເອນໄດ້ພາກັນຈົ່ມຮ້າຍໂມເຊແລະຖາມວ່າ, "ພວກເຮົາຈະດື່ມຫຍັງ?"

25 ໂມເຊຈຶ່ງອ້ອນວອນດ້ວຍໃຈຮ້ອນຮົນຕໍ່ພຣະຜູ້ເປັນເຈົ້າ ແລ້ວພຣະອົງໄດ້ຊີ້ໃຫ້ໂມເຊເຫັນທ່ອນໄມ້ອັນນຶ່ງ ໂມເຊຈຶ່ງ
ຈັບໄມ້ນັ້ນຖິ້ມລົງໃນນໍ້າ ນໍ້າກໍຈືດບໍ່ຂົມຄືເກົ່າ ໃນທີ່ນັ້ນ ພຣະຜູ້ເປັນເຈົ້າໄດ້ຊົງປະທານກົດບັນຍັດໃຫ້ແກ່ພວກເຂົາ
ແລະໄດ້ຊົງທົດລອງ
ໃຈເຂົາຢູ່ທີ່ນັ້ນດ້ວຍ

26 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ຖ້າພວກເຈົ້າເຊື່ອຟັງເຮົາຜູ້ເປັນພຣະຜູ້ເປັນເຈົ້າຂອງເຈົ້າ ຈົ່ງທຳໃນສິ່ງທີ່ເຮົາເຫັນວ່າ
ຖືກຕ້ອງ ເອົາໃຈໃສ່ທຳຕາມພຣະບັນຍັດຂອງເຮົາ ແລະປະຕິບັດຕາມກົດບັນຍັດຂອງເຮົາທຸກຢ່າງ ເຮົາກໍຈະບໍ່ລົງ
ໂທດພວກເຈົ້າດ້ວຍໂຣກໄພໄຂ້ເຈັບຕ່າງໆເຫມືອນຢ່າງທີ່ເຮົາໄດ້ນຳມາລົງໂທດຊາວເອຢິບນັ້ນ ເຮົານີ້ແຫລະ ເປັນຜູ້
ປິ່ນປົວພວກເຈົ້າໃຫ້ດີ"

27 ຕໍ່ໄປ ພວກອິສຣາເອນກໍມາເຖິງເອລີມ ບ່ອນມີນໍ້າພຸສິບສອງບໍ່ ແລະມີຕົ້ນຕານເຈັດສິບຕົ້ນ ແລ້ວຕັ້ງຄ້າຍພັກເຊົາຢູ່
ໃກ້ນໍ້າທີ່ນັ້ນ

## 16 ມານາ ແລະນົກຂຸ້ມ

Bread from Heaven

1 ແລ້ວຊຸມນຸມຊົນອິສຣາເອນທັງຫມົດໄດ້ອອກຈາກຄ້າຍພັກເອລີມ ແລະໃນວັນທີສິບຫ້າຂອງເດືອນທີສອງ ຄືນັບຕັ້ງ
ແຕ່ເວລາອອກຈາກເອຢິບແລ້ວ ພວກເຂົາທັງຫມົດໄດ້ມາເຖິງຖິ່ນກັນດານຊິນ ຊຶ່ງຢູ່ລະຫວ່າງເອລີມກັບພູຊີນາອີ

2 ເມື່ອຢູ່ໃນຖິ່ນກັນດານ ພວກເຂົາໄດ້ພາກັນຈົ່ມຮ້າຍ ໂມເຊ ແລະອາໂຣນ

3 ພວກເຂົາເວົ້າວ່າ, "ພວກຂ້າພະເຈົ້າພໍໃຈໃຫ້ພຣະຜູ້ເປັນເຈົ້າຂ້າຕາຍຢູ່ເອຢິບ ບ່ອນທີ່ໄດ້ນັ່ງກິນເຂົ້າປາອາຫານອີ່ມ
ຕາມຄວາມຕ້ອງການ ແຕ່ນີ້ທ່ານໄດ້ນຳພວກຂ້າພະເຈົ້າທັງຫມົດອອກມາອຶດຢາກຕາຍຢູ່ໃນຖິ່ນກັນດານ"

4 ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ, "ບັດນີ້ ເຮົາຈະທຳໃຫ້ອາຫານຕົກລົງມາຈາກທ້ອງຟ້າດັ່ງຫ່າຝົນສຳລັບ
ພວກເຈົ້າ ໃຫ້ປະຊາຊົນໄປຊອກເກັບເອົາທຸກວັນ ໃຫ້ເກັບເອົາພໍດີກິນສຳລັບວັນນຶ່ງທີ່ໃຫ້ເຮັດດັ່ງນີ້ ກໍເພື່ອເຮົາຈະໄດ້
ທົດລອງເບິ່ງໃຈເຂົາວ່າເຂົາຈະເຮັດຕາມຄຳບອກສອນຂອງເຮົາຫລືບໍ່?

5 ໃນວັນທີຫົກ ໃຫ້ເຂົາເກັບເອົາຫລາຍກວ່າວັນກ່ອນນຶ່ງເທົ່າ ແລ້ວໃຫ້ຈັດຕຽມເຮັດອາຫານໄວ້"

6 ໂມເຊ ກັບອາໂຣນຈຶ່ງບອກປະຊາຊົນອິສຣາເອນທັງປວງວ່າ, “ໃນຕອນຄໍ່າມື້ ພວກເຈົ້າທັງຫລາຍຈະໄດ້ຮູ້ວ່າ ແມ່ນ
ພຣະຜູ້ເປັນເຈົ້າຊົງນໍາພວກເຈົ້າອອກຈາກເອຢິບ
7 ແລະໃນຕອນເຊົ້າ ພວກເຈົ້າຈະໄດ້ເຫັນພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ພຣະອົງຊົງໄດ້ຍິນຄໍາຈົ່ມຕໍ່
ວ່າຂອງພວກທ່ານທີ່ມີຕໍ່ພຣະອົງແລ້ວ ເພາະເຮົາທັງສອງນັ້ນແມ່ນຜູ້ໃດ ພວກທ່ານຈຶ່ງມາຈົ່ມຕໍ່ວ່າເຮົາ”
8 ໂມເຊໄດ້ເວົ້າຕໍ່ໄປວ່າ, “ແມ່ນພຣະຜູ້ເປັນເຈົ້າຈະໃຫ້ພວກເຈົ້າມີຊີ້ນຮັບປະທານໃນຕອນແລງ ແລະມີເຂົ້າຮັບປະ
ທານຢ່າງບໍຣິບູນໃນຕອນເຊົ້າ ເພາະພຣະອົງຊົງໄດ້ຍິນຄໍາຈົ່ມຂອງທ່ານຕໍ່ພຣະອົງເຮົາທັງສອງເປັນຜູ້ໃດ ພວກ
ທ່ານບໍ່ໄດ້ຈົ່ມຮ້າຍຕໍ່ວ່າເຮົາ ແຕ່ໄດ້ຈົ່ມຮ້າຍຕໍ່ພຣະຜູ້ເປັນເຈົ້າ”
9 ຕໍ່ມາ ໂມເຊໄດ້ເວົ້າກັບອາໂຣນວ່າ, “ຈົ່ງບອກຊຸມນຸມຊົນອິສຣາເອນເຂົ້າມາຢືນຢູ່ຊ້ອງຫນ້າພຣະພັກພຣະຜູ້ເປັນເຈົ້າ
ເພາະວ່າ ພຣະອົງຊົງໄດ້ຍິນຄໍາຈົ່ມຮ້າຍຂອງພວກເຂົາແລ້ວ”
10 ໃນຂນະທີ່ ອາໂຣນກໍາລັງເວົ້າກັບຊຸມນຸມຊົນອິສຣາເອນຢູ່ນັ້ນ ເຂົາທັງຫລາຍຕ່າງກໍພາກັນຫັນຫນ້າຫລຽວໄປທາງ
ຖິ່ນກັນດານ ທັນໃດນັ້ນໄດ້ເກີດມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າປາກົດຂຶ້ນໃນເມກ
11 ແລ້ວພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,
12 “ເຮົາໄດ້ຍິນຄໍາຈົ່ມຮ້າຍຂອງຊາວອິສຣາເອນແລ້ວ ເຈົ້າຈົ່ງບອກເຂົາວ່າພວກເຈົ້າຈະໄດ້ກິນຊີ້ນໃນເວລາຄໍ່າມືດ
ແລະຈະໄດ້ກິນເຂົ້າອີ່ມໃນເວລາເຊົ້າ ແລ້ວເຈົ້າທັງຫລາຍຈະໄດ້ຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າຂອງພວກເຈົ້າ”
13 ຄັນເຖິງເວລາຄໍ່າ ກໍມີນົກຂຸ້ມບິນມາເຕັມຄ້າຍພັກເຊົາ ແລະໃນຕອນເຊົ້າກໍມີນໍ້າຫມອກປົກຫຸ້ມຢູ່ຮອບຄ້າຍ
14 ເມື່ອນໍ້າຫມອກເຫີຍໄປຫມົດແລ້ວ ໄດ້ມີສິ່ງນຶ່ງຢູ່ເທິງດິນໃນຖິ່ນກັນດານ ສິ່ງນັ້ນເປັນແຜ່ນບາງໆເຫມືອນນໍ້າຫມອກ
ກ້າມ
15 ເມື່ອຊາວອິສຣາເອນເຫັນ ກໍບໍ່ຮູ້ຈັກວ່າແມ່ນຫຍັງ ພວກເຂົາຈຶ່ງຖາມກັນແລະກັນວ່າ, “ອັນນີ້ແມ່ນຫຍັງ?” ໂມເຊໄດ້
ບອກເຂົາວ່າ, “ອັນນີ້ແມ່ນເຂົ້າທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ພວກເຈົ້າກິນ
16 ພຣະຜູ້ເປັນເຈົ້າຊົງສັ່ງດັ່ງນີ້ວ່າ, ທຸກໆຄົນຈົ່ງເກັບເອົາຕາມທີ່ຕົນຈະກິນໄດ້ຫມົດ ຈົ່ງເກັບເອົາຄົນລະໂອເມີ (omer)
ໃຫ້ຄົບຕາມຈໍານວນຄົນທີ່ມີຢູ່ໃນຕູບຜ້າເຕັນຂອງຕົນ”
17 ປະຊາຊົນອິສຣາເອນກໍໄດ້ທໍາຕາມ ລາງຄົນໄດ້ເກັບເອົາຫລາຍ ລາງຄົນໄດ້ເກັບເອົາຫນ້ອຍ
18 ແຕ່ເມື່ອພວກເຂົາຊັ່ງເບິ່ງ ຄົນທີ່ເກັບເອົາຫລາຍກໍບໍ່ມີຫລາຍ ແລະຄົນທີ່ເກັບເອົາຫນ້ອຍກໍບໍ່ມີຫນ້ອຍ ທຸກຄົນຈຶ່ງ
ເກັບໄດ້ພໍດີກັບກິນອີ່ມ
19 ໂມເຊໄດ້ບອກວ່າ, “ຢ່າໃຫ້ຜູ້ໃດເກັບມ້ຽນໄວ້ຈົນຮອດມື້ອື່ນ”
20 ແຕ່ມີລາງຄົນບໍ່ເຊື່ອຟັງໂມເຊ ຄືເຂົາໄດ້ເອົາສ່ວນນຶ່ງມ້ຽນໄວ້ຈົນຮອດມື້ອື່ນ ພໍຮອດມື້ເຊົ້າອາຫານນັ້ນກໍເປັນຫນອນ
ແລະບູດເນົ່າ ໂມເຊຈຶ່ງຮ້າຍພວກເຂົາ
21 ດັ່ງນັ້ນ ຕໍ່ໄປພວກເຂົາຈຶ່ງຫາເກັບເອົາທຸກເຊົ້າເທົ່າທີ່ຕົນພໍຈະກິນອີ່ມ ແຕ່ພໍແດດຮ້ອນຂຶ້ນ ອາຫານນັ້ນກໍລະລາຍ
ຫາຍໄປ
22 ຕໍ່ມາ ໃນວັນທີຫົກ ເຂົາໄດ້ເກັບເອົາອາຫານນັ້ນສອງເທົ່າ ຄືຄົນລະສອງໂອເມີ ແລ້ວບັນດາຫົວຫນ້າຊຸມນຸມຊົນອິສ
ຣາເອນໄດ້ມາຣາຍງານເຣື່ອງນີ້ຕໍ່ໂມເຊ
23 ໂມເຊໄດ້ບອກເຂົາວ່າ, “ພຣະຜູ້ເປັນເຈົ້າຊົງມີພຣະດໍາຣັດດັ່ງນີ້, ມື້ອື່ນແມ່ນວັນສິນ ຄືວັນບໍຣິສຸດຂອງພຣະຜູ້ເປັນ
ເຈົ້າ ສະນັ້ນມີອັນໃດປີ້ງກໍໃຫ້ປີ້ງເສັຽ ມີອັນໃດຕົ້ມກໍໃຫ້ຕົ້ມເສັຽ ສິ່ງທີ່ເຫລືອຈົ່ງເອົາມ້ຽນໄວ້ຮອດມື້ອື່ນ”
24 ພວກເຂົາຈຶ່ງທໍາຕາມໂມເຊສັ່ງ ຄືໄດ້ເກັບອາຫານທີ່ເຫລືອມ້ຽນໄວ້ຈົນຮອດມື້ອື່ນ ອາຫານນັ້ນບໍ່ໄດ້ບູດເຫມັນເປັນ
ຫນອນເລີຍ
25 ຕໍ່ໄປ ໂມເຊໄດ້ບອກວ່າ, “ມື້ນີ້ຈົ່ງກິນອາຫານນັ້ນເສັຽ ເພາະວ່າມື້ນີ້ເປັນວັນສິນຂອງພຣະຜູ້ເປັນເຈົ້າ ແລະພວກທ່ານ
ຈະຫາອາຫານໃດໆບໍ່ໄດ້ອີກໃນທີ່ທົ່ວໄປ

26 ຈົ່ງໄປຫາເກັບເອົາເສັງທຸກວັນ ແຕ່ໃນວັນທີ່ເຈັດຊຶ່ງເປັນວັນສິນນັ້ນຈະບໍ່ມີອາຫານເລີຍ”
27 ຄັນແລ້ວ ໃນວັນທີ່ເຈັດໄດ້ມີລາງຄົນອອກໄປຫາເອົາອາຫານນັ້ນ ແຕ່ເຂົາກໍຫາບໍ່ໄດ້
28 ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່ໂມເຊວ່າ, “ພວກເຈົ້າຈະຂັດຂືນຂໍ້ບັນຍັດ ແລະກົດຫມາຍຂອງເຮົາຢູ່ເຫິງປານໃດ? ຈົ່ງ
ຈຳໄວ້ວ່າ ເຮົາຄືພຣະຜູ້ເປັນເຈົ້າໄດ້ໃຫ້ວັນສິນແກ່ພວກເຈົ້າ
29 ເຫດສັນນັ້ນໃນວັນທີຫົກ ເຮົາຈຶ່ງໄດ້ປະທານອາຫານໃຫ້ພໍກິນໄດ້ສອງມື້ແກ່ພວກເຈົ້າ ໃນວັນທີເຈັດທຸກຄົນຕ້ອງຢູ່
ກັບທີ່ບໍ່ໃຫ້ມີຜູ້ໃດອອກຈາກບ້ານເຮືອນຂອງຕົນ”
30 ດ້ວຍເຫດນີ້ ຄົນທັງປວງຈຶ່ງບໍ່ເຮັດວຽກໃນວັນຖ້ວນເຈັດ
31 ປະຊາຊົນອິສຣາເອນໄດ້ເອີ້ນຊື່ອາຫານນັ້ນວ່າ ມານາ ອາຫານນີ້ເປັນເມັດຂາວໆເຫມືອນໃນຜັກຊີ ມີຣົດເຫມືອນ
ເຂົ້າຫນົມແຜ່ນປະສົມນ້ຳເຜີ້ງ
32 ໂມເຊໄດ້ເວົ້າວ່າ, “ພຣະຜູ້ເປັນເຈົ້າຊົງສັ່ງດັ່ງນີ້ວ່າ, ຈົ່ງຜອງເອົາມານານຶ່ງໂອເມີເກັບໄວ້ຕລອດຊົ່ວເຊື້ອສາຍຂອງ
ພວກເຈົ້າ ເພື່ອເຂົາທັງຫລາຍຈະໄດ້ເຫັນອາຫານທີ່ເຮົາໄດ້ໃຫ້ເຈົ້າກິນໃນຖິ່ນກັນດານ ເມື່ອຄາວເຮົາໄດ້ນຳພວກເຈົ້າ
ອອກຈາກເອຢິບນັ້ນ”
33 ໂມເຊໄດ້ບອກອາໂຣນວ່າ, “ຈົ່ງຜອງມານານຶ່ງໂອເມີໃສ່ໄຫໄວ້ສຳລັບເຊື້ອສາຍຂອງເຈົ້າ”
34 ອາໂຣນຈຶ່ງໄດ້ວາງມານານັ້ນໄວ້ຕໍ່ຫນ້າຫີບພຣະສັນຍາ ເພື່ອເກັບຮັກສາໄວ້ຕາມພຣະຜູ້ເປັນເຈົ້າຊົງສັ່ງໂມເຊ
35 ປະຊາຊົນອິສຣາເອນໄດ້ກິນມານາເປັນອາຫານຢູ່ສີ່ສິບປີ ຈົນພວກເຂົາໄດ້ມາເຖິງແຜ່ນດິນບ່ອນມີຄົນຢູ່ຄືຮອດຊາຍ
ແດນປະເທດການາອານ
36 (ນຶ່ງໂອເມີເທົ່າກັບນຶ່ງໃນສິບຂອງເອຟາ)

## 17 ນ້ຳອອກມາຈາກຫີນ

Water from the Rock

1 (ຈຊບ 20:1-13)

2 ຊຸມນຸມຊົນອິສຣາເອນທັງຫມົດ ໄດ້ຍົກອອກຈາກຖິ່ນກັນດານຊິນ ຍ້າຍໄປຕັ້ງຄ້າຍຢູ່ເປັນລະຍະໆຕາມພຣະບັນຊາ
ຂອງພຣະຜູ້ເປັນເຈົ້າ ພວກເຂົາໄດ້ຕັ້ງຄ້າຍພັກເຊົາຢູ່ທີ່ເຣຟີດິມ ແຕ່ໃນທີ່ນີ້ບໍ່ມີນ້ຳໃຫ້ປະຊາຊົນດື່ມ
3 ພວກເຂົາຈຶ່ງຜິດຖຽງກັບໂມເຊ ແລະເວົ້າວ່າ, “ໃຫ້ພວກຂ້າພະເຈົ້າດື່ມນ້ຳແດ່” ໂມເຊໄດ້ຕອບວ່າ, “ພວກເຈົ້າຫາ
ເຣື່ອງຜິດຖຽງກັບເຮົາເຮັດຫຍັງ? ເປັນຫຍັງຈຶ່ງບັງອາດລອງດີກັບພຣະຜູ້ເປັນເຈົ້າ?”
4 ປະຊາຊົນໄດ້ຫິວນ້ຳຫລາຍຂຶ້ນ ຈຶ່ງຈົ່ມຮ້າຍໃສ່ໂມເຊ ວ່າ, “ເປັນຫຍັງທ່ານຈຶ່ງພາພວກຂ້າພະເຈົ້າອອກມາຈາກເອ
ຢິບ? ຮູ້ບໍ່ວ່າພວກຂ້າພະເຈົ້າທັງເດັກນ້ອຍແລະຝູງສັດຫິວນ້ຳຈະຕາຍແລ້ວ”
5 ໂມເຊຈຶ່ງອ້ອນວອນພຣະຜູ້ເປັນເຈົ້າດ້ວຍຄວາມຮ້ອນຮົນວ່າ, “ຂ້າພຣະອົງຈະເຮັດແນວໃດກັບປະຊາຊົນເຫລົ່ານີ້?
ພວກເຂົາເກືອບຈະເອົາຫີນຄວ່າງໃສ່ຂ້າພຣະອົງແລ້ວ”
6 ພຣະຜູ້ເປັນເຈົ້າຊົງຕອບໂມເຊວ່າ, “ເຈົ້າຈົ່ງຍ່າງໄປກ່ອນປະຊາຊົນເຫລົ່ານັ້ນ ໃຫ້ເອົາຫົວຫນ້າບາງຄົນຂອງຊາວອິສ
ຣາເອນໄປດ້ວຍ ໄມ້ເທົ້າທີ່ເຈົ້າໃຊ້ຕີແມ່ນ້ຳກໍໃຫ້ຖືໄປ ໃຫ້ຮີບອອກເດີນທາງໄປ ເຮົາຈະຢືນຢູ່ຕໍ່ຫນ້າເຈົ້າເທິງໂງ່ນຫີນ
ທີ່ໂຮເຣັບ
7 ເຈົ້າຈົ່ງຕີຫີນນັ້ນ ແລ້ວນ້ຳຈະໄຫລອອກມາໃຫ້ປະຊາຊົນດື່ມໄດ້” ໂມເຊຈຶ່ງທຳດັ່ງນັ້ນຕໍ່ຫນ້າພວກຫົວຫນ້າຂອງຊາວ
ອິສຣາເອນ
8 ສະຖານທີ່ນັ້ນຈຶ່ງມີຊື່ວ່າ ມັດສາຫລືລາງຄົນເອີ້ນວ່າ ເມຣິບາ ເພາະຊາວອິສຣາເອນໄດ້ທະເລາະຜິດຖຽງກັນ ແລະ
ລອງດີກັບພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ ໂດຍເວົ້າວ່າ, “ພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບພວກເຮົາຫລືບໍ່?”

**ທຳສົງຄາມກັບຄົນອາມາເລກ**

Amalek Attacks Israel and Is Defeated

(ປຖກ 14:7; ຈຊບ 13:29; 14:25)

9 ຊາວອາມາເລກໄດ້ຍົກທັບມາຕີຊາວອິສຣາເອນທີ່ເຣຟີດີມ

10 ໂມເຊຈຶ່ງເວົ້າກັບໂຢຊວຍວ່າ, "ຈົ່ງໂຮມກຳລັງຄົນຂອງເຮົາອອກໄປສູ້ຮົບກັບຊາວອາມາເລກໃນມື້ອື່ນນີ້ ເຮົາຈະຖືໄມ້ເທົ້າທີ່ພຣະເຈົ້າປະທານໃຫ້ຢືນຢູ່ເທິງຈອມພູ"

11 ໂຢຊວຍໄດ້ທຳຕາມໂມເຊສັ່ງຄື ໄດ້ອອກໄປສູ້ຮົບກັບຊາວອາມາເລກ ສ່ວນໂມເຊ ອາໂຣນ ແລະຮູເຣໄດ້ຂຶ້ນໄປເທິງຈອມພູນັ້ນ

12 ເມື່ອໃດໂມເຊຍົກແຂນຂຶ້ນ ຊາວອິສຣາເອນກໍເປັນຝ່າຍໄດ້ປຽບ ແຕ່ພໍໂມເຊເອົາແຂນລົງ ຝ່າຍອາມາເລກກໍເລີ້ມໄດ້ປຽບ

13 ເມື່ອໂມເຊເມື່ອຍແຂນອາໂຣນກັບຮູເຣກໍນຳກ້ອນຫີນມາໃຫ້ໂມເຊນັ່ງ ແລ້ວເຂົາທັງສອງກໍຢືນຈັບແຂນໂມເຊຍົກຂຶ້ນຄົນລະຂ້າງ ແຂນຂອງໂມເຊຈຶ່ງຍົກຢູ່ຈົນເທົ່າຕາເວັນຕົກດິນ

14 ໂຢຊວຍກໍຊະນະປະຊາຊົນຂອງອາມາເລກໄດ້ທັງຫມົດ

15 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງຂຽນເຣື່ອງທີ່ເກີດຂຶ້ນນີ້ໄວ້ໃນປຶ້ມເພື່ອຈະໄດ້ລະນຶກເຖິງ ແລະຈົ່ງເລົ່າໃຫ້ໂຢຊວຍຟັງວ່າ ເຮົາຈະທຳໃຫ້ຊື່ສຽງຂອງອາມາເລກຫມົດສິ້ນໄປ"

16 ແລ້ວໂມເຊໄດ້ສ້າງແທ່ນບູຊາອັນນຶ່ງຂຶ້ນເອີ້ນແທ່ນນັ້ນວ່າ, "ພຣະຜູ້ເປັນເຈົ້າຊົງເປັນທຸງໄຊຂອງຂ້າພະເຈົ້າ" (ເຢໂຮວາ ນິສຊີ)

17 ທ່ານກ່າວວ່າ, "ຈົ່ງຍົກສູງທຸງໄຊຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຈະສູ້ຮົບກັບຊາວອາມາເລກຕລອດໄປ"

## 18 ເຢດໂຣມາຢ້ຽມຢາມໂມເຊ

Jethro's Advice

(ພບຍ 1:9-18)

1 ເຢດໂຣພໍ່ເຖົ້າຂອງໂມເຊ ຜູ້ທີ່ເປັນປະໂຣຫິດແຫ່ງມີດີອານ ໄດ້ຍິນເຖິງທຸກສິ່ງທີ່ພຣະເຈົ້າໄດ້ກະທຳເພື່ອໂມເຊແລະປະຊາຊົນອິສຣາເອນ ເມື່ອພຣະອົງໄດ້ນຳພວກເຂົາອອກມາຈາກເອຢິບ

2 ສະນັ້ນ ເຢດໂຣຈຶ່ງພາຊິບໂປຣາພັຣຍາຂອງໂມເຊຜູ້ທີ່ຖືກປະໄວ້ກັບຕົນນັ້ນມາຫາໂມເຊ

3 ພ້ອມບຸດຊາຍທັງສອງຄົນຂອງນາງ ຄົນນຶ່ງຊື່ ເກີໂຊມ  (ໂມເຊໄດ້ກ່າວວ່າ, "ຂ້າພະເຈົ້າເປັນຄົນຕ່າງປະເທດທີ່ມາອາສັຍຢູ່ໃນປະເທດນີ້")

4 ອີກຄົນນຶ່ງຊື່ ເອລີເອເຊີ (ທ່ານກ່າວອີກວ່າ, "ພຣະເຈົ້າຂອງບິດາຂ້າພະເຈົ້າເປັນຜູ້ຊ່ອຍຊູຂ້າພະເຈົ້າໃຫ້ພົ້ນຈາກການນຳລ້າສັງຫານຂອງກະສັດແຫ່ງເອຢິບ")

5 ເຢດໂຣໄດ້ພາພັຣຍາຂອງໂມເຊພ້ອມດ້ວຍບຸດທັງສອງຂອງນາງ ມາຍັງຖິ່ນແຫ້ງແລ້ງກັນດານ ບ່ອນທີ່ໂມເຊໄດ້ຕັ້ງຄ້າຍພັກຢູ່ທີ່ພູສັກສິດ

6 ທ່ານໄດ້ສົ່ງຄົນໄປບອກໂມເຊວ່າ, "ພວກຕົນກຳລັງເດີນທາງມາ"

7 ດັ່ງນັ້ນ ໂມເຊຈຶ່ງອອກໄປພົບແລະຂາບລົງຕໍ່ຫນ້າເຢດໂຣ ແລະທັງຈູບທ່ານ ພວກເຂົາຖາມເຖິງຄວາມສຸກທຸກຂອງກັນແລະກັນ ຄັນແລ້ວພໍພາກັນໄປຍັງເຕັນບ່ອນພັກຂອງໂມເຊ

8 ໂມເຊເລົ່າສູ່ເຢດໂຣຟັງທຸກສິ່ງທຸກຢ່າງທີ່ພຣະຜູ້ເປັນເຈົ້າໄດ້ທຳຕໍ່ກະສັດແລະຕໍ່ຊາວເອຢິບ ເພື່ອຊ່ອຍກູ້ເອົາຊາວອິສຣາເອນ ໂມເຊຍັງໄດ້ເລົ່າເຖິງຄວາມຍາກລຳບາກນາໆປະການທີ່ຊາວອິສຣາເອນໄດ້ປະເຊີນໃນຄາວເດີນທາງ ແລະເຖິງການທີ່ພຣະຜູ້ເປັນເຈົ້າໄດ້ໂຜດຊ່ອຍພວກເຂົາໃຫ້ພົ້ນຢ່າງໃດ

9 ເມື່ອເຢດໂຣໄດ້ຍິນຫມົດທຸກເຣື່ອງຢ່າງນັ້ນແລ້ວ ທ່ານກໍດີໃຈຫລາຍ
10 ແລະກ່າວວ່າ, “ສັຣເສີນພຣະຜູ້ເປັນເຈົ້າອົງທີ່ໂຜດຊ່ອຍທ່ານທັງຫລາຍໃຫ້ລອດຈາກເງື້ອມມືຊາວເອຢິບແລະ
ຈາກຫັດຂອງກະສັດຟາຣາໂອ ແລະຊົງຊ່ອຍປະຊາຊົນໃຫ້ພົ້ນຈາກມືຂອງຊາວເອຢິບ
11 ບັດນີ້ເຮົາຮູ້ແລ້ວວ່າ ພຣະຜູ້ເປັນເຈົ້າຍິ່ງໃຫຍ່ກວ່າພຣະທັງຫລາຍ ເພາະພຣະອົງຊົງສຳແດງຄວາມຍິ່ງໃຫຍ່ນີ້ ເມື່ອ
ເອຢິບໄດ້ເຮັດຕໍ່ຊາວອິສຣາເອນດ້ວຍຄວາມດູຫມິ່ນປະຫມາດເຊັ່ນນັ້ນ”
12 ແລ້ວເຢໂຣດພໍ່ເຖົ້າຂອງໂມເຊກໍນຳເອົາເຄື່ອງເຜົາບູຊາແລະເຄື່ອງສັດບູຊາຖວາຍແກ່ພຣະເຈົ້າ ຝ່າຍອາໂຣນ ແລະ
ພວກຜູ້ນຳກໍໄດ້ໄປຮ່ວມຮັບປະທານອາຫານລ້ຽງກັບພໍ່ເຖົ້າຂອງໂມເຊ ສະເພາະພຣະພັກພຣະເຈົ້າ

**ໂມເຊແຕ່ງຕັ້ງພວກຜູ້ປົກຄອງ**

13 ໃນວັນຕໍ່ມາ ໂມເຊໄດ້ອອກມານັ່ງພິຈາຣະນາເພື່ອຕັດສິນຄວາມໃຫ້ປະຊາຊົນ ທ່ານໄດ້ຫຍຸ້ງຢູ່ກັບວຽກແຕ່ເຊົ້າຈົນ
ຮອດຄ່ຳ
14 ເມື່ອພໍ່ເຖົ້າໂມເຊໄດ້ເຫັນງານທີ່ໂມເຊເຮັດເພື່ອປະຊາຊົນເຊັ່ນນັ້ນ ຈຶ່ງຖາມວ່າ, “ເຈົ້າໃຊ້ວິທີຫຍັງປະຕິບັດກັບປະຊາ
ຊົນ? ດ້ວຍເຫດໃດເຈົ້າຈຶ່ງເຮັດຜູ້ດຽວໂດຍປ່ອຍໃຫ້ປະຊາຊົນໃຫ້ຢືນອ້ອມທີ່ນີ້ແຕ່ເຊົ້າຮອດຄ່ຳ?“
15 ແລ້ວໂມເຊກໍຕອບພໍ່ເຖົ້າວ່າ, “ເພາະປະຊາຊົນມາຫາຂ້າພະເຈົ້າ ເພື່ອຂໍໃຫ້ທູນຖາມພຣະເຈົ້າ”
16 ເມື່ອມີສອງຄົນໂຕ້ຖຽງກັນ ພວກເຂົາກໍມາຫາຂ້າພະເຈົ້າ ແລະຂ້າພະເຈົ້າກໍຕັດສິນຄວາມໃຫ້ລະຫວ່າງເຂົາທັງສອງ
ສອນພວກເຂົາໃຫ້ຮູ້ເຖິງກົດເກນແລະຂໍ້ຄຳສັ່ງຂອງພຣະເຈົ້າ
17 ແລ້ວພໍ່ເຖົ້າຂອງໂມເຊຈຶ່ງກ່າວແກ່ທ່ານວ່າ, “ທ່ານເຮັດຢ່າງນີ້ບໍ່ແມ່ນວິທີດີ
18 ທ່ານຈະເຮັດໃຫ້ທ່ານເອງອ່ອນເພັຽເສັຽກຳລັງພ້ອມທັງປະຊາຊົນເຫລົ່ານີ້ດ້ວຍ ວຽກການນີ້ຫນັກເຫລືອກຳລັງທີ່ທ່ານ
ຜູ້ດຽວຈະທຳໄດ້
19 ບັດນີ້ຟັງເຮົາ ເຮົາຈະໃຫ້ຄຳແນະນຳທີ່ດີແກ່ທ່ານແລະຂໍໃຫ້ພຣະເຈົ້າສະຖິດຢູ່ກັບທ່ານເປັນການຖືກຕ້ອງ ທ່ານ
ຈົ່ງເປັນຜູ້ແທນຂອງປະຊາຊົນຕໍ່ພຣະເຈົ້າ ແລະນຳຄວາມກາບທູນພຣະເຈົ້າ
20 ທ່ານຈົ່ງສັ່ງສອນເຂົາໃຫ້ເຂົາຮູ້ກົດເກນ ແລະຂໍ້ຕັດສິນ ແລະສະແດງໃຫ້ເຂົາຮູ້ຈັກທາງທີ່ເຂົາຕ້ອງດຳເນີນຊີວິດແລະ
ສິ່ງທີ່ຕ້ອງປະຕິບັດ
21 ແຕ່ນອກຈາກນີ້ ທ່ານຈົ່ງເລືອກຄົນທີ່ສາມາດຈາກພວກປະຊາຊົນ ຄືຄົນທີ່ຢຳເກງພຣະເຈົ້າ ໄວ້ໃຈໄດ້ ແລະບໍ່ກິນສິນ
ບົນ ແຕ່ງຕັ້ງຄົນຢ່າງນີ້ໄວ້ເປັນຜູ້ປົກຄອງຄົນ ພັນຄົນ ຮ້ອຍຄົນ ຫ້າສິບຄົນ ແລະສິບຄົນ
22 ໃຫ້ເຂົາຮັບຫນ້າທີ່ເປັນຜູ້ຕັດສິນຄວາມຂອງປະຊາຊົນປະຈຳ ສ່ວນກໍຣະນີໃຫຍ່ໆກໍໃຫ້ເຂົານຳມາແຈ້ງຕໍ່ທ່ານ
ແຕ່ສ່ວນຄະດີເລັກນ້ອຍໃຫ້ເຂົາຕັດສິນເອງ ວິທີນີ້ຈະທຳໃຫ້ການງານຂອງທ່ານເບົາລົງ ແລະພວກເຂົາຈະແບກພາ
ຣະຮ່ວມກັບເຈົ້າ
23 ຖ້າເຮັດດັ່ງນີ້ແລະພຣະເຈົ້າຊົງບັນຊາແລ້ວ ທ່ານກໍຈະສາມາດທົນໄດ້ ປະຊາຊົນທັງປວງນີ້ກໍຈະໄປຍັງທີ່ອາສັຍຂອງ
ເຂົາດ້ວຍຄວາມສງົບສຸກ
24 ໂມເຊກໍເຊື່ອຟັງຖ້ອຍຄຳຂອງພໍ່ເຖົ້າ ແລະທຳຕາມທີ່ເຂົາແນະນຳທຸກປະການ
25 ໂມເຊຈຶ່ງໄດ້ເລືອກຄົນທີ່ສາມາດຈາກຄົນອິສຣາເອນທັງປວງ ຕັ້ງໃຫ້ເປັນຫົວຫນ້າປະຊາຊົນ ເປັນຜູ້ປົກຄອງພັນຄົນ
ຮ້ອຍຄົນ ຫ້າສິບຄົນ ແລະສິບຄົນ
26 ຄົນເຫລົ່ານັ້ນພິພາກສາຄວາມຂອງປະຊາຊົນເປັນປະຈຳ ໂດຍນຳຄະດີໃຫຍ່ໆມາຫາໂມເຊ ສ່ວນຄະດີເລັກນ້ອຍນັ້ນ
ເຂົາພິຈາຣະນາຕັດສິນເອງ
27 ແລ້ວໂມເຊກໍອຳລາກັນກັບພໍ່ເຖົ້າ ແລະພໍ່ເຖົ້າກໍໄດ້ກັບຄືນເມືອຍັງບ້ານເມືອງຂອງຕົນ

## 19 ຊາວອິສຣາເອນທີ່ພູ ຊີນາອີ

The Israelites Reach Mount Sinai

1 ໃນວັນທີນຶ່ງຂອງເດືອນທີສາມນັບແຕ່ຊາວອິສຣາເອນໄດ້ອອກຈາກເອຢິບ ພວກເຂົາໄດ້ມາເຖິງຖິ່ນກັນດານທີ່ຊີນາອີ
2 ເມື່ອອອກຈາກເຣຟີດິມມາເຖິງຖິ່ນກັນດານຊີນາອີແລ້ວ ພວກເຂົາໄດ້ຕັ້ງຄ້າຍພັກເຊົາຢູ່ຕໍ່ໜ້າພູນັ້ນ
3 ແລ້ວໂມເຊໄດ້ຂຶ້ນໄປເທິງພູເພື່ອເຝົ້າພຣະເຈົ້າ ພຣະຜູ້ເປັນເຈົ້າຊົງເອີ້ນຈາກພູມາຫາໂມເຊວ່າ, “ຈົ່ງບອກເຊື້ອສາຍ
ຢາໂຄບ ແລະບອກຊາວອິສຣາເອນດັ່ງນີ້
4 ພວກເຈົ້າໄດ້ເຫັນສິ່ງທີ່ພຣະຜູ້ເປັນເຈົ້າໄດ້ກະທຳຕໍ່ຊາວເອຢິບແລ້ວ ພຣະອົງໄດ້ຍົກພວກເຈົ້າຂຶ້ນເໝືອນດັ່ງນົກອິນ
ຊີຍົກລູກຂຶ້ນດ້ວຍປີກຂອງມັນ
5 ເພື່ອນຳພວກເຈົ້າມາຫາພຣະອົງ ບັດນີ້ ຖ້າພວກເຈົ້າເຊື່ອຟັງພຣະອົງ ແລະຮັກສາຄຳໝັ້ນສັນຍາຂອງພຣະອົງໄວ້ ພ
ວກເຈົ້າກໍຈະໄດ້ເປັນໄພ່ພົນຂອງພຣະອົງ ໝົດທັງໂລກເປັນຂອງພຣະອົງ
6 ແຕ່ພວກເຈົ້າຈະໄດ້ເປັນໄພ່ພົນພິເສດຂອງພຣະອົງ ຈະໄດ້ເປັນປະໂຣຫິດຜູ້ຮັບໃຊ້ພຣະອົງ ແລະເປັນໄພ່ພົນບໍຣິສຸດ
ຂອງພຣະອົງ ນີ້ແມ່ນຖ້ອຍຄຳທີ່ເຈົ້າຈະຕ້ອງບອກຊາວອິສຣາເອນ”
7 ດັ່ງນັ້ນ ໂມເຊຈຶ່ງໄປເອີ້ນພວກຫົວໜ້າປະຊາຊົນມາພ້ອມກັນ ແລະບອກສິ່ງທັງປວງທີ່ພຣະຜູ້ເປັນເຈົ້າຊົງກ່າວສູ່
ພວກເຂົາຟັງ
8 ແລະປະຊາຊົນໄດ້ຕອບພ້ອມກັນວ່າ, “ທຸກສິ່ງທີ່ພຣະຜູ້ເປັນເຈົ້າຊົງບອກນັ້ນ ພວກຂ້າພະເຈົ້າທັງຫລາຍຈະທຳຕາມ”
ໂມເຊຈຶ່ງກາບທູນພຣະຜູ້ເປັນເຈົ້າຕາມທີ່ປະຊາຊົນໄດ້ຕອບ
9 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂມເຊວ່າ, “ເຮົາຈະມາຫາເຈົ້າດ້ວຍເມກອັນໜາຕຶບ ເພື່ອປະຊາຊົນຈະໄດ້ຍິນ ຂນະເຮົາ
ເວົ້າກັບເຈົ້າ ແລ້ວເຂົາຈະໄດ້ເຊື່ອເຈົ້າສເມີ”

The People Consecrate

ໂມເຊຈຶ່ງກາບທູນພຣະຜູ້ເປັນເຈົ້າຕາມທີ່ປະຊາຊົນໄດ້ຕອບ
10 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ຈົ່ງໄປບອກໃຫ້ປະຊາຊົນຕຽມຕົວນະມັສການໃນມື້ນີ້ ແລະມື້ອື່ນ ພວກເຂົາຈະ
ຕ້ອງຊັກເສື້ອຜ້າຂອງເຂົາໃຫ້ສະອາດ
11 ໃນວັນຖ້ວນສາມໃຫ້ພວກເຂົາຕຽມຕົວໄວ້ ໃນມື້ນັ້ນເຮົາຈະລົງມາເທິງພູຊີນາອີ ຄົນທັງປວງຈະໄດ້ເຫັນເຮົາຢູ່ທີ່ນັ້ນ
12 ເຈົ້າຈົ່ງກຳນົດເຂດໃຫ້ປະຊາຊົນຢູ່ຮອບພູນັ້ນ ແລ້ວບອກເຂົາວ່າ ຈົ່ງລະວັງໃຫ້ດີ ຢ່າລ່ວງເຂດຂຶ້ນໄປເທິງພູຫລືຊູນ
ຕີນພູນັ້ນ ຖ້າຜູ້ໃດຂືນລ່ວງລ້ຳເຂົ້າໄປຢຽບຕີນພູຈະມີໂທດເຖິງຕາຍ
13 ຜູ້ນັ້ນຈະຖືກແກວ່ງດ້ວຍກ້ອນຫີນ ຫລືຍິງດ້ວຍໜ້າທະນູ ບໍ່ໃຫ້ຂ້າດ້ວຍວິທີເອົາມືຖືກຕ້ອງ ຈະເປັນມະນຸດຫລືສັດກໍ
ໃຫ້ຂ້າເສັຽຢ່າໄວ້ຊີວິດ ເມື່ອໄດ້ຍິນສຽງເປົ່າແກແລ້ວຈຶ່ງໃຫ້ປະຊາຊົນຂຶ້ນມາເທິງພູໄດ້”
14 ໂມເຊຈຶ່ງລົງຈາກພູມາຫາປະຊາຊົນ ເພື່ອບອກໃຫ້ເຂົາຕຽມຕົວນະມັສການ ພວກເຂົາໄດ້ຊັກເສື້ອຜ້າຂອງຕົນໃຫ້ສະ
ອາດ
15 ແລ້ວໂມເຊໄດ້ບອກເຂົາວ່າ, “ທ່ານທັງຫລາຍຈົ່ງຕຽມຕົວໃຫ້ດີໃນວັນທີສາມ ຢ່າຮ່ວມຫລັບນອນນຳຜູ້ຍິງເດັດຂາດ”
16 ຢູ່ມາໃນຕອນເຊົ້າຂອງວັນທີສາມ ໄດ້ເກີດຟ້າຮ້ອງແມບແລະມີເມກອັນໜາຕຶບປົກຫຸ້ມຢູ່ເທິງພູນັ້ນ ພ້ອມກັບມີສຽງ
ແກດັງສນັ່ນຫວັ່ນໄຫວ ຈົນຄົນທັງປວງທີ່ຢູ່ໃນຄ້າຍຢ້ານກົວຕົວສັ່ນ
17 ໂມເຊຈຶ່ງນຳປະຊາຊົນອອກຈາກຄ້າຍໄປເຝົ້າພຣະເຈົ້າ
18 ພວກເຂົາໄດ້ມາຢຸດຢືນຢູ່ທີ່ຕີນພູທົ່ວພູຊີນາອີມີຄວັນປົກຫຸ້ມຢູ່ ເພາະພຣະຜູ້ເປັນເຈົ້າສະເດັດລົງມາເທິງພູນັ້ນດ້ວຍ
ໄຟຄວັນ ໄຟໄດ້ພຸ່ງຂຶ້ນເໝືອນຄວັນໃນເຕົາໃຫຍ່ ປະຊາຊົນທັງປວງຈຶ່ງຢ້ານສັ່ນຢ່າງຣຸນແຮງ
19 ເມື່ອສຽງແກດັງຂຶ້ນ ໂມເຊໄດ້ກາບທູນພຣະເຈົ້າ ພຣະອົງກໍຊົງຕອບດ້ວຍສຽງຟ້າຮ້ອງ
20 ພຣະຜູ້ເປັນເຈົ້າໄດ້ສະເດັດລົງມາເທິງຈອມພູຊີນາອີ ຊົງເອີ້ນໂມເຊໃຫ້ຂຶ້ນໄປເທິງຈອມ ໂມເຊຈຶ່ງຂຶ້ນໄປ

21 ແລ້ວພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ຈົ່ງລົງໄປຕັກເຕືອນປະຊາຊົນ ຢ່າໃຫ້ເຂົາຂ້າມເຂດເຂົ້າມາເບິ່ງເຮົາ ຖ້າບໍ່ດັ່ງນັ້ນເຂົາຈະຕ້ອງຕາຍເປັນຈຳນວນຫລາຍ

22 ອີກປະການນຶ່ງ ພວກປະໂຣຫິດຜູ້ທີ່ເຂົ້າມາໃກ້ເຮົານັ້ນ ຈົ່ງໃຫ້ເຂົາຊຳຮະຕົວໃຫ້ບໍຣິສຸດ ຖ້າບໍ່ດັ່ງນັ້ນເຮົາຈະລົງໂທດເຂົາ”

23 ໂມເຊໄດ້ກາບທູນພຣະຜູ້ເປັນເຈົ້າວ່າ, “ປະຊາຊົນຂຶ້ນມາບໍ່ໄດ້ ເພາະພຣະອົງຊົງເຕືອນພວກຂ້າພຣະອົງທັງຫລາຍວ່າ ຈົ່ງກັ້ນເຂດໄວ້ຮອບພູນັ້ນ ແລະໃຫ້ທຳເປັນບ່ອນສັກສິດ”

24 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ເຈົ້າຈົ່ງລົງໄປເສັຽ ແລ້ວໃຫ້ອາໂຣນຂຶ້ນມານຳເຈົ້າ ແຕ່ພວກປະໂຣຫິດກັບປະຊາຊົນຢ່າຂ້າມເຂດຂຶ້ນມາຫາເຮົາຖ້າບໍ່ດັ່ງນັ້ນ ເຮົາຈະລົງໂທດເຂົາ”

25 ໂມເຊຈຶ່ງລົງໄປ ແລະບອກປະຊາຊົນຢ່າງນັ້ນ

## 20 ພຣະບັນຍັດສິບປະການ

The Tenth Commandments

(ພບຍ 5:1-22)

1 ພຣະຜູ້ເປັນເຈົ້າຊົງກ່າວຖ້ອຍຄຳຕໍ່ໄປນີ້ວ່າ,

2 “ເຮົາແມ່ນພຣະຜູ້ເປັນເຈົ້າຂອງພວກເຈົ້າ ຜູ້ໄດ້ນຳພາພວກເຈົ້າອອກຈາກປະເທດເອຢິບ ຄືອອກຈາກປະເທດທີ່ພວກເຈົ້າໄດ້ຕົກເປັນທາດ

3 ພວກເຈົ້າຢ່າມີພຣະອື່ນ ນອກຈາກເຮົາ

4 ພວກເຈົ້າຢ່າເຮັດຮູບໂຄຣົບສຳລັບຕົນ ຫລືຮູບສິ່ງນຶ່ງສິ່ງໃດທີ່ມີຢູ່ໃນຟ້າສວັນ ໃນແຜ່ນດິນຫລືໃນລຸ່ມແຜ່ນດິນ

5 ຢ່າຂາບໄຫວ້ຮູບເຫລົ່ານັ້ນ ເພາະວ່າເຮົາເປັນພຣະຜູ້ເປັນເຈົ້າຂອງພວກເຈົ້າ ແລະເປັນພຣະເຈົ້າຜູ້ຫວງແຫນພວກເຈົ້າ ເຮົາຈະລົງໂທດລູກຫລານຂອງຜູ້ທີ່ຊັງເຮົາເຖິງສາມສີ່ຊົ່ວອາຍຸຄົນ

6 ແຕ່ຈະສະແດງຄວາມຮັກຫມັ້ນຄົງຕໍ່ຜູ້ທີ່ຮັກເຮົາ ແລະຕໍ່ຜູ້ທີ່ປະພຶດຕາມພຣະບັນຍັດຂອງເຮົາສືບໄປຫລາຍຊົ່ວອາຍຸພັນຄົນ

7 ພວກເຈົ້າຢ່າໃຊ້ຊື່ພຣະຜູ້ເປັນເຈົ້າຂອງເຈົ້າ ໄປໃນທາງທີ່ຜິດເພາະເຮົາຈະລົງໂທດຜູ້ທີ່ໃຊ້ຊື່ເຮົາໄປໃນທາງທີ່ຜິດ

8 ພວກເຈົ້າຈົ່ງນັບຖືວັນສິນ ໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ

9 ຈົ່ງເຮັດວຽກທັງປວງຂອງເຈົ້າແຕ່ໃນຫົກມື້

10 ແຕ່ມື້ຖ້ວນເຈັດໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າຂອງເຈົ້າ ໃນມື້ນີ້ໃຫ້ເຈົ້າເອງພ້ອມດ້ວຍບຸດຊາຍບຸດຍິງຂ້ອຍທາດ ແລະສັດລ້ຽງຂອງພວກເຈົ້າຕລອດທັງຄົນຕ່າງດ້າວທີ່ອາສັຍຢູ່ໃນບ້ານເມືອງຂອງພວກເຈົ້າຢຸດເຮັດວຽກທັງຫມົດ

11 ໃນຫົກມື້ນັ້ນພຣະຜູ້ເປັນເຈົ້າໄດ້ຊົງສ້າງຟ້າສວັນ ແຜ່ນດິນໂລກ ທະເລ ແລະສິ່ງສາຣະພັດທີ່ມີຢູ່ໃນສາມແຫ່ງນີ້ ແຕ່ໃນມື້ຖ້ວນເຈັດພຣະອົງໄດ້ຢຸດພັກ ດ້ວຍເຫດນີ້ ພຣະຜູ້ເປັນເຈົ້າຈຶ່ງໄດ້ອວຍພອນໃຫ້ມື້ຖ້ວນເຈັດເປັນວັນສິນບໍຣິສຸດສຳລັບພຣະອົງ

12 ຈົ່ງນັບຖືບິດາມານດາຂອງເຈົ້າ ເພື່ອເຈົ້າຈະມີອາຍຸຫມັ້ນຍືນຢູ່ໃນແຜ່ນດິນທີ່ພຣະຜູ້ເປັນເຈົ້າຂອງເຈົ້າໄດ້ມອບໃຫ້

13 ພວກເຈົ້າຢ່າຂ້າຄົນ

14 ຢ່າລ່ວງເກີນຜົວເມັຽຜູ້ອື່ນ

15 ຢ່າລັກຊັບ

16 ຢ່າເປັນພຍານເທັດໃສ່ຮ້າຍເພື່ອນບ້ານຂອງຕົນ

17 ຢ່າອິດສາຢາກໄດ້ເຮືອນຂອງຜູ້ອື່ນ ຢ່າອິດສາຢາກໄດ້ເມຍຫລືເມຍ ຢາກໄດ້ຂ້ອຍທາດ ຢາກໄດ້ງົວຄວາຍ ຢາກໄດ້ລໍ
ຫລືສິ່ງອື່ນໃດທີ່ເປັນຂອງຄົນອື່ນ"

**ຄວາມຢ້ານກົວຂອງປະຊາຊົນ**

(ພບຍ 5:22-33)

18 ເມື່ອປະຊາຊົນໄດ້ຍິນສຽງຟ້າຮ້ອງ ສຽງແກ ເຫັນຟ້າແມບເຫລື້ອມ ແລະເຫັນຄວັນໄຟພຸ່ງຂຶ້ນຈາກພູ ພວກເຂົາກໍຢ້ານ
ກົວຕົວສັ່ນ ແລະຢືນຢູ່ຫ່າງໄກ

19 ພວກເຂົາໄດ້ເວົ້າກັບໂມເຊວ່າ, "ເຊີນທ່ານເວົ້າເທີນ ພວກຂ້າພະເຈົ້າຈະຟັງ ແຕ່ຢ່າໃຫ້ພຣະເຈົ້າເວົ້າກັບພວກຂ້າພະ
ເຈົ້າ ຢ້ານວ່າຂ້າພະເຈົ້າຈະຕາຍ"

20 ໂມເຊຈຶ່ງເວົ້າກັບປະຊາຊົນວ່າ, "ຢ່າສູ່ຢ້ານ ພຣະເຈົ້າໄດ້ສະເດັດມາທົດສອບພວກເຈົ້າຊື່ໆດອກ ເພື່ອໃຫ້ພວກເຈົ້າ
ຢຳເກງພຣະອົງ ເພື່ອວ່າພວກເຈົ້າຈະບໍ່ທຳບາບອີກ"

21 ແຕ່ປະຊາຊົນກໍຍັງຢືນຢູ່ຫ່າງໄກຕໍ່ໄປ ມີແຕ່ໂມເຊເທົ່ານັ້ນທີ່ໄດ້ເຂົ້າໄປໃກ້ເມກອັນຕຶບບ່ອນພຣະເຈົ້າສະຖິດຢູ່

**ກົດໝາຍກ່ຽວກັບແທ່ນບູຊາ**

The Law concerning the Altar

22 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ໃຫ້ບອກຊາວອິສຣາເອນດັ່ງນີ້, ເຈົ້າທັງຫລາຍໄດ້ເຫັນແລ້ວວ່າ ພຣະຜູ້ເປັນເຈົ້າ
ໄດ້ເວົ້າກັບພວກເຈົ້າຈາກຟ້າສວັນ

23 ພວກເຈົ້າຢ່າເຮັດຮູບພຣະເງິນ ພຣະຄຳສຳລັບຂາບໄຫວ້ທຽບຄຽງກັບພຣະອົງ

24 ຈົ່ງເອົາດິນກໍ່ແທ່ນບູຊາສຳລັບພຣະອົງ ແລະເທິງແທ່ນນັ້ນຈົ່ງເອົາແກະ ຫລືງົວເປັນເຄື່ອງເຜົາບູຊາ ແລະເປັນເຄື່ອງ
ຖວາຍເພື່ອຄວາມສາມັກຄີ ໃນບ່ອນທີ່ພຣະອົງຊົງບອກໃຫ້ພວກເຈົ້າຂາບໄຫວ້ພຣະອົງນັ້ນ ພຣະອົງຈະມາຫາແລະ
ອວຍພອນພວກເຈົ້າ

25 ຖ້າພວກເຈົ້າກໍ່ແທ່ນບູຊາດ້ວຍຫີນສຳລັບພຣະອົງ ຢ່າໄດ້ກໍ່ດ້ວຍຫີນທີ່ຕັດຖູແລ້ວ ເພາະຖ້າພວກເຈົ້າເອົາຫີນທີ່ຕັດຖູ
ແລ້ວມາກໍ່ແທ່ນບູຊາ ຫີນນັ້ນກໍຈະໃຊ້ບໍ່ໄດ້ສຳລັບພຣະອົງ

26 ພວກເຈົ້າຢ່າເຮັດແທ່ນທີ່ມີຂັ້ນໄດ ເພາະວ່າຈະເປັນເຫດໃຫ້ພວກເຈົ້າເຜີຍຄວາມລັບໃສ່ແທ່ນນັ້ນ"

## 21 ການປະຕິບັດຕໍ່ທາດ

The Law concerning Slaves

(ພບຍ 15:12-18)

1 ຕໍ່ໄປນີ້ເປັນກົດໝາຍຊຶ່ງເຈົ້າຕ້ອງປະກາດໃຫ້ເຂົາທັງຫລາຍຮູ້ໄວ້

2 "ຖ້າເຈົ້າຊື້ທາດເປັນຄົນເຮັບເຣີ ເຂົາຈະຢູ່ຮັບໃຊ້ເຈົ້າຫົກປີ ໃນປີທີ່ເຈັດເຈົ້າຕ້ອງປ່ອຍເຂົາໃຫ້ເປັນອິສຣະ ໂດຍ ເຂົາບໍ່
ຕ້ອງຈ່າຍຫຍັງເລີຍ

3 ທາດຊຶ່ງໄດ້ມາແຕ່ຜູ້ດຽວຈົ່ງປ່ອຍເຂົາໄປແຕ່ຜູ້ດຽວ ຖ້າເຂົາມີພັຣຍາຕ້ອງປ່ອຍພັຣຍຂອງເຂົາໄປດ້ວຍ

4 ຖ້ານາຍຫາພັຣຍາໃຫ້ເຂົາ ແລະພັຣຍາໄດ້ເກີດລູກບໍ່ວ່າຊາຍ ຫລືຍິງກໍດີ ຍິງນັ້ນ ແລະລູກຂອງນາງຈະຕ້ອງເປັນຄົນ
ຂອງນາຍ ເຂົາຈະເປັນອິສຣະໄດ້ແຕ່ຕົວຄົນດຽວ

5 ຖ້າທາດນັ້ນມາກ່າວຢ່າງເປີດເຜີຍແລະບໍຣິສຸດໃຈວ່າ ຂ້າພະເຈົ້າຮັກນາຍຂອງຕົນ ຮັກພັຣຍາ ແລະລູກຂອງຂ້າພະ
ເຈົ້າ ແລະບໍ່ຢາກໜີໄປເປັນອິສຣະ

6 ເວລານັ້ນ ໃຫ້ນາຍພາທາດຜູ້ນັ້ນໄປເຝົ້າພຣະເຈົ້າ ຢູ່ທີ່ນັ້ນ ນາຍຈະໃຫ້ທາດຢືນແນບກັບປະຕູຫລືວົງປະຕູ ແລະບ່ອງ
ຫູໃຫ້ເຂົາ ແລ້ວເຂົາກໍຈະເປັນທາດຂອງນາຍຕລອດຊີວິດ

7 "ຖ້າຊາຍຄົນໃດຂາຍບຸດຍິງ ຂອງຕົນໄປເປັນທາສີ ຍິງຜູ້ນີ້ຈະບໍ່ໄດ້ເປັນອິສຣະເຫມືອນທາດ

8 ຖ້າຍິງນັ້ນບໍ່ເປັນທີ່ພໍໃຈຂອງນາຍທີ່ຮັບນາງໄວ້ ຕ້ອງຍອມໃຫ້ຄົນອື່ນໄຖ່ນາງໄປ ແຕ່ບໍ່ມີສິດຈະຂາຍຍິງນັ້ນໃຫ້ແກ່ຊາວຕ່າງປະເທດ ເພາະບໍ່ໄດ້ຊື່ສັດຕໍ່ຍິງນັ້ນແລ້ວ

9 ຖ້ານາຍຍົກຍິງນັ້ນໃຫ້ເປັນພັຣຍາລູກຊາຍຂອງຕົນ ກໍໃຫ້ເຂົາປະຕິບັດຕໍ່ຍິງນັ້ນດັ່ງເປັນບຸດຕຣີຂອງຕົນ

10 ຖ້າເຂົາຫາຍິງອື່ນມາເປັນພັຣຍາ ຢ່າໃຫ້ເຂົາລົດອາຫານເຄື່ອງນຸ່ງຖື ແລະສິດທິຢູ່ໃນລະດັບເດີມຕາມທີ່ນາງເຄີຍໄດ້ຮັບມາກ່ອນ

11 ຖ້າເຂົາບໍ່ໄດ້ກະທຳຕາມປະການໃດ ໃນສາມປະການນີ້ແກ່ນາງ ຍິງນັ້ນກໍຈະໄດ້ຮັບອິສຣະໂດຍບໍ່ຕ້ອງມີຄ່າໄຖ່ ບໍ່ຕ້ອງເສັຽເງິນ

**ກົດໝາຍກ່ຽວກັບການທາຣຸນ**

The Law concerning Violence

12 “ຜູ້ໃດທຸບຕີຄົນນຶ່ງໃຫ້ຕາຍ ຜູ້ນັ້ນຈຳຕ້ອງຮັບໂທດເຖິງຕາຍເໝືອນກັນ

13 ຖ້າຜູ້ໃດບໍ່ໄດ້ເຈຕນາຂ້າຄົນ ແຕ່ເຂົາຕາຍເພາະພຣະເຈົ້າຊົງປ່ອຍໃຫ້ຕາຍດ້ວຍມືຂອງຜູ້ນັ້ນ ເຮົາຈະຕັ້ງບ້ານນຶ່ງໄວ້ໃຫ້ເຂົາໜີໄປຢູ່ທີ່ນັ້ນ

14 ແຕ່ຖ້າຜູ້ໃດເຈຕນາຫັກຫລັງຂ້າເພື່ອນບ້ານ ກໍໃຫ້ດຶງຕົວເຂົາໄປຈາກແທ່ນບູຊາຂອງເຮົາເພື່ອລົງໂທດໃຫ້ເຖິງຕາຍ

15 ຜູ້ໃດທຸບຕີບິດາມານດາຂອງຕົນ ຜູ້ນັ້ນຈະຕ້ອງຖືກຮັບໂທດເຖິງຕາຍ

16 ຜູ້ໃດລັກຄົນໄປຂາຍກໍດີ ຫລືມີຜູ້ພົບເຫັນທີ່ຖືກລັກໄປຢູ່ໃນມືຂອງຜູ້ນັ້ນກໍດີ ຜູ້ລັກນັ້ນຈະຕ້ອງຖືກຮັບໂທດເຖິງຕາຍ

17 “ຜູ້ໃດກໍຕາມທີ່ສາບແຊ່ງບິດາມານດາຂອງຕົນ ຈະຕ້ອງໄດ້ຮັບໂທດເຖິງຕາຍ

18 “ຖ້າມີການຕົບຕີຕໍ່ສູ້ກັນ ແລະຝ່າຍນຶ່ງເອົາຫີນແກວ່ງຫລືຕີ ແຕ່ອີກຝ່າຍນຶ່ງບໍ່ເຖິງແກ່ຄວາມຕາຍ ພຽງແຕ່ເຈັບປ່ວຍຕ້ອງນອນພັກ

19 ຖ້າຜູ້ທີ່ຖືກເຈັບນັ້ນລຸກຂຶ້ນ ຖືໄມ້ເທົ້າຍ່າງອອກໄປໄດ້ອີກ ຜູ້ຕີນັ້ນກໍພົ້ນໂທດ ແຕ່ເຂົາຈະຕ້ອງເສັຽຄ່າປ່ວຍການ ແລະຄ່າຮັກສາບາດແຜຈົນຫາຍເປັນປົກກະຕິ

20 “ຖ້າຜູ້ໃດທຸບຕີທາດຊາຍຍິງຂອງຕົນດ້ວຍໄມ້ຈົນຕາຍຄາມື ຜູ້ນັ້ນຕ້ອງຖືກຮັບໂທດ

21 ຫາກວ່າທາດນັ້ນມີຊີວິດຕໍ່ໄປໄດ້ວັນນຶ່ງ ຫລືສອງວັນຈຶ່ງຕາຍ ນາຍກໍບໍ່ຕ້ອງຖືກຮັບໂທດ ເພາະທາດນັ້ນເປັນດັ່ງເງິນຂອງນາຍ

22 “ຖ້າມີຜູ້ຊາຍຕີກັນແລະບັງເອີນໄປຖືກຜູ້ຍິງຖືພາ ຈົນເປັນເຫດໃຫ້ລູກໃນທ້ອງຕາຍ ແຕ່ຍິງນັ້ນບໍ່ເປັນອັນຕະລາຍແຕ່ປະການໃດ ຜູ້ຕີນັ້ນຈະຕ້ອງຖືກປັບໄໝຕາມແຕ່ຜົວຂອງຍິງນັ້ນຮຽກຮ້ອງເອົາຈາກເຂົາ ແລະເຂົາຈະຕ້ອງເສັຽຕາມຜູ້ພິພາກສາຈະຕັດສິນ

23 ຖ້າຫາກວ່າເປັນເຫດໃຫ້ເກີດອັນຕະລາຍປະການໃດ ກໍໃຫ້ການລົງໂທດດັ່ງນີ້ ຊີວິດແທນຊີວິດ

24 ຕາແທນຕາ ແຂ້ວແທນແຂ້ວ ມືແທນມື ຕີນແທນຕີນ

25 ຮອຍໄຟໄໝ້ແທນຮອຍໄຟໄໝ້ ບາດແຜແທນບາດແຜ ຮອຍບວມຊ້ຳແທນຮອຍບວມຊ້ຳ

26 “ຖ້າຜູ້ໃດຕີໜ່ວຍຕາຂອງທາດຊາຍຍິງໃຫ້ບອດໄປ ເຂົາຕ້ອງປ່ອຍທາດນັ້ນໃຫ້ເປັນອິສຣະ ເທົ່າກັບເປັນການຈ່າຍຄ່າຕາຂອງເຂົາ

27 ຖ້າຜູ້ໃດເຮັດໃຫ້ແຂ້ວຂອງທາດຫັກໄປ ເຂົາຕ້ອງປ່ອຍທາດນັ້ນໃຫ້ເປັນອິສຣະ ເທົ່າກັບເປັນການຈ່າຍຄ່າແຂ້ວຂອງທາດຜູ້ນັ້ນ

**ກົດໝາຍກ່ຽວກັບຄວາມຮັບຜິດຊອບຂອງຜູ້ເປັນເຈົ້າຂອງ**

Laws concerning Property

28 “ຖ້າງົວເຖິກຊົນຊາຍຫລືຍິງເຖິງຕາຍ ຈົ່ງເອົາຫີນຄວ່າງໃສ່ງົວນັ້ນໃຫ້ຕາຍ ແລະຢ່າກິນຊີ້ນຂອງມັນ ແຕ່ເຈົ້າຂອງງົວຕົວນັ້ນບໍ່ມີໂທດ

29 ແຕ່ຖ້າງົວນັ້ນເຄີຍຊົນຄົນມາກ່ອນ ແລະມີຜູ້ມາເຕືອນໃຫ້ເຈົ້າຂອງຮູ້ ແຕ່ເຈົ້າຂອງບໍ່ໄດ້ກັກຂັງມັນໄວ້ ມັນຈຶ່ງໄດ້ຊົນຊາຍຫລືຍິງເຖິງຕາຍ ໃຫ້ເອົາຫີນຄວ່າງໃສ່ງົວນັ້ນເສັຽໃຫ້ຕາຍ ແລະໃຫ້ລົງໂທດເຈົ້າຂອງເຖິງຕາຍດ້ວຍ

30 ຖ້າຈະຮຽກຮ້ອງເອົາຄ່າໄຖ່ຈາກຜູ້ນັ້ນ ເຂົາຕ້ອງເສັຽຄ່າໄຖ່ແທນຊີວິດຂອງເຂົາຕາມທີ່ໄດ້ຮຽກຮ້ອງ

31 ຫາກງົວນັ້ນຊົນບຸດຊາຍແລະບຸດຍິງ ກໍຈົ່ງປັບໂທດຕາມກົດໝາຍຂໍ້ນີ້ເໝືອນກັນ

32 ຖ້າງົວນັ້ນຊົນທາດຊາຍຍິງຂອງຜູ້ໃດ ເຈົ້າຂອງງົວຕ້ອງໃຫ້ເງິນແກ່ນາຍຂອງທາດນັ້ນສາມສິບເຊເກລ ແລ້ວຕ້ອງເອົາຫີນຄວ່າງໃສ່ງົວນັ້ນໃຫ້ຕາຍເສັຽດ້ວຍ

33 "ຖ້າຜູ້ໃດເປີດບໍ່ນ້ຳ ຫລືຂຸດບໍ່ ແຕ່ບໍ່ໄດ້ປິດໄວ້ ແລ້ວມີງົວ ຫລືລໍຕົກລົງໄປຕາຍໃນບໍ່ນັ້ນ

34 ເຈົ້າຂອງບໍ່ນ້ຳຕ້ອງໃຫ້ຄ່າຊົດໃຊ້ ເຂົາຕ້ອງເສັຽເງິນຄ່າສັດນັ້ນໃຫ້ແກ່ເຈົ້າຂອງ ຊາກສັດທີ່ຕາຍນັ້ນຈະຕົກເປັນຂອງເຈົ້າຂອງບໍ່ນ້ຳ

35 "ຖ້າງົວຂອງຜູ້ໃດຊົນງົວຂອງຜູ້ອື່ນໃຫ້ຕາຍ ເຂົາຕ້ອງຂາຍງົວທີ່ເປັນຢູ່ແລ້ວມາແບ່ງເງິນກັນ ແລະງົວທີ່ຕາຍນັ້ນໃຫ້ແບ່ງກັນດ້ວຍ

36 ຫລືຖ້າຮູ້ແລ້ວວ່າ ງົວນັ້ນເຄີຍຊົນມາກ່ອນ ແຕ່ເຈົ້າຂອງບໍ່ໄດ້ກັກຂັງໄວ້ ເຈົ້າຂອງຕ້ອງໃຊ້ງົວແທນງົວ ແລະງົວທີ່ຕາຍນັ້ນກໍຕົກເປັນຂອງຕົນ

## 22 ກົດໝາຍກ່ຽວກັບການໃຊ້ຄືນ

Law of Restitution

1 "ຖ້າຜູ້ໃດລັກງົວຫລືແກະໄປຂ້າຫລືໄປຂາຍ ໃຫ້ຜູ້ນັ້ນໃຊ້ຄືນງົວຫ້າໂຕແທນງົວໂຕນຶ່ງ ແລະໃຊ້ແກະສີ່ໂຕແທນແກະໂຕນຶ່ງ

2 "ຖ້າຜູ້ໃດເຫັນຂະໂມຍບຸກເຂົ້າໄປໃນເຮືອນ ແລ້ວຕີຂະໂມຍນັ້ນຕາຍ ເຂົາບໍ່ມີໂທດເຖິງຕາຍເພາະການຕີຄົນນັ້ນ

3 ຖ້າດວງຕາເວັນຂຶ້ນແລ້ວ ຜູ້ຕີຈະມີໂທດເຖິງຕາຍ ແຕ່ຜູ້ຮ້າຍນັ້ນຕ້ອງໃຫ້ຄ່າຊົດໃຊ້ ຖ້າເຂົາບໍ່ມີອັນໃດຈະໃຊ້ໃຫ້ ຕ້ອງຂາຍເຂົາເປັນຄ່າຂອງທີ່ລັກໄປນັ້ນ

4 ຖ້າຈັບຂອງທີ່ລັກໄປນັ້ນໄດ້ຢູ່ໃນມືຂອງເຂົາ ຈະເປັນງົວກໍດີ ຫລືລໍກໍດີ ຫລືແກະກໍດີ ຊຶ່ງຍັງເປັນຢູ່ ຂະໂມຍນັ້ນຕ້ອງໃຫ້ຄ່າຊົດໃຊ້ເປັນສອງເທົ່າ

5 "ຜູ້ໃດປ່ອຍໃຫ້ສັດກິນຫຍ້າຢູ່ໃນນາຫລືຢູ່ໃນສວນອະງຸ່ນ ແລະມັນຫລົງຝູງໄປກິນພືນລະປູກທີ່ເກີດໃນນາຂອງຄົນອື່ນ ເຂົາຕ້ອງໃຫ້ຄ່າຊົດໃຊ້ ໂດຍໃຫ້ຂອງດີທີ່ສຸດໃນນາຂອງຕົນ ແລະຂອງທີ່ດີທີ່ສຸດໃນສວນອະງຸ່ນຂອງຕົນເປັນຄ່າເສັຽຫາຍ

6 "ຖ້າຈູດໄຟທີ່ໄຮ່ນາຂອງຕົນ ແລະໄຟລາມໄປຕິດກອງເຂົ້າ ຫລືຕິດຕົ້ນເຂົ້າຊຶ່ງບໍ່ໄດ້ກ່ຽວ ຫລືຕິດທົ່ງນາໃຫ້ໄໝ້ເສັຽຜູ້ທີ່ຈູດໄຟນັ້ນຕ້ອງໃຊ້ຄ່າເສັຽຫາຍເຕັມຈຳນວນ

7 "ຖ້າຜູ້ໃດຝາກເງິນ ຫລືສິ່ງຂອງໄວ້ກັບເພື່ອນບ້ານ ແລ້ວຂອງນັ້ນຖືກຂະໂມຍລັກໄປຈາກເຮືອນຜູ້ນັ້ນ ຖ້າຈັບຂະໂມຍໄດ້ຂະໂມຍຕ້ອງໃຊ້ແທນເປັນສອງເທົ່າ

8 ຖ້າຈັບຂະໂມຍບໍ່ໄດ້ ຈົ່ງໃຫ້ເຈົ້າຂອງເຮືອນມາເຝົ້າພຣະເຈົ້າເພື່ອຈະເບິ່ງວ່າມືຂອງຕົນເອງໄດ້ລັກສິ່ງຂອງໆເພື່ອນບ້ານນັ້ນຫລືບໍ່

9 "ໃນຄະດີຟ້ອງຮ້ອງທຸກຢ່າງ ຈະເປັນເຣື່ອງງົວ ລໍ ແກະ ຫລືເສື້ອຜ້າ ຫລືເຣື່ອງສິ່ງຂອງໃດໆທີ່ຫາຍໄປ ຖ້າມີຄົນມາອ້າງວ່າສິ່ງນີ້ສິ່ງນັ້ນເປັນຂອງຕົນ ຈົ່ງນຳຄະດີຂອງຄູ່ຄວາມນັ້ນໄປເຝົ້າພຣະເຈົ້າ ພຣະເຈົ້າຊົງຕັດສິນວ່າຜູ້ໃດຜິດ ຜູ້ນັ້ນຈະຕ້ອງໃຊ້ຄ່າຊົດໃຊ້ເປັນສອງເທົ່າ

10 "ຖ້າຜູ້ໃດຝາກລໍ ຫລືງົວ ຫລືແກະ ຫລືສັດໃດໆໄວ້ກັບເພື່ອນບ້ານ ແລະສັດນັ້ນເກີດຕາຍລົງ ຫລືເປັນອັນຕະລາຍຫລືມີຜູ້ໄລ່ຕ້ອນໄປຈາກບ້ານນັ້ນໂດຍບໍ່ມີໃຜເຫັນ

11 ຕ້ອງໃຫ້ຜູ້ຮັບຝາກນັ້ນສາບານຕົວຕໍ່ເພື່ອນບ້ານ ຕໍ່ພຣະພັກພຣະເຈົ້າ ເພື່ອເບິ່ງວ່າມີຂອງຂອງເພື່ອນບ້ານທີ່ເຂົາລັກ ນັ້ນຈິງຫລືບໍ່ ແລ້ວເຈົ້າຂອງນັ້ນຈະຕ້ອງຍິນຍອມ ຜູ້ຮັບຝາກນັ້ນບໍ່ຕ້ອງໃຫ້ຄ່າຊົດໃຊ້

12 ແຕ່ຖ້າສັດນັ້ນຖືກລັກໄປ ຂນະເມື່ອຜູ້ຮັບຝາກຢູ່ດ້ວຍ ຜູ້ຮັບຝາກຕ້ອງໃຫ້ຄ່າຊົດໃຊ້ແກ່ເຈົ້າຂອງ

13 ຖ້າມີສັດຮ້າຍມາກັດສັດນັ້ນຕາຍ ຈົ່ງເອົາຊາກມາໃຫ້ກວດເບິ່ງເປັນຫລັກຖານ ແລ້ວຜູ້ຮັບຝາກບໍ່ຕ້ອງໃຫ້ຄ່າຊົດໃຊ້ ແທນສັດທີ່  ຖືກກັດນັ້ນ

14 "ຖ້າຜູ້ໃດຢືມສິ່ງໃດໆໄປຈາກເພື່ອນບ້ານ ແລ້ວເກີດເປັນອັນຕະຣາຍ ຫລືຕາຍລະຫວ່າງເວລາທີ່ເຈົ້າຂອງບໍ່ຢູ່ ຜູ້ຢືມ ຕ້ອງໃຫ້ຄ່າຊົດໃຊ້ເຕັມຕາມຈຳນວນ

15 ຖ້າເຈົ້າຂອງຢູ່ດ້ວຍ ຜູ້ຢືມບໍ່ຕ້ອງໃຫ້ຄ່າຊົດໃຊ້ ຖ້າເປັນຂອງເຊົ່າໃຫ້ຄິດແຕ່ຄ່າເຊົ່າເທົ່ານັ້ນ

**ກົດຫມາຍກ່ຽວກັບຈະຣິຍະທັມ ແລະສາສນາ**

Social and Religions Laws

16 " ຖ້າຊາຍຄົນນຶ່ງຫລອກລວງຍິງສາວພົມມະຈາຣີທີ່ຍັງບໍ່ທັນມີຄູ່ຫມັ້ນແລະນອນຮ່ວມກັບຍິງນັ້ນ ຜູ້ນັ້ນຕ້ອງເສັຽເງິນ ສິນສອດ ແລະຕ້ອງຮັບຍິງນັ້ນເປັນພັຣຍາຂອງຕົນ

17 ຖ້າບິດາບໍ່ຍອມຢ່າງເດັດຂາດ ທີ່ຈະຍົກຍິງນັ້ນໃຫ້ເປັນພັຣຍາ ເຂົາກໍຕ້ອງເສັຽເງິນເທົ່າສິນສອດຕາມທັມນຽມສູ່ຂໍຍິງ ພົມມະຈາຣີນັ້ນເຫມືອນກັນ

18 "ສຳລັບຍິງແມ່ມົດ ເຈົ້າຢ່າໃຫ້ລອດຊີວິດຢູ່ເລີຍ

19 "ຜູ້ໃດຮ່ວມປະເວນີກັບສັດ ຜູ້ນັ້ນຈະຕ້ອງຖືກລົງໂທດເຖິງຕາຍ

20 "ຜູ້ໃດຖວາຍບູຊາແດ່ພຣະຕ່າງໆ ເວັ້ນແຕ່ພຣະເຈົ້າອົງດຽວ ຜູ້ນັ້ນຕ້ອງຖືກປັບໂທດເຖິງຕາຍທີ່ດຽວ

21 "ເຈົ້າຢ່າບີບບັງຄັບຫລືຂົ່ມເຫັງຄົນຕ່າງດ້າວເລີຍ ເພາະເຈົ້າທັງຫລາຍເຄີຍເປັນຄົນຕ່າງດ້າງຢູ່ໃນປະເທດເອຢິບ

22 ຢ່າຂົ່ມເຫັງຍິງຫມ້າຍຫລືລູກກຳພ້າ

23 ຖ້າເຈົ້າຂົ່ມເຫັງເຂົາໂດຍວິທີໃດກໍຕາມ ແລະເຂົາຮ້ອງທຸກເຖິງເຮົາ ເຮົາຈະຟັງຄຳຮ້ອງທຸກຂອງເຂົາແນ່ນອນ

24 ຄວາມໂກດຂອງເຮົາຈະພຸ່ງຂຶ້ນ ແລະເຮົາຈະປະຫານເຈົ້າດ້ວຍດາບ ພັຣຍາຂອງເຈົ້າຈະຕ້ອງເປັນຫມ້າຍ ແລະບຸດຂ ອງເຈົ້າຈະຕ້ອງເປັນກຳພ້າ

25 "ຖ້າເຈົ້າໃຫ້ປະຊາຊົນຂອງເຮົາຄົນໃດທີ່ເປັນຄົນຍາກຈົນ ແລະຢູ່ກັບເຈົ້າຢືມເງິນໄປ ຢ່າຖືວ່າຕົນເປັນເຈົ້າຫນີ້ ແລະ ຢ່າຄິດດອກເບັ້ຽຈາກເຂົາ

26 ຖ້າເຈົ້າໄດ້ຮັບເສື້ອຄຸມຂອງເພື່ອນບ້ານໄວ້ເປັນຂອງປະກັນ ຈົ່ງຄືນຂອງນັ້ນໃຫ້ເຂົາກ່ອນຕາເວັນຕົກດິນ

27 ເພາະເຂົາອາດມີເສື້ອຄຸມຕົວນັ້ນຕົວດຽວເປັນເຄື່ອງປົກຄຸມຮ່າງກາຍ ບໍ່ດັ່ງນັ້ນເວລານອນເຂົາຈະເອົາອັນໃດຫົ່ມ ເມື່ອເຂົາທູນຮ້ອງທຸກຕໍ່ເຮົາ ເຮົາຈະສະດັບຟັງ ເພາະເຮົາເປັນຜູ້ມີເມດຕາກະຣຸນາ

28 "ຢ່າດ່າພຣະເຈົ້າ ຫລືສາບແຊ່ງຜູ້ປົກຄອງຊົນຊາດຂອງເຈົ້າເລີຍ

29 "ຢ່າຜັດວັນທີ່ຈະນຳພືດຜົນອັນອຸດົມຂອງເຈົ້າ ແລະນ້ຳຜົນລະໄມ້ຕ່າງໆ ມາຖວາຍພຣະເຈົ້າ ຢ່າຊັກຊ້າເລີຍ "ຈົ່ງ ຖວາຍບຸດຫົວປີຂອງເຈົ້າໃຫ້ແກ່ເຮົາ

30 ສຳລັບງົວ ແລະແບ້ ແກະຂອງເຈົ້າ ຈົ່ງເຮັດດັ່ງນັ້ນເຫມືອນກັນ ໃຫ້ລູກມັນຢູ່ກັບແມ່ເຈັດວັນ ເຖິງວັນທີແປດຈົ່ງພາມາ ຖວາຍແກ່ເຮົາ

31 "ເຈົ້າທັງຫລາຍເປັນຄົນບໍຣິສຸດ ອຸທິດແກ່ເຮົາ ເຫດສະນັ້ນເນື້ອສັດທີ່ຖືກກັດຕາຍໃນທົ່ງນາ ເຈົ້າຢ່າກິນເລີຍ ຈົ່ງຖິ້ມ ໃຫ້ຫມາກິນເສັຽ

## 23 ຄວາມຍຸດຕິທັມແລະຄວາມທ່ຽງທັມ

Justice for All

1 “ຢ່ານຳເຣື່ອງບໍ່ຈິງໄປເລົ່າຕໍ່ໆກັນ ຢ່າຮ່ວມໃຈເປັນພຍານໃຈຮ້າຍກັບຄົນຊົ່ວ

2 ຢ່າເຮັດຊົ່ວຕາມຢ່າງຄົນຈຳນວນຫລາຍທີ່ເຂົາເຮັດກັນນັ້ນເລີຍ ຢ່າອ້າງພຍານລຳອຽງເຂົ້າຂ້າງຄົນໝູ່ຫລາຍ ຈະເຮັດໃຫ້ຂາດຄວາມຍຸດຕິທັມໄປ

3 ຢ່າລຳອຽງເຂົ້າຂ້າງຄົນຈົນໃນຄະດີຂອງເຂົາ

4 “ຖ້າເຈົ້າພົບງົວ ຫລືລໍຂອງສັດຕຣູຫລົງມາ ຈົ່ງພາໄປສົ່ງຄືນໃຫ້ເຈົ້າຂອງໆ ມັນ

5 ຖ້າເຫັນລໍຂອງຜູ້ທີ່ກຽດຊັງເຈົ້າລົ້ມລົງເພາະບັນທຸກຂອງໜັກ ຢ່າໄດ້ເມີນເສີຍເສັຽ ຈົ່ງຊ່ອຍເຂົາຍົກມັນຂຶ້ນ

6 “ເຈົ້າຢ່າບິດເບືອນຄຳພິພາກສາ ໃຫ້ຜິດໄປຈາກຄວາມຍຸດຕິທັມທີ່ຄົນຈົນຄວນໄດ້ຮັບໃນຄະດີຂອງເຂົາ

7 ເຈົ້າຈົ່ງຫລີກໃຫ້ຫ່າງໄກຈາກການໃສ່ຄວາມຄົນອື່ນ ຢ່າປະຫານຊີວິດຄົນທີ່ປາສຈາກຄວາມຜິດ ແລະຄົນສິນທັມເພາະເຮົາຈະບໍ່ຍົກໂທດໃຫ້ຄົນອະທັມ

8 ຢ່າຮັບສິນບົນເລີຍ ເພາະວ່າສິນບົນເຮັດໃຫ້ຄົນຕາດີກາຍເປັນຄົນຕາບອດໄປ ແລະອາດພິກຄະດີຂອງຄົນຊອບທັມກໍເປັນໄດ້

9 “ເຈົ້າຢ່າຂົ່ມເຫັງຄົນຕ່າງດ້າວ ເພາະເຈົ້າຮູ້ຈັກໃຈຄົນຕ່າງດ້າວແລ້ວ ເພາະວ່າເຈົ້າທັງຫລາຍກໍເຄີຍເປັນຄົນຕ່າງດ້າວໃນປະເທດເອຢິບມາກ່ອນ

**ປີ ແລະວັນສະບາໂຕ**

Sabbatical Year and Sabbath

10 “ຈົ່ງຫວ່ານພືດແລະເກັບກ່ຽວຜົນລະປູກໃນນາຂອງເຈົ້າຕລອດຫົກປີ

11 ແຕ່ປີທີເຈັດນັ້ນຈົ່ງງົດເສັຽ ປ່ອຍໃຫ້ນານັ້ນວ່າງຢູ່ ເພື່ອໃຫ້ຄົນຍາກຈົນໃນຊົນຊາດຂອງເຈົ້າເກັບກິນ ສ່ວນທີ່ເຫລືອນອກນັ້ນກໍໃຫ້ສັດປ່າກິນ ສ່ວນສວນອະງຸ່ນ ແລະສວນໝາກກອກເທດເຈົ້າຈົ່ງກະທຳເຊັ່ນດຽວກັນ

12 ຈົ່ງເຮັດການງານຂອງເຈົ້າຫົກວັນ ແຕ່ໃນວັນທີ່ເຈັດນັ້ນ ຈົ່ງຢຸດງານ ເພື່ອງົວ ລໍ ຂອງເຈົ້າຈະໄດ້ພັກ ແລະລູກຊາຍທາສີຂອງເຈົ້າ ກັບຄົນຕ່າງດ້າວຈະໄດ້ພັກຜ່ອນ

13 ສິ່ງທັງປວງທີ່ເຮົາສັ່ງເຈົ້າໄວ້ນັ້ນຈົ່ງລະວັງຖືໃຫ້ດີ ແລະຢ່າອອກຊື່ພຣະອື່ນເລີຍ ຢ່າໃຫ້ໄດ້ຍິນຊື່ຂອງພຣະເຫລົ່ານັ້ນອອກຈາກປາກຂອງເຈົ້າ

**ເທສການສຳຄັນສາມປາງ**

The Annual Festivals

(ອພຍ 34:18-24; ພບຍ 16:1-17)

14 “ຈົ່ງຖືເທສການຖວາຍແກ່ເຮົາສາມປາງຕໍ່ປີ

15 ຈົ່ງຖືເທສການຮັບປະທານເຂົ້າຈີ່ບໍ່ມີເຊື້ອຕາມເວລາທີ່ກຳໜົດໄວ້ໃນເດືອນອາບິບ ອັນເປັນເດືອນທີ່ເຮົາໄດ້ບັນຊາໄວ້ ເຈົ້າຈົ່ງກິນເຂົ້າຈີ່ບໍ່ມີເຊື້ອແປ້ງໃນເຈັດວັນ ຕາມທີ່ເຮົາສັ່ງເຈົ້າໄວ້ແລ້ວ ເພາະໃນເດືອນນັ້ນເຈົ້າອອກຈາກເອຢິບ ຢ່າເຂົ້າມານະມັສການເຮົາໂດຍບໍ່ມີເຄື່ອງຖວາຍ

16 “ຈົ່ງຖືເທສການລ້ຽງສະຫລອງການເກັບກ່ຽວ ຖວາຍພືດຜົນແຣກທີ່ເກີດຈາກແຮງງານຂອງເຈົ້າ ຊຶ່ງເຈົ້າໄດ້ຫວ່ານພືດລົງໃນນາ ເຈົ້າຈົ່ງຖືເທສການລ້ຽງສະຫລອງການເກັບພືດຜົນປາຍປີ ເມື່ອເຈົ້າເກັບພືດຜົນຈາກທົ່ງນາອັນເປັນຜົນງານຂອງເຈົ້າ

17 ໃຫ້ພວກຜູ້ຊາຍເຂົ້າເຝົ້າພຣະເຈົ້າປີລະສາມເທື່ອ

18 “ຢ່າຖວາຍເລືອດຈາກເຄື່ອງບູຊາຂອງເຮົາ ພ້ອມກັບເຂົ້າຈີ່ມີເຊື້ອ ຫລືປ່ອຍໃຫ້ມີໄຂມັນໃນການລ້ຽງຂອງເຮົາເຫລືອຢູ່ຈົນຮອດຮຸ່ງເຊົ້າ

19 "ພືດຜົນອັນດີເລີດຊຶ່ງໄດ້ເກັບຄັ້ງແຣກຈາກໄຮ່ນາຂອງເຈົ້ານັ້ນ ຈົ່ງນຳມາຖວາຍໃນພຣະວິຫານພຣະຜູ້ເປັນເຈົ້າ ພຣະ
ເຈົ້າຂອງເຈົ້າ

**ທູດສວັນຮັບປັນຊາໃຫ້ມານຳອິສຣາເອນ**

The conquest of Canaan Promised

20 "ເບິ່ງແມ່ ເຮົາໃຊ້ທູດຂອງເຮົາເດີນນຳຫນ້າພວກເຈົ້າ ເພື່ອຄອຍລະວັງຮັກສາພວກເຈົ້າຕາມທາງ ນຳໄປເຖິງທີ່ຊຶ່ງເຮົາ
ໄດ້ຕຽມໄວ້
21 ຈົ່ງເອົາໃຈໃສ່ ຟັງຄຳເວົ້າຂອງທູດນັ້ນ ແລະເຊື່ອຟັງຄຳຂອງເຂົາ ຢ່າຂັດຂືນເຂົາ ເພາະເຂົາຈະບໍ່ຍົກໂທດໃຫ້ເຈົ້າເລີຍ
ດ້ວຍວ່າເຂົາກະທຳໃນນາມຂອງເຮົາ
22 "ຖ້າເຈົ້າທັງຫລາຍຟັງສຽງຂອງເຂົາຈິງນັ້ນ ແລະທຳທຸກສິ່ງຕາມທີ່ເຮົາສັ່ງໄວ້ ເຮົາຈະເປັນສັດຕຣູຕໍ່ສັດຕຣູຂອງພວກ
ເຈົ້າ ແລະເປັນປໍຣະປັກຕໍ່ປໍຣະປັກຂອງພວກເຈົ້າ
23 "ເມື່ອທູດຂອງເຮົາໄປຂ້າງຫນ້າພວກເຈົ້າ ແລະນຳພວກເຈົ້າໄປເຖິງຄົນອາໂມຣິດ ຄົນຮິດຕີ ຄົນເປຣີສຊີ ຄົນການາ
ອານ ຄົນຮີວີ ແລະຄົນເຢບຸສ ແລ້ວເຮົາທຳລາຍລ້າງຄົນເຫລົ່ານັ້ນເສັຽ
24 ຢ່າຂາບໄຫວ້ພຣະຂອງເຂົາ ຫລືບົວລະບັດ ຫລືທຳຕາມແບບຢ່າງທີ່ພວກເຂົາກະທຳ ແຕ່ຈົ່ງທຳລາຍຮູບໂຄຣົບຂອງ
ເຂົາ ແລະທຸບເສົາສັກສິດຂອງເຂົາເສັຽໃຫ້ແຫລກລະອຽດ
25 ຈົ່ງບົວລະບັດພຣະເຈົ້າຂອງເຈົ້າ ແລ້ວພຣະອົງຈະຊົງອວຍພອນແກ່ອາຫານແລະນ້ຳຂອງເຈົ້າ ເຮົາຈະບັນດານໃຫ້
ໂຣກຕ່າງໆຫາຍໄປຈາກຖ້າມກາງພວກເຈົ້າ
26 ຈະບໍ່ມີການແທ້ງລູກ ຫລືເປັນຫມັນໃນດິນແດນຂອງເຈົ້າ ເຮົາຈະໃຫ້ເຈົ້າມີອາຍຸຍືນນານ
27 ເຮົາຈະບັນດານໃຫ້ເກີດຄວາມສຍົດສຍອງຂຶ້ນກ່ອນຫນ້າພວກເຈົ້າຈະໄປເຖິງຊາວເມືອງທັງປວງທີ່ພວກເຈົ້າໄປປະ
ເຊີນຫນ້ານັ້ນ ເຮົາຈະທຳໃຫ້ເກີດຄວາມໂກລາຫົນ ເຮົາຈະໃຫ້ສັດຕຣູທັງປວງຫັນຫລັງຫນີພວກເຈົ້າ
28 ເຮົາຈະໃຊ້ໃຫ້ຝູງຕໍ່ລ່ວງຫນ້າໄປກ່ອນພວກເຈົ້າ ຈະຂັບໄລ່ຄົນຮີວີ ຄົນການາອານ ແລະຄົນຮິດຕີໄປໃຫ້ພົ້ນຫນ້າ
ພວກເຈົ້າ
29 ເຮົາຈະບໍ່ໄລ່ພວກເຂົາໄປໃຫ້ພົ້ນຫນ້າພວກເຈົ້າໃນໄລຍະປີດຽວ ຢ້ານວ່າແຜ່ນດິນຈະວ່າງເປົ່າ ແລະສັດປ່າຈະທະວີ
ຈຳນວນຂຶ້ນຕໍ່ສູ້ກັບພວກເຈົ້າ
30 ແຕ່ເຮົາຈະໄລ່ເຂົາໄປໃຫ້ພົ້ນຫນ້າພວກເຈົ້າເທື່ອລະເລັກລະນ້ອຍຈົນພວກເຈົ້າທະວີຈຳນວນມາກຂຶ້ນ ແລ້ວໄດ້ຮັບ
ມອບດິນແດນ ນັ້ນເປັນກຳມະສິດ
31 ເຮົາຈະກຳນົດເຂດແດນຂອງພວກເຈົ້າໄວ້ຕັ້ງແຕ່ທະເລແດງຈົນເຖິງທະເລຂອງຊາວຟີລິສຕິນ ຕັ້ງແຕ່ຖິ່ນກັນດານຈົນ
ເຖິງແມ່ນ້ຳເອີຟຣາດ ເພາະເຮົາຈະມອບຊາວເມືອງນັ້ນໄວ້ໃນມືຂອງພວກເຈົ້າ ໃຫ້ພວກເຈົ້າໄລ່ເຂົາໄປເສັຽໃຫ້ພົ້ນ
32 ພວກເຈົ້າຢ່າເຮັດພັນທະສັນຍາກັບເຂົາ ຫລືກັບພຣະຂອງເຂົາເລີຍ
33 ເຂົາຈະອາສັຍໃນດິນແດນຂອງເຈົ້າບໍ່ໄດ້ ຢ້ານວ່າເຂົາຈະຊັກຈູງໃຫ້ເຈົ້າກະທຳບາບຕໍ່ເຮົາ ເພາະວ່າຖ້າພວກເຈົ້າບົວ
ລະບັດພຣະຂອງເຂົາ ເຣື່ອງນີ້ຈະເປັນບ້ວງແຮ້ວດັກເຈົ້າເປັນແນ່"

## 24 ຊົງໃຫ້ສັດຍາບັນຄຳຫມັ້ນສັນຍາ

The Blood of the Covenant

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ, "ເຈົ້າກັບອາໂຣນ ນາດາບ ອາບີຮູ ແລະພວກຫົວຫນ້າເຈັດສິບຄົນຂອງຊາວອິ
ສຣາເອນ ຈົ່ງຂຶ້ນມາຫາເຮົາເທິງພູ ໃຫ້ຂາບໄຫວ້ເຮົາຢູ່ໃນລະຍະໄກ
2 ໃຫ້ເຈົ້າຄົນດຽວເຂົ້າມາໃກ້ເຮົາ ຄົນອື່ນໆຢ່າເຂົ້າມາໃກ້ ແລະຢ່າໃຫ້ປະຊາຊົນຂຶ້ນມາກັບເຈົ້າເລີຍ"

3 ໂມເຊຈຶ່ງນຳຄຳສັ່ງກັບກົດຫມາຍທັງຫມົດຂອງພຣະຜູ້ເປັນເຈົ້າມາຊີ້ແຈງໃຫ້ປະຊາຊົນຊາບ ປະຊາຊົນທັງຫມົດໄດ້
ຕອບເປັນສຽງດຽວກັນວ່າ “ຖ້ອຍຄຳທັງຫມົດທີ່ພຣະຜູ້ເປັນເຈົ້າໄດ້ຊົງສັ່ງນັ້ນ ພວກເຮົາຈະທຳຕາມ” ໂມເຊໄດ້ຈາລຶກ
ຂໍ້ຄຳສັ່ງທັງຫມົດຂອງພຣະຜູ້ເປັນເຈົ້າໄວ້
4 ຕອນເຊົ້າມືດຂອງມື້ຕໍ່ມາ ໂມເຊໄດ້ສ້າງແທ່ນບູຊາໄວ້ທີ່ຕີນພູ ແລະໄດ້ຕັ້ງຫີນສິບສອງກ້ອນຕາມຈຳນວນຕະກູນ
ຂອງອິສຣາເອນໄວ້ເປັນອະນຸສອນ
5 ຕໍ່ມາ ໂມເຊໄດ້ໃຊ້ພວກຄົນຫນຸ່ມຊາວອິສຣາເອນຖວາຍເຄື່ອງເຜົາບູຊາ ແລະເຜົາງົວຖວາຍເພື່ອຄວາມສາມັກຄີແດ່
ພຣະຜູ້ເປັນເຈົ້າ
6 ໂມເຊໄດ້ແບ່ງເລືອດງົວເຄິ່ງນຶ່ງໄວ້ໃນຊາມ ອີກເຄິ່ງນຶ່ງໄດ້ຫວົດໃສ່ແທ່ນບູຊາ
7 ແລ້ວທ່ານໄດ້ອ່ານຫນັງສືຄຳຫມັ້ນສັນຍາດ້ວຍສຽງອັນດັງຕໍ່ຫນ້າປະຊາຊົນ ຜູ້ຊຶ່ງເວົ້າວ່າ, “ພວກເຮົາຈະເຊື່ອຟັງແລະ
ທຳຕາມທຸກຢ່າງທີ່ພຣະຜູ້ເປັນເຈົ້າຊົງສັ່ງ”
8 ຂນະນັ້ນ ໂມເຊໄດ້ເອົາເລືອດໃນຊາມຫວົດໃສ່ປະຊາຊົນແລະເວົ້າວ່າ, “ນີ້ແມ່ນເລືອດແຫ່ງຄຳຫມັ້ນສັນຍາທີ່ຊົງໃຫ້
ສັຕຍາບັນແລ້ວ ພຣະຜູ້ເປັນເຈົ້າຊົງຕັ້ງຄຳຫມັ້ນສັນຍາດ້ວຍການໃຫ້ຄຳສັ່ງຂອງພຣະອົງ”

On the Mountain with God

9 ໂມເຊ ອາໂຣນ ນາດາບ ອາບີຮູ ແລະພວກຫົວຫນ້າເຈັດສິບຄົນຂອງຊາວອິສຣາເອນໄດ້ຂຶ້ນໄປເທິງພູ
10 ພວກເຂົາໄດ້ເຫັນພຣະເຈົ້າຂອງອິສຣາເອນ ຢູ່ລຸ່ມພຣະບາດຂອງພຣະອົງມີສິ່ງນຶ່ງເບິ່ງເຫມືອນແກ້ວໄພທູນ ມີສີແຈ່ມ
ໃສເຫມືອນ ກັບທ້ອງຟ້າ
11 ພຣະອົງບໍ່ໄດ້ທຳຮ້າຍບັນດາຫົວຫນ້າຂອງຊາວອິສຣາເອນ ພວກເຂົາໄດ້ເຫັນພຣະເຈົ້າ ແຕ່ຍັງມີຊີວິດແລະກິນດື່ມຢູ່
ຕໍ່ໄປ

**ໂມເຊເທິງພູຊີນາອີ**

12 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ, “ຈົ່ງຂຶ້ນມາຫາເຮົາເທິງພູ ແລະພັກຢູ່ທີ່ນີ້ ເຮົາຈະໃຫ້ແຜ່ນຫີນທີ່ມີຂໍ້ພຣະທັມ
ແລະຂໍ້ບັນຍັດແກ່ເຈົ້າ ຊຶ່ງເຮົາໄດ້ຈາລຶກໄວ້ເພື່ອສອນປະຊາຊົນ”
13 ໂມເຊຈຶ່ງຕຽມຕົວຂຶ້ນໄປເທິງພູຂອງພຣະເຈົ້າພ້ອມກັບໂຢຊວຍຄົນໃຊ້ຂອງຕົນ
14 ໂມເຊໄດ້ເວົ້າກັບພວກຫົວຫນ້າວ່າ, “ຈົ່ງລໍຖ້າພວກຂ້າພະເຈົ້າຢູ່ທີ່ນີ້ຈົນເທົ່າກັບມາ ອາໂຣນກັບຮູເຣໄດ້ຢູ່ນຳພວກ
ທ່ານ ຖ້າມີເຣື່ອງຫຍັງເກີດຂຶ້ນກໍໃຫ້ໄປຫາທ່ານທັງສອງນີ້ເດີ”
15 ໂມເຊໄດ້ຂຶ້ນໄປເທິງພູ ແລະມີເມກປົກຫຸ້ມພູນັ້ນຢູ່
16 ພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າໄດ້ລົງມາເທິງພູຊີນາອີ ເມກໄດ້ປົກຫຸ້ມຢູ່ເປັນເວລາຫົກວັນ ໃນ
ວັນຖ້ວນເຈັດພຣະຜູ້ເປັນເຈົ້າໄດ້ຊົງເອີ້ນໂມເຊມາຈາກກາງເມກ
17 ຊາວອິສຣາເອນໄດ້ເຫັນພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ຄືເຫັນເປັນເຫມືອນແປວໄຟລຸກໄຫມ້ຢູ່ເທິງ
ຈອມພູ
18 ໂມເຊໄດ້ເຂົ້າໄປໃນເມກ ແລະຂຶ້ນໄປເທິງພູ ແລ້ວໄດ້ຢູ່ທີ່ນັ້ນເປັນເວລາສີ່ສິບມື້ສີ່ສິບຄືນ

## 25 ເຄື່ອງຖວາຍສຳລັບບ່ອນສັກສິດ

Offering for the Tabernacle

(ອພຍ 35:4-9)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 “ຈົ່ງສັ່ງຊົນຊາດອິສຣາເອນໃຫ້ນຳສິ່ງຂອງມາຖວາຍແກ່ເຮົາ ຂອງນັ້ນໃຫ້ຮັບມາຈາກທຸກໆຄົນທີ່ເຕັມໃຈຖວາຍ
3 ຂອງຖວາຍຊຶ່ງເຈົ້າຈະຕ້ອງຮັບຈາກເຂົາຄື ທອງຄຳ ເງິນ ທອງສຳລິດ

4 ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ຜ້າປ່ານເນື້ອລະອຽດດີ ແລະຂົນແກະ
5 ໜັງແກະໂຕຜູ້ຍ້ອມສີແດງ ໜັງສັດທີ່ລະອຽດດີ ແລະໄມ້ກະຖິນເທດ
6 ນໍ້າມັນເຕີມຕະກຽງ ເຄື່ອງເທດປຸງນໍ້າມັນສໍາລັບເຈີມ ແລະເຄື່ອງຫອມເຜົາບູຊາ
7 ແກ້ວໂກເມນ ແລະເພັດພອຍຊະນິດຕ່າງໆສໍາລັບຕົກແຕ່ງເສື້ອຄຸມເອໂຟດ ແລະແຜ່ນຮອງເອິກ
8 ແລ້ວໃຫ້ເຂົາສ້າງສະຖານນະມັສການຖວາຍແກ່ເຮົາ ເພື່ອວ່າເຮົາຈະໄດ້ຢູ່ຖ້າມກາງພວກເຂົາ
9 ແບບຢ່າງຫໍເຕັນສັກສິດ ແລະເຄື່ອງທັງປວງຂອງຫໍເຕັນສັກສິດນັ້ນ ເຈົ້າຈົ່ງທໍາຕາມທີ່ເຮົາແຈ້ງໄວ້ແກ່ເຈົ້ານີ້ທຸກປະການ

**ຫີບຄໍາສັນຍາ**

The Ark of the Covenant

10 (ອພຍ 37:1-9)

11 “ໃຫ້ເຂົາເຮັດຫີບໃບນຶ່ງດ້ວຍໄມ້ກະຖິນເທດ ຍາວສອງສອກຄືບ ກວ້າງສອກຄືບ ແລະສູງສອກຄືບ
12 ຫີບນັ້ນໂອບດ້ວຍທອງຄໍາບໍຣິສຸດ ທັງດ້ານໃນແລະດ້ານນອກ ແລ້ວເຮັດຂອບທອງຄໍາອ້ອມຮອບຫີບ
13 ໃຫ້ຫລໍ່ຮ່ວງທອງຄໍາສີ່ຮ່ວງສໍາລັບຫີບນັ້ນ ຕິດໄວ້ທີ່ມຸມທັງສີ່ ດ້ານນີ້ສອງຮ່ວງ ແລະດ້ານນັ້ນສອງຮ່ວງ
14 ໃຫ້ເຮັດຄານຫາມດ້ວຍໄມ້ກະຖິນເທດ ແລະໂອບດ້ວຍທອງຄໍາ
15 ແລ້ວສອດຄານຫາມເຂົ້າທີ່ຮ່ວງຂ້າງຫີບ ສ□າລັບໃຊ້ຍົກຫາມຫີບນັ້ນ
16 ໄມ້ຄານຫາມໃຫ້ສອດໄວ້ໃນຮ່ວງຂອງຫີບຢ່າຖອດອອກເລີຍ
17 ພຣະໂອວາດທີ່ເຮົາຈະໃຫ້ແກ່ເຈົ້າຈົ່ງເກັບໄວ້ໃນຫີບນັ້ນ
18 ແລ້ວຈົ່ງເຮັດພຣະທີ່ນັ່ງກະຣຸນາ ດ້ວຍທອງຄໍາບໍຣິສຸດຍາວສອງສອກຄືບ ກວ້າງສອກຄືບ
19 ຈົ່ງເຮັດເຊຣູບິມທອງຄໍາສອງຮູບ  ໂດຍໃຊ້ຝີຄ້ອນທໍາຕັ້ງໄວ້ທີ່ປາຍພຣະທີ່ນັ່ງກະຣຸນາທັງສອງຂ້າງ
20 ທໍາເຊຣູບິມໄວ້ທີ່ສົ້ນປາຍພຣະທີ່ນັ່ງກະຣຸນາຂ້າງລະຮູບ ເຮັດເຊຣູບິມນັ້ນ ແລະໃຫ້ສົ້ນປາຍທັງສອງຂ້າງຕິດເປັນເນື້ອດຽວກັນກັບພຣະທີ່ນັ່ງກະຣຸນາ
21 ໃຫ້ເຊຣູບິມນັ້ນພື້ປີກອອກໄວ້ເບື້ອງເທິງປົກພຣະທີ່ນັ່ງກະຣຸນາໄວ້ດ້ວຍປີກ ແລະໃຫ້ປິ່ນໜ້າເຂົ້າຫາກັນ ໃຫ້ເຊຣູບິມປິ່ນໜ້າເຂົ້າມາຊື່ພຣະທີ່ນັ່ງກະຣຸນາ
22 ແລ້ວຈົ່ງຕັ້ງພຣະທີ່ນັ່ງກະຣຸນານັ້ນໄວ້ເທິງຫີບ ຈົ່ງບັນຈຸພຣະໂອວາດຊຶ່ງເຮົາຈະໃຫ້ໄວ້ແກ່ເຈົ້າໄວ້ໃນຫີບນັ້ນ
23 ທີ່ນັ້ນ ເຮົາຈະພົບກັບເຈົ້າຢູ່ທີ່ເທິງພຣະທີ່ນັ່ງກະຣຸນານັ້ນ ຄືລະຫວ່າງກາງທັງສອງຂອງເຊຣູບິມ ຊຶ່ງຕັ້ງຢູເທິງຫີບພຣະໂອວາດ  ເຮົາຈະສົນທະນາກັບເຈົ້າທຸກເຣື່ອງ ຊຶ່ງເຮົາຈະສັ່ງເຈົ້າໃຫ້ປະກາດແກ່ຊົນຊາດອິສຣາເອນ

**ໂຕະເຂົ້າຈີ່ໜ້າພຣະພັກ**

The Table for the Bread of the Presence

24 (ອພຍ 37:10-16)

25 ຈົ່ງເຮັດໂຕະໜ່ວຍນຶ່ງດ້ວຍໄມ້ກະຖິນເທດທີ່ຍາວສອງສອກຄືບ ກວ້າງນຶ່ງສອກຄືບ ແລະສູງສອງຄືບ
26 ຈົ່ງໂອບໂຕະນັ້ນດ້ວຍທອງຄໍາບໍຣິສຸດ ແລະຈົ່ງແນບຂອບໂຕະນັ້ນດ້ວຍທອງຄໍາຄືກັນ
27 ຂອບໂຕະນັ້ນທໍາໃຫ້ກວ້າງນຶ່ງຝ່າມື ໂດຍຮອບ ແລ້ວເຮັດຂອບທອງຄໍາປະກອບໃຫ້ຮອບຂອບນັ້ນ
28 ຈົ່ງເຮັດຮ່ວງທອງຄໍາສີ່ອັນຕິດໄວ້ທີ່ແຈມຸມຂາໂຕະທັງສີ່
29 ຮ່ວງນັ້ນໃຫ້ຕິດກັບຂອບ ເພື່ອເອົາໄວ້ສອດຄານຫາມ
30 ເຈົ້າຈົ່ງເຮັດຄານຫາມດ້ວຍໄມ້ກະຖິນເທດ ໂອບດ້ວຍທອງຄໍາ ໃຫ້ຫາມໂຕະດ້ວຍໄມ້ນີ້
31 ເຈົ້າຈົ່ງເຮັດຈານ ຈອກ ໄຫ ແລະຖ້ວຍເພື່ອໃຊ້ໃນການຖວາຍບູຊາເຄື່ອງດື່ມບູຊາ ສິ່ງເຫລົ່ານີ້ເຈົ້າຈົ່ງເຮັດດ້ວຍທອງຄໍາບໍຣິສຸດ

32 ແລະເຈົ້າຈົ່ງວາງເຂົ້າຈີ່ຫນ້າພຣະພັກໄວ້ເທິງໂຕະນັ້ນຕໍ່ຫນ້າເຮົາເປັນນິດ

**ຫລັກຕະກຽງຄໍາ**

The Lamp stand

(ອພຍ 37:17-24)

33 “ເຈົ້າຈົ່ງເຮັດເຄື່ອງຮອງຕີນໂຄມອັນນຶ່ງດ້ວຍທອງຄໍາບໍຣິສຸດ ຖານແລະລໍາຕົວຂອງເຄື່ອງຮອງຕີນໂຄມນັ້ນ ຈົ່ງໃຊ້
ຝີຄ້ອນທໍາດອກ ແລະກີບໃຫ້ຕິດເປັນເນື້ອດຽວກັນກັບເຄື່ອງຮອງຕີນໂຄມ

34 ໃຫ້ມີກິ່ງຫົກກິ່ງແຍກອອກຈາກລໍາເຄື່ອງຮອງຕີນໂຄມນັ້ນຂ້າງລະສາມກິ່ງ

35 ກິ່ງນຶ່ງມີດອກເຫມືອນດອກຫມາກບົກສາມດອກ ທຸກໆດອກໃຫ້ມີຖານດອກລະກີບ ອີກກິ່ງນຶ່ງໃຫ້ມີດອກສາມດອກ
ເຫມືອນດອກຫມາກບົກ ທຸກໆດອກໃຫ້ມີຖານດອກແລະກີບ ໃຫ້ເປັນດັ່ງນີ້ທັງຫົກກິ່ງ ຊຶ່ງຍື່ນອອກຈາກລໍາຫລັກຕະ
ກຽງ

36 ສໍາລັບລໍາເຄື່ອງຮອງຕີນໂຄມນັ້ນໃຫ້ມີດອກສີ່ດອກ ເຫມືອນດອກຫມາກບົກ ທັງຖານດອກ ແລະກີບ

37 ທາງກ້ອງກິ່ງທຸກໆຄູ່ທັງຫົກກິ່ງທີ່ລໍາເຄື່ອງຮອງຕີນໂຄມນັ້ນ ໃຫ້ມີກະເປາະເປັນເນື້ອດຽວກັນກັບເຄື່ອງຮອງຕີນໂຄມ

38 ກະເປາະແລະກິ່ງທໍາໃຫ້ເປັນເນື້ອດຽວກັນກັບເຄື່ອງຮອງຕີນໂຄມ ໃຫ້ທຸກສ່ວນເປັນເນື້ອດຽວກັນດ້ວຍທອງຄໍາບໍຣິ
ສຸດທີ່ໃຊ້ຄ້ອນທໍາ

39 ຈົ່ງເຮັດຕະກຽງເຈັດດວງສໍາລັບເຄື່ອງຮອງຕີນໂຄມນັ້ນ ແລະໄຕ້ຕະກຽງໃຫ້ສ່ອງແສງຕົງໄປຫນ້າເຄື່ອງຮອງຕີນໂຄມ

40 ຄີມຄີບຕັດໃສ້ຕະກຽງ ແລະຖາດໃສ່ຄີມນັ້ນ ຈົ່ງເຮັດດ້ວຍທອງຄໍາບໍຣິສຸດ

41 ເຄື່ອງຮອງຕີນໂຄມກັບເຄື່ອງໃຊ້ທຸກຢ່າງໃຫ້ເຮັດດ້ວຍທອງຄໍາບໍຣິສຸດນຶ່ງຕາລັນ

42 ຈົ່ງລະວັງເຮັດສິ່ງເຫລົ່ານີ້ ຕາມແບບຢ່າງທີ່ເຮົາແຈ້ງແກ່ເຈົ້າທີ່ເທິງພູນັ້ນ”

## 26 ຫໍເຕັນສັກສິດ

The Tabernacle

(ອພຍ 36:8-38)

1 “ນອກຈາກນັ້ນ ເຈົ້າຈົ່ງເຮັດຫໍເຕັນສັກສິດດ້ວຍຜ້າກັ້ງສິບຜືນ ເຮັດດ້ວຍຜ້າປ່ານເນື້ອດີ ແລະຜ້າຕໍ່າດ້ວຍດ້າຍຍ້ອມສີ
ຟ້າ ສີມ່ວງ ສີແດງເຂັ້ມ ກັບໃຫ້ມີຮູບເຊຣູບິມມືຊ່າງອອກແບບໄວ້

2 ຜ້າກັ້ງຜືນນຶ່ງໃຫ້ຍາວຊາວແປດສອກ ກວ້າງສີ່ສອກ ຜ້າກັ້ງທຸກຜືນໃຫ້ເທົ່າກັນ

3 ຜ້າກັ້ງຫ້າຜືນໃຫ້ກຽວຕິດກັນ ແລະອີກຫ້າຜືນນັ້ນກໍໃຫ້ກຽວຕິດກັນດ້ວຍ

4 ຈົ່ງເຮັດຜ້າກັ້ງດ້ວຍດ້າຍສີຟ້າຕິດໄວ້ຕາມຂອບຜ້າກັ້ງດ້ານນອກສຸດຊຸດທີນຶ່ງ ແລະຕາມຂອບຜ້າກັ້ງດ້ານນອກຊຸດ
ທີສອງ ຈົ່ງຕິດຫູໄວ້ເຫມືອນກັນ

5 ຜ້າກັ້ງຜືນນຶ່ງໃຫ້ເຮັດຫູຫ້າສິບຫູ ແລະຕາມຂອບຜ້າກັ້ງຊຸດທີສອງ ໃຫ້ເຮັດຫູຫ້າສິບຫູໃຫ້ຊື່ກັນ

6 ຈົ່ງເຮັດຂໍເກາະຄໍາຫ້າສິບຂໍສໍາລັບໃຊ້ກຽວຜ້າກັ້ງ ເພື່ອໃຫ້ເປັນຫໍເຕັນດຽວກັນ

7 “ຈົ່ງເຮັດຜ້າກັ້ງດ້ວຍຂົນແບ້ ສໍາລັບເປັນເຕັນຄຸມຫໍເຕັນຊັ້ນນອກອີກສິບເອັດຜືນ

8 ຜ້າກັ້ງນຶ່ງໃຫ້ເຮັດຍາວສາມສິບສອກ ກວ້າງສີ່ສອກ ທັງສິບເອັດຜືນໃຫ້ເທົ່າກັນ

9 ຜ້າກັ້ງຫ້າຜືນໃຫ້ກຽວຕິດກັນຕ່າງຫາກ ແລະຜ້າກັ້ງອີກຫົກຜືນໃຫ້ກຽວຕິດກັນຕ່າງຫາກເຊັ່ນກັນ ແລະຜ້າກັ້ງທີຫົກນັ້ນ
ຈົ່ງໃຫ້ຫ້ອຍຊ້ອນລົງມາຂ້າງຫນ້າເຕັນ

10 ຈົ່ງເຮັດຫູຫ້າສິບຫູຕິດກັບຂອບຜ້າກັ້ງດ້ານນອກຊຸດທີນຶ່ງ ແລະຫູຫ້າສິບຫູຕິດກັບຂອບຜ້າກັ້ງດ້ານນອກສຸດຊຸດທີ
ສອງ

11 “ແລ້ວເຮັດຂໍທອງສໍາຣິດຫ້າສິບຂໍ ກຽວຂໍເຂົ້າທີ່ຫູ ກຽວໃຫ້ຕິດເປັນເຕັນຫລັງດຽວກັນ

12 ຜ້າກັ້ງສ່ວນທີ່ເກີນຢູ່ ຄືຕີນຜ້າກັ້ງເຄິ່ງນຶ່ງທີ່ເຫລືອຢູ່ນັ້ນ ຈົ່ງໃຫ້ຫ້ອຍລົງມາດ້ານຫລັງຫໍເຕັນ
13 ສ່ວນຜ້າກັ້ງຄຸມຫໍເຕັນ ຊຶ່ງຍາວເກີນໄປຂ້າງລະນຶ່ງສອກນັ້ນ ໃຫ້ຫ້ອຍລົງມາຂ້າງໆຫໍເຕັນ ທັງຂ້າງນີ້ແລະຂ້າງນັ້ນສຳລັບໃຊ້ບັງ
14 ເຄື່ອງປົກເຕັນຂ້າງເທິງ ເຈົ້າຈົ່ງເຮັດດ້ວຍໜັງແກະໂຕຜູ້ຍ້ອມສີແດງຊັ້ນນຶ່ງ ແລະຄຸມດ້ວຍໜັງສັດລະອຽດດີອີກຊັ້ນນຶ່ງ

**ຮ່າງຂອບ**

The Framework

15 “ໄມ້ຮ່າງຂອບສຳລັບເຮັດຝາຫໍເຕັນນັ້ນ ໃຫ້ໃຊ້ໄມ້ກະຖິນເທດຕັ້ງຕົງຂຶ້ນ
16 ໄມ້ຮ່າງຂອບນັ້ນໃຫ້ຍາວແຜ່ນລະສິບສອກ ກວ້າງສອກເສດ
17 ໃຫ້ມີເດືອຍຂອບລະສອງເດືອຍ ເດືອຍຂອບນຶ່ງມີໄມ້ປະກັບຕິດກັບເດືອຍອີກຂອບນຶ່ງ ໄມ້ຮ່າງຂອບຫໍເຕັນທັງໝົດໃຫ້ເຮັດຢ່າງນີ້
18 ເຈົ້າຈົ່ງເຮັດໄມ້ຮ່າງຂອບຫໍເຕັນດັ່ງນີ້ ດ້ານໃຕ້ໃຫ້ເຮັດຊາວແຜ່ນ
19 ຈົ່ງເຮັດຖານຮອງຮັບດ້ວຍເງິນສີ່ສິບຖານ ສຳລັບໄມ້ຮ່າງຂອບຊາວແຜ່ນ ໃຕ້ໄມ້ຮ່າງຂອບແຜ່ນນຶ່ງໃຫ້ມີຖານຮອງຮັບແຜ່ນລະສອງຖານ ສຳລັບສວມເດືອຍສອງອັນ
20 ດ້ານທີສອງຂອງຫໍເຕັນຂ້າງທິດເໜືອນັ້ນ ໃຫ້ໃຊ້ໄມ້ຮ່າງຂອບຊາວແຜ່ນ
21 ແລະເຮັດຖານເງິນຮອງຮັບສີ່ສິບຖານ ໃຕ້ຂອບໃຫ້ເຮັດຖານແຜ່ນລະສອງຖານ
22 ສ່ວນດ້ານຫລັງທິດຕາເວັນຕົກຂອງຫໍເຕັນ ໃຫ້ເຮັດໄມ້ຮ່າງຂອບຫົກແຜ່ນ
23 ແລະເຮັດອີກສອງແຜ່ນສຳລັບມຸມຫໍເຕັນດ້ານຫລັງ
24 ໄມ້ຮ່າງຂອບນັ້ນຂ້າງລຸ່ມໃຫ້ແຍກກັນ ແຕ່ທາງເທິງຍອດໃຫ້ຕິດກັນທີ່ຮ່ວງແຮກທັງສອງແຫ່ງໃຫ້ກະທຳດັ່ງນີ້ ກໍຈະເຮັດໃຫ້ເກີດ ມຸມສອງມຸມ
25 ຄືຮວມເປັນໄມ້ຮ່າງຂອງແປດແຜ່ນດ້ວຍກັນ ແລະຖານເງິນສິບຫົກອັນ ໃຕ້ຂອບໄມ້ໃຫ້ມີຖານຮອງຮັບແຜ່ນລະສອງຖານ
26 “ເຈົ້າຈົ່ງເຮັດກອນດ້ວຍໄມ້ກະຖິນເທດຫ້າອັນ ສຳລັບໄມ້ກອນຝາຫໍເຕັນດ້ານນຶ່ງ
27 ແລ້ວກອນອີກຫ້າອັນສຳລັບຂັດໄມ້ຮ່າງຂອບຝາຫໍເຕັນອີກດ້ານນຶ່ງ ແລະກອນອີກຫ້າອັນສຳລັບຂັດໄມ້ຮ່າງຂອບຝາຫໍເຕັນດ້ານຫລັງ ຄືດ້ານຕາເວັນຕົກ
28 ກອນຕົວກາງຄືຢູ່ທາງກາງຂອງໄມ້ຮ່າງຂອບສຳລັບຂັດຝາຮ້ອຍໃຫ້ຕິດກັນ
29 ຈົ່ງໂອບໄມ້ຮ່າງຂອບເຫລົ່ານັ້ນດ້ວຍທອງຄຳແລະເຮັດຮ່ວງໄມ້ຮ່າງຂອບດ້ວຍທອງຄຳ ສຳລັບຮ້ອຍກອນ ແລະກອນນັ້ນໃຫ້ໂອບດ້ວຍທອງຄຳ
30 ຫໍເຕັນນັ້ນ ເຈົ້າຈົ່ງຈັດຕັ້ງໄວ້ຕາມແບບຢ່າງທີ່ເຮົາໄດ້ແຈ້ງແກ່ເຈົ້າແລ້ວທີ່ເທິງພູເຂົາ

**ຜ້າກັ້ງ**

The Curtain

31 “ຈົ່ງເຮັດຜ້າກັ້ງຜືນນຶ່ງ ຕໍ່າດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະດ້ວຍຜ້າປ່ານເນື້ອດີ ໃຫ້ມີຮູບເຊຣູບິມຝີມືຊ່າງອອກແບບໄວ້
32 ຜ້າກັ້ງນັ້ນໃຫ້ແຂວນໄວ້ດ້ວຍຂໍທອງຄຳທີ່ເສົາໄມ້ກະຖິນເທດສີ່ເສົາທີ່ໂອບດ້ວຍທອງຄຳ ແລະຊຶ່ງຕັ້ງຢູ່ເທິງຖານເງິນສີ່ອັນ
33 ຜ້າກັ້ງນັ້ນໃຫ້ເຂົາແຂວນໄວ້ກັບຂໍສຳລັບກັ້ງວຜ້າກັ້ງ ແລ້ວເອົາຫີບຄຳສັນຍາເຂົ້າມາໄວ້ຂ້າງໃນພາຍໃນຜ້າກັ້ງ ແລະຜ ້າກັ້ງນັ້ນຈະເປັນທີ່ແບ່ງເຕັນລະຫວ່າງບ່ອນສັກສິດຈາກບ່ອນບໍລິສຸດທີ່ສຸດ

34 ພຣະທີ່ນັ່ງກະຣຸນານັ້ນໃຫ້ຕັ້ງໄວ້ເທິງຫີບຄໍາສັນຍາໃນບ່ອນສັກສິດ
35 ຈົ່ງຕັ້ງໂຕະໄວ້ຂ້າງນອກຜ້າກັ້ງ ແລະຈົ່ງຕັ້ງເຄື່ອງຮອງຕີນໂຄມໄວ້ດ້ານໃຕ້ໃນຫໍເຕັນກົງກັນຂ້າມກັບໂຕະ ເຈົ້າຈົ່ງຕັ້ງ
ໂຕະໄວ້ທາງດ້ານເໜືອ
36 “ເຈົ້າຈົ່ງເຮັດຜ້າກັ້ງບັງທີ່ປະຕູເຕັນນັ້ນດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະດ້ວຍຜ້າປ່ານເນື້ອດີ ປະກອບດ້ວຍຝີ
ມືຊ່າງດ້າຍສີ
37 ຈົ່ງເຮັດເສົາຫ້າຕົ້ນດ້ວຍໄມ້ກະຖິນເທດທີ່ປະຕູ ແລ້ວໂອບເສົານັ້ນດ້ວຍທອງຄໍາ ຂໍແຂວນເສົາຈົ່ງເຮັດດ້ວຍທອງຄໍາ
ແລ້ວຫລໍ່ຖານທອງສໍາຣິດຫ້າຖານສໍາລັບຮອງຮັບເສົານັ້ນ

## 27 ແທ່ນເຄື່ອງເຜົາບູຊາ

The Altar of Burnt Offering

(ອພຍ 38:1-7)

1 ເຈົ້າຈົ່ງເຮັດແທ່ນບູຊາດ້ວຍໄມ້ກະຖິນເທດໃຫ້ຍາວຫ້າສອກ ກວ້າງຫ້າສອກ ໃຫ້ເປັນແທ່ນສີ່ຫລ່ຽມ ສູງສາມສອກ
2 ຈົ່ງເຮັດຍອດຕິດໄວ້ທັງສີ່ມຸມຂອງແທ່ນ ໃຫ້ເປັນອັນດຽວກັນກັບແທ່ນ ແລະຈົ່ງໂອບແທ່ນດ້ວຍ
ທອງສໍາຣິດ
3 ເຈົ້າຈົ່ງເຮັດຫມໍ້ສໍາລັບໃສ່ຂີ້ເທົ່າ ຊ້ອນ ຖ້ວຍ ຂໍເກາະເນື້ອ ແລະຖາດຮອງໄຟ ຄືເຄື່ອງໃຊ້ສໍາລັບແທ່ນທັງຫມົດ ເຈົ້າ
ຈົ່ງເຮັດດ້ວຍທອງສໍາຣິດ
4 ແລ້ວເອົາທອງສໍາຣິດເຮັດຕານ່າງປະດັບແທ່ນນັ້ນ ກັບເຮັດຮ່ວງທອງສໍາຣິດຕິດທີ່ແຈມຸມທັງສີ່ຂອງຕານ່າງ
5 ຕານ່າງນັ້ນໃຫ້ຢູ່ໃຕ້ຂອບຂອງແທ່ນ ແລະໃຫ້ຫ້ອຍຢູ່ຕັ້ງແຕ່ກາງແທ່ນລົງມາ
6 ໄມ້ຄານຫາມແທ່ນ ໃຫ້ເຮັດດ້ວຍໄມ້ກະຖິນເທດ ແລະຫຸ້ມດ້ວຍທອງສໍາຣິດ
7 ໄມ້ຄານນັ້ນໃຫ້ສອດໄວ້ໃນຮ່ວງ ໃນເວລາຫາມໄມ້ຄານຈະຢູ່ຂ້າງແທ່ນຂ້າງລະອັນ
8 ແທ່ນນັ້ນເຮັດດ້ວຍໄມ້ກະດານ ແຕ່ຂ້າງໃນແທ່ນຄວັດຕາມແບບທີ່ແຈ້ງແກ່ເຈົ້າແລ້ວທີ່ພູເຂົາ ຈົ່ງໃຫ້ເຂົາເຮັດຢ່າງນັ້ນ

**ລານຫໍເຕັນສັກສິດ**

(ອພຍ 38:9-20)

9 “ເຈົ້າຈົ່ງສ້າງລານຫໍເຕັນສັກສິດ ໃຫ້ຮົ້ວດ້ານໃຕ້ມີຜ້າບັງ ເຮັດດ້ວຍຜ້າປ່ານເນື້ອດີ ຍາວນຶ່ງຮ້ອຍສອກ
10 ໃຫ້ມີເສົາຊາວຕົ້ນ ກັບຖານທອງສໍາຣິດຮອງຮັບເສົາຊາວຖານ ຂໍຕິດເສົາແລະຮາວຍຶດເສົານັ້ນໃຫ້ເຮັດດ້ວຍເງິນ
11 ທໍານອງດຽວກັນ ດ້ານທິດເໜືອໃຫ້ມີຜ້າກັ້ງຍາວຮ້ອຍສອກ ເຫມືອນກັນກັບເສົາຊາວຕົ້ນ ແລະຖານທອງສໍາຣິດ
ຊາວຖານ ຂໍແລະຮາວຍຶດເສົານັ້ນ ໃຫ້ເຮັດດ້ວຍເງິນ
12 ຕາມສ່ວນກວ້າງຂອງລານດ້ານຕາເວັນຕົກ ໃຫ້ມີຜ້າບັງຍາວຫ້າສິບສອກ ກັບເສົາສິບຕົ້ນ ແລະຖານຮອງຮັບເສົາສິບ
ຖານ
13 ສ່ວນກວ້າງຂອງລານດ້ານຕາເວັນອອກ ໃຫ້ຍາວຫ້າສິບສອກ
14 ຜ້າບັງດ້ານຮີມປະຕູຂ້າງນຶ່ງໃຫ້ຍາວສິບຫ້າສອກ ມີເສົາສາມຕົ້ນ ແລະຖານຮອງຮັບເສົາສາມຖານ
15 ອີກຂ້າງນຶ່ງໃຫ້ມີຜ້າບັງຍາວສິບຫ້າສອກ ມີເສົາສາມຕົ້ນ ແລະຖານຮອງຮັບເສົາສາມຖານ
16 ໃຫ້ມີຜ້າບັງຕາທີ່ປະຕູຍາວຊາວສອກ ຜ້າສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອດີ ປະກອບດ້ວຍສີມືຂອງຊ່າງ
ດ້າຍສີ ກັບເສົາສີ່ຕົ້ນແລະຖານຮອງຮັບເສົາສີ່ຖານ
17 ເສົາລ້ອມອ້ອມທັງຫມົດ ໃຫ້ມີຮາວສໍາລັບຍຶດເສົາໃຫ້ຕິດຕໍ່ກັນເຮັດດ້ວຍເງິນ ແລະໃຫ້ເຮັດຂໍດ້ວຍຖານ ຖານຮອງຮ
ັບເສົານັ້ນເຮັດດ້ວຍທອງສໍາຣິດ

18 ດ້ານຍາວຂອງລານນັ້ນຈະເປັນຮ້ອຍສອກ ດ້ານກວ້າງຫ້າສິບສອກ ສູງຫ້າສອກ ກັ້ນດ້ວຍຜ້າປ່ານເນື້ອດີ ແລະມີ
ຖານທອງສຳຣິດ
19 ເຄື່ອງໃຊ້ສອຍທັງຫມົດຂອງຫໍເຕັນສັກສິດພ້ອມທັງຫລັກຫມຸດສຳລັບຮົ້ວທີ່ກັ້ນລານທັງຫມົດ ໃຫ້ເຮັດດ້ວຍທອງສຳ
ຣິດ

**ການບົວລະບັດຕະກຽງ**

(ລລວ 24:1-4)

20 “ເຈົ້າຈົ່ງສັ່ງຊົນຊາດອິສຣາເອນໃຫ້ນຳນ້ຳມັນຫມາກກອກເທດບໍຣິສຸດທີ່ຄັ້ນໄວ້ນັ້ນມາສຳລັບເຕີມຕະກຽງ ເພື່ອຈະໃຫ້
ຕະກຽງນັ້ນສ່ອງສວ່າງຢູ່ສເມີ
21 ໃນເຕັນນັດພົບຂ້າງນອກຜ້າກັ້ງຊຶ່ງຢູ່ຫນ້າຫີບຄຳສັນຍາ ໃຫ້ອາໂຣນ ແລະບຸດຂອງອາໂຣນ ບົວລະບັດຕະກຽງນັ້ນຢູ່
ສະເພາະ   ພຣະພັກພຣະເຈົ້າ ຕັ້ງແຕ່ເວລາຄ່ຳຈົນເຖິງຮຸ່ງເຊົ້າ ໃຫ້ເປັນກົດເກນທີ່ຊົນຊາດອິສຣາເອນຕ້ອງປະຕິບັດ
ຕາມຊົ່ວຊາດເຊື້ອສາຍຂອງເຂົາ

## 28 ເຄື່ອງແຕ່ງກາຍຂອງປະໂຣຫິດ

Vestment for the Priesthood

(ອພຍ 39:1-7)

1 “ຈົ່ງນຳອາໂຣນອ້າຍຂອງເຈົ້າ ແລະບຸດຂອງເຂົາແຍກອອກມາຈາກຫມູ່ຊົນຊາດອິສຣາເອນໃຫ້ມາຢູ່ໃກ້ເຈົ້າ ເພື່ອຈະ
ໄດ້ເປັນປະໂຣຫິດບົວຣະບັດເຮົາ ຄືທັງອາໂຣນແລະບຸດຂອງອາໂຣນ ຄື ນາດາບ ອາບີຮູ ເອເລອາຊາ ແລະອິທາມາ
2 ແລ້ວໃຫ້ເຮັດເຄື່ອງຍົດບໍຣິສຸດສຳລັບອາໂຣນອ້າຍຂອງເຈົ້າໃຫ້ສົມກຽດ ແລະງົດງາມ
3 ໃຫ້ກ່າວແກ່ຄົນທັງປວງຜູ້ມີຄວາມສາມາດ ຊຶ່ງເຮົາໄດ້ບັນດານໃຫ້ເຂົາມີຈິດໃຈອັນສາມາດນັ້ນ ໃຫ້ເຂົາເຮັດເຄື່ອງ
ຍົດສຳລັບສະຖາປະນາອາໂຣນໃຫ້ບົວຣະບັດເຮົາໃນຕຳແຫນ່ງປະໂຣຫິດ
4 ໃຫ້ເຂົາເຮັດເຄື່ອງຍົດດັ່ງຕໍ່ໄປນີ້ຄື ແຜ່ນຮອງເອິກ ເສື້ອເອໂຟດ ເສື້ອຄຸມຍາວບໍ່ມີແຂນ ເສື້ອຄຸມຍາວມີແຂນ ຫມວກ
ສຸບ ແລະຜ້າຮັດແອວ ແລະໃຫ້ເຂົາເຮັດເຄື່ອງຍົດບໍຣິສຸດສຳລັບອາໂຣນອ້າຍຂອງເຈົ້າແລະບຸດຂອງເຂົາ ເພື່ອຈະໄດ້
ເປັນປະໂຣຫິດບົວຣະບັດເຮົາ
5 “ໃຫ້ເຂົາເຫລົ່ານັ້ນຮັບເອົາຄຳ ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອດີ

**ເອໂຟດ**

The Ephod

6 ໃຫ້ເຂົາເຮັດເອໂຟດດ້ວຍທອງຄຳ ດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອດີ ຕັດດ້ວຍຝີມືຊ່າງອອກ
ແບບ
7 ແຂບທີ່ຜູກບ່າຂອງເອໂຟດນັ້ນ ໃຫ້ຕິດກັບຣິມຕອນເທິງທັງສອງອັນ ເພື່ອຈະຕິດເປັນອັນດຽວກັນ
8 ສາຍຮັດແອວຕ່ຳຢ່າງປານີດ ສຳລັບຮັດທັບເອໂຟດ ໃຫ້ເຮັດດ້ວຍຝີມືຢ່າງດຽວກັນ ແລະໃຊ້ວັດຖຸຢ່າງດຽວກັນກັບເອ
ໂຟດ ຄືເຮັດດ້ວຍທອງຄຳ ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອດີ
9 ແລ້ວໃຊ້ແກ້ວໂກເມນສອງແຜ່ນ ສຳລັບຈາຣຶກຊື່ບຸດຊາຍຂອງອິສຣາເອນໄວ້
10 ທີ່ແກ້ວແຜ່ນນຶ່ງໃຫ້ຈາຣຶກຊື່ໄວ້ອີກຫົກຊື່ ແລະແຜ່ນທີ່ສອງກໍໃຫ້ຈາຣຶກຊື່ໄວ້ອີກຫົກຊື່ທີ່ເຫລືອຢູ່ຕາມກຳເນີດ
11 ໃຫ້ຊ່າງແກະຈາຣຶກຊື່ເຫລົ່າບຸດຊາຍອິສຣາເອນໄວ້ທີ່ແກ້ວທັງສອງແຜ່ນນັ້ນ ເຊັ່ນຢ່າງແກະຕຣາແລ້ວຝັງໄວ້ເທິງກະ
ໂບກຄຳຊຶ່ງມີລວດລາຍລະອຽດ
12 ແກ້ວທັງສອງແຜ່ນນັ້ນໃຫ້ຕິດໄວ້ກັບເອໂຟດເທິງບ່າທັງສອງຂ້າງ ແກ້ວນັ້ນຈະເປັນທີ່ຣະນຶກເຖິງບັນດາບຸດແຫ່ງອິສ
ຣາເອນ ແລະອາໂຣນຈະແບກຊື່ເຂົາທັງຫລາຍໄວ້ເທິງບ່າທອງສອງສະເພາະພຣະພັກພຣະຜູ້ເປັນເຈົ້າເປັນທີ່ຣະລຶກ

13 ເຈົ້າຈິ່ງເຮັດກະໂປກຄຳມີລວດລາຍລະອຽດ
14 ກັບເຮັດສ້ອຍສອງສາຍດ້ວຍທອງຄຳບໍຣິສຸດ ເປັນສ້ອຍຖັກກ້ຽວແລ້ວຕິດໄວ້ທີ່ກະໂປກນັ້ນ

**ແຜ່ນຮອງເອິກ**

The Breastplate

15 (ອພຍ 39:8-21)

16 “ຈິ່ງເຮັດແຜ່ນຮອງເອິກສຳລັບແຕ່ງເວລາພິພາກສາ ດ້ວຍຝີມືຊ່າງອອກແບບຝີມືເຫມືອນເຮັດເອໂຟດ ຄືເຮັດດ້ວຍ
ທອງຄຳ ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອດີ
17 ໃຫ້ເຮັດແຜ່ນຮອງເອິກເປັນຮູບສີ່ຫລ່ຽມ ພັບທົບກາງຍາວຄືບນຶ່ງ ກ້ວາງຄືບນຶ່ງ
18 ຈິ່ງຝັງແກ້ວສີ່ແຖວເທິງແຜ່ນຮອງເອິກນັ້ນ ແຖວທີນຶ່ງຝັງທັບທິມ ພອຍເຫລືອງ ແລະມໍຣະກົດ
19 ແຖວທີສອງຝັງພອຍ ໄພທູນ ແລະເພັດ
20 ແຖວທີສາມຝັງນິນໂມຣາ ແລະເພທາຍສີມ່ວງ
21 ແຖວທີສີ່ຝັງເພທາຍ ໂກເມນ ແລະມະນີໂຊຕ ແກ້ວທັງຫມົດນີ້ໃຫ້ຝັງໃນລວດລາຍອັນລະອຽດທີ່ທຳດ້ວຍທອງຄຳ
22 ແກ້ວເຫລົ່ານັ້ນໃຫ້ມີຊື່ເຫລົ່າບຸດອິສຣາເອນສິບສອງຊື່ຈາຣຶກໄວ້ເຫມືອນແກະຕຣາ ຈະມີຊື່ເຜົ່າທຸກເຜົ່າຕາມລຳດັບ
ສິບສອງເຜົ່າ
23 ແລະເຈົ້າຈິ່ງເຮັດສ້ອຍຖັກກ້ຽວດ້ວຍທອງຄຳບໍຣິສຸດສຳລັບແຜ່ນຮອງເອິກ
24 ແລະເຈົ້າຈິ່ງເຮັດຮ່ວງທອງຄຳສອງຮ່ວງຕິດໄວ້ທີ່ມຸມເທິງທັງສອງຂອງແຜ່ນຮອງເອິກ
25 ສ່ວນສ້ອຍທີ່ເຮັດດ້ວຍທອງຄຳນັ້ນ ໃຫ້ກ້ຽວດ້ວຍຮ່ວງທີ່ມຸມແຜ່ນຮອງເອິກ
26 ແລະປາຍສ້ອຍອີກສອງຂ້າງ ໃຫ້ຕິດກັບກະໂປກທີ່ມີລວດລາຍລະອຽດທັງສອງ ໃຫ້ຕິດໄວ້ຂ້າງຫນ້າທີ່ແຂບຍຶດເອ
ໂຟດທັງສອງຂ້າງເທິງບ່າ
27 ຈິ່ງເຮັດຮ່ວງຄຳສອງອັນຕິດໄວ້ທີ່ແຈລຸ່ມທັງສອງຂ້າງຂອງແຜ່ນຮອງເອິກຂ້າງໃນທີ່ຕິດເອໂຟດ
28 ຈິ່ງເຮັດຮ່ວງສອງອັນດ້ວຍທອງຄຳໃສ່ໄວ້ຮີມເອໂຟດເບື້ອງຫນ້າ ໃຕ້ແຂບທີ່ໃກ້ກັບສາຍດຶງແລະເທິງສາຍແອວນັ້ນຊຶ່ງ
ຕ່ຳດ້ວຍຝີມືປານີຕ
29 ໃຫ້ຜູກແຜ່ນຮອງເອິກນັ້ນຕິດກັບເອໂຟດດ້ວຍ ໃຊ້ດ້າຍຖັກສີຟ້າຮ້ອຍຜູກທີ່ຮ່ວງ ໃຫ້ທັບແຜ່ນຮອງເອິກຮັດສາຍແອວ
ທີ່ເຮັດດ້ວຍສີ ມີປານີດຂອງເອໂຟດເພື່ອບໍ່ໃຫ້ແຜ່ນຮອງເອິກຫລຸດໄປຈາກເອໂຟດ
30 ອາໂຣນຈິ່ງຈະມີຊື່ເຫລົ່າບຸດອິສຣາເອນຈາຣຶກໄວ້ທີ່ແຜ່ນຮອງເອິກ ສຳລັບແຕ່ງເວລາພິພາກສາຕິດໄວ້ທີ່ເອິກຂອງ
ຕົນ ໃຫ້ເປັນທີ່ ຣະລຶກຕໍ່ພຣະພັກພຣະຜູ້ເປັນເຈົ້າສເມີ ເມື່ອເຂົາເຂົ້າໄປໃນຫໍເຕັນສັກສິດນັ້ນ
31 ຈິ່ງໃສ່ອູຣິມ ແລະທູມມິມ ໄວ້ໃນແຜ່ນຮອງເອິກ ແລະຂອງສອງສິ່ງນີ້ຈະຢູ່ທີ່ຫົວໃຈຂອງອາໂຣນເມື່ອເຂົ້າເຝົ້າພຣະຜູ້
ເປັນເຈົ້າ ອາໂຣນຈະຮັບພາຣະການພິພາກສາເຫລົ່າບຸດອິສຣາເອນໄວ້ທີ່ຫົວໃຈຂອງຕົນສເມີສະເພາະພຣະພັກພ
ຣະຜູ້ເປັນເຈົ້

**ເຄື່ອງແຕ່ງກາຍຊະນິດອື່ນຂອງປະໂຣຫິດ**

Other Priestly Vestments

(ອພຍ 39:22-31)

32 “ເຈົ້າຈິ່ງເຮັດເສື້ອຄຸມໃຫ້ເຂົ້າຊຸດກັບເອໂຟດດ້ວຍຜ້າສີຟ້າລ້ວນ
33 ໃຫ້ເຮັດຊ່ອງຄໍກາງຜືນເສື້ອ ແລ້ວຫຍິບຮອບຄໍດ້ວຍຜ້າຕ່ຳລຽບຕາມຄໍ ເສື້ອນີ້ໃຫ້ແນບດ້ວຍຜ້າຫນາເພື່ອບໍ່ໃຫ້ຂາດ
ງ່າຍ
34 ທີ່ຕີນເສື້ອຄຸມໃຫ້ປັກຮູບຫມາກພິລາ ໃຊ້ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມຮອບຕີນເສື້ອ ແລະຕິດຫມາກກະດິ່ງທອງຄຳ
ສລັບກັບຫມາກພິລາ

35 ຫມາກກະດິ່ງທອງຄຳຫນ່ວນນຶ່ງ ຫມາກທັບທິມຫມາກນຶ່ງ ຫມາກກະດິ່ງທອງຄຳອີກຫມາກນຶ່ງ ຫມາກພິລາອີກ
ຫມາກນຶ່ງຮອບຕີນເສື້ອຄຸມ
36 ອາໂຣນຈະສວມເສື້ອໂຕນັ້ນເມື່ອທຳງານບົວຣະບັດ ແລະຈະໄດ້ຍິນສຽງຫມາກກະດິ່ງເມື່ອເຂົ້າເຝົ້າພຣະຜູ້ເປັນເຈົ້າ
ໃນຫໍເຕັນສັກສິດ ແລະເມື່ອຍ່າງອອກມາ ດ້ວຍຢ້ານວ່າເຂົາຈະຕ້ອງຕາຍ
37 "ເຈົ້າຈົ່ງເຮັດແຜ່ນທອງຄຳບໍຣິສຸດຈາຣຶກຄຳວ່າ"ບໍຣິສຸດແດ່ພຣະຜູ້ເປັນເຈົ້າ" ໄວ້ເຫມືອນຢ່າງແກະຕາ
38 ແລະເຈົ້າຈົ່ງເອົາດ້າຍຖັກສີຟ້າ ຜູກແຜ່ນທອງຄຳນັ້ນໄວ້ເທິງຫມວກໃຫ້ຢູ່ທີ່ຂ້າງຫມວກດ້ານຫນ້າ
39 ແຜ່ນທອງຄຳນັ້ນຈະຢູ່ທີ່ຫນ້າຜາກຂອງອາໂຣນ ແລະອາໂຣນຈະຮັບຄວາມຜິດອັນເກີດແກ່ຊົນຊາດອິສຣາເອນ
ເນື່ອງຈາກຂອງຖວາຍອັນບໍຣິສຸດ ຊຶ່ງນຳມາຊຳຣະໃຫ້ເປັນຂອງຖວາຍອັນບໍຣິສຸດ ແລະແຜ່ນຄຳນັ້ນໃຫ້ຢູ່ທີ່ຫນ້າຜາກ
ຂອງອາໂຣນສເມີ ເພື່ອພຣະຜູ້ເປັນເຈົ້າຈະໄດ້ຊົງຮັບສິ່ງຂອງເຫລົ່ານັ້ນຈາກເຂົາ
40 "ຈົ່ງຕ່ຳເສື້ອໃຫ້ເປັນຕາມຸກດ້ວຍປ່ານເນື້ອດີ ສ່ວນຜ້າຫມວກນັ້ນ ຈົ່ງທຳດ້ວຍຜ້າປ່ານເນື້ອດີ ແລະທຳສາຍແອວດ້ວຍ
ຝີມືຊ່າງດ້າຍສີ
41 "ຈົ່ງເຮັດເສື້ອຄຸມ ສາຍຮັດແອວ ແລະຫມວກສຳລັບບຸດອາໂຣນໃຫ້ສົມກຽດແລະງົດງາມ
42 ຈົ່ງແຕ່ງອາໂຣນອ້າຍຂອງເຈົ້າແລະບຸດເຂົາດ້ວຍເຄື່ອງຍົດ ແລ້ວທົດສົງແລະສະຖາປະນາ ແລະຊຳຣະເຂົາໃຫ້ບໍຣິ
ສຸດ ເພື່ອໃຫ້ເຂົາເປັນປະໂຣຫິດບົວລະບັດເຮົາ
43 ຈົ່ງຫຍິບສົ້ງໃຫ້ເຂົາເຫລົ່ານັ້ນດ້ວຍຜ້າປ່ານເພື່ອຈະປົກປິດກາຍທີ່ເປືອຍຂອງເຂົາໃຫ້ຍາວຕັ້ງແຕ່ແອວຈົນເຖິງຕົ້ນຂາ
44 ໃຫ້ອາໂຣນກັບບຸດເຂົາສວມສົ້ງນັ້ນເມື່ອເຂົາໄປ
ໃນເຕັນນັດພົບ ແລະເມື່ອເຂົ້າໃກ້ແທ່ນບູຊາເພື່ອບົວລະບັດຮັບໃຊ້ເຮົາ ໃນຖານະປະໂຣຫິດໃນບ່ອນສັກສິດ ເພື່ອ
ພວກເຂົາຈະບໍ່ຖືກຂ້າຍ້ອນວ່າບໍ່ປົກປິດຕົນໂຕ ອັນນີ້ແມ່ນກົດເກນອັນຖາວອນຊຶ່ງອາໂຣນແລະເຊື້ອສາຍຂອງ
ເຂົາຈະຕ້ອງປະຕິບັດຕາມຕລອດໄປ

## 29 ການຖວາຍຕົວຂອງອາໂຣນ ແລະບຸດຊາຍຂອງທ່ານ

The Ordination of the Priests

(ລລວ 8:1-36)

1 "ຕໍ່ໄປນີ້ເປັນການຊຶ່ງເຈົ້າຄວນກະທຳເພື່ອຊຳຣະຕົວເຂົາທັງຫລາຍໃຫ້ບໍຣິສຸດ ເພື່ອເຂົາຈະເປັນປະໂຣຫິດບົວລະບັດ
ເຮົາ ຄືຈົ່ງເອົາງົວຫນຸ່ມໂຕນຶ່ງແລະແກະເຖິກສອງໂຕຊຶ່ງປາສຈາກຕຳນິ
2 ເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງ ເຂົ້າຈີ່ທີ່ບໍ່ມີເຊື້ອປົນໃສ່ນ້ຳມັນ ແລະເຂົ້າຈີ່ແຜ່ນບາງທີ່ບໍ່ມີເຊື້ອທານ້ຳມັນ ເຂົ້າຈີ່ເຫລົ່ານີ້ຈົ່ງທຳ
ດ້ວຍຍອດແປ້ງເຂົ້າສາລີ
3 ແລ້ວຈົ່ງໃສ່ເຂົ້າຈີ່ຕ່າງໆເຫລົ່ານັ້ນໄວ້ໃນກະຕ່າດຽວກັນ ຈົ່ງນຳມາພ້ອມກັບງົວເຖິກ ແລະລູກແກະໂຕຜູ້ສອງໂຕ
4 ຈົ່ງນຳອາໂຣນແລະບຸດຊາຍທັງຫລາຍຂອງເຂົາມາທີ່ປະຕູເຕັນນັດພົບ ແລ້ວຈົ່ງຊຳຣະຕົວເຂົາທັງຫລາຍດ້ວຍນ້ຳ
5 ຈົ່ງສວມເຄື່ອງຍົດໃຫ້ອາໂຣນ ຄືເສື້ອໃນຂອງເສື້ອເອໂຟດ ເອໂຟດແລະແຜ່ນຮອງເອິກ ແລະເອົາສາຍຮັດແອວທີ່ຕ່ຳ
ດ້ວຍຝີມືປາ ນີດ ສຳລັບໃຊ້ກັບເອໂຟດນັ້ນຮັດແອວໄວ້
6 ຈົ່ງສວມຫມວກທີ່ຫົວຂອງອາໂຣນ ແລະຈົ່ງສວມມົງກຸດບໍຣິສຸດທັບຫມວກ
7 ຈົ່ງເອົານ້ຳມັນທົດສົງເທລົງຫົວຂອງເຂົາ ແລະທົດສົງຕັ້ງເຂົາໄວ້
8 ຈົ່ງນຳບຸດຊາຍທັງຫລາຍຂອງເຂົາມາແລະສວມເສື້ອໃຫ້
9 ແລ້ວຈົ່ງເອົາສາຍແອວຮັດແອວເຂົາໄວ້ ທັງຕົວເອໂຣນແລະບຸດຂອງເຂົາ ແລະສຸບຫມວກໃຫ້ເຂົາ ແລ້ວເຂົາກໍຈະ
ເປັນປະໂຣຫິດຕາມກົດເກນ ດັ່ງນີ້ແຫລະ ເຈົ້າຈົ່ງສະຖາປະນາອາໂຣນແລະບຸດຊາຍທັງຫລາຍຂອງເຂົາໄວ້
10 "ເຈົ້າຈົ່ງນຳງົວເຖິກມາທີ່ຫນ້າເຕັນນັດພົບ ໃຫ້ອາໂຣນກັບບຸດຂອງເຂົາເອົາມືວາງລົງເທິງຫົວງົວເຖິກ

11 ແລ້ວຈິ່ງຂ້າງົວເຖິກນັ້ນຕໍ່ພຣະພັກພຣະຜູ້ເປັນເຈົ້າທີ່ປະຕູເຕັນນັດພົບ

12 ແລະຈິ່ງເອົານິ້ວມືຈຸ່ມເລືອດງົວເຖິກນັ້ນ ທາໄວ້ເທິງຍອດແທ່ນນັ້ນ ສ່ວນເລືອດທີ່ເຫລືອທັງຫມົດຈິ່ງເທໄວ້ທີ່ພື້ນແທ່ນບູຊາ

13 ເຈົ້າຈິ່ງເອົາໄຂມັນທີ່ຫຸ້ມເຄື່ອງໃນສ່ວນທີ່ດີທີ່ສຸດຂອງຕັບ ແລະໄຕທັງສອງກັບໄຂມັນທີ່ຕິດກັບໄຕນັ້ນມາເຜົາເທິງແທ່ນ

14 ແຕ່ຊີ້ນກັບຫນັງ ແລະໃສ້ພຸງຂອງງົວເຖິກນັ້ນຈິ່ງເຜົາໄຟເສັຽຂ້າງນອກຄ້າຍ ທັງນີ້ເປັນເຄື່ອງບູຊາໄຖ່ບາບ

15 “ເຈົ້າຈິ່ງນຳແກະຜູ້ໂຕນຶ່ງມາໃຫ້ອາໂຣນກັບບຸດເຂົາ ເອົາມືຂອງຕົນວາງເທິງຫົວແກະໂຕຜູ້ນັ້ນ

16 ແລ້ວຈິ່ງຂ້າແກະໂຕນັ້ນເສັຽ ເອົາເລືອດພົມອ້ອມຮອບແທ່ນ

17 ຈິ່ງຕັດແກະໂຕນັ້ນອອກເປັນຕ່ອນໆແລະເຄື່ອງໃນກັບຂາ ຈິ່ງລ້າງນ້ຳວາງໄວ້ກັບເນື້ອແລະຫົວ

18 ແລ້ວຈິ່ງເຜົາແກະຕົວນັ້ນທັງໂຕເທິງແທ່ນບູຊາ ເປັນເຄື່ອງເຜົາບູຊາຖວາຍແດ່ພຣະຜູ້ເປັນເຈົ້າ ເປັນກິ່ນພໍພຣະທັຍເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

19 “ຈິ່ງນຳແກະໂຕຜູ້ອີກໂຕນຶ່ງມາ ແລ້ວໃຫ້ອາໂຣນກັບບຸດເຂົາເອົາມືຂອງຕົນວາງເທິງຫົວແກະຜູ້ນັ້ນ

20 ແລ້ວທ່ານຈິ່ງຂ້າແກະໂຕນັ້ນເສັຽ ເອົາເລືອດສ່ວນນຶ່ງເຈີມທີ່ປາຍໃບຫູຂ້າງຂວາຂອງອາໂຣນ ແລະທີ່ປາຍໃບຫູຂ້າງຂວາຂອງບຸດຊາຍຂອງເຂົາທຸກຄົນ ແລະທີ່ຫົວໂປ້ມືຂ້າງຂວາ ແລະທີ່ຫົວໂປ້ຕີນຂ້າງຂວາຂອງເຂົາ ແລ້ວຈິ່ງເອົາເລືອດທີ່ເຫລືອພົມອ້ອມຮອບແທ່ນບູຊາ

21 ຈິ່ງເອົາເລືອດສ່ວນນຶ່ງທີ່ຢູ່ເທິງແທ່ນແລະນ້ຳມັນເຈີມນັ້ນຫົດສົງອາໂຣນແລະເຄື່ອງຍົດຂອງເຂົາ ຈິ່ງຫົດສົງບຸດຊາຍທັງຫລາຍຂອງເຂົາ ແລະເຄື່ອງຍົດຂອງບຸດຊາຍເຫລົ່ານັ້ນດ້ວຍ ອາໂຣນແລະເຄື່ອງຍົດຂອງເຂົາຈະບໍຣິສຸດຮວມທັງບຸດຂອງເຂົາແລະເຄື່ອງຍົດຂອງເຂົາດ້ວຍ

22 “ເຈົ້າຈິ່ງເອົາໄຂມັນແກະໂຕຜູ້ແລະຫາງມັນກັບໄຂມັນທີ່ຕິດເຄື່ອງໃນ ແລະໄຂມັນທີ່ຕິດກັບຕັບແລະໄຕທັງສອງແລະໄຂມັນທີ່ຕິດຢູ່ກັບໂຕ ກັບຂາໂຕ້ຍຂ້າງຂວາດ້ວຍ (ເພາະເປັນແກະໃຊ້ສຳລັບການສະຖາປະນາ)

23 ແລະເຂົ້າຈີ່ກ້ອນນຶ່ງ ແລະເຂົ້າຈີ່ປິ້ນໃສ່ນ້ຳມັນແຜ່ນນຶ່ງ ແລະເຂົ້າຈີ່ແຜ່ນນຶ່ງຈາກກະຕ່າເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງ ຊຶ່ງຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າ

24 ແລ້ວຈິ່ງວາງສິ່ງຂອງເຫລົ່ານັ້ນໄວ້ໃນມືຂອງອາໂຣນ ແລະໃນມືບຸດຂອງເຂົາ ນຳໄປທຳພິທີຍື່ນຖວາຍໃຫ້ເປັນເຄື່ອງຍື່ນຖວາຍບູຊາແດ່ພຣະຜູ້ເປັນເຈົ້າ

25 ແລ້ວຈິ່ງຮັບສິ່ງເຫລົ່ານີ້ຈາກມືຂອງເຂົານຳໄປເຜົາເທິງແທ່ນບູຊາຮວມເຂົ້າກັບເຄື່ອງເຜົາບູຊາເປັນກິ່ນທີ່ພໍພຣະທັຍພຣະຜູ້ເປັນເຈົ້າ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

26 “ຈິ່ງເອົາຊີ້ນທີ່ເອິກແກະເຖິກຊຶ່ງເປັນແກະສະຖາປະນາອາໂຣນ ແລ້ວທຳພິທີຍື່ນຖວາຍເປັນເຄື່ອງບູຊາຍື່ນຖວາຍແດ່ພຣະຜູ້ເປັນເຈົ້າ ແລະນັ້ນຈະເປັນສ່ວນຂອງເຈົ້າ

27 ແລະຈິ່ງເອົາຊີ້ນທີ່ເອິກແກະເຖິກຊຶ່ງເປັນເຄື່ອງຍື່ນຖວາຍນັ້ນໄວ້ ແລະຊີ້ນຂາໂຕ້ຍອັນເປັນສ່ວນຍົກໃຫ້ແກ່ປະໂຣຫິດຊຶ່ງເປັນເຄື່ອງຍື່ນຖວາຍ ແລະຊຶ່ງເປັນຂອງຖວາຍຈາກແກະໃຊ້ສຳລັບການສະຖາປະນາ ດ້ວຍເປັນສ່ວນຂອງອາໂຣນແລະບຸດເຂົາ

28 ນັ້ນແຫລະ, ເປັນສ່ວນຊຶ່ງອາໂຣນແລະບຸດເຂົາຈະໄດ້ຮັບຈາກຊົນຊາດອິສຣາເອນ ເພາະເປັນສ່ວນທີ່ຍົກໃຫ້ແກ່ປະໂຣຫິດແລະຊົນຊາດອິສຣາເອນ ຈະຍົກໃຫ້ຈາກເຄື່ອງສານຕິບູຊາເປັນເຄື່ອງບູຊາຂອງເຂົາຖວາຍແດ່ພຣະເຈົ້າ

29 “ເຄື່ອງຍົດຂອງອາໂຣນຈະເປັນຂອງບຸດຊາຍຂອງເຂົາຕໍ່ໆໄປ ໃຫ້ເຂົາສວມເມື່ອເຂົາຮັບການຫົດສົງ ແລະໄດ້ຮັບການສະຖາ ປະນາຕຳແຫນ່ງ

30 ຈິ່ງໃຫ້ບຸດຊຶ່ງຈະເປັນປະໂຣຫິດແທນເຂົານັ້ນສວມເຄື່ອງຍົດເຫລົ່ານັ້ນຄົບເຈັດວັນ ຂນະທີ່ເຂົາມາຍັງເຕັນນັດພົບເພື່ອປົວລະບັດໃນບ່ອນສັກສິດ

31 “ຈົ່ງຕົ້ມຊີ້ນແກະເຖິກສຳລັບການສະຖາປະນາໃນສະຖານທີ່ສັກສິດ
32 ແລ້ວໃຫ້ອາໂຣນກັບບຸດຂອງເຂົາຮັບປະທານຊີ້ນແກະເຖິກນັ້ນ ແລະເຂົ້າຈີ່ຊຶ່ງຢູ່ໃນກະຕ່າທີ່ປະຕູເຕັນນັດພົບ
33 ໃຫ້ເຂົາຮັບປະທານຂອງຊຶ່ງນຳມາບູຊາລ້າງມົນທິນເພື່ອຈະສະຖາປະນາແລະຊຳຣະເຂົາເຫລົ່ານັ້ນໃຫ້ບໍຣິສຸດ ແຕ່
ສ່ວນພວກຄາຣະວາດຢ່າໃຫ້ຮັບປະທານ ເພາະເປັນຂອງບໍຣິສຸດ
34 ແລະຖ້າວ່າຊີ້ນທີ່ໃຊ້ໃນພິທີສະຖາປະນາ ແລະເຂົ້າຈີ່ນັ້ນຍັງເຫລືອຢູ່ຈົນຮຸ່ງເຊົ້າ ກໍໃຫ້ເຜົາສ່ວນທີ່ເຫລືອນັ້ນດ້ວຍໄຟ
ເສັຽ ຢ່າໃຫ້ຮັບປະທານເພາະເປັນຂອງບໍຣິສຸດ
35 “ດັ່ງນີ້ແຫລະ, ເຈົ້າຈົ່ງກະທຳໃຫ້ແກ່ອາໂຣນ ແລະບຸດເຂົາຕາມທີ່ເຮົາໄດ້ບັນຊາເຈົ້າໄວ້ ຈົ່ງທຳພິທີສະຖາປະນາເຂົາ
ໃຫ້ຄົບເຈັດວັນ
36 ຈົ່ງນຳງົວເຖິກໂຕນຶ່ງມາຖວາຍທຸກໆວັນ ເປັນເຄື່ອງບູຊາໄຖ່ຄືນຈາກບາບ ເພື່ອທຳການລ້າງມົນທິນ ແລະຈົ່ງຊຳຣະ
ແທ່ນບູຊາ ດ້ວຍທຳການລົບມົນທິນຂອງແທ່ນນັ້ນ ຈົ່ງທິດສົງແທ່ນນັ້ນເພື່ອຈະຊຳຣະໃຫ້ບໍຣິສຸດ
37 ຈົ່ງທຳການລ້າງມົນທິນແທ່ນນັ້ນຄົບເຈັດມື້ ແລະຊຳຣະແທ່ນນັ້ນໃຫ້ບໍຣິສຸດ ແລ້ວແທ່ນນັ້ນຈະບໍຣິສຸດທີ່ສຸດ ສິ່ງນຶ່ງສິ່ງ
ໃດທີ່ຖືກຕ້ອງແທ່ນນັ້ນກໍຈະບໍຣິສຸດດ້ວຍ

**ການຖວາຍບູຊາປະຈຳວັນ**

The Daily Offerings

38 (ຈຊບ 28:1-8)
39 “ຕໍ່ໄປນີ້ເປັນສິ່ງຊຶ່ງເຈົ້າຕ້ອງຖວາຍເທິງແທ່ນນັ້ນທຸກວັນສເມີໄປ ຄືລູກແກະສອງໂຕ ອາຍຸນຶ່ງປີ
40 ຈົ່ງນຳລູກແກະໂຕນຶ່ງມາບູຊາເວລາເຊົ້າ ແລະນຳອີກໂຕນຶ່ງມາບູຊາເວລາຄ່ຳ
41 ພ້ອມກັບລູກແກະໂຕທີ່ນຶ່ງນັ້ນ ຈົ່ງຖວາຍຍອດແປ້ງນຶ່ງໃນສິບເອຟາ ປົນໃສ່ກັບນ້ຳມັນທີ່ຄັ້ນໄວ້ນັ້ນນຶ່ງໃນສີ່ຮິນ ແລະ
ເຫລົ້າອະງຸ່ນນຶ່ງໃນສີ່ຮິນຄູ່ກັນ ເປັນເຄື່ອງດື່ມບູຊາ
42 ຈົ່ງຖວາຍແກະອີກໂຕນຶ່ງນັ້ນໃນເວລາຄ່ຳ ຖວາຍອາຫານບູຊາແລະເຄື່ອງດື່ມບູຊາຄູ່ກັນດ້ວຍ ເຫມືອນຢ່າງໃນເວລາ
ເຊົ້າ ໃຫ້ເປັນກິ່ນພໍພຣະທັຍ ເປັນເຄື່ອງບູຊາດ້ວຍໄຟແດ່ພຣະຜູ້ເປັນເຈົ້າ
43 ນີ້ຈະເປັນເຄື່ອງເຜົາບູຊາ ຕລອດຊົ່ວຊາດເຊື້ອສາຍຂອງເຈົ້າ ທີ່ປະຕູເຕັນນັດພົບສະເພາະພຣະພັກພຣະຜູ້ເປັນເຈົ້າ
ທີ່ຊຶ່ງເຮົາຈະພົບເຈົ້າທັງຫລາຍແລະສົນທະນາກັບເຈົ້າທີ່ນັ້ນ
44 ທີ່ນັ້ນເຮົາຈະພົບຊົນຊາດອິສຣາເອນ ແລະທຳເຕັນສັກສິດນັ້ນຈະຮັບການຊຳຣະໃຫ້ບໍຣິສຸດດ້ວຍພຣະສະງ່າຣາສີຂອງ
ເຮົາ
45 ເຮົາຈະຊຳຣະເຕັນນັດພົບແລະແທ່ນບູຊາໄວ້ເປັນທີ່ບໍຣິສຸດ ແລະເຮົາຈະຊຳຣະອາໂຣນ ແລະບຸດເຂົາໃຫ້ບໍຣິສຸດ
ດ້ວຍ ເພື່ອໃຫ້ເປັນປະໂຣຫິດປົວລະບັດເຮົາ
46 ເຮົາຈະສະຖິດຢູ່ຖ້າມກາງຊົນຊາດອິສຣາເອນ ແລະຈະເປັນພຣະເຈົ້າຂອງເຂົາ
47 ເຂົາຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຂົາ ຜູ້ໄດ້ນຳເຂົາອອກຈາກແຜ່ນດິນເອຢິບ ເພື່ອເຮົາຈະສະ
ຖິດຢູ່ຖ້າມກາງເຂົາທັງຫລາຍ ເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຂົາ

## 30 ແທ່ນເຄື່ອງຫອມ

The Altar of Incense

(ອພຍ 37:25-28)

1 “ເຈົ້າຈົ່ງສ້າງແທ່ນສຳລັບເຜົາເຄື່ອງຫອມ ຈົ່ງເຮັດແທ່ນນັ້ນດ້ວຍໄມ້ກະຖິນເທດ
2 ໃຫ້ຍາວສອກນຶ່ງ ກວ້າງສອກນຶ່ງ ເປັນຮູບສີ່ຫລ່ຽມ ແລະສູງສອງສອກ ເຊີງຍອດແທ່ນນັ້ນໃຫ້ເປັນໄມ້ທ່ອນດຽວກັນ
ກັບແທ່ນ

3 ແລະຈົ່ງໂອບແທ່ນດ້ວຍທອງຄຳບໍຣິສຸດ ທັງດ້ານເທິງແລະດ້ານຂ້າງທຸກດ້ານ ແລະເຊີງຍອດດ້ວຍ ແລະຈົ່ງ
ເຮັດຂອບທອງຄຳອ້ອມຮອບແທ່ນ
4 ຈົ່ງເຮັດຮ່ວງທອງຄຳສອງຮ່ວງ ຕິດໄວ້ໃຕ້ຂອບດ້ານລະຮ່ວງກົງກັນຂ້າມ ຮ່ວງນັ້ນສຳລັບສອດໃສ່ໄມ້ຄານຫາມ
5 ໄມ້ຄານຫາມນັ້ນຈົ່ງເຮັດດ້ວຍໄມ້ກະຖິນເທດໂອບດ້ວຍຄຳ
6 ຈົ່ງຕັ້ງແທ່ນນັ້ນໄວ້ຂ້າງນອກຜ້າກັ້ງຊຶ່ງຢູ່ໃກ້ຫີບຄຳສັນຍາຂ້າງຫນ້າພຣະທີ່ນັ່ງ ຊຶ່ງຢູ່ເຫນືອຫີບຄຳສັນຍາບ່ອນທີ່ເຮົາ
ຈະພົບກັບເຈົ້າ
7 ຈົ່ງໃຫ້ອາໂຣນເຜົາເຄື່ອງຫອມເທິງແທ່ນນັ້ນທຸກເວລາເຊົ້າ ເມື່ອເຂົາແຕ່ງເຄື່ອງຮອງຕີນໂຄມກໍຈົ່ງເຜົາເຄື່ອງຫອມດ້
ວຍ
8 ແລະໃນເວລາຄ່ຳ ເມື່ອອາໂຣນໄຕ້ຕະກຽງ ໃຫ້ເຜົາເຄື່ອງຫອມເທິງແທ່ນເປັນເຄື່ອງຫອມຕລອດໄປຕໍ່ພຣະພັກພ
ຣະຜູ້ເປັນເຈົ້າ ຕລອດຊົ່ວຊາດເຊື້ອສາຍຂອງເຈົ້າ
9 ແຕ່ເຄື່ອງຫອມຢ່າງທີ່ຫ້າມ ຢ່າໄດ້ເຜົາເທິງແທ່ນນັ້ນເລີຍ ຫລືເຜົາເຄື່ອງເຜົາບູຊາ ຫລືເຄື່ອງທັນຍາບູຊາ ຫລືເທເຄື່ອງ
ດື່ມບູຊາເທິງນັ້ນ
10 ໃຫ້ອາໂຣນທຳການບູຊາໄຖ່ບາບປີລະເທື່ອ ໃຫ້ເຂົາທຳການລ້າງມົນທິນແທ່ນນັ້ນປີລະຄັ້ງດ້ວຍເລືອດຂອງເຄື່ອງບູ
ຊາໄຖ່ບາບລ້າງມົນທິນຕລອດຊົ່ວຊາດເຊື້ອສາຍຂອງເຈົ້າ ແທ່ນນັ້ນຈະບໍຣິສຸດທີ່ສຸດແດ່ພຣະຜູ້ເປັນເຈົ້າ"

**ເງິນຄ່າໄຖ່ບາບ**

The Half Shekel for the Sanctuary

11 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
12 ເມື່ອເຈົ້າຈະຈົດສຳມະໂນຄົວຊົນຊາດອິສຣາເອນ ຈົ່ງໃຫ້ເຂົາຕ່າງນຳຊັບສິນມາຖວາຍພຣະຜູ້ເປັນເຈົ້າ ເປັນຄ່າໄຖ່ຊີ
ວິດ ເມື່ອເຈົ້ານັບຈຳນວນເຂົາ ເພື່ອຈະບໍ່ໄດ້ເກີດພັຍວິບັດຂຶ້ນໃນຫມູ່ພວກເຂົາເມື່ອເຈົ້ານັບເຂົາ
13 ທຸກຄົນທີ່ຂຶ້ນທະບຽນສຳມະໂນຄົວ ຈະຕ້ອງຖວາຍຂອງຢ່າງນີ້ ຄືເງິນເຄິ່ງເຊເກລ ຕາມເຊເກລຂອງສະຖານນະມັສ
ການ (ເຊເກລນຶ່ງມີຊາວເກຣາ) ເຄິ່ງເຊເກລເປັນເງິນຖວາຍແດ່ພຣະຜູ້ເປັນເຈົ້າ
14 ທຸກໆຄົນທີ່ຂຶ້ນທະບຽນສຳມະໂນຄົວ ອາຍຸຕັ້ງແຕ່ຊາວປີຂຶ້ນໄປ ໃຫ້ນຳເງິນມາຖວາຍພຣະຜູ້ເປັນເຈົ້າ
15 ເມື່ອເຈົ້າທັງຫລາຍນຳເງິນມາຖວາຍແດ່ພຣະຜູ້ເປັນເຈົ້າ ເພື່ອຈະໄດ້ໄຖ່ຊີວິດຂອງເຈົ້າທັງຫລາຍນັ້ນ ສຳລັບຄົນຮັ່ງມີ
ກໍຢ່າຖວາຍເກີນ ແລະສຳລັບຄົນຈົນກໍຢ່າໃຫ້ຫນ້ອຍກວ່າເຄິ່ງເຊເກລ
16 ຈົ່ງເກັບເງິນຄ່າໄຖ່ຈາກຊົນຊາດອິສຣາເອນ ແລະຈົ່ງກຳນົດເງິນໄວ້ໃຊ້ຈ່າຍໃນເຕັນນັດພົບ ເພື່ອພຣະຜູ້ເປັນເຈົ້າຈະ
ໄດ້ຊົງຣະນຶກເຖິງຊົນຊາດອິສຣາເອນສຳລັບການໄຖ່ຊີວິດຂອງເຈົ້າທັງຫລາຍ"

**ຂັນ**

The Bronze Basin

17 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
18 ເຈົ້າຈົ່ງເຮັດຂັນທອງສຳຣິດ ແລະພານຮອງຂັນທອງສຳຣິດດ້ວຍ ສຳລັບລ້າງຊຳຣະ ຈົ່ງຕັ້ງຂັນນັ້ນໄວ້ລະຫວ່າງເຕັນ
ນັດພົບ ແລະແທ່ນບູຊາ ແລ້ວຈົ່ງຕັກນ້ຳໃສ່ໄວ້ໃນຂັນນັ້ນ
19 ໃຫ້ອາໂຣນແລະບຸດຊາຍຂອງເຂົາໃຊ້ລ້າງມື ແລະຕີນ
20 ເມື່ອເຂົາຈະເຂົ້າໄປໃນເຕັນນັດພົບ ເຂົາຈະຕ້ອງຊຳຣະດ້ວຍນ້ຳເພື່ອຈະບໍ່ຕາຍ ເມື່ອເຂົາເຂົ້າມາໃກ້ແທ່ນທຳການ
ບົວລະບັດ ຄືຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຜູ້ເປັນເຈົ້າ
21 ຈົ່ງໃຫ້ເຂົາລ້າງມື ແລະຕີນເພື່ອຈະບໍ່ໄດ້ຕາຍ ແລະໃຫ້ເປັນກົດເກນຕລອດໄປປະຈຳຕົວເຂົາ ຄືອາໂຣນກັບເຊື້ອສາຍ
ຂອງເຂົາ ຕລອດຊົ່ວຊາດເຊື້ອສາຍຂອງເຂົາ"

**ນ້ຳມັນເຈີມແລະເຄື່ອງຫອມ**

The Anointing Oil and Incense

22 (ອພຍ 39:29)

23 ພຣະຜູ້ເປັນເຈົ້າຍັງກ່າວແກ່ໂມເຊວ່າ,

24 ຈົ່ງເອົາເຄື່ອງຫອມຊັ້ນດີທີ່ສຸດ ຄືຢາງໄມ້ຫອມ ຊຶ່ງມີນໍ້າຫນັກຫ້າຮ້ອຍເຊເກລ ແລະກໍາຍານເປັນກິ່ງຈໍານວນ ຄືສອງຮ້ອຍຫ້າສິບເຊເກລ ໃບເຕີຍຫອມສອງຮ້ອຍຫ້າສິບເຊເກລ

25 ແລະກາລະບູນຫ້າຮ້ອຍ ຕາມເຊເກລຂອງສະຖານນະມັສການ ແລະນໍ້າມັນຫມາກກອກເຫດນຶ່ງຮີນ

26 ເຈົ້າຈົ່ງເອົາສິ່ງເຫລົ່ານີ້ມາເຮັດເປັນນໍ້າມັນເຈີມອັນສັກສິດເປັນນໍ້າຫອມປຸງຕາມສິລປະຊ່າງປຸງ ນໍ້າມັນນັ້ນຈະເປັນນໍ້າມັນເຈີມອັນບໍຣິສຸດ

27 ແລ້ວຈົ່ງເອົານໍ້າມັນທາດສິງເຕັນນັດພົບ ແລະຫີບຄໍາສັນຍາດ້ວຍ

28 ໂຕະແລະເຄື່ອງໃຊ້ປະຈໍາໂຕະ ເຄື່ອງຮອງຕີນໂຄມ ກັບເຄື່ອງໃຊ້ປະຈໍາເຄື່ອງຮອງຕີນໂຄມ ແລະແທ່ນເຜົາເຄື່ອງຫອມ

29 ແທ່ນເຄື່ອງເຜົາບູຊາ ແລະເຄື່ອງໃຊ້ປະຈໍາແທ່ນ ທັງຂັນແລະພານຮອງຂັນນັ້ນ

30 ຈົ່ງຊໍາຣະໃຫ້ບໍຣິສຸດເພື່ອຈະໄດ້ບໍຣິສຸດທີ່ສຸດ ແລະອັນໃດມາຖືກສິ່ງເຫລົ່ານັ້ນກໍບໍຣິສຸດດ້ວຍ

31 ຈົ່ງຊໍາຣະອາໂຣນ ແລະບຸດຂອງເຂົາໄວ້ໃຫ້ບໍຣິສຸດ ເພື່ອເຂົາຈະໄດ້ເປັນປະໂຣຫິດບົວລະບັດເຮົາ

32 ທ່ານຈົ່ງກ່າວແກ່ຊົນຊາດອິສຣາເອນວ່າ ນີ້ແຫລະ ເປັນນໍ້າມັນເຈີມອັນບໍຣິສຸດສໍາລັບເຮົາ ຕລອດຊົ່ວຊາດເຊື້ອສາຍຂອງເຈົ້າ

33 ນໍ້າມັນນີ້ຢ່າໃຫ້ທາດສິງຄົນສາມັນເລີຍ ແລະຢ່າປະສົມເຮັດນໍ້າມັນອື່ນເຫມືອນຢ່າງນໍ້າມັນນີ້ ນໍ້າມັນນີ້ເປັນນໍ້າມັນບໍຣິສຸດ ເຈົ້າທັງຫລາຍຈົ່ງຖືໄວ້ເປັນບໍຣິສຸດ

34 ຜູ້ໃດຈະປະສົມນໍ້າມັນຢ່າງນີ້ ຫລືຜູ້ໃດຈະໃຊ້ທາດສິງຄົນຂ້າງນອກ ຜູ້ນັ້ນຈະບໍ່ຖືກນັບເຂົ້າເປັນປະຊາຊົນຂອງເຮົາອີກຕໍ່ໄປ”

35 ພຣະຜູ້ເປັນເຈົ້າກ່າວແກ່ໂມເຊວ່າ, “ຈົ່ງເອົາເຄື່ອງເທດ ຄືກໍາຍານ ຊາມົດ ແລະມະຫາຫິງ ປະສົມກັບກໍາຍານບໍຣິສຸດ (ໃຫ້ເທົ່າໆກັນທຸກຢ່າງ)

36 ຈົ່ງປະສົມເຄື່ອງຫອມປຸງຕາມສິລປະຊ່າງປຸງປົນດ້ວຍເກືອໃດ້ເປັນຂອງບໍຣິສຸດແລະສັກສິດ

37 ຈົ່ງເອົາສ່ວນນຶ່ງມາຕໍາໃຫ້ລະອຽດ ແລະວາງອີກສ່ວນນຶ່ງໄວ້ຫນ້າຫີບຄໍາສັນຍາໃນເຕັນນັດພົບທີ່ເຮົາຈະພົບກັບເຈົ້າ ເຄື່ອງຫອມນັ້ນເຈົ້າຈົ່ງຖືວ່າບໍຣິສຸດທີ່ສຸດ

38 ເຄື່ອງຫອມທີ່ເຈົ້າກະທໍາຕາມສ່ວນທີ່ປະສົມນັ້ນເຈົ້າຢ່າທໍາໃຊ້ເອງໃຫ້ຖືວ່ານີ້ເປັນເຄື່ອງຫອມສັກສິດແດ່ພຣະຜູ້ເປັນເຈົ້າ

39 ຜູ້ໃດທໍາເຄື່ອງເຊັ່ນນີ້ໄວ້ໃຊ້ເປັນນໍ້າຫອມ ຜູ້ນັ້ນຈະບໍ່ຖືກນັບເຂົ້າເປັນປະຊາຊົນຂອງເຮົາອີກຕໍ່ໄປ”

## 31 ຊົງເອີ້ນເບຊາເລນ ແລະໂອໂຮລີອາບ

Bezalel and Oholiab

(ອພຍ 35:30--36:1)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,

2 “ເບິ່ງແມ໋, ເຮົາໄດ້ອອກຊື່ເບຊາເອນ ຜູ້ເປັນບຸດອູຣີ ຜູ້ເປັນບຸດເຮີແຫ່ງເຜົ່າຢູດາ

3 ແລະໄດ້ໃຫ້ເຂົາປະກອບດ້ວຍພຣະວິນຍານຂອງພຣະເຈົ້າ ຄືໃຫ້ເຂົາມີສະຕິປັນຍາຄວາມເຂົ້າໃຈແລະຄວາມຮູ້ໃນວິຊາການທຸກຢ່າງ

4 ຈະໄດ້ຄິດອອກແບບຢ່າງປານີດໃນການເຮັດເຄື່ອງຄໍາ ເງິນ ແລະທອງສໍາຣິດ

5 ເຈັຽຣະນັຍພອຍຕ່າງໆສຳລັບຝັງໃນກະເປົ໋າແລະແກະສລັກໄມ້ໄດ້ ຄືປະກອບວິຊາການທຸກຢ່າງ
6 ແລະເບິ່ງແມ, ເຮົາໄດ້ຕັ້ງຜູ້ຊ່ອຍອີກຄົນນຶ່ງຊື່ ໂອໂຮລີອາບ ບຸດອາຮີຊາມາກແຫ່ງເຜົ່າດານ ເຮົາໄດ້ໃຫ້ຄວາມສາ
ມາດແກ່ຄົນທັງປວງທີ່ມີສີມືເພື່ອເຂົາຈະໄດ້ເຮັດສິ່ງສາຣະພັດ ຊຶ່ງເຮົາໄດ້ສັ່ງເຈົ້າໄວ້ນັ້ນ
7 ຄືເຕັນນັດພົບ ຫີບຄຳສັນຍາ ແລະພຣະທີ່ນັ່ງກະຣຸນາ ຊຶ່ງຢູ່ເທິງຫີບຄຳສັນຍາ ແລະເຄື່ອງໃຊ້ທຸກຢ່າງສຳລັບເຕັນ
8 ໂຕະກັບເຄື່ອງໃຊ້ທຸກຢ່າງສຳລັບໂຕະ ເຄື່ອງຮອງຕີນໂຄມບໍຣິສຸດກັບເຄື່ອງໃຊ້ສຳລັບເຄື່ອງຮອງຕີນໂຄມ ແລະແທ່ນ
ເຄື່ອງຫອມ
9 ແທ່ນເຄື່ອງເຜົາບູຊາກັບເຄື່ອງໃຊ້ປະຈຳແທ່ນ ຂັນກັບພານຮອງ
10 ເສື້ອຍົດທຍິບດ້ວຍສີມືປານີດ ຄືເສື້ອຍົດອັນບໍຣິສຸດຂອງອາໂຣນປະໂຣຫິດ ແລະເສື້ອຍົດຂອງບຸດຂອງເຂົາ ເພື່ອຈະ
ໄດ້ສວມໃສ່ປະຕິບັດໃນຕຳແຫນ່ງປະໂຣຫິດ
11 ແລະນ້ຳມັນເຈີມກັບເຄື່ອງຫອມສຳລັບສະຖານສັກສິດທີ່ເຮົາບັນຊາເຈົ້ານັ້ນ ໃຫ້ເຂົາກະທຳຕາມທຸກປະການ"

**ວັນສະບາໂຕ**

The Sabbath Law

12 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
13 "ຈົ່ງສັ່ງຊົນຊາດອິສຣາເອນວ່າ ເຈົ້າທັງຫລາຍຈົ່ງຮັກສາວັນສະບາໂຕຂອງເຮົາໄວ້ ເພາະນີ້ຈະເປັນຫມາຍສຳຄັນລະ
ຫວ່າງເຮົາກັບເຈົ້າຕລອດຊົ່ວຊາດເຊື້ອສາຍຂອງເຈົ້າ ເພື່ອເຈົ້າຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ ຜູ້ໄດ້ກະທຳເຈົ້າໃຫ້ບໍຣິ
ສຸດ
14 ເຫດສັນນັ້ນ ເຈົ້າທັງຫລາຍຈົ່ງຮັກສາວັນສະບາໂຕໄວ້ ເພາະເປັນວັນບໍຣິສຸດສຳລັບເຈົ້າ ຜູ້ໃດກະທຳໃຫ້ວັນນັ້ນເປັນ
ມົນທິນຈະຕ້ອງຖືກລົງໂທດເຖິງຕາຍ ຖ້າຜູ້ໃດເຮັດການງານໃນວັນນັ້ນ ຜູ້ນັ້ນຕ້ອງຖືກຈຳກັດອອກເສັຽຈາກພັກພວກ
ຂອງຕົນ
15 ຈົ່ງເຮັດງານແຕ່ໃນກຳຫນົດຫົກວັນ ແຕ່ໃນວັນທີເຈັດເປັນວັນສະບາໂຕ ເປັນວັນຢຸດພັກສງົບ ເປັນວັນບໍຣິສຸດແດ່ພ
ຣະຜູ້ເປັນເຈົ້າ ຜູ້ໃດເຮັດງານໃນວັນນັ້ນຕ້ອງຖືກລົງໂທດເຖິງຕາຍ
16 ເຫດສັນນີ້ ຊົນຊາດອິສຣາເອນຈົ່ງຖືວັນສະບາໂຕຕລອດຊົ່ວຊາດເຊື້ອສາຍຂອງເຂົາ ເປັນພັນທະສັນຍາ
17 ເປັນຫມາຍສຳຄັນລະຫວ່າງເຮົາກັບຊົນຊາດອິສຣາເອນວ່າ ໃນຫົກວັນພຣະຜູ້ເປັນຈົ້າໄດ້ຊົງສ້າງຟ້າສວັນ ແລະແຜ່ນ
ດິນໂລກ ແຕ່ໃນວັນທີເຈັດພຣະອົງໄດ້ຊົງງົດການງານໄວ້ ແລະໄດ້ຊົງຢ່ອນພຣະທັຍໃນວັນນັ້ນ"

The Two Tablets of the Covenant

18 ເມື່ອພຣະເຈົ້າກ່າວແກ່ໂມເຊເທິງພູເຂົາຊີນາອີແລ້ວ ພຣະອົງໄດ້ປະທານແຜ່ນພຣະໂອວາດສອງແຜ່ນເປັນແຜ່ນ
ສີລາຈາລຶກດ້ວຍນິ້ວພຣະຫັດຂອງພຣະເຈົ້າ

## 32 ງົວຄຳ

The Golden Calf

(ພບຍ 9:6-29)

1 ເມື່ອປະຊາຊົນເຫັນໂມເຊພັກຢູ່ເທິງພູເຫິງນານ ບໍ່ລົງມາຈັກເທື່ອ ພວກເຂົາກໍພາກັນມາຫຸ້ມລ້ອມອາໂຣນເວົ້າວ່າ,
"ຈົ່ງສ້າງຮູບ ພຣະສຳລັບນຳຫນ້າພວກເຮົາໄປເທາະ ດ້ວຍວ່າໂມເຊຄົນທີ່ນຳພວກເຮົາອອກຈາກປະເທດເອຢິບນັ້ນ
ພວກເຮົາບໍ່ຮູ້ວ່າທ່ານເປັນຫຍັງໄປເສັຽແລ້ວ?"
2 ອາໂຣນໄດ້ຕອບພວກເຂົາວ່າ, "ຈົ່ງຖອດຕຸ້ມຫູທອງຄຳອອກຈາກຫູພັຣຍາແລະບຸດຊາຍຍິງຂອງພວກເຈົ້າ ແລ້ວໃຫ້
ເອົາມັນມາໃຫ້ເຮົາ"
3 ສະນັ້ນ ປະຊາຊົນທັງຫມົດຈຶ່ງຖອດຕຸ້ມຫູທອງຄຳຂອງຕົນມາມອບໃຫ້ອາໂຣນ

4 ອາໂຣນກໍຮັບເອົາຕຸ້ມຫູນັ້ນ ແລ້ວໃຊ້ເຄື່ອງມືຫລໍ່ເປັນຮູບງົວນ້ອຍ ປະຊາຊົນໄດ້ເວົ້າວ່າ, “ອິສຣາເອນເອີຍ, ອັນນີ້
ແມ່ນພຣະຂອງພວກເຮົາ ຊຶ່ງໄດ້ນຳພວກເຮົາອອກຈາກປະເທດເອຢິບ”
5 ເມື່ອອາໂຣນໄດ້ຍິນດັ່ງນັ້ນແລ້ວ ຈຶ່ງສ້າງແທ່ນອັນນຶ່ງໄວ້ຕໍ່ຫນ້າຮູບງົວຄຳ ແລ້ວປະກາດວ່າ, “ມື້ອື່ນຈະມີງານກິນລ້ຽງ
ຖວາຍ  ພຣະກຽດແດ່ພຣະຜູ້ເປັນເຈົ້າ”
6 ຄັນຮອດມື້ອື່ນຕອນເຊົ້າມືດ ພວກເຂົາກໍເຜົາສັດຖວາຍ ແລະນຳສັດຕົວອື່ນມາຖວາຍເພື່ອຄວາມສາມັກຄີ ຝ່າຍປະ
ຊາຊົນກໍນັ່ງລົງກິນແລະດື່ມ ແລ້ວກໍຫລິ້ນມ່ວນຊື່ນກັນ
7 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ຈົ່ງລົງໄປດຽວນີ້ ດ້ວຍວ່າປະຊາຊົນຂອງເຈົ້າ ຊຶ່ງເຈົ້າໄດ້ນຳພາອອກມາຈາກປະ
ເທດເອຢິບນັ້ນໄດ້ເຮັດຜິດເສັຽແລ້ວ
8 ພວກເຂົາໄດ້ປະຖິ້ມທາງປະພຶດທີ່ເຮົາສັ່ງໃຫ້ເຮັດ ຄືເຂົາໄດ້ຟ້າວຫລໍ່ຮູບງົວນ້ອຍດ້ວຍຄຳຮູບນຶ່ງສຳລັບຂາບໄຫວ້
ແລະຖວາຍບູຊາ ພວກເຂົາເວົ້າວ່າ ອິສຣາເອນເອີຍ, ອັນນີ້ແມ່ນພຣະຂອງພວກເຮົາ ຊຶ່ງໄດ້ນຳພາພວກເຮົາອອກ
ຈາກເອຢິບ”
9 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ເຮົາຮູ້ປະຊາຊົນພວກນີ້ດີ ເຂົາເປັນຄົນຫົວດື້
10 ບັດນີ້ ປ່ອຍໃຫ້ເປັນຫນ້າທີ່ຂອງເຮົາ ເຮົາຈະທຳລາຍເຂົາດ້ວຍຄວາມໂກດຂອງເຮົາ ແລ້ວເຮົາຈະເຮັດໃຫ້ເຈົ້າແລະ
ເຊື້ອສາຍຂອງເຈົ້າເປັນປະຊາຊາດໃຫຍ່”
11 ແຕ່ໂມເຊໄດ້ຫນ່ຽວອອນພຣະຜູ້ເປັນເຈົ້າຂອງຕົນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ດ້ວຍເຫດໃດພຣະອົງຈຶ່ງປ່ອຍໃຫ້
ພຣະພິໂຣດຂອງພຣະອົງລຸກໄຫມ້ໄພ່ພົນຂອງພຣະອົງ ຊຶ່ງແມ່ນພຣະອົງໄດ້ຊົງນຳເຂົາອອກມາຈາກປະເທດເອຢິບ
ດ້ວຍຄວາມຍິ່ງໃຫຍ່ແລະຣິດທານຸພາບ
12 ພຣະອົງຢາກຈະໃຫ້ຊາວເອຢິບເວົ້າຫລືວ່າ ພຣະອົງໄດ້ຊົງນຳເຂົາອອກມາຈາກເອຢິບດ້ວຍເຈຕະນາຮ້າຍ ຄືເພື່ອປະ
ຫານຊີວິດແລະທຳລາຍເຂົາໃຫ້ຕາຍຫມົດຢູ່ເທິງພູ ຂໍພຣະອົງຊົງຄາຍພຣະພິໂຣດ ອັນແຮງກ້າຂອງພຣະອົງເສັຽ
ຖ້ອນ ແລະຊົງປ່ຽນພຣະທັຍຢ່ານຳໄພວິບັດຢ່າງນີ້ມາສູ່ໄພ່ພົນຂອງພຣະອົງທ້ອນ
13 ຂໍພຣະອົງຊົງລະນຶກເຖິງອັບຣາຮາມ ອີຊາກ ແລະອິສຣາເອນຜູ້ຮັບໃຊ້ຂອງພຣະອົງ ຜູ້ຊຶ່ງພຣະອົງໄດ້ປະຕິຍານໄວ້
ກັບເຂົາດ້ວຍ ພຣະນາມຂອງພຣະອົງເອງວ່າ ເຮົາຈະໃຫ້ເຊື້ອສາຍຂອງເຈົ້າເພີ້ມທະວີຫລາຍຂຶ້ນເຫມືອນດາວໃນ
ທ້ອງຟ້າ ແລະໃຫ້ແຜ່ນດິນທັງຫມົດແກ່ເຊື້ອສາຍຂອງເຈົ້າຕາມທີ່ເຮົາໄດ້ສັນຍາໄວ້ ພວກເຂົາຈະໄດ້ເປັນເຈົ້າຂອງຕ
ລອດໄປເປັນນິດ”
14 ສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງປ່ຽນພຣະທັຍ ບໍ່ຊົງນຳພັຍວິບັດມາສູ່ໄພ່ພົນຂອງພຣະອົງຕາມທີ່ຊົງກ່າວນັ້ນ
15 ຝ່າຍໂມເຊໄດ້ກັບລົງມາຈາກພູ ຖືແຜ່ນຫີນພຣະໂອວາດມາສອງແຜ່ນ
16 ໃນແຜ່ນຫີນນັ້ນໄດ້ຈາຣຶກພຣະຄຳຂອງພຣະເຈົ້າໄວ້ທັງສອງຂ້າງ ເປັນພຣະຫັຖະກິດຂອງພຣະເຈົ້າ ພຣະເຈົ້າຊົງ
ຈາລຶກໃສ່ແຜ່ນຫີນນັ້ນ
17 ເມື່ອໂຢຊວຍໄດ້ຍິນສຽງປະຊາຊົນອຶກກະທຶກຢູ່ ເຂົາກໍເວົ້າກັບໂມເຊວ່າ, “ຂ້າພະເຈົ້າໄດ້ຍິນສຽງສູ້ຮົບກັນຢູ່ໃນຄ້າຍ”
18 ໂມເຊໄດ້ຕອບວ່າ, “ນັ້ນບໍ່ແມ່ນສຽງຂອງຄົນທີ່ມີຊັຍຊະນະ ແລະບໍ່ແມ່ນສຽງຮ້ອງໄຫ້ຂອງຄົນທີ່ຜ່າຍແພ້ ສຽງທີ່ໄດ້
ຍິນນັ້ນແມ່ນສຽງຮ້ອງເພງ”
19 ເມື່ອໂມເຊເຂົ້າມາໃກ້ຄ້າຍ ກໍເຫັນຮູບງົວນ້ອຍແລະເຫັນປະຊາຊົນກຳລັງເຕັ້ນລຳກັນຢູ່ ທ່ານຈຶ່ງຮ້າຍຢ່າງຮຸນແຮງ
ໂດຍໄດ້ໂຍນແຜ່ນຫີນທີ່ຖືມານັ້ນຖິ້ມຈົນແຕກເສັຽຫາຍຢູ່ທີ່ຕີນພູ
20 ທ່ານໄດ້ເຜົາຮູບງົວນ້ອຍທີ່ພວກເຂົາສ້າງຂຶ້ນນັ້ນຖິ້ມ ໄດ້ບົດລະອຽດໂຮຍລົງໃນນ້ຳ ແລ້ວໄດ້ບັງຄັບໃຫ້ຊາວອິສຣາ
ເອນດື່ມ
21 ໂມເຊໄດ້ຖາມອາໂຣນວ່າ, “ປະຊາຊົນພວກນີ້ໄດ້ເຮັດຫຍັງໃຫ້ເຈົ້າ ເຈົ້າຈຶ່ງພາພວກເຂົາເຮັດບາບຢ່າງໃຫຍ່ຫລວງ
ຢ່າງນີ້?”

22 ອາໂຣນໄດ້ຕອບວ່າ, “ຢ່າຄຽດຮ້າຍຂ້າພະເຈົ້າເທາະ ທ່ານກໍຮູ້ວ່າປະຊາຊົນເຫລົ່ານີ້ໄດ້ອວ່າຍໜ້າໄປສູ່ທາງຊົ່ວ
ແລ້ວ
23 ເຂົາໄດ້ມາຮ້ອງຂໍຕໍ່ຂ້າພະເຈົ້າວ່າ ໃຫ້ສ້າງຮູບພຣະສຳລັບນຳໜ້າພວກເຂົາໄປ ເພາະພວກເຂົາບໍ່ຮູ້ຈັກວ່າໂມເຊຄົນ
ທີ່ນຳພາພວກເຂົາອອກຈາກປະເທດເອຢິບນັ້ນເປັນຫຍັງໄປເສັຽແລ້ວ
24 ຂ້າພະເຈົ້າຈຶ່ງຖາມເຂົາວ່າຜູ້ໃດມີຄຳແດ່ ຜູ້ທີ່ມີເຄື່ອງຄຳຈຶ່ງຖອດອອກມາມອບໃຫ້ຂ້າພະເຈົ້າ ຂ້າພະເຈົ້າຈຶ່ງເອົາໄປ
ໃສ່ໄຟຫລໍ່ເປັນຮູບງົວນ້ອຍນີ້ອອກມາ”
25 ໂມເຊເຫັນວ່າປະຊາຊົນນີ້ຫລິງງົມງາຍຫລາຍ ເພາະອາໂຣນໄດ້ປ່ອຍໃຫ້ເຂົາຂາບໄຫວ້ຮູບພຣະທັງໆທີ່ສັດຕຣູມີຢູ່
ຮອບຕົວເຂົາ
26 ດັ່ງນັ້ນ ໂມເຊຈຶ່ງໄປຢືນຢູ່ທີ່ປະຕູຄ້າຍ ແລະຮ້ອງຂຶ້ນວ່າ, “ຜູ້ໃດຢູ່ຝ່າຍພຣະຜູ້ເປັນເຈົ້າໃຫ້ຜູ້ນັ້ນມາຫາເຮົາເດີ?”
ພວກເລວີທັງໝົດໄດ້ມາຫາໂມເຊ
27 ທ່ານຈຶ່ງເວົ້າກັບເຂົາວ່າ, “ພຣະຜູ້ເປັນເຈົ້າຂອງພວກອິສຣາເອນຊົງກ່າວວ່າ ໃຫ້ພວກເຂົາທຸກຄົນຖືດາບ ບຸກຜ່າຄ້າຍ
ເຂົ້າໄປແຕ່ປະຕູນີ້ເຖິງປະຕູນັ້ນ ແລ້ວໃຫ້ຂ້າອ້າຍນ້ອງ ມິດສະຫາຍແລະເພື່ອນບ້ານຂອງພວກເຈົ້າ”
28 ພວກເລວີຈຶ່ງທຳຕາມໂມເຊສັ່ງ ພວກເຂົາໄດ້ຂ້າປະຊາຊົນຕາຍໃນມື້ນັ້ນປະມານສາມພັນຄົນ
29 ແລ້ວໂມເຊໄດ້ເວົ້າຕໍ່ພວກເລວີ, “ວັນນີ້ພວກເຈົ້າໄດ້ສະຖາປະນາໂຕເອງຂຶ້ນເປັນປະໂຣຫິດຮັບໃຊ້ພຣະຜູ້ເປັນເຈົ້າ
ແລ້ວ ໂດຍໄດ້ຂ້າບຸດຊາຍແລະເອື້ອຍນ້ອງຂອງຕົນ ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງອວຍພຣະພອນໃຫ້ພວກເຈົ້າໃນ
ວັນນີ້”
30 ວັນຕໍ່ມາ ໂມເຊໄດ້ເວົ້າກັບປະຊາຊົນວ່າ, “ພວກເຈົ້າໄດ້ເຮັດບາບຢ່າງຮ້າຍແຮງ ບັດນີ້ ເຮົາຈະຂຶ້ນໄປເຝົ້າພຣະຜູ້
ເປັນເຈົ້າຢູ່ເທິງພູ ບາງທີເຮົາອາດສາມາດໄຖ່ບາບໃຫ້ພວກເຈົ້າໄດ້”
31 ດັ່ງນັ້ນ ໂມເຊຈຶ່ງກັບຄືນໄປເຝົ້າພຣະຜູ້ເປັນເຈົ້າກາບທູນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ປະຊາຊົນນີ້ໄດ້ເຮັດບາບຢ່າງ
ຮ້າຍແຮງ ພວກເຂົາໄດ້ຫລໍ່ພຣະຄຳສຳລັບຕົນເອງ
32 ແຕ່ບັດນີ້ ຂໍພຣະອົງຊົງໂຜດໃຫ້ອະພັຍບາບແກ່ເຂົາ ຖ້າພຣະອົງບໍ່ຊົງພໍພຣະທັຍ ໂຜດຂໍພຣະອົງຊົງລຶບຊື່ຂອງຂ້າ
ພຣະອົງອອກຈາກປຶ້ມທີ່ພຣະອົງຊົງຈົດໄວ້ເສັຽ”
33 ພຣະຜູ້ເປັນເຈົ້າຊົງຕອບໂມເຊວ່າ, “ຜູ້ໃດເຮັດບາບຕໍ່ສູ້ເຮົາ ເຮົາຈະລຶບຊື່ຜູ້ນັ້ນອອກຈາກປຶ້ມຂອງເຮົາ
34 ບັດນີ້ ຈົ່ງໄປເສັຽໃຫ້ພາປະຊາຊົນໄປຍັງບ່ອນທີ່ເຮົາບອກໃຫ້ໄປນັ້ນ ຈົ່ງຈື່ໄວ້ວ່າ ເທວະດາຂອງເຮົາຈະນຳໜ້າເຈົ້າ
ໄປ ແຕ່ເມື່ອເຮົາມາພິພາກສາ ພວກເຂົາຈະຖືກລົງໂທດຍ້ອນບາບຂອງເຂົາເອງ”
35 ພຣະຜູ້ເປັນເຈົ້າໄດ້ຊົງໃຫ້ພຍາດເກີດມີຂຶ້ນໃນໝູ່ປະຊາຊົນ ເພາະວ່າພວກເຂົາໄດ້ບັງຄັບໃຫ້ອາໂຣນຫລໍ່ຮູບງົວ
ນ້ອຍ

## 33 ພຣະຜູ້ເປັນເຈົ້າສັ່ງໃຫ້ຍົກຍ້າຍໄປ

The Command to Leave Sinai

1 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ເຈົ້າກັບປະຊາຊົນທີ່ເຈົ້າໄດ້ນຳອອກມາຈາກປະເທດເອຢິບ ຈົ່ງຍົກຍ້າຍໄປຈາກ
ບ່ອນນີ້ເສັຽ ໃຫ້ໄປຍັງແຜ່ນດິນທີ່ເຮົາໄດ້ສັນຍາໄວ້ກັບອັບຣາຮາມ ກັບອີຊາກ ແລະຢາໂຄບ ຄືເຮົາໄດ້ສັນຍາຕໍ່ເຂົາ
ວ່າຈະຍົກແຜ່ນດິນນັ້ນ ໃຫ້ແກ່ເຊື້ອສາຍຂອງເຂົາ
2 ເຮົາຈະໃຫ້ເທວະດາຕົນນຶ່ງນຳໜ້າເຈົ້າໄປ ເຮົາຈະຂັບໄລ່ຊາວການາອານ ຊາວອາໂມຣິດ ຊາວຮິດຕີ ຊາວເປຣີສຊີ
ຊາວຮີວີ ແລະຊາວເຢບຸສ ອອກຈາກທີ່ນັ້ນ
3 ເຈົ້າຈະໄປເຖິງແຜ່ນດິນທີ່ອຸດົມສົມບູນ ແຕ່ເຮົາເອງຈະບໍ່ໄປກັບພວກເຈົ້າ ເພາະພວກເຈົ້າເປັນປະຊາຊົນຫົວດື້ ຖ້າ
ເຮົາໄປ ເຮົາອາດຈະທຳຮ້າຍພວກເຈົ້າໃນກາງທາງ”

4 ເມື່ອປະຊາຊົນໄດ້ຍິນຂ່າວຮ້າຍນີ້ ພວກເຂົາກໍພາກັນໄວ້ທຸກ ແລະບໍ່ມີຜູ້ໃດໃສ່ເຄື່ອງເອ້ເລີຍ
5 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ຈົ່ງບອກຊາວອິສຣາເອນວ່າ ພວກເຈົ້າເປັນຄົນຫົວດື້ ຖ້າພຣະຜູ້ເປັນເຈົ້າໄປກັບ
ພວກເຈົ້າແມ່ນຊົ່ວເວລາຫນ້ອຍດຽວ ພຣະອົງກໍຈະລ້າງຜານພວກເຈົ້າເສັຽ ບັດນີ້ ຈົ່ງຖອດເຄື່ອງເອ້ຂອງພວກເຈົ້າ
ອອກ ເພື່ອພຣະອົງຈະໄດ້ຮູ້ວ່າຄວນເຮັດຫຍັງກັບພວກເຈົ້າ”
6 ດັ່ງນັ້ນ ປະຊາຊົນອິສຣາເອນຈຶ່ງບໍ່ໃສ່ເຄື່ອງເອ້ຕັ້ງແຕ່ຍົກຍ້າຍອອກຈາກໂຮເຣັບເປັນຕົ້ນມາ

**ຫໍເຕັນສັກສິດ**

The Tent outside the Camp

7 ໂມເຊເຄີຍກາງເຕັນຫລັງນຶ່ງໄວ້ຂ້າງນອກຄ້າຍໃນລະຍະໄກ ທ່ານໄດ້ເອີ້ນເຕັນຫລັງນັ້ນວ່າ “ຫໍເຕັນສັກສິດ” ຄົນໃດ
ຢາກຈະເຂົ້າເຝົ້າພຣະຜູ້ເປັນເຈົ້າກໍອອກໄປຍັງຫໍເຕັນສັກສິດນັ້ນ
8 ເມື່ອໃດໂມເຊອອກໄປຍັງເຕັນ ປະຊາຊົນທັງຫມົດກໍຢືນຢູ່ທີ່ປະຕູເຕັນຂອງຕົນ ເພື່ອເຝົ້າເບິ່ງໂມເຊຈົນກະທັ້ງທ່ານ
ເຂົ້າໄປໃນເຕັນ
9 ເມື່ອໂມເຊເຂົ້າໄປໃນເຕັນແລ້ວ ກ້ອນເສົາເມກກໍລອຍລົງມາຕັ້ງຢູ່ທີ່ປະຕູເຕັນ ແລ້ວພຣະຜູ້ເປັນເຈົ້າໄດ້ຊົງສົນທະນາ
ກັບໂມເຊຈາກກ້ອນເສົາເມກນັ້ນ
10 ເມື່ອປະຊາຊົນເຫັນກ້ອນເສົາເມກນັ້ນຕັ້ງຢູ່ທີ່ປະຕູເຕັນ ເຂົາກໍລຸກຢືນຂຶ້ນກົ້ມນະມັສການທີ່ປະຕູເຕັນຂອງຕົນ
11 ພຣະຜູ້ເປັນເຈົ້າຊົງສົນທະນາກັບໂມເຊ ຫນ້າຕໍ່ຫນ້າເຫມືອນມິດສະຫາຍສົນທະນາກັນ ແລ້ວໂມເຊກໍກັບໄປຍັງຄ້າຍ
ແຕ່ໂຢຊວຍຄົນໃຊ້ຫນຸ່ມ ຜູ້ເປັນບຸດນູນບໍ່ໄດ້ອອກໄປຈາກເຕັນ

**ພຣະຜູ້ເປັນເຈົ້າຊົງສັນຍາວ່າຈະຢູ່ນຳ**

Moses' Intercession

12 ໂມເຊໄດ້ກາບທູນພຣະຜູ້ເປັນເຈົ້າວ່າ, “ເປັນຄວາມຈິງວ່າພຣະອົງໄດ້ຊົງບອກໃຫ້ຂ້າພຣະອົງນຳພາປະຊາຊົນນີ້ໄປ
ຍັງແຜ່ນດິນນັ້ນ ແຕ່ພຣະອົງບໍ່ໄດ້ຊົງບອກໃຫ້ຂ້າພຣະອົງຮູ້ວ່າ ແມ່ນຜູ້ໃດຈະໄປນຳຂ້າພຣະອົງ ພຣະອົງຊົງບອກແຕ່
ພຽງວ່າ ເຮົາຮູ້ຈັກເຈົ້າດີ ເຮົາພໍໃຈໃນເຈົ້າ
13 ບັດນີ້ ຖ້າພຣະອົງພໍພຣະທັຍໃນຂ້າພຣະອົງ ຂໍພຣະອົງຊົງບອກແຜນການຂອງພຣະອົງໃຫ້ຂ້າພຣະອົງຮູ້ແດ່ ເພື່ອ
ຂ້າພຣະອົງຈະໄດ້ຮູ້ຈັກພຣະອົງ ແລະໄດ້ຮັບຄວາມພໍພຣະທັຍຈາກພຣະອົງສເມີໄປ ຂໍພຣະອົງຊົງສຳນຶກດ້ວຍວ່າ
ຊົນຊາດນີ້ເປັນໄພ່ພົນຂອງ ພຣະອົງ”
14 ພຣະຜູ້ເປັນເຈົ້າຊົງຕອບວ່າ, “ເຮົາຈະໄປນຳເຈົ້າ ຈະໃຫ້ເຈົ້າມີໄຊຊະນະ ແລະມີຄວາມສງົບສຸກ”
15 ໂມເຊໄດ້ກາບທູນພຣະອົງວ່າ, “ຖ້າພຣະອົງບໍ່ສະເດັດໄປນຳພວກຂ້າພຣະອົງ ຂໍຢ່າໃຫ້ພວກຂ້າພຣະອົງຫນີໄປຈາກ
ທີ່ນີ້
16 ເຮັດຢ່າງໃດຈຶ່ງຈະຮູ້ວ່າ ຂ້າພຣະອົງແລະໄພ່ພົນຂອງພຣະອົງເປັນທີ່ພໍພຣະທັຍຂອງພຣະອົງແລ້ວ ກໍເມື່ອພຣະອົງ
ສະເດັດຂຶ້ນໄປກັບພວກຂ້າພຣະອົງດ້ວຍບໍ່ແມ່ນຫລື ດັ່ງນີ້ຂ້າພຣະອົງແລະໄພ່ພົນຂອງພຣະອົງ ຈຶ່ງແຕກຕ່າງກັບຊົນ
ຊາດອື່ນໆທົ່ວພື້ນແຜ່ນດິນໂລກ”
17 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ເຮົາຈະທຳຕາມຄຳທີ່ເຈົ້າເວົ້າ ເພາະວ່າເຮົາພໍໃຈໃນເຈົ້າ ແລະຮູ້ຈັກເຈົ້າດີ”
18 ໂມເຊໄດ້ທູນຂໍວ່າ, “ຂໍຊົງໂຜດສະແດງພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະອົງໃຫ້ຂ້າພຣະອົງເບິ່ງແດ່ຖ້ອນ”
19 ພຣະຜູ້ເປັນເຈົ້າຊົງຕອບວ່າ, “ເຮົາຈະທຳໃຫ້ຄຸນງາມຄວາມດີຂອງເຮົາທັງຫມົດ ປະຈັກແຈ້ງຕໍ່ຫນ້າເຈົ້າ ແລະເຮົາຈະ
ປະກາດຊື່ຂອງເຮົາ ຄືພຣະຜູ້ເປັນເຈົ້າໃຫ້ເຈົ້າໄດ້ຍິນ ເຮົາຈະສະແດງຄວາມເມດຕາສົງສານຕໍ່ຜູ້ທີ່ເຮົາປະສົງຈະໃຫ້”
20 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄປວ່າ, “ເຈົ້າຈະບໍ່ເຫັນຫນ້າເຮົາ ເພາະວ່າມະນຸດນັ້ນເຫັນຫນ້າເຮົາແລ້ວຈະຕ້ອງຕາຍ”
21 ພຣະອົງຊົງກ່າວຕໍ່ໄປວ່າ, “ເບິ່ງແມ໋ ໃນທີ່ນີ້ມີບ່ອນນຶ່ງຢູ່ໃກ້ເຮົາ ເຈົ້າຈົ່ງໄປຢືນເທິງຫີນໃນທີ່ນັ້ນ

22 ເມື່ອຣັສມີຄວາມຍິ່ງໃຫຍ່ຂອງເຮົາຜ່ານໄປໃກ້ ເຮົາຈະເຊື່ອງເຈົ້າໄວ້ໃນຊ່ອງຫີນ ແລະຈະເອົາມືຂອງເຮົາປິດບັງເຈົ້າ
ໄວ້ ຈົນກວ່າເຮົາໄດ້ຜ່ານພົ້ນໄປແລ້ວ
23 ແລ້ວເຮົາຈະເອົາມືເຮົາອອກ ເຈົ້າຈະເຫັນຫລັງຂອງເຮົາ ແຕ່ຫນ້າຂອງເຮົານັ້ນເບິ່ງບໍ່ໄດ້"

## 34 ຊົງປະທານຫີນແຜ່ນທີສອງ

Moses Makes New Tablets

(ພບຍ 10:1-5)

1 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງຕັດຫີນສອງແຜ່ນໃຫ້ເຫມືອນແຜ່ນເກົ່າ ແລ້ວເຮົາຈະຈາຣຶກຖ້ອຍຄຳຊຶ່ງຢູ່ໃນ
ແຜ່ນເດີມທີ່ເຈົ້າໄດ້ທຳແຕກນັ້ນໃຫ້
2 ຈົ່ງເຮັດໃຫ້ແລ້ວໃນຕອນເຊົ້າມື້ອື່ນແລ້ວໃຫ້ຂຶ້ນມາຫາເຮົາເທິງຈອມພູຊີນາອີ
3 ຢ່າໃຫ້ຜູ້ໃດຂຶ້ນມານຳ ບໍ່ໃຫ້ມີຜູ້ໃດຢູ່ເທິງພູ ບໍ່ໃຫ້ມີຝູງແບ້ ຝູງແກະ ແລະຝູງງົວຄວາຍກິນຫຍ້າຢູ່ຕໍ່ຫນ້າພູນີ້"
4 ດັ່ງນັ້ນ ໂມເຊຈຶ່ງຕັດເອົາຫີນສອງແຜ່ນເຫມືອນສອງແຜ່ນທຳອິດ ແລ້ວມື້ອື່ນຕອນເຊົ້າມືດ ທ່ານກໍຖືຫີນນັ້ນຂຶ້ນໄປ
ເທິງພູຊີນາອີຕາມພຣະຜູ້ເປັນເຈົ້າຊົງສັ່ງ
5 ພຣະຜູ້ເປັນເຈົ້າໄດ້ສະເດັດມາດ້ວຍເມກ ຊົງຢືນຢູ່ກັບໂມເຊທີ່ນັ້ນ ແລະໂມເຊໄດ້ຮ້ອງອອກພຣະນາມຂອງພຣະຜູ້
ເປັນເຈົ້າ
6 ແລ້ວພຣະຜູ້ເປັນເຈົ້າໄດ້ສະເດັດຜ່ານຫນ້າໂມເຊໄປ ແລະຊົງກ່າວວ່າ, " ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າແມ່ນພຣະ
ເຈົ້າຜູ້ເຕັມປ່ຽມໄປດ້ວຍຄວາມເມດຕາກະຣຸນາ ຜູ້ບໍ່ໂກດງ່າຍ ຜູ້ສະແດງຄວາມຮັກຫມັ້ນຄົງ ແລະຄວາມສັດຊື່
7 ຜູ້ມີຄວາມຮັກຫມັ້ນຄົງຫລາຍຊົ່ວອາຍຸພັນຄົນ ຜູ້ໂຜດໃຫ້ອະພັຍຄວາມບໍ່ຍຸດຕິທັມ ຄວາມຊົ່ວຊ້າ ແລະຄວາມບາບ
ແຕ່ຈະລົງໂທດລູກຫລານເຫລັນເຖິງສາມສີ່ຊົ່ວອາຍຸຄົນ ຍ້ອນຄວາມບາບທີ່ບິດາມານດາຂອງເຂົາໄດ້ກະທຳ"
8 ໂມເຊຈຶ່ງຟ້າວຄຸເຂົ່າລົງດິນນະມັສການ
9 ແລ້ວກາບທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຖ້າຫາກຂ້າພຣະອົງເປັນທີ່ຊອບພຣະທັຍພຣະອົງແທ້ ເຖິງແມ່ນປະຊາ
ຊົນນັ້ນຈະຫົວດື້ກໍຂໍພຣະອົງຊົງໂຜດສະເດັດໄປກັບພວກຂ້າພຣະອົງຖ້ອນ ຂໍຊົງໃຫ້ອະພັຍຄວາມຊົ່ວຮ້າຍ ແລະ
ຄວາມບາບຂອງພວກຂ້າພຣະອົງ ຂໍຊົງໂຜດຮັບເອົາພວກຂ້າພຣະອົງເປັນໄພ່ພົນຂອງພຣະອົງເທີນ"

### ຊົງສັນຍາໃຫມ່

The Covenant Renewed

(ອພຍ 23:14-19; ພບຍ 7:1-6; 16:1-17)

10 ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເຮົາຈະໃຫ້ຄຳຫມັ້ນສັນຍາແກ່ເຈົ້າ ຈະທຳການອັດສະຈັນຕໍ່ຫນ້າປະຊາຊົນທັງ
ປວງຂອງເຈົ້າ ຄືການອັດສະຈັນທີ່ເຮົາບໍ່ເຄີຍທຳມາກ່ອນໃນຖ້າມກາງຊົນຊາດໃດໆທົ່ວໂລກນີ້ ປະຊາຊົນທັງປວງຊຶ່ງ
ຢູ່ກັບເຈົ້າ ຈະໄດ້ເຫັນການກະທຳຂອງອົງພຣະຜູ້ເປັນເຈົ້າ ເພາະເຮົາຈະກະທຳສິ່ງອັນຫນ້າຢ້ານໃຫ້ເຈົ້າເຫັນ
11 ຈົ່ງທຳຕາມຂໍ້ບັນຍັດທີ່ເຮົາຈະໃຫ້ເຈົ້າໃນມື້ນີ້ ເຮົາຈະຂັບໄລ່ຊາວອາໂມຣິດ ຊາວການາອານ ຊາວຮິດຕີ ຊາວເປຣິສ
ຊີ ຊາວຮີວີ ແລະຊາວເຢບຸສໄປເສັຽຈາກເຈົ້າ
12 ຈົ່ງລະວັງໃຫ້ດີ ເຈົ້າຢ່າຜູກສຳພັນໃດໆກັບຊົນຊາດທີ່ເຈົ້າຈະໄປເຖິງນັ້ນ ເພາະວ່າມັນຈະເປັນສິ່ງທຳລາຍພວກເຈົ້າ
13 ແຕ່ພວກເຈົ້າຈົ່ງທຳລາຍແທ່ນບູຊາ ທັບເສົາຫີນສັກສິດ ແລະຕັດໄມ້ສັກສິດຂອງພວກເຂົາຖິ້ມ
14 ເຈົ້າຢ່າໄດ້ຂາບໄຫວ້ພຣະອື່ນເລີຍ ເພາະວ່າເຮົາເປັນພຣະເຈົ້າຜູ້ຫວງແຫນພວກເຈົ້າ
15 ຢ່າຜູກສຳພັນໃດໆກັບຊົນຊາດເຫລົ່ານັ້ນ ເພາະເມື່ອເຂົາຂາບໄຫວ້ແລະບູຊາພຣະຂອງເຂົາ ເຂົາກໍເຮັດບໍ່ສັດຊື່
ເຫມືອນຍິງໂສເພນີ ແລະເຂົາກໍຈະເຊີນພວກເຈົ້າໄປຮ່ວມດ້ວຍ ພວກເຈົ້າອາດຈະຮັບປະທານອາຫານທີ່ເຂົາເອົາ
ຖວາຍບູຊານັ້ນ

16 ບຸດຊາຍຂອງເຈົ້າອາດແຕ່ງງານກັບບຸດຍິງຂອງເຂົາ ຜູ້ຍິງຕ່າງປະເທດເຫລົ່ານີ້ຈະບົວລະບັດພຣະຂອງຕົນເຫມືອນຍິງໂສເພນີ ເຂົາຈະຊັກຊວນບຸດຊາຍຂອງເຈົ້າທຳບໍ່ສັດຊື່ຕໍ່ເຮົາ ແລະຮັບໃຊ້ພຣະຂອງເຂົາ

17 ເຈົ້າຢ່າຫລໍ່ຮູບພຣະສຳລັບຕົນເລີຍ

18 ເຈົ້າຈົ່ງຖືຮັກສາພິທີກິນລ້ຽງເຂົ້າຈີ່ບໍ່ໃສ່ເຊື້ອແປ້ງ ຕາມທີ່ເຮົາໄດ້ສັ່ງໄວ້ ໃຫ້ກິນເຂົ້າຈີ່ບໍ່ໃສ່ເຊື້ອຈົນຄົບເຈັດວັນໃນເດືອນທີນຶ່ງ ເພາະວ່າພວກເຈົ້າອອກຈາກເອຢິບໃນເດືອນນີ້

19 ບຸດຫົວປີທຸກຄົນ ຫລືງົວ ແລະແກະເຖິກໂຕເກີດກ່ອນທຸກໂຕຂອງເຈົ້າເປັນຂອງເຮົາ

20 ແຕ່ເຈົ້າຈົ່ງເອົາລູກແກະມາໄຖ່ເອົາລູກລໍໂຕທຳອິດໄວ້ ຖ້າເຈົ້າບໍ່ໄຖ່ໄວ້ໃຫ້ຫັກຄໍມັນເສັຽ ບຸດກົກທຸກຄົນຂອງເຈົ້າໃຫ້ໄຖ່ໄວ້ ຢ່າໃຫ້ຜູ້ໃດມາເຝົ້າເຮົາໂດຍບໍ່ມີເຄື່ອງຖວາຍເລີຍ

21 ເຈົ້າຈົ່ງເຮັດວຽກແຕ່ໃນຫົກວັນ ສ່ວນວັນຖ້ວນເຈັດໃຫ້ເຈົ້າຢຸດພັກເຖິງຈະຢູ່ໃນລະຫວ່າງໄຖນາແລະກ່ຽວເຂົ້າກໍຕາມ

22 ຈົ່ງຈັດງານສລອງສັປດາ ຄືງານກິນລ້ຽງສລອງຫມາກຜົນທຳອິດຂອງຣະດູກ່ຽວເຂົ້າບເລ ແລະງານກິນລ້ຽງສລອງການເກັບກ່ຽວໃນປາຍປີ

23 ບັນດາຜູ້ຊາຍທັງຫລາຍຂອງພວກເຈົ້າ ໃຫ້ມາຫາເຮົາຜູ້ເປັນພຣະເຈົ້າຂອງຊາວອິສຣາເອນປີລະສາມເທື່ອ

24 ຫລັງຈາກເຮົາໄດ້ຂັບໄລ່ຊົນຊາດທັງຫລາຍອອກໄປພົ້ນຫນ້າເຈົ້າ ແລະໄດ້ຂຍາຍເຂດແດນຂອງເຈົ້າໃຫ້ກວ້າງຂວາງອອກໄປແລ້ວ ຈະບໍ່ມີໃຜພຍາຍາມຍຶດເອົາປະເທດຂອງເຈົ້າ ໃນລະຫວ່າງພວກເຈົ້າໄປຫາເຮົາປີລະສາມເທື່ອນັ້ນ

25 ຢ່າໄດ້ຖວາຍເຂົ້າຈີ່ທີ່ໃສ່ເຊື້ອແປ້ງ ເມື່ອພວກເຈົ້າເຜົາສັດຖວາຍເຮົາ ຢ່າເກັບຊີ້ນສັດທີ່ຂ້າກິນລ້ຽງໃນງານສລອງປັສຄາໄວ້ຈົນເຖິງມື້ເຊົ້າ

26 ຈົ່ງນຳເອົາຜົນລະປູກທຳອິດອັນດີທີ່ສຸດໃນນາຂອງເຈົ້າ ມາຖວາຍໄວ້ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ເຈົ້າຢ່າຕົ້ມຊີ້ນລູກແບ້ດ້ວຍນ້ຳນົມແມ່ຂອງມັນ"

27 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງຂຽນຄຳເຫລົ່ານີ້ໄວ້ ເພາະວ່າຄຳຫມັ້ນສັນຍາທີ່ເຮົາໄດ້ທຳໄວ້ກັບເຈົ້າ ແລະກັບພວກອິສຣາເອນມີຢູ່ໃນຄຳເຫລົ່ານີ້ແລ້ວ"

28 ໂມເຊໄດ້ເຝົ້າພຣະຜູ້ເປັນເຈົ້າຢູ່ທີ່ນັ້ນເປັນເວລາສີ່ສິບວັນສີ່ສິບຄືນ ໂດຍບໍ່ໄດ້ກິນອາຫານແລະດື່ມນ້ຳເລີຍ ທ່ານໄດ້ຈາລຶກຂໍ້ຄວາມຂອງຄຳຫມັ້ນສັນຍາ ຄືພຣະບັນຍັດສິບປະການໄວ້ໃນແຜ່ນຫີນນັ້ນ

**ໂມເຊ ລົງມາຈາກພູ**

The Shining Face of Moses

29 ເມື່ອໂມເຊຖືແຜ່ນຫີນພຣະໂອວາດສອງແຜ່ນລົງມາຈາກພູຊີນາອີນັ້ນ ໂມເຊບໍ່ຮູ້ວ່າຜິວຫນ້າຂອງຕົນສ່ອງແສງ ຄືຫນ້າຂອງທ່ານໄດ້ສ່ອງແສງຍ້ອນພຣະຜູ້ເປັນເຈົ້າຊົງສົນທະນາກັບທ່ານ

30 ເມື່ອອາໂຣນກັບຊາວອິສຣາເອນທັງປວງເຫັນຫນ້າໂມເຊສ່ອງແສງ ພວກເຂົາກໍບໍ່ກ້າເຂົ້າໄປໃກ້ທ່ານ ແຕ່ໂມເຊໄດ້ເອີ້ນພວກເຂົາມາ

31 ແລ້ວອາໂຣນກັບບັນດາຫົວຫນ້າຂອງຊຸມນຸມຊົນໄດ້ເຂົ້າມາຫາໂມເຊ ທ່ານຈຶ່ງສົນທະນາກັບເຂົາ

32 ເມື່ອຊາວອິສຣາເອນເຂົ້າມາໃກ້ແລ້ວ ໂມເຊກໍບອກເຂົາທັງຫລາຍຕາມທີ່ພຣະຜູ້ເປັນເຈົ້າຊົງບອກຢູ່ເທິງພູຊີນາອີ

33 ເມື່ອໂມເຊເວົ້າສຸດກໍເອົາຜ້າປົກຫນ້າໄວ້

34 ເມື່ອໃດທ່ານເຂົ້າໄປເຝົ້າພຣະຜູ້ເປັນເຈົ້າໃນເຕັນສັກສິດ ທ່ານກໍເອົາຜ້ານັ້ນອອກຈົນເທົ່າອອກມາ ຄັນທ່ານອອກມາແລ້ວ ກໍເລົ່າຂໍ້ຄວາມທັງຫມົດທີ່ພຣະຜູ້ເປັນເຈົ້າຊົງສັ່ງສູ່ຊາວອິສຣາເອນຟັງ

35 ແລະຊາວອິສຣາເອນກໍໄດ້ເຫັນຜິວຫນ້າຂອງໂມເຊສ່ອງແສງ ແລ້ວໂມເຊກໍໄດ້ເອົາຜ້າປົກຫນ້າໄວ້ຈົນເທົ່າໄດ້ເຂົ້າເຝົ້າພຣະຜູ້ເປັນເຈົ້າອີກ

## 35 ລະບຽບວັນສະບາໂຕ

Sabbath Regulations

1 ຝ່າຍໂມເຊໃຫ້ຊຸມນຸມຊົນອິສຣາເອນປະຊຸມກັນກ່າວແກ່ເຂົາວ່າ, “ຕໍ່ໄປນີ້ເປັນສິ່ງຊຶ່ງພຣະເຈົ້າບັນຊາໃຫ້ທ່ານທັງ
ຫລາຍກະທຳ
2 ຈົ່ງເຮັດງານໃນກຳນົດຫົກວັນ ແຕ່ວັນທີ່ເຈັດໃຫ້ທ່ານຖືເປັນວັນບໍຣິສຸດ ເປັນວັນສະບາໂຕແດ່ພຣະເຈົ້າ ສຳລັບໃຫ້ພັກ
3 ໃນວັນສະບາໂຕນັ້ນຢ່າກໍ່ໄຟເລີຍ ທົ່ວຕລອດທີ່ອາສັຍຂອງເຈົ້າ”

**ການນຳຂອງບູຊາມາຖວາຍ**

Preparations for Making the Tabernacle

(ອພຍ 25:1-9; 39:32-43)

4 ໂມເຊໄດ້ກ່າວແກ່ຊຸມນຸມຊົນອິສຣາເອນວ່າ, “ຕໍ່ໄປນີ້ເປັນສິ່ງທີ່ຊຶ່ງພຣະຜູ້ເປັນເຈົ້າຊົງສັ່ງ
5 ທ່ານທັງຫລາຍຈົ່ງນຳຂອງຈາກຂອງທີ່ມີຢູ່ມາຖວາຍພຣະຜູ້ເປັນເຈົ້າ ຜູ້ໃດມີນ້ຳໃຈກວ້າງຂວາງໃຫ້ຜູ້ນັ້ນນຳຂອງມາ
ຖວາຍພຣະຜູ້ເປັນເຈົ້າ ຄືທອງຄຳ ເງິນ ແລະທອງສຳຣິດ
6 ຜ້າສີຟ້າ ສີມ່ວງ ສີແດງເຂັ້ມ ຜ້າປ່ານເນື້ອດີ ແລະຂົນແບ້
7 ຫນັງແກະໂຕຜູ້ຍ້ອມສີແດງ ຫນັງສັດລະອຽດດີ ແລະໄມ້ກະຖິນເທດ
8 ນ້ຳມັນເຕີມຕະກຽງ ເຄື່ອງຫອມສຳລັບປົນໃສ່ນ້ຳມັນເຈີມ ແລະປຸງເຄື່ອງຫອມສຳລັບການເຜົາຖວາຍ
9 ແກ້ວໂກເມນ ແລະແກ້ວຕ່າງໆສຳລັບຝັງເຮັດເອໂຟດແລະແຜ່ນຮອງເອິກ

**ການນຳຂອງບູຊາມາຖວາຍ**

(ອພຍ 25:1-9)

10 “ຈົ່ງໃຫ້ທຸກຄົນຊຶ່ງມີສະຕິປັນຍາໃນຫມູ່ພວກທ່ານ ພາກັນມາເຮັດສິ່ງທັງປວງຊຶ່ງພຣະຜູ້ເປັນເຈົ້າຊົງສັ່ງໃຫ້ເຮັດແລ້ວ
11 ຄືຫໍເຕັນສັກສິດ ເຕັນແລະຜ້າຄຸມເຕັນ ຂໍເກາະແລະຮ່າງໄມ້ຂອບ ກອນ ເສົາ ແລະຖານຮອງຮັບເສົາຂອງຫໍເຕັນນັ້ນ
12 ຫີບແລະໄມ້ຄານຫີບ ພຣະທີ່ນັ່ງກະຣຸນາກັບຜ້າກັ້ງບັງ
13 ໂຕະກັບໄມ້ຄານຫາມໂຕະ ເຄື່ອງໃຊ້ທັງປວງສຳລັບໂຕະ ແລະເຂົ້າຈີ່ຫນ້າພຣະພັກ
14 ເຄື່ອງຮອງຕີນໂຄມທີ່ໃຫ້ແສງສວ່າງກັບເຄື່ອງອຸປກອນ ແລະຕະກຽງ ແລະນ້ຳມັນເຕີມຕະກຽງ
15 ແທ່ນເຜົາເຄື່ອງຫອມກັບໄມ້ຄານຫາມແທ່ນນັ້ນ ນ້ຳມັນເຈີມ ແລະເຄື່ອງຫອມສຳລັບເຜົາຖວາຍ ແລະຜ້າກັ້ງບັງສຳ
ລັບປະຕູ ທີ່ປະຕູຫໍເຕັນ
16 ແທ່ນເຄື່ອງເຜົາບູຊາກັບຕາຂ່າຍທອງສຳຣິດ ໄມ້ຄານຫາມແລະເຄື່ອງໃຊ້ຂອງແທ່ນ ຂັນກັບພານຮອງ
17 ຜ້າກັ້ງສຳລັບກັ້ນອ້ອມຮອບຫໍເຕັນ ກັບເສົາ ແລະຖານຮອງຮັບເສົາ ແລະຜ້າກັ້ງສຳລັບປະຕູ
18 ຫລັກປັກສຳລັບຫໍເຕັນ ແລະຫລັກປັກຜ້າກັ້ງ ອ້ອມຮອບຫໍເຕັນ ພ້ອມເຊືອກເນັ່ງ
19 ເສື້ອຍົດທະຍິບດ້ວຍຝີມືປານິດສຳລັບແຕ່ງເວລາປົວຣະບັດໃນບ່ອນສັກສິດ ຄືເສື້ອຍົດບໍຣິສຸດສຳລັບອາໂຣນປະໂຣ
ຫິດ ແລະເສື້ອຍົດສຳລັບບຸດຂອງທ່ານ ເພື່ອໃຊ້ປະຕິບັດໃນຕຳແຫນ່ງປະໂຣຫິດ”

Offering for the Tabernacle

20 ແລ້ວຊຸມນຸມອິສຣາເອນທັງຫມົດກໍແຍກຍ້າຍກັນຈາກໂມເຊໄປ
21 ທຸກຄົນທີ່ມີໃຈສັດທາ ແລະທີ່ມີໃຈອາສາສມັກກໍນຳສິ່ງຂອງມາຖວາຍພຣະຜູ້ເປັນເຈົ້າສຳລັບຫໍເຕັນນັດພົບ ແລະ
ການປົວລະບັດຕ່າງໆ ແລະສຳລັບເຄື່ອງຍົດບໍຣິສຸດ
22 ເຂົາຈຶ່ງພາກັນມາທັງຊາຍແລະຍິງ ບັນດາຜູ້ທີ່ມີນ້ຳໃຈສມັກນຳມາຊຶ່ງເຂັມກັດ ຕຸ້ມຫູ ແຫວນ ແລະສາຍທອງຄຳ ແລ
ະເຄື່ອງເອ້ເປັນທອງຄຳຢ່າງອື່ນ ຄືທຸກຄົນນຳທອງຄຳມາຍື່ນຖວາຍແດ່ພຣະຜູ້ເປັນເຈົ້າ
23 ສ່ວນທຸກຄົນທີ່ມີດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ຫລືທີ່ມີຜ້າປ່ານເນື້ອດີ ຂົນແບ້ ຫນັງແກະໂຕຜູ້ຍ້ອມດ້ວຍສີແດງ
ແລະຫນັງສັດລະອຽດດີ ກໍເອົາຂອງເຫລົ່ານັ້ນມາຖວາຍ

24 ທຸກຄົນທີ່ມີເງິນ ຫລືທອງສຳຣິດຈະຖວາຍ ກໍໄດ້ນຳມາຖວາຍພຣະຜູ້ເປັນເຈົ້າ ແລະທຸກຄົນທີ່ມີໄມ້ກະຖິນເທດໃຊ້
ການໄດ້ກໍນຳໄມ້ນັ້ນມາຖວາຍ
25 ສ່ວນຜູ້ຍິງທັງປວງທີ່ຊຳນານກໍປັ່ນດ້າຍດ້ວຍມືຂອງຕົນ ແລ້ວນຳດ້າຍຊຶ່ງປັ່ນນັ້ນມາຖວາຍ ທັງສີຟ້າ ສີມ່ວງ ສີແດງ
ເຂັ້ມ ແລະເສັ້ນປ່ານປັ່ນຢ່າງດີ
26 ຝ່າຍບັນດາຜູ້ຍິງທີ່ໃຈສັດທາກໍປັ່ນຂົນແບ້ດ້ວຍຄວາມຊຳນານ
27 ບັນດາປະມຸກກໍນຳແກ້ວໂກເມນ ແລະແກ້ວຕ່າງໆມາສຳລັບຝັງເຮັດເອໂຟດ ແລະແຜ່ນຮອງເອິກ
28 ກັບເຄື່ອງຫອມແລະນ້ຳມັນຕາມຕະກຽງ ນ້ຳມັນເຈີມ ແລະນ້ຳມັນເຄື່ອງຫອມສຳລັບເຜົາບູຊາ
29 ຄົນອິສຣາເອນທັງຊາຍແລະຍິງທຸກຄົນທີ່ມີໃຈສມັກນຳຂອງຖວາຍສຳລັບການງານຕ່າງໆ ຊຶ່ງພຣະຜູ້ເປັນເຈົ້າຊົງ
ສັ່ງໂມເຊໄວ້ໃຫ້ກະທຳ ກໍນຳຂອງມາຕາມໃຈຖວາຍແດ່ພຣະຜູ້ເປັນເຈົ້າ

**ເບຊາເລນ ໂອໂຮລີອາບ**

Bezalel and Oholiab

30 (ອພຍ 31:1-11)

31 ໂມເຊຈຶ່ງກ່າວແກ່ຄົນອິສຣາເອນວ່າ, "ທ່ານທັງຫລາຍ ພຣະຜູ້ເປັນເຈົ້າໄດ້ຊົງອອກຊື່ ເບຊາເລນ ບຸດອູຣີ ຜູ້ເປັນບຸດ
ຂອງເຮີເຜົ່າຢູດາ
32 ແລະພຣະອົງໄດ້ຊົງໃຫ້ຜູ້ນັ້ນປະກອບດ້ວຍພຣະວິນຍານຂອງພຣະເຈົ້າໃຫ້ມີສະຕິປັນຍາແລະຄວາມເຂົ້າໃຈ ແລະ
ຄວາມຮູ້ໃນການຊ່າງຝີມືຕ່າງໆ
33 ເພື່ອຈະຄິດປະດິດລວດລາຍຢ່າງສລາດ ເຮັດດ້ວຍທອງຄຳ ແລະເງິນ ແລະທອງສຳຣິດ
34 ແລະເຈັຍລະນັຍແກ້ວຕ່າງໆ ສຳລັບຝັງໃນກະໂບກແລະການແກະສລັກໄມ້ ຄືໃຫ້ມີສີມືດີເລີດທຸກຢ່າງ
35 ພຣະອົງຊົງດົນໃຈໃຫ້ຜູ້ນັ້ນມີນ້ຳໃຈທີ່ຈະສອນຄົນອື່ນໄດ້ດ້ວຍ ພ້ອມດ້ວຍ ໂອໂຮລີອາບ ບຸດອາຮີຊາມາກເຜົ່າດານ
36 ຄົນທັງສອງນີ້ພຣະອົງຊົງປະທານສະຕິປັນຍາຄວາມສາມາດໃນການທີ່ຈະກະທຳງານໄດ້ທຸກຢ່າງ ຄືການຊ່າງຝີມື
ການຊ່າງອອກແບບ ແລະການຊ່າງດ້າຍສີ ຄືສີຟ້າ ສີມ່ວງ ສີແດງເຂັ້ມ ແລະເສັ້ນປ່ານປັ່ນຢ່າງດີ ແລະຊ່າງຕ່ຳ ຄືທຳ
ການຊ່າງສີມືໄດ້ທຸກຢ່າງ ແລະເປັນຊ່າງອອກແບບຢ່າງສລາດດ້ວຍ

## 36

Chapter 36

1 ຝ່າຍເບຊາເລນ ແລະໂອໂຮລີອາບ ແລະຄົນທັງປວງທີ່ມີຄວາມສາມາດ ຊຶ່ງພຣະເຈົ້າຊົງປະທານສະຕິປັນຍາແລະ
ຄວາມເຂົ້າໃຈໃຫ້ພໍທີ່ຈະເຮັດການທຸກຢ່າງໃນການສ້າງສະຖານນະມັສການຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງໄວ້ແລ້ວ
ທຸກປະການ"

**ປະຊາຊົນນຳຂອງຖວາຍຢ່າງຫລວງຫລາຍ**

2 ໂມເຊຈຶ່ງເອີ້ນເບຊາເລນ ແລະໂອໂຮລີອາບ ກັບຄົນທັງປວງທີ່ມີຄວາມສາມາດ ຊຶ່ງພຣະເຈົ້າຊົງປະທານໃຫ້ແກ່ຈິດ
ໃຈຂອງເຂົາ ແລະໃຈຂອງເຂົາກະຕຸ້ນເຂົາໃຫ້ມາເຮັດງານ
3 ຄົນເຫລົ່ານີ້ໄດ້ຮັບສິ່ງຂອງຖວາຍນັ້ນຈາກໂມເຊທີ່ຄົນອິສຣາເອນນຳມາຖວາຍເພື່ອນຳໄປເຮັດສະຖານທີ່ນະມັສ
ການປະຊາຊົນຍັງນຳຂອງທີ່ສມັກໃຈຈະຖວາຍມາຖວາຍອີກທຸກໆເວລາເຊົ້າ
4 ຝ່າຍຄົນທັງປວງທີ່ມີຄວາມສາມາດຊຶ່ງທຳງານຕ່າງໆທີ່ສະຖານທີ່ນະມັສການນັ້ນມາເຖິງ ແລ້ວຕ່າງກໍຢຸດເຮັດງານ
ໃນໜ້າທີ່ຂອງຕົນ
5 ພາກັນມາບອກໂມເຊວ່າ, "ປະຊາຊົນເອົາຂອງມາຖວາຍມາກເກີນຄວາມຕ້ອງການ ທີ່ຈະໃຊ້ໃນງານນັ້ນ ຊຶ່ງພຣະຜູ້
ເປັນເຈົ້າຊົງສັ່ງໃຫ້ກະທຳ"

6 ໂມເຊຈຶ່ງສັ່ງໃຫ້ປະກາດໄປທົ່ວຄ້າຍວ່າ, “ຢ່າໃຫ້ຊາຍຍິງເອົາຂອງສຳລັບທຳສະຖານທີ່ນະມັສການມາຖວາຍອີກ
ເລີຍ“ ເຫດສະນັ້ນປະຊາຊົນຈຶ່ງຢັບຢັ້ງບໍ່ເອົາຂອງມາຖວາຍອີກ
7 ເພາະຂອງທີ່ເຂົາມີຢູ່ແລ້ວກໍພໍ ແລະຍັງມີເຫລືອອີກ

Construction of the Tabernacle

(ອພຍ 26:1-37)

8 ບັນດາຊ່າງຜູ້ມີຄວາມສາມາດ ໄດ້ເຮັດຫໍເຕັນດ້ວຍຜ້າກັ້ງສິບຜືນ ດ້ວຍຜ້າປ່ານເນື້ອດີ ດ້ວຍດ້າຍສີຟ້າ ສີມ່ວງ ສີ
ແດງເຂັ້ມ ມີຮູບເຊຣູບິມຝີມືຊ່າງອອກແບບໄວ້
9 ຜ້າກັ້ງຜືນນຶ່ງຍາວຊາວແປດສອກ ກວ້າງສີ່ສອກ ຜ້າກັ້ງທຸກຜືນເທົ່າກັນ
10 ຜ້າກັ້ງຫ້າຜືນເຂົາເຮັດໃຫ້ກ້ຽວຕິດກັນ ແລະອີກຫ້າຜືນນັ້ນກ້ຽວຕິດກັນດ້ວຍ
11 ເຂົາເຮັດຫູດ້ວຍດ້າຍສີຟ້າ ຕິດໄວ້ຕາມຂອບຜ້າກັ້ງດ້ານນອກສຸດ ຊຸດທີ່ນຶ່ງ ແລະຕາມຂອບຜ້າກັ້ງດ້ານນອກສຸດ ຊຸດ
ທີສອງກໍທຳຫູໄວ້ເຫມືອນກັນ
12 ຜ້າກັ້ງຜືນນຶ່ງເຂົາເຮັດຫູຫ້າສິບຫູ ແລະຕາມຂອບຜ້າກັ້ງຊຸດທີສອງ ເຂົາກໍເຮັດຫູຫ້າສິບຫູໃຫ້ຊື່ກັນ
13 ແລະເຂົາເຮັດຂໍເກາະທອງຄຳຫ້າສິບຂໍ ສຳລັບໃຊ້ກ້ຽວຜ້າກັ້ງເພື່ອໃຫ້ຫໍເຕັນເປັນຜືນອັນດຽວກັນ
14 ເຂົາເຮັດຜ້າກັ້ງດ້ວຍຂົນແບ້ ສຳລັບເປັນປົກຄຸມຫໍເຕັນສິບເອັດຜືນ
15 ຜ້າຜືນນຶ່ງຍາວສາມສິບສອກ ກວ້າງສີ່ສອກ ທັງສິບເອັດຜືນເທົ່າກັນ
16 ເຂົາກ້ຽວຜ້າກັ້ງຫ້າຜືນໃຫ້ຕິດກັນຕ່າງຫາກ ແລະຜ້າກັ້ງອີກຫົກຜືນກໍກ້ຽວກັນອີກຕ່າງຫາກ
17 ແລະເຂົາເຮັດຫູຫ້າສິບຫູຕິດກັບຜ້າກັ້ງດ້ານນອກສຸດຊຸດທີ່ນຶ່ງ ແລະເຂົາເຮັດຫູຫ້າສິບຫູຕິດກັບຂອບຜ້າກັ້ງດ້ານນອກ
ສຸດຊຸດທີ່ສອງ
18 ເຂົາເຮັດຂໍເກາະທອງສຳຣິດຫ້າສິບຂໍສຳລັບເກາະຜ້າກັ້ງທັງສອງຊຸດໃຫເຂົ້າກັນເປັນຜືນດຽວ
19 ເຂົາເຮັດຜ້າປົກຄຸມເຕັນດ້ວຍຫນັງແກະໂຕເຖິກຍ້ອມສີແດງຊັ້ນນຶ່ງ ແລະຄຸມທັບດ້ວຍຫນັງສັດລະອຽດດີອີກຊັ້ນນຶ່ງ
20 ເຂົາເຮັດໄມ້ຮ່າງຂອບສຳລັບເຕັນດ້ວຍໄມ້ກະຖິນເທດຍົກຕັ້ງຂຶ້ນຊື່ໆ
21 ໄມ້ຮ່າງຂອບນັ້ນຍາວແຜ່ນລະສິບສອກ ກວ້າງສອກຄືບ
22 ມີເດືອຍຂອບລະສອງເດືອຍ ເດືອຍຂອບນຶ່ງມີໄມ້ປະກັບຕິດກັບເດືອຍອີກຂອບນຶ່ງ ເຂົາໄດ້ເຮັດໄມ້ຮ່າງຂອບຫໍເຕັນ
ທັງຫມົດຢ່າງນີ້
23 ເຂົາເຮັດໄມ້ຮ່າງຂອບຫໍເຕັນດັ່ງນີ້ ດ້ານໃຕ້ເຂົາໃຊ້ຊາວແຜ່ນ
24 ເຂົາເຮັດຖານດ້ວຍເງິນສີ່ສິບຖານ ສຳລັບໄມ້ຮ່າງຂອບຊາວແຜ່ນ ໃຕ້ໄມ້ຮ່າງຂອບແຜ່ນນຶ່ງ ມີຖານຮອງຮັບແຜ່ນລະ
ສອງຖານ ສຳລັບສວມເດືອຍສອງອັນ
25 ດ້ານທີສອງຂອງຫໍເຕັນຂ້າງທິດເຫນືອນັ້ນເຂົາເຮັດໄມ້ຮ່າງຂອບຊາວແຜ່ນ
26 ເຂົາເຮັດຖານເງິນຮອງຮັບສີ່ສິບຖານ ໃຕ້ໄມ້ຮ່າງຂອບມີຖານແຜ່ນລະສອງຖານ
27 ສ່ວນດ້ານຫລັງທິດຕາເວັນຕົກຂອງຫໍເຕັນ ເຂົາເຮັດໄມ້ຮ່າງຂອບຫົກແຜ່ນ
28 ເຂົາເຮັດໄມ້ຮ່າງອີກສອງແຜ່ນສຳລັບແຈຫໍເຕັນດ້ານຫລັງ
29 ໄມ້ຮ່າງຂອບນັ້ນຂ້າງລຸ່ມໃຫ້ແຍກກັນ ແຕ່ເບື້ອງເທິງຍອດຕິດຕໍ່ກັນທີ່ຮ່ວງທຳອິດ ເຂົາເຮັດຢ່າງນີ້ເພື່ອໃຫ້ເກີດແຈ
ສອງແຈ
30 ຄືຮວມເປັນໄມ້ຮ່າງຂອບແປດແຜ່ນດ້ວຍກັນ ແລະຖານເງິນສິບຫົກອັນ ໃຕ້ໄມ້ຮ່າງຂອບມີຖານແຜ່ນລະສອງຖານ
31 ເຂົາເຮັດຂາງດ້ວຍໄມ້ກະຖິນເທດຫ້າອັນສຳລັບຂັດໄມ້
32 ຂອບຝາຫໍເຕັນດ້ານນຶ່ງ ແລະຂາງອີກຫ້າອັນສຳລັບຂັດໄມ້ຂອບຝາຫໍເຕັນອີກດ້ານນຶ່ງ ແລະຂາງອີກຫ້າອັນສຳລັບ
ຂັດໄມ້ຂອບຝາຫໍເຕັນດ້ານຫລັງຄືດ້ານຕາເວັນຕົກ

33 ເຂົາເຮັດຂາງໂຕກາງໃຫ້ຈັ່ງຕອນກາງຂອງໄມ້ຮ່າງຂອບສໍາລັບຂັດຝາຕັ້ງແຕ່ແຈນຶ່ງໄປສຸດອີກແຈນຶ່ງ
34 ເຂົາໂອບໄມ້ຮ່າງຂອບເຫລົ່ານັ້ນດ້ວຍທອງຄໍາ ແລະເຮັດຮ່ວງຂອບດ້ວຍທອງຄໍາສໍາລັບຈັ້ງຂາງ ແລະຂາງນັ້ນເຂົາໂອບດ້ວຍທອງຄໍາເຊັ່ນກັນ
35 ເຂົາເຮັດຜ້າກັ້ງດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະດ້ວຍຜ້າປ່ານເນື້ອດີມີຮູບເຊຣູບິມຝີມືຊ່າງອອກແບບໄວ້
36 ເຂົາເຮັດເສົາໄມ້ກະຖິນເທດສີ່ເສົາໂອບດ້ວຍທອງຄໍາ ຂໍຕິດເສົານັ້ນກໍເປັນທອງຄໍາ ເຂົາຫລໍ່ຖານເງິນສີ່ອັນ ສໍາລັບຮອງຮັບເສົານັ້ນ
37 ແລະເຂົາເຮັດຜ້າກັ້ງທີ່ປະຕູເຕັນນັ້ນດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອດີປະກອບດ້ວຍຝີມືຊ່າງປັກ
38 ແລະເຮັດເສົາຫ້າຕົ້ນ ສໍາລັບຜ້າກັ້ງນັ້ນພ້ອມດ້ວຍຂໍເກາະ ແລະໃຊ້ທອງຄໍາໂອບທັງເສົາແລະເຊືອກທີ່ຫ້ອຍຜ້າກັ້ງນັ້ນດ້ວຍ ແຕ່ຖານຫ້າຖານສໍາລັບຮອບຮັບເສົານັ້ນເຮັດດ້ວຍທອງສໍາຣິດ

## 37 ການເຮັດຫີບ

Making the Ark of the Covenant

(ອພຍ 25:10-22)

1 ເບຊາເລນເຮັດຫີບດ້ວຍໄມ້ກະຖິນເທດ ຍາວສອງສອກຄືບ ກວ້າງສອກຄືບ ແລະສູງສອກຄືບ
2 ຫີບນັ້ນເຂົາໂອບດ້ວຍທອງຄໍາບໍຣິສຸດ ທັງຂ້າງໃນແລະຂ້າງນອກ ແລະໄດ້ເຮັດຂອບຮອບຫີບນັ້ນດ້ວຍທອງຄໍາ
3 ເຂົາຫລໍ່ຮ່ວງທອງຄໍາສີ່ຮ່ວງຕິດໄວ້ທີ່ມຸມແຈທັງສີ່ ດ້ານນີ້ສອງຮ່ວງ ແລະດ້ານນັ້ນສອງຮ່ວງ
4 ເຂົາເຮັດຄານຫາມດ້ວຍໄມ້ກະຖິນເທດຫຸ້ມດ້ວຍທອງຄໍາ
5 ເຂົາສອດຄານຫາມເຂົ້າທີ່ຮ່ວງຂ້າງຫີບສໍາລັບໃຊ້ຍົກຫີບນັ້ນ
6 ແລ້ວເຂົາເຮັດພຣະທີ່ນັ່ງກະຣຸນາດ້ວຍທອງຄໍາບໍຣິສຸດ ຍາວສອງສອກຄືບ ກວ້າງສອກຄືບ
7 ເຂົາເຮັດເຊຣູບິມທອງຄໍາສອງຮູບ ໂດຍໃຊ້ຄ້ອນເຮັດຕັ້ງໄວ້ທີ່ປາຍພຣະທີ່ນັ່ງກະຣຸນາທັງສອງຂ້າງ
8 ເຂົາເຮັດເຊຣູບິມໄວ້ທີ່ປາຍພຣະທີ່ນັ່ງກະຣຸນາຂ້າງລະຮູບ ເຂົາເຮັດເຊຣູບິມນັ້ນຕອນປາຍທັງສອງຂ້າງເປັນເນື້ອດຽວກັນກັບພຣະທີ່ນັ່ງກະຣຸນາ
9 ໃຫ້ເຊຣູບິມກາງປີກອອກເບື້ອງເທິງປົກພຣະທີ່ນັ່ງກະຣຸນາໄວ້ດ້ວຍປີກ ແລະໃຫ້ຫັນໜ້າເຂົ້າຫາກັນ ຄືໃຫ້ເຊຣູບິມຫັນໜ້າມາຊື່ພຣະທີ່ນັ່ງກະຣຸນາ

**ການເຮັດໂຕະ**

Making the Table for the Bread of the Presence

(ອພຍ25:23-30)

10 ເຂົາເອົາໄມ້ກະຖິນເທດເຮັດໂຕະໜ່ວຍນຶ່ງ ຍາວສອງສອກ ກວ້າງນຶ່ງສອກ ແລະສູງສອກຄືບ
11 ເຂົາໂອບໂຕະນັ້ນດ້ວຍທອງຄໍາບໍຣິສຸດ ແລະເຮັດຂອບທອງຄໍາອ້ອມໂຕະນັ້ນດ້ວຍ
12 ເຂົາເຮັດຂອບນອກຂອງໂຕະນັ້ນກວ້າງນຶ່ງຝ່າມືໂດຍອ້ອມຮອບ ແລ້ວເຮັດຂອບທອງຄໍາປະກອບອ້ອມຮອບຂອບນັ້ນ
13 ເຂົາຫລໍ່ຮ່ວງທອງຄໍາສີ່ອັນຕິດໄວ້ທີ່ມຸມໂຕະທັງສີ່ທີ່ຂາໂຕະ
14 ຮ່ວງນັ້ນຕິດກັບຂອບ ສໍາລັບສອດຄານຫາມ
15 ເຂົາເຮັດຄານຫາມດ້ວຍໄມ້ກະຖິນເທດໂອບດ້ວຍທອງຄໍາສໍາລັບຫາມໂຕະນັ້ນ
16 ແລະເຂົາເຮັດເຄື່ອງໃຊ້ສໍາລັບໂຕະນັ້ນມີ ຈານ ຈອກ ໄຫ ແລະຖ້ວຍທີ່ໃຊ້ຣິນເຄື່ອງດື່ມບູຊາ ຊຶ່ງເຮັດດ້ວຍທອງຄໍາບໍຣິສຸດທັງສິ້ນ

**ການເຮັດເຄື່ອງຮອງຕີນໂຄມ**

Making the Lamp stand

(ອພຍ 25:31-40)

17 ເຂົາເຮັດເຄື່ອງຮອງຕີນໂຄມອັນນຶ່ງດ້ວຍທອງຄຳບໍຣິສຸດ ຖານແລະລຳຕົວຂອງເຄື່ອງຮອງຕີນໂຄມນັ້ນໃຊ້ຄ້ອນເຮັດ
ດອກ ຄືຖານດອກແລະກີບເຮັດເປັນເນື້ອດຽວກັນກັບເຄື່ອງຮອງຕີນໂຄມ
18 ມີກິ່ງຫົກກິ່ງແຍກອອກຈາກລຳເຄື່ອງຮອງຕີນໂຄມນັ້ນຂ້າງລະສາມກິ່ງ
19 ແຕ່ລະກິ່ງມີດອກເໝືອນດອກໝາກບົກສາມດອກ ທຸກໆດອກມີ ຖານ ດອກ ແລະກີບ ເປັນດັ່ງນີ້ທັງຫົກກິ່ງ ຊຶ່ງຕໍ່
ອອກຈາກລຳຫລັກຕະກຽງ
20 ສຳລັບເຄື່ອງຮອງຕີນໂຄມນັ້ນມີດອກສີ່ດອກເໝືອນດອກໝາກບົກທັງຖານດອກແລະກີບ
21 ທາງກ້ອງກິ່ງທຸກໆຄູ່ທັງຫົກກິ່ງທີ່ລຳເຄື່ອງຮອງຕີນໂຄມນັ້ນ ໃຫ້ມີກະໂບກເປັນເນື້ອດຽວກັນກັບເຄື່ອງຮອງຕີນໂຄມ
22 ກະໂບກແລະກິ່ງເປັນເນື້ອດຽວກັນກັບເຄື່ອງຮອງຕີນໂຄມເຮັດທຸກສ່ວນເປັນເນື້ອດຽວກັນດ້ວຍທອງຄຳບໍຣິສຸດ ແລະ
ໃຊ້ຄ້ອນເຮັດ
23 ເຂົາເຮັດຕະກຽງເຈັດດວງສຳລັບເຄື່ອງຮອງຕີນໂຄມນັ້ນ ຄີມຕັດໄສ້ຕະກຽງແລະຖາດຮອງ ດ້ວຍທອງຄຳບໍຣິສຸດ
24 ເຄື່ອງຮອງຕີນໂຄມ ແລະເຄື່ອງໃຊ້ທັງໝົດສຳລັບເຄື່ອງຮອງຕີນໂຄມນັ້ນ ເຂົາເຮັດດ້ວຍທອງຄຳບໍຣິສຸດໜັກນຶ່ງຕາ
ລັນ

**ແທ່ນບູຊາສຳລັບເຜົາເຄື່ອງຫອມ**

Making the Altar of Incense

(ອພຍ 30:1-5)

25 ເຂົາສ້າງແທ່ນບູຊາ ສຳລັບເຜົາເຄື່ອງຫອມດ້ວຍໄມ້ກະຖິນເທດ ຍາວສອກນຶ່ງ ກວ້າງສອກນຶ່ງ ເປັນຮູບສີ່ຫລ່ຽມ
ແລະສູງສອງສອກ ຍອດທີ່ແຈແທ່ນນັ້ນກໍເປັນໄມ້ທ່ອນດຽວກັນກັບແທ່ນ
26 ເຂົາຫຸ້ມແທ່ນນັ້ນດ້ວຍທອງຄຳບໍຣິສຸດ ທັງດ້ານເທິງແລະດ້ານຂ້າງທັງສີ່ດ້ານ ແລະຍອດດ້ວຍ ແລະເຂົາ
ເຮັດຂອບທອງຄຳອ້ອມຮອບແທ່ນນັ້ນ
27 ເຂົາເຮັດຮ່ວງທອງຄຳສອງຮ່ວງຕິດໄວ້ໃຕ້ຂອບທັງສອງດ້ານ ກົງກັນຂ້າມກັນ ເປັນທີ່ສຳລັບສອດໃສ່ໄມ້ຄານຫາມ
28 ເຂົາເຮັດໄມ້ຄານຫາມນັ້ນດ້ວຍໄມ້ກະຖິນເທດໂອບດ້ວຍທອງຄຳ

**ການປຸງນ້ຳມັນເຈີມແລະເຄື່ອງຫອມ**

Making the Anointing oil and the Incense

(ອພຍ 30:22-38)

29 ເຂົາປຸງນ້ຳມັນເຈີມອັນສັກສິດ ແລະປຸງເຄື່ອງຫອມດ້ວຍເຄື່ອງເທດຕາມສິລປະຂອງຊ່າງປຸງ

## 38 ການທຳແທ່ນເຄື່ອງເຜົາບູຊາ

Making the Altar of Burnt Offering

(ອພຍ 27:1-8)

1 ເຂົາເຮັດແທ່ນເຄື່ອງເຜົາບູຊາດ້ວຍໄມ້ກະຖິນເທດຍາວຫ້າສອກ ກວ້າງຫ້າສອກ ເປັນແທ່ນສີ່ຫລ່ຽມ ສູງສາມສອກ
2 ເຂົາເຮັດຍອດຕິດໄວ້ທັງສີ່ແຈຂອງແທ່ນນັ້ນ ຍອດນັ້ນເປັນໄມ້ເນື້ອດຽວກັນກັບແທ່ນບູຊາ ເຂົາໂອບແທ່ນດ້ວຍທອງ
ສຳຣິດ
3 ເຂົາເຮັດເຄື່ອງເທິງແທ່ນນັ້ນທຸກຢ່າງຄື ໝໍ້ ຊ້ອນ ຖ້ວຍ ຂໍເກາະ ແລະຖາດຮອງໄຟ ເຄື່ອງໃຊ້ສຳລັບແທ່ນທັງໝົດ
ນັ້ນ ເຂົາເຮັດດ້ວຍທອງສຳຣິດ

4 ແລະເຂົາເອົາທອງສຳຣິດເຮັດເປັນຕານ່າງປະດັບແທ່ນນັ້ນໃຫ້ຢູ່ໃຕ້ຂອບຂອງແທ່ນ ແລະຫ້ອຍຢູ່ຕັ້ງແຕ່ກາງແທ່ນລົງ
ມາ
5 ເຂົາຫລໍ່ຮ່ວງສີ່ຮ່ວງຕິດທີ່ແຈທັງສີ່ຂອງຕານ່າງສຳລັບສອດໄມ້ຄານຫາມ
6 ເຂົາເຮັດໄມ້ຄານຫາມດ້ວຍໄມ້ກະຖິນເທດ ແລະໂອບດ້ວຍທອງສຳຣິດ
7 ເຂົາສອດໄມ້ຄານນັ້ນໄວ້ໃນຮ່ວງທີ່ຂ້າງແທ່ນສຳລັບຫາມ ເຂົາເຮັດແທ່ນນັ້ນດ້ວຍໄມ້ກະດານ ໂດຍຄວັດລົງເປັນ
ຫມົ້ງທາງກາງ

**ການເຮັດຂັນ**

8 ເຂົາເຮັດຂັນທອງສຳຣິດ ແລະພານຮອງຂັນທອງສຳຣິດ ຈາກແວ່ນແຍງຂອງບັນດາຜູ້ຍິງທີ່ບົວລະບັດໃນທາງປະຕູ
ເຂົ້າເຕັນນັດພົບ

**ລານຫໍເຕັນສັກສິດ**

Making the Court of the Tabernacle

(ອພຍ 27:9-19)

9 ແລະເຂົາເຮັດລານໄວ້ດ້ວຍ ໃຫ້ຮື້ວດ້ານໃຕ້ມີຜ້າບັງ ເຮັດດ້ວຍຜ້າປ່ານເນື້ອດີຍາວຮ້ອຍສອກ
10 ມີເສົາຊາວຕົ້ນກັບຖານທອງສຳຣິດຮອງຮັບເສົາຊາວຖານ ຂໍຕິດເສົາແລະຣາວຍຶດເສົານັ້ນເຮັດດ້ວຍເງິນ
11 ດ້ານເຫນືອຍາວຮ້ອຍສອກ ກັບເສົາຊາວຕົ້ນ ແລະຖານທອງສຳຣິດຊາວຖານ ຂໍແລະຣາວຍຶດເສົານັ້ນທຳດ້ວຍເງິນ
12 ສ່ວນດ້ານຕາເວັນຕົກມີຜ້າບັງຍາວຫ້າສິບສອກ ກັບເສົາສິບຕົ້ນ ແລະຖານຮອງຮັບເສົາສິບຖານ ຂໍແລະຣາວຍຶດເສົາ
ທຳດ້ວຍເງິນ
13 ດ້ານຕາເວັນອອກໃຊ້ຜ້າຍາວຫ້າສິບສອກ
14 ຜ້າບັງດ້ານຮິມປະຕູຂ້າງນຶ່ງຍາວຫ້າສິບສອກມີເສົາສາມຕົ້ນ ແລະຖານຮອງຮັບເສົາສາມຖານ
15 ແລະອີກຂ້າງນຶ່ງກໍເຫມືອນກັນ ຮິມປະຕູຂ້າງນີ້ແລະຂ້າງນັ້ນ ມີຜ້າບັງຍາວສິບຫ້າສອກ ມີເສົາສາມຕົ້ນແລະຖານ
ຮອງຮັບເສົາສາມຖານ
16 ຜ້າບັງລານອ້ອມຮອບນັ້ນເຮັດດ້ວຍຜ້າປ່ານເນື້ອດີ
17 ຖານຮອງຮັບເສົານັ້ນເຮັດດ້ວຍທອງສຳຣິດ ຂໍຕິດເສົາແລະຣາວຍຶດເສົາເປັນເງິນ ແລະກຸບປົກຂອງເສົານັ້ນໂອບ
ດ້ວຍເງິນ ແລະເສົາທຸກຕົ້ນຂອງລານມີຣາວຍຶດເສົາເຮັດດ້ວຍເງິນ
18 ຜ້າກັ້ງບັງທີ່ປະຕູລານນັ້ນປັກດ້ວຍສີມືຂອງຊ່າງປັກ ເປັນສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອດີ ຍາວຊາວ
ສອກ ສູງຫ້າສອກ ສເມີກັບຜ້າບັງລານ
19 ມີເສົາສີ່ຕົ້ນກັບຖານຮອງຮັບເສົາສີ່ຖານ ເປັນທອງສຳຣິດ ຂໍຕິດເສົາເຮັດດ້ວຍເງິນ ແລະສ່ວນທີ່ໂອບກຸບປົກ ກັບຣາວ
ຍຶດເສົາເປັນເງິນ
20 ຫລັກຫມຸດທຸກຫລັກຂອງຫໍເຕັນສັກສິດ ແລະຂອງລານຮອບຫໍເຕັນນັ້ນເຮັດດ້ວຍທອງສຳຣິດ
21 ນີ້ແຫລະເປັນບັນຊີສິ່ງຂອງທີ່ໃຊ້ໃນຫໍເຕັນສັກສິດ ຄືຫໍເຕັນພຣະໂອວາດ ຊຶ່ງເຂົາທັງຫລາຍນັບຕາມຄຳສັ່ງຂອງໂມເຊ
ມີຄົນເລວີຈັດທຳຕາມບັນຊາຂອງອິທາມາບຸດອາໂຣນປະໂຣຫິດ
22 ສ່ວນເບຊາເລນບຸດອູຣີຜູ້ເປັນບຸດຂອງເຮີແຫ່ງເຜົ່າຢູດາ ເຮັດສິ່ງສາຣະພັດທີ່ພຣະເຈົ້າໄດ້ຊົງບັນຊາໂມເຊແລ້ວ
23 ຜູ້ຮ່ວມງານກັບເຂົາຄື ໂອໂຮລີອາບ ບຸດອາຮີຊາມາກ ແຫ່ງເຜົ່າດານ ເປັນຊ່າງສີມືຊ່າງອອກແບບ ແລະຊ່າງດ້າຍສີ
ໃຊ້ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອດີ
24 ຄຳທັງຫມົດຊຶ່ງເຂົາໃຊ້ໃນການສ້າງຫໍເຕັນສັກສິດນັ້ນ ຄືຄຳທີ່ເຂົານຳມາຖວາຍ ມີນ້ຳຫນັກຊາວເກົ້າຕາລັນ ເຈັດຮ້ອຍ
ສາມສິບເຊເກລ ຕາມເຊເກລແຫ່ງສະຖານທີ່ນະມັສການ

25 ເງິນຕາມຈຳນວນຊຸມນຸມຊິນໄດ້ນັບໄວ້ ຮວມເປັນນຶ່ງຮ້ອຍຕາລັນກັບນຶ່ງພັນເຈັດຮ້ອຍເຈັດສິບຫ້າເຊເກລ ຕາມເຊເກ
ລແຫ່ງສະຖານທີ່ນະມັສການ
26 ຄົນລະເບກາ (ຄືເຄິ່ງເຊເກລ ຕາມເຊເກລຂອງສະຖານທີ່ນະມັສການ) ອັນເກັບມາຈາກທຸກຄົນທີ່ໄປຈົດທະບຽນສຳ
ມະໂນຄົວ ຄືນັບຕັ້ງແຕ່ອາຍຸຊາວປີຂຶ້ນໄປຮວມທັກແສນສາມພັນຫ້າຮ້ອຍຫ້າສິບຄົນ
27 ເງິນນຶ່ງຮ້ອຍຕາລັນນັ້ນ ເຂົາໃຊ້ຫລໍ່ເຮັດຖານຮອງຮັບ ຂອງສະຖານທີ່ນະມັສການ ແລະຖານຂອງຜ້າກັ້ງ ຖານ
ຮ້ອຍຖານເປັນເງິນນຶ່ງຮ້ອຍຕາລັນ ຄືຖານລະນຶ່ງຕາລັນ
28 ແຕ່ເງິນນຶ່ງພັນເຈັດຮ້ອຍເຈັດສິບຫ້າເຊເກລນັ້ນ ເຂົາໃຊ້ເຮັດຂໍສຳລັບເສົາແລະໂອບກຸບປົກຂອງເສົານັ້ນ ແລະ
ເຮັດຮາວຍຶດເສົາດ້ວຍ
29 ທອງສຳຣິດທີ່ເຂົານຳມາຖວາຍໜັກເຈັດສິບຕາລັນ ກັບສອງພັນສີ່ຮ້ອຍເຊເກລ
30 ທອງສຳຣິດນັ້ນເຂົາໃຊ້ເຮັດຖານປະຕູເຕັນນັດພົບ ແລະເຮັດແທ່ນທອງສຳຣິດ ແລະຕານ່າງປະດັບແທ່ນແລະທຳ
ເຄື່ອງໃຊ້ທັງໝົດຂອງແທ່ນນັ້ນ
31 ເຮັດຖານລ້ອມອ້ອມຮອບລານແລະຖານທີ່ປະຕູລານຫລັກໝຸດທັງໝົດຂອງຫໍເຕັນສັກສິດ ແລະຫລັກໝຸດອ້ອມ
ຮອບລານນັ້ນ

## 39 ການຫຍິບເສື້ອຂອງປະໂຣຫິດ

Making the Vestments for the Priesthood

(ອພຍ 28:1-43)

1 ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມນັ້ນ ເຂົາໃຊ້ເຮັດເສື້ອຜ້າສຳລັບໃສ່ເວລາບົວລະບັດໃນບ່ອນສັກສິດ ແລະໄດ້ເຮັດ
ເຄື່ອງຍົດບໍຣິສຸດສຳລັບອາໂຣນ ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ
2 ເຂົາເຮັດເອໂຟດດ້ວຍທອງຄຳ ດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະເສັ້ນປ່ານຢ່າງດີ
3 ເຂົາຕີທອງຄຳແຜ່ອອກເປັນແຜ່ນບາງໆ ແລ້ວຕັດເປັນເສັ້ນນ້ອຍໆ ເພື່ອຈະຕ່ຳເຂົ້າກັບດ້າຍສີຟ້າ ເຂົ້າກັບດ້າຍສີ
ມ່ວງ ເຂົ້າກັບດ້າຍສີແດງເຂັ້ມ ແລະເຂົ້າກັບເສັ້ນປ່ານຢ່າງດີດ້ວຍສີມືຊ່າງຊຳນານ
4 ເຂົາເຮັດຜ້າສອງແຜ່ນນ້ອຍໆຊຶ່ງສິ້ນທັງສອງສາມາດຕິດໄວ້ທີ່ບ່າເພື່ອໂຍງເອໂຟດ ໃຫ້ຕິດກັບຣິມຕອນບົນທັງສອງ
ອັນ
5 ສ່ວນສາຍຮັດ ຕ່ຳຢ່າງປານີດສຳລັບຄາດທັບເອໂຟດນັ້ນ ເຂົາເຮັດດ້ວຍວັດຖຸຢ່າງດຽວກັນ ແລະສີມືຢ່າງດຽວກັບ
ເອໂຟດ ຄືເຮັດດ້ວຍທອງຄຳ ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອດີຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມ
ເຊ
6 ເຂົາເອົາແກ້ວໂກເມນຝັງໄວ້ໃນກະໂບກທອງຄຳຊຶ່ງມີລວດລາຍລະອຽດ ແລະແກະຢ່າງແກະຕາ ເປັນຊື່ບຸດຊາຍອິສ
ຣາເອນ
7 ແລ້ວເຂົາຕິດໄວ້ກັບເອໂຟດເທິງແຖບບ່ານັ້ນເພື່ອໃຫ້ລະນຶກເຖິງບັນດາບຸດແຫ່ງອິສຣາເອນ ຕາມທີ່ພຣະຜູ້ເປັນເຈົ້າ
ຊົງສັ່ງແກ່ໂມເຊ
8 ເຂົາເຮັດແຜ່ນຮອງເອິກດ້ວຍສີມືຊ່າງອອກແບບໃຫ້ສີມືເຫມືອນກັນເຮັດເອໂຟດ ຄືເຮັດດ້ວຍຄຳ ດ້າຍສີຟ້າ ສີມ່ວງ
ສີແດງເຂັ້ມ ແລະຜ້າປ່ານເນື້ອດີ
9 ເຂົາເຮັດແຜ່ນຮອງເອິກເປັນຮູບສີ່ຫລ່ຽມ ພັບທົບກາງຍາວຄືບນຶ່ງ ກວ້າງຄືບນຶ່ງ ເປັນສອງທົບດ້ວຍກັນ
10 ເຂົາຝັງແກ້ວສີ່ແຖວເທິງແຜ່ນຮອງເອິກນັ້ນ ແຖວທີນຶ່ງຝັງທັບທິມ ພອຍເຫລືອງ ແລະມໍຣະກົດ
11 ແຖວທີສອງຝັງພອຍ ໄພທູນ ແລະເພັດ
12 ແຖວທີສາມຝັງນິນ ໂມຣາ ແລະເພທາຍສີມ່ວງ

13 แຖວທີສີ່ຝັງເພທາຍ ໂກເມນ ແລະມະນີໂຊຕ ແກ້ວທັງຫມົດນີ້ເຂົາໄດ້ຝັງໃນກະໂບກລວດລາຍລະອຽດເຮັດ
ດ້ວຍທອງຄຳ
14 ແກ້ວເຫລົ່ານີ້ມີຊື່ເຫລົ່າບຸດຂອງອິສຣາເອນສິບສອງຊື່ ຈາຣຶກໄວ້ເຫມືອນແກະຕາ ມີຊື່ເຜົ່າທຸກເຜົ່າຕາມລຳດັບສິບ
ສອງເຜົ່າ
15 ເຂົາເຮັດສ້ອຍຖັກກຽວດ້ວຍທອງຄຳບໍຣິສຸດສຳລັບແຜ່ນຮອງເອິກ
16 ແລະເຂົາເຮັດລວດລາຍລະອຽດດ້ວຍທອງຄຳສອງອັນ ແລະຮ່ວງທອງຄຳສອງຮ່ວງ ຕິດໄວ້ທີ່ສົ້ນທັງສອງຂອງແຜ່ນ
ຮອງເອິກ
17 ເຂົາຍສອດສ້ອຍທີ່ເຮັດດ້ວຍທອງຄຳນັ້ນ ໃນຮ່ວງທີ່ສົ້ນແຜ່ນຮອງເອິກ
18 ແລະປາຍສ້ອຍອີກສອງຂ້າງນັ້ນ ເຂົາເຮັດຕິດກັບກະໂບກລວດລາຍລະອຽດທັງສອງໃຫ້ຕິດໄວ້ຂ້າງຫນ້າເສື້ອເອ
ໂຟດທັງສອງຂ້າງເທິງບ່າ
19 ເຂົາເຮັດຮ່ວງທອງຄຳສອງອັນຕິດໄວ້ທີ່ຂອບດ້ານລຸ່ມທັງສອງຂອງແຜ່ນຮອງເອິກຂ້າງໃນຕິດເອໂຟດ
20 ແລະເຂົາເຮັດຮ່ວງສອງອັນດ້ວຍທອງຄຳ ເພື່ອຜູກຕິດກັບທາງລຸ່ມຂອງສາຍດຶງທັງສອງຂ້າງທີ່ເບື້ອງຫນ້າບ່າໄຫລ່
ຂອງເສື້ອເອໂຟດ ຄືໃກ້ກັບສາຍດຶງແລະເທິງສາຍແອວປ່ານ
21 ແລະເຂົາຜູກແຜ່ນຮອງເອິກນັ້ນຕິດກັບເອໂຟດດ້ວຍ ໃຊ້ດ້າຍຖັກສີຟ້າຮ້ອຍຜູກທີ່ຮ່ວງ ໃຫ້ຮັດຕິດກັບເອິກທີ່ເທິງສາຍ
ແອວ ເພື່ອບໍ່ໃຫ້ແຜ່ນຮອງເອິກຫລຸດໄປຈາກເອໂຟດ ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ
22 ເຂົາເຮັດເສື້ອຄຸມເຂົ້າຊຸດກັບເອໂຟດໄດ້ເຮັດດ້ວຍຜ້າຂົນແກະສີຟ້າທັງຫມົດ
23 ແລະຊ່ວງກາງຂອງເສື້ອນັ້ນ ເຂົາເຮັດເປັນເສື້ອຄໍສຸບ ແລະແນບດ້ວຍຜ້າຫນາເພື່ອບໍ່ໃຫ້ຂາດງ່າຍ
24 ທີ່ຕີນເສື້ອຄຸມ ເຂົາປັກເປັນຮູບຫມາກພິລາ ໃຊ້ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອດີ
25 ເຂົາເຮັດຫມາກກະດິ່ງດ້ວຍທອງຄຳບໍຣິສຸດ ແລ້ວຕິດຫມາກກະດິ່ງລະຫວ່າງຫມາກພິລາຮອບຕີນເສື້ອຄຸມນັ້ນ
26 ຄືຫມາກກະດິ່ງອັນນຶ່ງ ຫມາກພິລາຫມາກນຶ່ງແລະຫມາກກະດິ່ງອັນນຶ່ງ ຫມາກພິລາອີກຫມາກນຶ່ງສລັບກັນດັ່ງນີ້
ຮອບຕີນເສື້ອຄຸມນັ້ນ ສຳລັບສວມເວລາບົວລະບັດພຣະເຈົ້າ ຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາແກ່ໂມເຊ
27 ເຂົາເຮັດເສື້ອດ້ວຍຜ້າປ່ານເນື້ອດີສຳລັບອາໂຣນ ແລະສຳລັບບຸດຊາຍຂອງທ່ານ
28 ແລະເຮັດຫມວກສຸບ ຜ້າປົກຫົວແລະເຮັດສົ້ງດ້ວຍຜ້າປ່ານເນື້ອດີ
29 ແລະສາຍແອວດ້ວຍຜ້າປ່ານເນື້ອລະອຽດດີ ແລະປັກດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ດ້ວຍສີມືຊ່າງປັກ ຕາມທີ່ພ
ຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ
30 ເຂົາເຮັດແຜ່ນມົງກຸດສັກສິດດ້ວຍທອງຄຳບໍຣິສຸດ ຈາລຶກຄຳວ່າ "ບໍຣິສຸດແດ່ພຣະຜູ້ເປັນເຈົ້າ" ໄວ້ເຫມືອນຢ່າງແກະຕ
ຣາ
31 ແລ້ວເຂົາເອົາດ້າຍຖັກສີຟ້າ ຜູກແຜ່ນທອງຄຳນັ້ນໄວ້ເທິງຫມວກ ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ

**ວຽກງານສຳເຣັດ**

The Work Completed

(ອພຍ 35:10-19)

32 ດັ່ງນີ້ແຫລະເຂົາເຮັດງານສຳລັບຫໍເຕັນສັກສິດແຫ່ງເຕັນນັດພົບ ໃຫ້ສຳເຣັດທຸກປະການ ພຣະຜູ້ເປັນເຈົ້າຊົງສັ່ງແກ່
ໂມເຊໄວ້ຢ່າງໃດ ຄົນອິສຣາເອນກໍກະເຮັດຢ່າງນັ້ນທຸກປະການ
33 ເຂົາຈຶ່ງໄດ້ນຳຫໍເຕັນແລະເຄື່ອງໃຊ້ທັງປວງຄື ຂໍເກາະ ຮ່າງຂອບໄມ້ ໄມ້ຂາງ ເສົາ ແລະຖານຮອງຮັບເສົາ
34 ຜ້າປົກຄຸມຫໍເຕັນຂ້າງເທິງເຮັດດ້ວຍຫນັງແກະຕົວຜູ້ຍ້ອມສີແດງ ແລະຫນັງສັດ ແລະຜ້າກັ້ງບັງ
35 ຫີບຄຳສັນຍາກັບໄມ້ຄານຫາມຂອງຫີບນັ້ນ ແລະພຣະທີ່ນັ່ງກະຣຸນາ
36 ໂຕະກັບເຄື່ອງໃຊ້ທັງຫມົດເທິງໂຕະນັ້ນ ແລະເຂົ້າຈີ່ຫນ້າພຣະພັກ

37 ເຄື່ອງຮອງຕີນໂຄມບໍຣິສຸດກັບຕະກຽງຄືຕະກຽງທີ່ເຂົ້າທີ່ ແລະເຄື່ອງໃຊ້ທັງຫມົດຂອງເຄື່ອງຮອງຕີນໂຄມນັ້ນ ແລະ
ນ້ຳມັນສຳລັບຕາມຕະກຽງ
38 ແທ່ນທອງຄຳ ນ້ຳມັນເຈີມ ເຄື່ອງຫອມ ເຄື່ອງຫອມສຳລັບເຜົາບູຊາ ແລະຜ້າກັ້ງສຳລັບປະຕູເຕັນ
39 ແທ່ນບູຊາທອງສຳຣິດ ກັບຕາຂ່າຍທອງສຳຣິດສຳລັບແທ່ນນັ້ນ ໄມ້ຄານຫາມແລະເຄື່ອງໃຊ້ທັງຫມົດຂອງແທ່ນ ຂັນ
ກັບພານຮອງຂັນ
40 ຜ້າກັ້ງສຳລັບອ້ອມຮອບຫໍເຕັນກັບຖານຮອງຮັບ ຜ້າກັ້ງສຳລັບປະຕູທາງເຂົ້າ ແລະເຊືອກເນັ່ງ ຫລັກສຽບຂອງຫໍເຕັນ
ແລະເຄື່ອງໃຊ້ທັງຫມົດຂອງພິທີການທີ່ເຫໍຕັນ ສຳລັບເຕັນນັດພົບ
41 ເສື້ອຜ້າເຮັດຢ່າງປານີດ ສຳລັບສວມໃນເວລາປົວລະບັດໃນບ່ອນສັກສິດ ເຄື່ອງຍົດບໍຣິສຸດສຳລັບອາໂຣນ ເຄື່ອງຍົດ
ສຳລັບບຸດອາໂຣນ ສຳລັບໃຊ້ສວມໃນເວລາປົວລະບັດໃນຕຳແຫນ່ງປະໂຣຫິດ
42 ສິ່ງສາຣະພັດທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊແລ້ວ ຊົນຊາດອິສຣາເອນກະທຳໃຫ້ສຳເຣັດທຸກປະການ
43 ໂມເຊຈຶ່ງກວດເບິ່ງງານທັງປວງ ເຫັນວ່າພວກເຂົາໄດ້ເຮັດຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ທຸກປະການ ໂມເຊ
ຈຶ່ງອວຍພອນແກ່ເຂົາ

## 40 ການຕັ້ງຫໍເຕັນສັກສິດ

The Tabernacle Erected and Its Equipment Installed

1 ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ,
2 “ໃນວັນທີນຶ່ງຂອງເດືອນທີນຶ່ງ ຈົ່ງຕັ້ງຫໍເຕັນນັດພົບຂຶ້ນ
3 ຈົ່ງເອົາຫີບຄຳສັນຍາໄວ້ໃນທີ່ນັ້ນ ໃຫ້ກາງຜ້າກັ້ງບັງຫີບນັ້ນໄວ້
4 ຈົ່ງຍົກໂຕະເຂົ້າມາຕັ້ງໄວ້ ແລະຈັດເຄື່ອງເທິງໂຕະໄວ້ຕາມທີ່ຂອງມັນ ແລ້ວນຳເຄື່ອງຮອງຕີນໂຄມເຂົ້າມາແລະ
ໃສ່ຕະກຽງໄວ້ເທິງຫລັກ
5 ຈົ່ງຕັ້ງແທ່ນທອງຄຳສຳລັບເຜົາເຄື່ອງຫອມໄວ້ຕໍ່ຫນ້າຫີບພຣະໂອວາດ ແລ້ວກາງຜ້າກັ້ງໄວ້ທີ່ປະຕູຫໍເຕັນສັກສິດ
6 ຈົ່ງຕັ້ງແທ່ນເຄື່ອງເຜົາບູຊາໄວ້ຕໍ່ຫນ້າຫໍເຕັນສັກສິດແຫ່ງເຕັນນັດພົບ
7 ຈົ່ງຕັ້ງຂັນໄວ້ລະຫວ່າງຫໍເຕັນສັກສິດກັບແທ່ນບູຊາ ຈົ່ງຕັກນ້ຳໃສ່ໄວ້ໃນຂັນນັ້ນ
8 ໃຫ້ເຮັດຮົ້ວອ້ອມຮອບຫໍເຕັນສັກສິດ ແລະກາງຜ້າກັ້ງໄວ້ທີ່ປະຕູຮົ້ວ
9 ໃຫ້ເອົານ້ຳມັນຫອມທາຫໍເຕັນສັກສິດກັບທຸກສິ່ງທີ່ຢູ່ໃນນັ້ນ ແລະຈົ່ງເຮັດໃຫ້ເຄື່ອງໃຊ້ທັງຫມົດບໍຣິສຸດ ແລ້ວຫໍ
ເຕັນນັ້ນຈະບໍຣິສຸດ
10 ໃຫ້ທາແທ່ນສຳລັບເຄື່ອງເຜົາບູຊາດ້ວຍ ແລະເຄື່ອງໃຊ້ທັງຫມົດເທິງແທ່ນ ຈົ່ງຊຳຮະແທ່ນນັ້ນໃຫ້ບໍຣິສຸດ ແທ່ນນັ້ນ
ນັ້ນຈະບໍຣິສຸດທີ່ສຸດ
11 ຈົ່ງທາຂັນກັບພານຮອງຂັນ ແລະຊຳຮະໃຫ້ບໍຣິສຸດ
12 ຈົ່ງນຳອາໂຣນກັບບຸດຂອງທ່ານມາຍັງປະຕູຫໍເຕັນນັດພົບ ແລ້ວໃຊ້ນ້ຳລ້າງຊຳຮະຕົວເຂົາ
13 ຈົ່ງນຳເສື້ອບໍຣິສຸດສວມໃຫ້ອາໂຣນ ພ້ອມທັງຫົດສົງນ້ຳມັນ ແລະທຳໃຫ້ເຂົາບໍຣິສຸດ ເພື່ອເຂົາຈະໄດ້ເປັນປະໂຣຫິດຜູ້
ປົວລະບັດເຮົາ
14 ແລ້ວຈົ່ງນຳບຸດຂອງອາໂຣນມາແລະນຸ່ງເສື້ອຍົດໃຫ້
15 ຈົ່ງທາເຂົາເຫມືອນທາບິດາຂອງເຂົາ ເພື່ອເຂົາຈະໄດ້ເປັນປະໂຣຫິດຜູ້ປົວລະບັດເຮົາ ການທານັ້ນຈະເປັນການທາ
ແຕ່ງຕັ້ງເຂົາໄວ້ເປັນປະໂຣຫິດຕລອດໄປເປັນນິດຕລອດຊົ່ວຊາດເຊື້ອສາຍຂອງເຂົາ”
16 ໂມເຊໄດ້ເຮັດຕາມພຣະຜູ້ເປັນເຈົ້າຊົງສັ່ງທຸກຢ່າງ
17 ໃນວັນທີນຶ່ງແລະເດືອນທີນຶ່ງຂອງປີທີສອງ ທ່ານຕິດຕັ້ງຫໍເຕັນສັກສິດ

18 ໂມເຊໄດ້ຕິດຕັ້ງຫໍເຕັນສັກສິດຂຶ້ນຄືໄດ້ຕັ້ງຕີນໃສ່ໄມ້ແປ້ນ ສອດຣາວແລະຕັ້ງຫລັກຂຶ້ນ
19 ທ່ານໄດ້ຄຶງຜ້າເຕັນເທິງຫໍເຕັນສັກສິດ ແລະມຸງປົກເຕັນຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ
20 ໄດ້ເອົາແຜ່ນຫີນພຣະໂອວາດໄວ້ໃນຫີບນັ້ນ ແລະສອດໄມ້ຄານຫາມໄວ້ໃນຫີບນັ້ນ ແລ້ວຕັ້ງພຣະທີ່ນັ່ງກະຣຸນາໄວ້ເທິງຫີບ
21 ແລ້ວໄດ້ນຳຫີບຄຳສັນຍາໄປໄວ້ໃນຫໍເຕັນສັກສິດ ພ້ອມທັງກາງຜ້າກັ້ງປິດບັງໄວ້ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ
22 ທ່ານຕັ້ງໂຕະໄວ້ໃນເຕັນນັດພົບທາງທິດເຫນືອຂອງຫໍເຕັນສັກສິດນອກຜ້າກັ້ງ
23 ແລ້ວຈັດເຂົ້າຈີ່ສຳລັບຖວາຍພຣະຜູ້ເປັນເຈົ້າໄວ້ເທິງໂຕະນັ້ນຕາມພຣະອົງຊົງສັ່ງ
24 ແລະທ່ານໄດ້ຕັ້ງເຄື່ອງຮອງຕີນໂຄມໄວ້ໃນຫໍເຕັນນັດພົບ ຄືຕັ້ງໄວ້ຕໍ່ຫນ້າໂຕະຂ້າງເຕັນເບື້ອງໃຕ້
25 ແລະເອົາຕະກຽງໄວ້ເທິງຫລັກຂ້ອງພຣະພັກພຣະຜູ້ເປັນເຈົ້າຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ
26 ທ່ານໄດ້ຕັ້ງແທ່ນທອງຄຳໄວ້ໃນຫໍເຕັນນັດພົບເບື້ອງຫນ້າຜ້າກັ້ງ
27 ແລະເຜົາເຄື່ອງຫອມເທິງແທ່ນນັ້ນ ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ
28 ແລະໄດ້ກາງຜ້າກັ້ງໄວ້ທີ່ປະຕູເຂົ້າເຕັນສັກສິດ
29 ທ່ານຕັ້ງແທ່ນເຜົາເຄື່ອງບູຊາໄວ້ທີ່ປະຕູຫໍເຕັນສັກສິດ ແລະຖວາຍເຄື່ອງເຜົາບູຊາ ແລະເຄື່ອງທັນຍາຫານບູຊາເທິງແທ່ນນັ້ນຕາມພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ
30 ທ່ານຕັ້ງຂັນໄວ້ລະຫວ່າງເຕັນນັດພົບກັບແທ່ນບູຊາ ແລ້ວເອົານ້ຳໃສ່ຂັນໄວ້ສຳລັບຊຳຣະລ້າງ
31 ໂມເຊກັບອາໂຣນ ແລະບຸດຊາຍຂອງທ່ານໄດ້ລ້າງມືແລະຕີນທີ່ຂັນນັ້ນ
32 ເມື່ອເຂົາຈະເຂົ້າໄປໃນຫໍເຕັນນັດພົບ ຫລືເຂົ້າໄປໃກ້ແທ່ນນັ້ນເມື່ອໃດ ເຂົາກໍຈະຊຳຣະລ້າງເສັຽກ່ອນຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ
33 ທ່ານກັ້ນຮົ້ວອ້ອມຮອບເຕັນສັກສິດແລະແທ່ນນັ້ນ ແລ້ວກາງຜ້າກັ້ງໄວ້ທີ່ປະຕູຮົ້ວ ໂມເຊກໍຈັດງານນັ້ນສຳເຣັດໄປທຸກປະການ

**ເມກປົກຄຸມຫໍເຕັນສັກສິດ**

The Cloud and the Glory

(ອພຍ 13:21-22; ຈຊບ 9:15-23)

34 ເມກໄດ້ປົກຄຸມຫໍເຕັນສັກສິດ ແລະມີພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າຢູ່ໃນທີ່ນັ້ນ
35 ໂມເຊເຂົ້າໄປໃນຫໍເຕັນສັກສິດບໍ່ໄດ້ ເພາະວ່າມີເມກປົກຄຸມຢູ່ ແລະພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ
36 ຊາວອິສຣາເອນຈະອອກຈາກຄ້າຍນີ້ໄປຍັງຄ້າຍອື່ນໄດ້ ກໍຕໍ່ເມື່ອເມກໄດ້ລອຍຂຶ້ນຈາກຫໍເຕັນສັກສິດແລ້ວເທົ່ານັ້ນ
37 ຖ້າເມກນັ້ນບໍ່ລອຍຂຶ້ນໄປ ພວກເຂົາກໍບໍ່ອອກເດີນທາງໄປຍັງຄ້າຍອື່ນ ພວກເຂົາຈະຕ້ອງຖ້າຢູ່ຈົນເຖິງວັນທີ່ເມກນັ້ນລອຍຂຶ້ນ
38 ນກາງເວັນເມກຂອງພຣະຜູ້ເປັນເຈົ້າຊົງສະຖິດຢູ່ເທິງຫໍເຕັນສັກສິດ ແລະຕອນກາງຄືນໄດ້ມີໄຟໃນເມກນັ້ນ ຊາວອິສຣາເອນໄດ້ເຫັນເມກເມື່ອເຂົາຍົກ
ຍ້າຍໄປ